ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຶກສາທິການ

# ແນວຄວາມຄິດ ກ່ຽວກັບ ການປະຕິຮູບການສຶກສາ ແຫ່ງຊາດ

# CONCEPT ON THE NATIONAL EDUCATION REFORM


ຄົ້ນຄວ້າແລະສະເໜີໂດຍ: ຄຳເພົາ ພອນແກ້ວ

ນັກການສຶກສາ-ວັດທະນະທຳ ອາວຸໂສ

ອະດີດເລຂາທິການລາວ ເພື່ອ ອຸຍແນສໂກ



ພິມຄືນ: 25/04/2007

ພິມຄັ້ງທີ 2 (2010)

ນັກການສຶກສາ ສາກົນເວົ້າວ່າ:

" ການສຶກສາເປັນການສືບທອດສັງຄົມຂອງປະເທດແຕ່ລຸ້ນໜຶ່ງໄປສູ່ອີກລຸ້ນໜຶ່ງ ຫຼື ເວົ້າອີກແນວໜຶ່ງວ່າ: ແມ່ນການສ້າງບຸກຄະລະກອນ ແລະ ຊຸມຊົນໄປ ສູ່ອະນາຄົດ, ພ້ອມນຳເອົາຂະໜົບທຳນຽມ, ປະເພນີທີ່ດີຄວບຄູ່ກັນໄປກັບຄວາມສີວິໄລ ກ້າວໜ້າຂຶ້ນເລື້ອຍໆ; ຈະສ້າງແຕ່ດ້ານວິທະຍາສາດເຕັກນິກ ໂດຍປະຖິ້ມດ້ານສິນທຳປະຈຳໃຈ ແມ່ນເປັນໄປບໍ່ໄດ້, ເພາະການສຶກສາ ເປັນເຄື່ອງມືສືບຕໍ່ວິຖີຊີວິດຂອງປະຊາຊົນໃນປະເທດ ເພື່ອສ້າງກຳລັງແຮງໃຫ້ຊາດ ຢູ່ລອດ ".

ສຸພາສິດບູຮານລາວກໍກ່າວໄວ້ຄືກັນວ່າ:

**"ມີຄວາມຮູ້ແຕ່ຂາດຄຸນສົມບັດກໍຈະໃຊ້ບໍ່ໄດ້"**

"L'éducation est la transmission de la société de génération en gération. c'est aussi la preparation des individus et des communautés pour l'avenir. Elle est , à la fois, la tradition et le progrès; on ne saurait, sans la fausser, mettre l'accent sur l'un de ces termes au détriment de l'autre "

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ແນວຄວາມຄິດ

## ກ່ຽວກັບ

# ການປະຕິຮູບການສຶກສາ

**CONCEPT**

**ON**

**THE NATIONAL EDUCATION REFORM**

ຄົ້ນຄວ້າແລະສະເໜີໂດຍ: ຄຳເພົາ ພອນແກ້ວ
ນັກການສຶກສາ-ວັດທະນະທຳ ອາວຸໂສ
ອະດີດເລຂາທິການລາວ ເພື່ອ ອຸຍແນສໂກ

ພິມຄືນ: 25/04/2007
ພິມຄັ້ງທີ 2 (2010)

# ສາລະບານ

ໜ້າ

1. ເປີດຫົວເລື່ອງ..........................................................1

**ພາກທີ I ການທຳຄວາມເຂົ້າໃຈຕໍ່ການປະຕິຮູບການສຶກສາຂອງຊາດ......3**

1. ສະເໜີຄວາມເຂົ້າໃຈຂໍ້ທີໜຶ່ງ..............................................3
2. ສະເໜີຄວາມເຂົ້າໃຈຂໍ້ທີສອງ..............................................7
3. ສະເໜີຄວາມເຂົ້າໃຈຂໍ້ທີສາມ............................................11

**ພາກທີII. ຂໍ້ມູນພື້ນຖານເພື່ອຄວາມເຂົ້າໃຈການສຶກສາຂອງຊາດ.........15**

ບົດທີ 1. ບັນຫາຂອງສັງຄົມ ແລະ ວັດທະນະທຳຂອງຊາດ..................15

ບົດທີ 2. ສັງຄົມ ແລະ ວັດທະນະທຳລາວ ໃນປັດຈຸບັນ.......................25

ບົດທີ 3. ບາງຄວາມຄິດກ່ຽວກັບຄວາມຈຳເປັນຕ້ອງມີໂຄງການປະຕິ ຮູບການສຶກສາທີ່ສອດຄ່ອງ ເຊື່ອມໂຍງກັບ ລະບົບການພັດ ທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຊາດ.........35

ບົດທີ 4. ທິດທາງເພື່ອກຽມການສ້າງແຜນການສຶກສາຂອງຊາດ...........51

**ພາທີIII.ສະເໜີແນວຄິດເບື້ອງຕົ້ນກ່ຽວກັບການສຶກສາຂອງຊາດ..........72**

1. ບາງບັນຫາພື້ນຖານທີ່ຄວນເປັນເອກະພາບກັນ.....................72
2. ບາງບັນຫາມາດຖານຕ່າງໆທີ່ຄວນຍອມຮັບເພື່ອແກ້ໄຂໃຫ້ໄດ້....74
3. ວິທີການສິດສອນຍັງຢູ່ໃນສະພາບ "ລ້າຫຼັງ" ປຽບໃສ່ຫຍັງ? ຫຼືປຽບໃສ່ໃຜ?.....................................................................81
4. ນະໂຍບາຍການສຶກາຍັງບໍ່ທັນມີຄວາມເປັນປະຊາທິປະໄຕ ເທົ່າທີ່ຄວນ.....................................................................82

**ພາກທີIV.ສະເໜີການອອກອອກການປະຕິຮູບການສຶກສາແຫ່ງຊາດ....84**

1. ສະເໜີຮູບແບບການສ້າງລະບົບການສຶກສາໃໝ່..................85
2. ດ້ານງົບປະມານ.............................................................100
ເອກະສານອ້າງອີງເພື່ອການຄົ້ນຄວ້າ...................................108

## 5 ຄຳຂວັນຮັບໃຊ້ວັດທະນະທຳ-ສັງຄົມ

" ເບິ່ງໂຕໃຫ້ອອກ

ບອກໂຕໃຫ້ໄດ້

ໃຊ້ໂຕໃຫ້ເປັນ

ເຫັນໂຕໃຫ້ແຈ້ງ

ສະແດງໂຕໃຫ້ຖືກ"

<u>ເປັນປັນຍາຊົນຕ້ອງ:</u>

ສະຫຼາດ-ຂະຫຍັນ-ຊື່ສັດບໍລິສຸດ-ມີມະນຸດສຳພັນທີ່ດີ

# 1. ເປີດຫົວເລື່ອງ.

ໃນທຸກການຈັດຕັ້ງ, ບໍ່ວ່າອົງກອນຂອງລັດ ຫລື ຂອງເອກະຊົນ ເພື່ອດຳເນີນການ ປະຕິບັດນະໂຍບາຍໃດໆຈຳເປັນຕ້ອງມີລະບົບການຄຸ້ມຄອງ. ນອກຈາກມີລະບົບຂອງ ການປະຕິບັດແລ້ວຍັງຕ້ອງມີລະບົບຂອງການກວດກາຕີລາຄາທຸກໆໄລຍະອີກ. ເມື່ອເຫັນຈຸດອ່ອນ ຫລື ຄວາມບໍ່ສົມດຸນ (ບໍ່ຄ່ອງຕົວ) ຢ່າງໃດຢ່າງໜຶ່ງເກີດຂຶ້ນ, ຈຳເປັນຕ້ອງພະຍາຍາມປັບປຸງໃຫ້ທັນກັບສະພາບ. ບາງຄັ້ງຄາວ, ການປັບປຸງດັ່ງກ່າວ ຈຳເປັນໄດ້ກ່ຽວໂຍງໄປເຖິງໝົດລະບົບ, ຊຶ່ງເປັນສະເໝືອນກະຕິກາລວມຂອງອົງກອນ, ກໍ່ຈຳເປັນໄດ້ປັບປຸງໝົດທັງລະບົບ. ເວລານັ້ນ, ເພິ່ນເອີ້ນວ່າ "ການປະຕິຮູບ" ຊຶ່ງໝາຍຄວາມວ່າ ການປ່ຽນແປງທັງລະບົບ ຫລື ຮູບແບບທີ່ອອກໄວ້ແລ້ວນັ້ນ.

"ລະບົບການສຶກສາແຫ່ງຊາດ (National Education System) ແມ່ນໝົດໂຄງປະກອບເພື່ອຈັດຕັ້ງການບໍລິການ ແລະ ການເຜີຍແຜ່ການສຶກສາໃຫ້ປະຊາຊົນໃນຊາດຕາມຂັ້ນຕ່າງໆ (ຊັ້ນອະນຸບານ[1], ປະຖົມ, ມັດທະຍົມ ແລະ ຊັ້ນສູງ ຫລື ມະຫາວິທະຍາໄລ) ຕາມສາຍວິຊາຕ່າງໆ (ສາຍສາມັນ, ອາຊີວະ, ສ້າງຄູ) ແລະ ຕາມຮູບແບບຕ່າງໆ (ໃນລະບົບໂຮງຮຽນ, ນອກລະບົບໂຮງຮຽນ) ໂດຍມີການສະໜັບສະໜູນດ້ານບໍລິຫານ ແລະ ຄຸ້ມຄອງ ວິຊາການຄັກແນ່ແຕ່ລະຊັ້ນຮຽນ. ຄຳນິຍາມລະບົບການສຶກສານີ້ແມ່ນ ເອົາມາ ຈາກປຶ້ມປະມວນຄຳສັບວິຊາການສຶກສາ (Glossary of Education systerm) ພິມໂດຍ ກະຊວງສຶກສາ ປີ 2003. (ໂຄງການ

(1)ເຮົາເຫັນເປັນເອກະພາບກັນແລ້ວວ່າ **"ຊັ້ນ"** ແມ່ນກົງກັບ "Cycle" ໃນພາສາຝຣັ່ງ ຫຼື ອັງກິດ, **"ຂັ້ນ"** ຄື ຂັ້ນໃດ, ແມ່ນກົງກັນກັບ Classe ໃນພາສາຝຣັ່ງ ແລະ Grade ໃນພາສາອັງກິດ ບໍ່ດັ່ງນັ້ນຈະນຳໃຊ້ແບບສັບສົນກັນເລື້ອຍໆ.

ເສີມສ້າງການຄຸ້ມຄອງການສຶກສາ ຕາມລະບົບແບ່ງຂັ້ນຄວາມຮັບຜິດຊອບ ADB/ UNESCO-TA.3871-ລາວ)

ຈັ່ງຊັ້ນ, ຂັ້ນຕອນການຈະຄົ້ນຄວ້າທັງໝົດລະບົບໃຫ້ລະອຽດ ຈຳເປັນຕ້ອງ ໄດ້ຜ່ານການຈັດສຳມະນາຫລາຍຮູບແບບ ຈຶ່ງຈະເປັນທີ່ ເຂົ້າໃຈໄດ້ດີໃນລະດັບຊາດ. ຈຶ່ງໄດ້ສະເໜີ "ຄວາມເຂົ້າໃຈ" ແຕ່ລະບັນຫາ ດັ່ງທ່ານຜູ້ອ່ານຈະໄດ້ຕິດຕາມຕໍ່ໄປນີ້.

# ພາກ I : ການທຳຄວາມເຂົ້າໃຈຕໍ່ ການປະຕິຮູບການສຶກສາຂອງຊາດ

## 1. ສະເໜີຄວາມເຂົ້າໃຈຂໍ້ທີ ໜຶ່ງ

**ກ່ຽວກັບການກະກຽມໂຄງຮ່າງການປະຕິຮູບການສຶກສາ ໂດຍເຫັນຕາມຂໍ້ດຳລັດ ນາຍົກລັດຖະມົນຕີ ເລກທີ 84/ນຍ ລົງວັນທີ 01/03/2007, ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ "ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ".**

ຄະນະກະກຽມຮ່າງກົດໝາຍວ່າດ້ວຍການປະຕິຮູບການສຶກສາຍຸດທະສາດໃໝ່ ນີ້ຈຳເປັນຕ້ອງໄດ້ເຂົ້າໃຈຂັ້ນຕອນຕ່າງໆ, (ຕາມບົດຮຽນຂອງການສ້າງແຜນຍຸດທະສາດ ຕົວຈິງເພື່ອດຳເນີນ **ການປະຕິຮູບໝົດລະບົບການສຶກສາແຫ່ງຊາດ** ໃຫ້ໄດ້ຕາມຈິດໃຈ ຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ VIII ວ່າດ້ວຍການພັດທະນາຊັບພະຍາກອນມະນຸດ), ໃຫ້ເປັນເອກະພາບກັນຄັກແນ່ເສຍກ່ອນ.

ຄວາມເຂົ້າໃຈຂັ້ນຕອນປະຕິບັດຄວນໃຫ້ສອດຄ່ອງກັບ **ແຜນພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳແຫ່ງຊາດ** ເຊິ່ງລັດຖະບານໄດ້ວາງໄວ້ແລ້ວທຸກໆ 5 ປີ. ແຕ່ຕ້ອງເຂົ້າໃຈໄປຕາມແຜນພັດທະນາແຕ່ປີ 1986 ( ປີເປີດເສດຖະກິດຕະຫລາດເສລີຖືກກົດໝາຍ ຫລື ເວົ້າແນວໜຶ່ງແມ່ນປີເປີດກົນໄກເສດຖະກິດໃໝ່ (New Economic Mechanism) (NEM) ເຊິ່ງພວກເຮົາເຄີຍເອີ້ນນຳກັນມາແລ້ວວ່າ " ພາລະກິດປ່ຽນແປງໃໝ່" ຫຼື "ຈິນຕະນາການໃໝ່" ) ນັ້ນເປັນຕົ້ນມາຄື:

1981-1985 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ໜຶ່ງ (I)

1986-1990 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ສອງ (II)

1981-1995 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ສາມ (III)

1996-2000 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ສີ່ (IV)

2001-2005 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ຫ້າ (V)

2006-2010 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ຫົກ (VI)

2011-2015 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ເຈັດ (VII)
(ຕ້ອງໄດ້ລົງມືດຳເນີນການປະຕິຮູບການສຶກສາ)

2016-2020 ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ
ຄັ້ງທີ ແປດ (VIII)
(ຕ້ອງລົບລ້າງຄວາມທຸກຍາກໃຫ້ໄດ້).

24/VII
ຫ້າມຈຳໜ່າຍ

ປີນີ້, 2007 ພວກເຮົາກຳລັງດຳເນີນການ ພັດທະນາເສດຖະກິດ-ສັງຄົມຂອງຊາດ ຢູ່ໃນແຜນການ 5 ປີ ຄັ້ງທີ VI (ອີງໃສ່ມະຕິກອງປະຊຸມໃຫຍ່ຂອງພັກຄັ້ງທີ VII ), ເອກະສານພິມອອກປີ 2001, ໜ້າ 40.

ສະນັ້ນ, ເພື່ອໃຫ້ການດຳເນີນກະກຽມການປະຕິຮູບການສຶກສາ

ຕາມຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ປປລາວ, ເອກະສານ ພິມອອກປີ 2006, ຜ່ານມານີ້, **ພວກເຮົາຄວນເຫັນເປັນເອກະພາບກັນ ແລະ ຮັບຮອງຂັ້ນຕອນການກະກຽມ ການປະຕິບັດແຜນຍຸດທະສາດ ການປະຕິຮູບການສຶກສາແຫ່ງຊາດດັ່ງລຸ່ມນີ້:**

- 2007 - 2010: **ແມ່ນໄລຍະກະກຽມກົດໝາຍລະບຽບການ ການປະຕິຮູບການສຶກສາແຫ່ງຊາດ** (ຫຼື ນິຕິກຳ) ຊຶ່ງນັບແຕ່ການຈັດຕັ້ງຄະນະກຳມະການປະຕິຮູບຂັ້ນສູນກາງ ຈົນຮອດຄະນະອະນຸກຳມະການຕ່າງໆ, ຢູ່ຂັ້ນ ສູນກາງ ແລະ ຂັ້ນທ້ອງຖິ່ນ (ມະຫາພາກ ແລະ ຈຸລະພາກ).

- 2011 - 2015: **ແມ່ນໄລຍະດຳເນີນປະຕິບັດຕາມແຜນປະຕິຮູບການສຶກສາຊຶ່ງ ແມ່ນສະພາແຫ່ງຊາດ ຈະໄດ້ຮັບຮອງເອົາກົດໝາຍການປະຕິຮູບການສຶກສາແຫ່ງຊາດນີ້ ໃຫ້ໄດ້ໃນທ້າຍປີ 2010.**

- 2016 - 2020: ແມ່ນໄລຍະປະເມີນຜົນ ແລະ ປັບປຸງຕື່ມເພື່ອໃຫ້ສັງຄົມລາວກາຍເປັນສັງຄົມສີວິໄລ ທັງທາງດ້ານຮູບປະທຳ (ດ້ານວັດຖຸ) ແລະ ດ້ານນາມມະທຳ (ຈິດໃຈ) ໃຫ້ໄດ້ໄປພ້ອມໆກັນ.

**ຂໍເວົ້າຄືນເຖິງໄລຍະກະກຽມກົດໝາຍ ລະບຽບການຕ່າງໆ, ລວມທັງຫຼັກສູດ.**

ສິ່ງສຳຄັນທີ່ສຸດໃນໄລຍະນີ້ແມ່ນຕ້ອງໄດ້ເຮັດການສຳຫລວດຄືນ (ປະເມີນຜົນ ຂອງການສຶກສາໃນໄລຍະຜ່ານມາ ໃຫ້ຖືກກັບຕົວຈິງແທ້ໆ) ຄວນມີບົດສຳຫຼວດຄັກແນ່, ບໍ່ຄວນຕີລາຄາແບບລວມໆ ແລະ ບໍ່ຄວນນຳເອົາແຕ່ປະລິມານມາອວດອ້າງ, ຖ້າຈະສ້າງ ແຕ່ຊາວໜຸ່ມທີ່ຕ້ອງການໜີຈາກທ້ອງຖິ່ນດົນມາ, ເພື່ອເຂົ້າຢູ່ໃນເມືອງໃຫຍ່ຈຶ່ງຈະໄດ້ຮຽນດີຄືຜ່ານໆມາແມ່ນເຮົາສ້າງໃຫ້ເກີດມີຄວາມຂັດແຍ່ງໃນສັງຄົມຫລາຍຂຶ້ນ ແລະ ສ້າງ

ຄວາມເຂົ້າໃຈແບບຜິດພາດ ຕໍ່ຄຸນນະພາບການສຶກສາ ທີ່ສອດຄ່ອງ. ປັດຈຸບັນເຫັນວ່າເປັນໄປບໍ່ໄດ້ອີກແລ້ວ, ຖ້າບໍ່ມີຍຸດທະສາດໃໝ່ຕໍ່ການສຶກສາຂອງຊາດ. ຍຸດທະສາດຂອງການ ປະຕິຮູບຈຶ່ງຖືວ່າສຳຄັນຫລາຍ.

ຕາມບົດຮຽນຂອງຫລາຍປະເທດ, ແລະ ຂອງປະເທດເຮົາເອງໃນປະຫວັດການສຶກສາຂອງຊາດ, ຜ່ານມາພວກເຮົາເຫັນແຈ້ງວ່າພວກລ່າເມືອງຂຶ້ນຝຣັ່ງ ບໍ່ໄດ້ພາເຮົາເຮັດການປະຕິຮູບການສຶກສາຈັກເທື່ອ, ນັບແຕ່ເຂົາໄດ້ປົກຄອງປະເທດເຮົາມາກວ່າ 80 ປີ.

ເປັນເທື່ອທຳອິດໃນປະຫວັດສາດການສຶກສາ ທີ່ລັດຖະບານປະສົມສາມຝ່າຍຄັ້ງທີ ສອງ (1962) ໄດ້ເລີ່ມສຳຫລວດສະພາບການສຶກສາຂອງລາວ (ຍັງບໍ່ທັນແມ່ນການສຶກສາແຫ່ງຊາດ), ໃນປີ 1957 ໂດຍຄະນະວິຊາການ ສົ່ງມາຈາກອົງການ ອຸຍແນດສະໂກ, ຕາມຄວາມຮ້ອງຂໍຂອງລັດຖະບານປະສົມ 2 ຝ່າຍຄັ້ງທີ ໜຶ່ງ (ພາຍຫລັງສິ້ນສຸດກອງປະຊຸມເຊີແນວ 1954),ຈາກນັ້ນຈຶ່ງມີກົດໝາຍທີ່ເອີ້ນວ່າ: ພຣະຊະອົງການປະຕິຮູບການສຶກສາ 1962 ເກີດຂຶ້ນ, ແລ້ວດຳເນີນການປະຕິບັດການປະຕິຮູບໄດ້ສະເພາະແຕ່ ການສຶກສາຊັ້ນປະຖົມທົ່ວປະເທດເທົ່ານັ້ນ, (ສ່ວນຊັ້ນມັດທະຍົມ ຍັງຕ້ອງຢູ່ພາຍໃຕ້ການເປັນເຈົ້າການ ຂອງລັດຖະບານຝຣັ່ງເສດຢູ່) ເພາະເຂົາບໍ່ຍອມສົ່ງຄູສອນຊັ້ນ ມັດທະຍົມໃຫ້ຕາມຄວາມຕ້ອງການ ຂອງລັດຖະບານ ຈົນຮອດປີ 1975, ການຂະຫຍາຍຕົວຂອງການສຶກສາຊັ້ນມັດທະຍົມ ທັງໝົດເປັນພາສາລາວ ຈຶ່ງໄດ້ລະເບີດຂຶ້ນຕາມນະໂຍບາຍຂອງລັດຖະບານ ສປປ ລາວ (ຈາກ 20 ແຫ່ງ ໃນໄລຍະປີ 1975 ເຖິງ 200 ແຫ່ງ ໃນປີ 1980).

ການເບິ່ງຄືນຫລັງລະບົບ " **ການສຶກສາແຫ່ງຊາດ** " ຈະຊີ້ບອກໃຫ້ເຮົາຕ້ອງ ປັບປຸງເນື້ອໃນການສິດສອນ ໝົດທັງລະບົບການສຶກສາແຫ່ງຊາດ

ໃໝ່ ເພື່ອໃຫ້ສອດຄ່ອງກັບ ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນໄລຍະໃໝ່ໃຫ້ໄດ້ ແລະ ເພື່ອໃຫ້ສາມາດສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບໃໝ່ຢ່າງແທ້ຈິງ. ຊັບພະຍາກອນມະນຸດທີ່ວ່ານີ້ຕ້ອງເລີ່ມຈາກການສ້າງຄູ **"ພັນໃໝ່"** ໃຫ້ເປັນຜູ້ມີພຶດຕິກຳທີ່ແນໃສ່ການພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງດ້ວຍຕົນເອງໃຫ້ໄດ້ໃນຕໍ່ໜ້າ, ຈຶ່ງຈະເປັນເຈົ້າຂອງປະເທດຊາດ ຢ່າງຮອບດ້ານໄດ້ແທ້. ຈຶ່ງຈະສົມກັບຄຳວ່າ " ເຮັດການປະຕິຮູບລະບົບການສຶກສາແຫ່ງຊາດ ຕາມການກຳນົດຂອງ ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນ ປະຕິວັດລາວ ຢ່າງແທ້ຈິງ ".

ນັ້ນແມ່ນການທຳຄວາມເຂົ້າໃຈຂໍ້ທີໜຶ່ງຕໍ່ແນວຄວາມຄິດຂອງການປະຕິຮູບການສຶກສາແຫ່ງຊາດ.

## 2. ສະເໜີຄວາມເຂົ້າໃຈຂໍ້ທີ ສອງ

## ກ່ຽວກັບການເວົ້າເຖິງ "ລະບົບການສຶກສາແຫ່ງຊາດ"

**ຕໍ່ຄຳວ່າ ລະບົບການສຶກສາແຫ່ງຊາດ ຫລື ( National Education System) ແມ່ນໝົດໂຄງປະກອບເພື່ອຈັດຕັ້ງການບໍລິການ ແລະ ການເຜີຍແຜ່ການສຶກສາ ໃຫ້ປະຊາຊົນໃນຊາດຕາມຂັ້ນຕ່າງໆ (ຊັ້ນອະນຸບານ, ປະຖົມ, ມັດທະຍົມ ແລະ ຊັ້ນສູງ ຫລື ມະຫາວິທະຍາໄລ), ຕາມສາຍວິຊາຕ່າງໆ (ສາຍສາມັນ, ອາຊີວະ, ສ້າງຄູ) ແລະ ຕາມຮູບແບບຕ່າງໆ (ໃນລະບົບໂຮງຮຽນ, ນອກລະບົບໂຮງຮຽນ) ໂດຍມີການສະໜັບສະໜູນດ້ານການບໍລິຫານ ແລະ ຄຸ້ມຄອງວິຊາຄັກແນ່ຕາມແຕ່ລະຊັ້ນຮຽນ.**[1]

ການປະຕິຮູບການສຶກສາຈຶ່ງຕ້ອງມີເປົ້າໝາຍມີຂອບເຂດ ຊຶ່ງຕ້ອງ

---

(1) ຄັດຈາກປຶ້ມປະມວນຄຳສັບວິຊາການສຶກສາ, ພິມໂດຍ ໂຄງການເສີມສ້າງການຄຸ້ມຄອງການສຶກສາຕາມລະບົບແບ່ງຂັ້ນຄວາມຮັບຜິດຊອບ, ກົມຈັດຕັ້ງ ແລະ ພະນັກງານຈັດພິມໂດຍ ອຸຍແນສໂກ.

ກຳນົດໃຫ້ຈະແຈ້ງແຕ່ທີ່ວທີ, ບໍ່ດັ່ງນັ້ນອາດຈະບໍ່ສ້ຽງສຸດເປັນຈັກເທື່ອໃນພາກປະຕິບັດ. ເວລາເຮົາດຳເນີນໄປກໍ່ອາດຈະຫລົງທາງບໍ່ຮູ້ວ່າຈະຮອດເປົ້າໝາຍທີ່ເຮົາຢາກໄດ້ນັ້ນຍາມໃດ. ພວກເຮົາຄົນລາວ, ເວົ້າລວມແລ້ວ, ແມ່ນເປັນຄົນ "ມັກງ່າຍ" ອາດມື້ໜຶ່ງມີຜູ້ໜຶ່ງມາເວົ້າວ່າ. "ເຮັດແນວນີ້ບໍ່ຖືກ" ຄວນ "ເຮັດແນວນີ້" . ຜູ້ມີທຶນກໍຈະໃຫ້ທຶນເຮັດຕາມໄປກ່ອນ, ແກ່ໄປແກ່ມາກໍເລີຍບໍ່ອອກບໍ່ເຂົ້າ, ດັ່ງບົດຮຽນທີ່ພວກເຮົາເຫັນແຈ້ງໃນໄລຍະຜ່ານມາ.

ໂຄງການ E.D.P.I. (Education Development Project I) ຊຶ່ງເລີ່ມເຂົ້າກະຊວງ ສຶກສາເຮົາກ່ອນກະຊວງອື່ນ ໃນໝົດປະເທດ. (ບໍ່ກ່ຽວເຖິງໂຄງການ UNESCO ຊ່ວຍ NPI (National Polytectechnic Institute) ຊຶ່ງເວລານັ້ນເຮົາເລືອກເອົາຊ່ຽວຊານຈາກ ໂຊຫວຽດມາຊ່ວຍເອງ ແຕ່ ປີ 1982 ຫາ 1986 ແລະ ກໍມີທຶນ ປະເທດສະວິດ ຊ່ວຍເພີ້ມນຳຫຼາຍສົມຄວນ).ຕໍ່ມາ, ຍ້ອນລັດຖະບານເຮົາຕັດສິນໃຈຢືມເງິນທະນາຄານໂລກ (WB) 1992 ມາຊ່ວຍພັດທະນາການສຶກສາ, ຈຶ່ງໄດ້ສ້າງໂຄງການ EDPI ນີ້ຂຶ້ນ. ເວລານັ້ນກຳລັງມີນະໂຍບາຍເປີດກ້ວາງໃໝ່ໆ ແລະ ກໍກຳລັງຮຽນ "ຈິນຕະນາການໃໝ່" ປີ 1986 (ເບິ່ງຄືນກອງປະຊຸມໃຫຍ່ຂອງພັກຄັ້ງທີ IV ກໍໄດ້).

ທະນາຄານໂລກ ໄດ້ປຽບຜູ້ອື່ນຍ້ອນຖືກລັດຖະບານເຮົາມອບໃຫ້ມາຄົ້ນຄວ້າ, ສຳຫລວດສະພາບການສຶກສາໃນທົ່ວປະເທດໄດ້ ເພື່ອຈະສະເໜີໂຄງການທີ່ເຂົາເອີ້ນວ່າ: "ປະຕິຮູບການສຶກສາ" ໄປສູ່ຄຸນນະພາບຄືກັບເຮົາຢາກໄດ້ດຽວນີ້ ແຕ່ວ່າເວລານັ້ນ ພວກເຮົາຍັງບໍ່ທັນກຽມພ້ອມ, ທັງບຸກຄະລາກອນ, ທັງການຈັດຕັ້ງຕ່າງໆ, ທັງບໍ່ຮູ້ວ່າຄຸນນະພາບທີ່ເຮົາຢາກໄດ້ຈາກການສຶກສານັ້ນແມ່ນຫຍັງຊໍ້າ. ຂ້າພະເຈົ້າຈື່ໄດ້ດີ ເພາະໃນເວລານັ້ນຖືກຮັບຜິດຊອບ ອຸຍແນດສະໂກ, ຢູ່ກະຊວງ ແລະ ມີໂອກາດໄດ້ໄປພົວພັນກັບ ອົງການ ອຸຍແນດສະໂກ, ໄປປະຊຸມໃຫຍ່ຢູ່ Paris , ປະເທດ

ຝຣັ່ງເສດ ເລື້ອຍໆ ກັບ ທ່ານ ລັດຖະມົນຕີກະຊວງສຶກສາ. ຈາກນັ້ນຈຶ່ງຮູ້ວ່າທະນາຄານ ຊຶ່ງແມ່ນຜູ້ທີ່ມີເງິນຢູ່ແລ້ວມັກໂຈມຕີ ອຸຍແນດສະໂກ ວ່າມີແຕ່ທິດສະດີ ແລະ ບອກວ່າ "ຕ້ອງປັບປຸງການສຶກສາ ແນວນັ້ນແນວນີ້..." ແຕ່ບໍ່ມີງົບປະມານຊ່ວຍຢ່າງເປັນຜົນດີໄດ້. UNESCO ໂຕ້ຕອບຄືນກໍມັກໂຈມຕີທະນາຄານວ່າ ມີແຕ່ທິດສະດີຍູ້ໃຫ້ປະເທດທຸກຍາກ ຈ່າຍເງິນທີ່ບໍ່ແມ່ນເງິນເຂົາຄິດຫາເອົາເອງໄດ້ຍ້ອນຕົນເອງ. ມີແຕ່ຊຸກຍູ້ໃຫ້ແຕ່ເຂົາຢືມ, ສ່ວນວິຊາການດ້ານສຶກສານັ້ນກໍມັກຈ້າງ "ຊ່ຽວຊານ" ທີ່ບໍ່ຮູ້ວຽກສຶກສາຂອງປະເທດກຳລັງພັດທະນາດີເທົ່າທີ່ຄວນ, ມັກເອົາແຕ່ແບບປະເທດ "ສັງຄົມບໍລິໂພກ" (Société de consommation) ມາຫຸ່ມເຫໃຫ້ເຂົາ (ເຊັ່ນໂຄງການໃດກໍຕ້ອງມີລົດຢ່າງໜ້ອຍ 2 ຫາ 3 ຄັນ ເພື່ອຮັບໃຊ້ "ຊ່ຽວຊານ", ມີຄອມພິວເຕີຫລາຍ 10 ໜ່ວຍ ທັງໆທີ່ຄົນຂອງປະເທດເອງຍັງບໍ່ທັນຮູ້ນຳໃຊ້ຢ່າງມີປະສິດທິຜົນ. ໃນເວລານັ້ນ, ຕັ້ງແຕ່ Fax ກໍຍັງບໍ່ທັນອະນຸຍາດໃຫ້ເອົາ ເຂົ້າມາໃຊ້ໃນບ້ານເຮົາ, ຈຶ່ງເກີດມີຂະບວນການຊິງດີຊິງເດັ່ນກັນພາຍໃນປະເທດເກີດຂຶ້ນ ທັງໆທີ່ຄະນະນຳຂອງພັກເຮົາ ໄດ້ຊີ້ບອກຢ່າງຈິດຈໍ່ຕໍ່ຄວາມ "ສາມັກຄີ" ພາຍໃນ ຕະຫລອດມາ, ໂຄງການ EDP I ກຳນົດໄວ້ໃຫ້ລົງມື ປີ 1994 ຮອດປີ 1998. ແຕ່ສຸດທ້າຍ ສະຫລຸບບໍ່ໄດ້ຕາມແຜນ. ຈ່າຍເງິນແບບຊະຊາຍ, ທະນາຄານເອງກໍຮັບຮູ້. ດັ່ງນັ້ນ "ຄຸນນະພາບ" ທີ່ເຮົາຕ້ອງການຢາກໄດ້ໃນເບື້ອງຕົ້ນ ກໍຄືເຮົາໄດ້ຮັບດຽວນີ້ເອງ. ເທົ່ານັ້ນ ຍັງບໍ່ພໍ, ທະນາຄານພັດທະນາອາຊີ (ADB) ຍັງໂດດເຂົ້າມາແຂ່ງຂັນໃຫ້ຢືມເງິນອີກ ແລະ ຍາດໄດ້ EQIP .I (Education Quality Improvement Project I). ເຖິງວ່າມີການປະມູນ "ແບບສາກົນ" ປານໃດ ເຂົາກໍຍັງຫາວິທີເອົາໃຈຄົນເຮົາຢູ່, ຍ້ອນຢ້ານເຮົາບໍ່ຢືມໂດຍສະເພາະແມ່ນເອົາໃຈຜູ້ມີອຳນາດຕໍ່ລອງການຕັດສິນໃຈຂອງລັດຖະບານ. ຫຼາຍຄົນມັກມີ

ທ່າອ່ຽງ ຂາດການເບິ່ງເຖິງຜົນປະໂຫຍດຂອງຊາດ ຫລາຍກວ່າຜົນປະໂຫຍດສ່ວນບຸກຄົນ ຈັ່ງຊັ້ນຈຶ່ງເຫັນວ່າມີການຢາກສືບຕໍ່ໂຄງການຕ່າງໆ ໂດຍບໍ່ສຸດສັ້ງຈັກເທື່ອ, ໝົດ EDP I ແລ້ວກໍ່ສະເໜີ EDP II, ໝົດ EQIP I ແລ້ວກໍ່ສະເໜີ EQIP II , ແລະ ຕາມແຜນຂອງ WB ຍັງຈະມີຮອດ EQIP IV . ຂ້າພະເຈົ້າໃນໄລຍະເປັນຊ່ຽວຊານພາຍໃນ ບາງຄັ້ງຄາວໄດ້ມີໂອກາດຟັງພວກຕ່າງປະເທດເຂົາເວົ້າກັນຫລາຍໆຢ່າງ ຈົນບໍ່ຢາກໄດ້ຍິນ. ສຸດທ້າຍນີ້ ປີ 2005 ຂ້າພະເຈົ້າໄດ້ມາເຮັດນຳ "SWAP" ຊຶ່ງເປັນທິດທາງ ຂອງພວກຢາກຊ່ວຍລາວ ເຮົາໃຫ້ເດີນໄປເອງໄດ້ມື້ໃດມື້ໜຶ່ງ. ສຸມໃສ່ຄວາມຕ້ອງການຂອງລາວເອງເປັນຫລັກຄື ສຸມໃສ່ຕາມລາວຢາກລົງທຶນໃສ່ວຽກງານການສຶກສາຫລາຍນ້ອຍເທົ່າໃດ, ຕົວຢ່າງ ຖ້າຢາກເອົາທຶນຂອງລັດໃສ່ການພັດທະນາການສຶກສາໃຫ້ໄດ້ 15% ຂອງງົບປະມານແຫ່ງຊາດນັ້ນ ແມ່ນຈະຢາຍ(Allocate) ໃສ່ໝົດລະບົບໂຄງປະກອບເພື່ອຈັດຕັ້ງການບໍລິການ ແລະ ການເຜີຍແຜ່ການສຶກສາໃຫ້ປະຊາຊົນໃນຊາດ ຕາມນະໂຍບາຍຂອງພັກ-ລັດ ແນວໃດນັ້ນເສຍກ່ອນ, ຈາກນັ້ນເຮົາຈຶ່ງຈະຮູ້ບ່ອນທີ່ເຮົາຄວນຂໍການຮ່ວມມື ຫລື ຊ່ວຍເຫລືອລ້າ ເພື່ອຕອບສະໜອງຄວາມຕ້ອງການຂອງເຮົາທົ່ວໝົດຂະແໜງການສຶກສາໃຫ້ດຳເນີນໄປໄດ້ຢ່າງຄົບຊຸດ. ແລະດຸນດ່ຽງກັນໃນໝົດລະບົບ ຖ້າເຮົາບໍ່ເບິ່ງການຮ່ວມມືແບບນີ້, ເຮົາຈະບໍ່ສາມາດເປັນເຈົ້າຕົນເອງໄດ້ຈັກເທື່ອ.

ການຈັດສັນງົບປະມານຂອງຊາດ ເຂົ້າໃຫ້ການສຶກສາຢ່າງໂປ່ງໃສ ຈະບໍ່ພຽງແຕ່ ເປັນຂະບວນການເຮັດໃຫ້ການສ້າງຊັບພະຍາກອນມະນຸດຈະແຈ້ງຂຶ້ນໄດ້ເທົ່ານັ້ນ ແຕ່ຍັງຈະເປັນການເກັບກຳຂໍ້ມູນດ້ານກຳລັງແຮງຂອງຊັບພະຍາກອນມະນຸດໄດ້ຢ່າງຊັດເຈນ ດ້ວຍຕົນເອງໄດ້ອີກ, ເພື່ອຈະພັດທະນາສັງຄົມ ແລະເສດຖະກິດຂອງຊາດໃຫ້ສົມສ່ວນໄປເທື່ອລະກ້າວໃຫ້ໄດ້.

## 3. ສະເໜີຄວາມເຂົ້າໃຈຂໍ້ທີສາມ ກ່ຽວກັບແຜນຍຸດທະສາດການປະຕິຮູບການສຶກສາຂອງຊາດ

ອີງຕາມມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຜ່ານມາ, ການສ້າງເນື້ອໃນ ການປະຕິຮູບການສຶກສາ, ຈຳເປັນຕ້ອງໄດ້ເວົ້າເຖິງ ການສ້າງເອກະສານທີ່ມີລັກສະນະກົດໝາຍ. ແຕ່ກໍ່ບໍ່ແມ່ນການປັບປຸງກົດໝາຍສະບັບເກົ່າຂອງການສຶກສາຄືນໃໝ່. ກົດໝາຍການສຶກສາຜ່ານມານັ້ນລັດຖະບານໄດ້ຜ່ານສະພາແລ້ວ ແລະ ສະພາແຫ່ງຊາດ ກໍຕົກລົງຮັບຮອງເອົາແລ້ວ ຄື **ກົດໝາຍວ່າດ້ວຍການສຶກສາຕາມມະຕິ ເລກທີ 03/ສພຊ ແຕ່ວັນທີ 08 ເມສາ 2000.** ເຖິງວ່າຈະປັບປຸງເນື້ອໃນຄືນໃໝ່ໄດ້ກໍຍັງບໍ່ທັນແມ່ນຮັບໃຊ້ການ "ປະຕິຮູບການສຶກສາ" ເພາະບໍ່ສາມາດກຳນົດລະບຽບການທຸກຢ່າງເຂົ້າໃສ່ໝົດລະບົບໄດ້. ຕ້ອງແມ່ນກົດໝາຍກ່ຽວກັບການປະຕິບັດຍຸດທະສາດຂອງ "ຂອບພັດທະນາການສຶກສາຕາມຂະແໜງການ". ນີ້ຈຶ່ງຈະຖືວ່າເປັນການຮັບຮອງການປະຕິຮູບການສຶກສາດ້ວຍກົດໝາຍ.

ເທື່ອນີ້, ເອກະສານປະຕິຮູບການສຶກສາຈະມີລັກສະນະກົດໝາຍອີກ, ແຕ່ຈະເປັນເອກະສານຍຸດທະສາດ ທີ່ຈະປະກອບເນື້ອໃນກວ້າງຂວາງກວ່າເກົ່າ, ມີນະໂຍບາຍ, ຈະແຈ້ງ, ມີວິໃສທັດ, ມີຂໍ້ກຳນົດທີ່ບັງຄັບໃຫ້ທຸກໆຂະແໜງການທີ່ກ່ຽວຂ້ອງກັບ ການພັດທະນາການສຶກສາ, ເປັນຕົ້ນງົບປະມານແຫ່ງຊາດ, ແຮງງານສະຫວັດດີການສັງຄົມ, ອຳນາດການປົກຄອງທ້ອງຖິ່ນ ຕ້ອງເຂົ້າໃຈຈຸດປະສົງເປົ້າໝາຍນຳກັນຄັກແນ່ກ່ອນທີ່ຈະກຳນົດອອກໄດ້. ຖ້າບໍ່ດັ່ງນັ້ນ, ຂອບພັດທະນາກໍຈະກາຍເປັນເອກະສານລ້າໆ

ຕື່ມອີກ.

ດັ່ງນັ້ນ "ກົດໝາຍ" ກ່ຽວກັບຍຸດທະສາດການສຶກສາທີ່ວ່ານີ້ຈະເປັນ **ລັດຖະດຳລັດ** ຂອງປະທານປະເທດ ກ່ຽວກັບການປະກາດໃຊ້ **ກົດໝາຍວ່າດ້ວຍການປະຕິຮູບທົ່ວລະບົບການສຶກສາແຫ່ງຊາດ.** ແຕ່ບໍ່ຄວນເຂົ້າໃຈພຽງແຕ່ວ່າຕ້ອງປັບປຸງກົດໝາຍການສຶກສາສະບັບເກົ່າແລ້ວກໍພໍ.

ດັ່ງນັ້ນ, ການກຳນົດເນື້ອໃນຂອງການປະຕິຮູບການສຶກສານີ້ ແມ່ນກະຊວງ ສຶກສາເປັນເຈົ້າການ ແຕ່ຕ້ອງໄດ້ຈັດຕັ້ງການປຶກສາຫາລືນຳຫລາຍໆພາກສ່ວນເຊັ່ນ:

- ອະນຸກຳມະການ ກຳນົດຄຸນນະພາບການສຶກສາທີ່ ລັດຖະບານ ຢາກໄດ້.(ຕ້ອງແມ່ນກະຊວງສຶກສາສະເໜີຄະນະນີ້)
- ອະນຸກຳມະການທີ່ກຳນົດຄວາມຕ້ອງການຂອງສັງຄົມ ວັດທະນະທຳ, ເສດຖະກິດ. (ຄວນແມ່ນແຜນການແຫ່ງລັດສະເໜີ)
- ອະນຸກຳມະການແຮງງານທີ່ຈະຕ້ອງໄດ້ກຳນົດການນຳໃຊ້ແຮງງານຂອງຊາດໃຫ້ໄດ້. (ຄວນແມ່ນກະຊວງແຮງງານ) ກຸ່ມວິຊາຊີບ ທີ່ຕ້ອງການໃນສັງຄົມປັດຈຸບັນ ແລະ ໃນ 10 ຫາ 15 ປີ ຕໍ່ໄປ. ຈະຕ້ອງເປັນຊັບພະຍາກອນມະນຸດແນວໃດ? ຈະສ້າງວິຊາຊີບສາຂາໃດ ຫຼາຍກວ່າ ສາຂາວິຊາຊີບໃດ...
- ແລະ ອະນຸກຳມະການກະຊວງການເງິນ ແຫ່ງລັດ...

ດັ່ງນັ້ນ, ເອກະສານນີ້ອາດຈະປະກອບດ້ວຍເນື້ອໃນເປັນພາກຕ່າງໆ ເປັນໝວດ, ເປັນໝູ່ຕ່າງໆ ທີ່ກ່ຽວຂ້ອງກັບການເຮັດໃຫ້ການສຶກສາມີຄຸນະພາບທີ່ສອດຄ່ອງກັບຄວາມຕ້ອງການຂອງຊາດເຮົາແທ້ ໃນ 10 ກວ່າປີຂ້າງໜ້າ ເພື່ອຈະສາມາດເປັນເຈົ້າຕົນເອງ ທັງເປັນຄູ່ແຂ່ງຂັນກັບປະເທດເພື່ອນບ້ານໃຫ້ໄດ້ໃນທຸກຮູບການ ແລະ ຕໍ່ໄປອີກ 10 ປີ ຈະຕ້ອງ

ປັບປຸງຕື່ມອີກ. ໂຄງປະກອບເອກະສານຮ່າງເນື້ອໃນກົດໝາຍກ່ຽວກັບການປະຕິຮູບການສຶກສາໃໝ່ນີ້ອາດມີ 10 ຫົວຂໍ້ສຳຄັນຢ່າງນ້ອຍດັ່ງລຸ່ມນີ້:

1. ບົດທົ່ວໄປຈະເວົ້າເຖິງ: ຄວາມມຸ້ງໝາຍ ຫລື ເປົ້າໝາຍ ແລະ ຫລັກການຂອງ ການປະຕິຮູບການສຶກສາຂອງຊາດ.
2. ບົດເວົ້າເຖິງ: ສິດ ແລະ ໜ້າທີ່ຂອງການສຶກສາແຫ່ງຊາດ
3. ບົດເວົ້າເຖິງ: ລະບົບຂອງການສຶກສາທີ່ປະຕິຮູບໃໝ່
4. ບົດເວົ້າເຖິງ: ການຈັດການຄຸ້ມຄອງການສຶກສາຕາມແນວຄວາມຄິດຂອງໂຄງບົນ, (ມະຫາພາກ) ແລະ ແນວຄວາມຄິດຂອງ ທ້ອງຖິ່ນ (ຈຸລະພາກ).
5. ບົດເວົ້າເຖິງ: ການ "ບໍລິຫານ" ແລະ ການ "ບໍລິການ" ການສຶກສາ.

- ຂອງພາກລັດ
    - ຂອງອົງການປົກຄອງທ້ອງຖິ່ນ
    - ຂອງພາກເອກະຊົນ ແລະ ຊຸມຊົນ

6. ບົດເວົ້າເຖິງ: ມາດຕະຖານ ແລະ ການປະກັນຄຸນນະພາບການສຶກສາ
7. ບົດເວົ້າເຖິງ: ຊັບພະຍາກອນ ແລະ ການລົງທຶນເພື່ອການສຶກສາ
8. ບົດເວົ້າເຖິງ: ຄູອາຈານ ແລະ ບຸກຄະລາກອນການສຶກສາ
9. ບົດເວົ້າເຖິງ: ເຕັກໂນໂລຊີ ເພື່ອການສຶກສາ
10. ບົດສະເພາະການ (ລະບຽບການ...)

(ອາດຍັງບໍ່ທັນໝົດພຽງແຕ່ 10 ຫົວບົດນີ້, ເມື່ອມີການຈັດສຳມະນາຄົ້ນຄວ້າ ຄັກແນ່, ອາດຈະຕື່ມເຂົ້າຫຼື ສັບຊ້ອນໃໝ່ໄດ້).



Comment: Some Westerners have indicated that the thought bubbles should be reversed. It is true that sometimes the Lao partner is looking for the latest technology when, in fact, more traditional technology is more appropriate.

# ພາກທີ II. ຂໍ້ມູນພື້ນຖານ
# ເພື່ອຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ການສຶກສາຂອງຊາດ

## ບົດທີ 1. ບັນຫາຂອງສັງຄົມ ແລະ ວັດທະນະທຳຂອງຊາດ

ກ່ອນອື່ນໝົດພວກເຮົາຈຳເປັນຕ້ອງໄດ້ ກຳນົດຂອບເຂດຂອງຄຳວ່າ "ບັນຫາ ສັງຄົມ - ວັດທະນະທຳ " ນີ້ນຳກັນໃຫ້ແຈ້ງ ແລະ ຊັດເຈນທີ່ສຸດເສຍກ່ອນ ເພື່ອໃຫ້ເຂົ້າໃຈ ເປັນເອກະພາບກັນຄັກແນ່. ເພາະວ່າ, ດັ່ງທີ່ເຮົາຮູ້ດີ, ວັດທະນະທຳ ໝາຍເຖິງຂົງເຂດວຽກທີ່ກວ້າງຂວາງ, ເກືອບເວົ້າໄດ້ວ່າ ບໍ່ມີຂອບເຂດ, ເບິ່ງໄດ້ຍາກ, ບາງເທື່ອກໍບໍ່ເປັນຮູບປະທຳເໝືອນກັບວຽກງານເສດຖະກິດ ຫຼື ວຽກງານການຜະລິດຕ່າງໆ ຊຶ່ງເຮົາສາມາດຕີລາຄາ ຫລື ເຫັນຄຸນຄ່າໄດ້ງ່າຍ.

ວຽກງານ ສັງຄົມ-ວັດທະນະທຳ ນີ້ເປັນວຽກງານທີ່ກະທົບໂດຍກົງໃສ່ຈິດໃຈຂອງສະມາຊິກໃນສັງຄົມ. ຜົນຂອງການກະທົບທີ່ດີ ສະແດງອອກໃນໃບໜ້າຂອງຄົນໃນຊາດ, ທີ່ສະທ້ອນໃຫ້ເຫັນຄວາມຫ້າວຫັນ, ຄວາມກະຕືລືລົ້ນ, ຄວາມຍິ້ມແຍ້ມແຈ່ມໃສ ແລະ ຄວາມມີລະບຽບວິໃນ. ກົງກັນຂ້າມ, ຜົນຂອງການກະທົບທີ່ບໍ່ດີນັ້ນ ສະແດງອອກໃນ ໃບໜ້າຂອງຄົນໃນຊາດທີ່ໂສກເສົ້າຫງ່ວມເຫງົາ, ບໍ່ມີຄວາມເບີກບານມ່ວນຊື່ນ, ບໍ່ຫ້າວຫັນ, ບໍ່ເໜັງບໍ່ຕີງ, ບໍ່ຢາກສ້າງຢາກສາ ແລະ ບໍ່ນັບຖືລະບຽບວິໄນ ຂອງສັງຄົມ.

ຍ້ອນບັນຫາສັງຄົມ-ວັດທະນະທຳ ບໍ່ສາມາດສະແດງໃຫ້ເຫັນຜົນແຈ້ງດີສຳລັບຫຼາຍໆຄົນ ເຮົາຈຳເປັນຕ້ອງໄດ້ກຳນົດສອງຄຳນີ້ວ່າ ໝາຍເຖິງຫຍັງຄັກແນ່ເສຍກ່ອນ, ເຮົາຈຶ່ງຈະຮູ້ວ່າການພັດທະນາ ໃນຂົງເຂດສັງຄົມ

ແລະ ວັດທະນະທຳຢູ່ປະເທດເຮົານີ້ໄດ້ ບັນລຸຜົນສຳເລັດ ຫຼື ບໍ່ໃນໄລຍະຜ່ານມາ.

### 1. ເນື້ອແທ້ຂອງສັງຄົມແມ່ນຫຍັງ?

ຕາມຫລັກວິຊາການ, ເພິ່ນນິຍາມຄວາມໝາຍຢ່າງກວ້າງໆຂອງສັງຄົມວ່າ ໝາຍເຖິງ "ກຸ່ມ" ຂອງ "ສິ່ງທີ່ມີຊີວິດ" ທີ່ "ເປັນໜ່ວຍອິດສະຫຼະ" (ເພິ່ງຕົງໄດ້ດ້ວຍຕົວມັນເອງ) ຊຶ່ງມາຢູ່ຮ່ວມກັນໂດຍມີຄວາມສຳຄັນທາງສັງຄົມນຳກັນໃນລັກສະນະຖາວອນ "ເຊັ່ນ: ສັງຄົມປວກ, ສັງຄົມເຜິ້ງ, ສັງຄົມມົດ... ເພິ່ນຈຳແນກໃຫ້ຮູ້ອີກວ່າສັດໃນໂລກນີ້ມີ 2 ຈຳພວກໃຫຍ່ໆ, ຖ້າເບິ່ງໃນແງ່ສັງຄົມວິທະຍາ (Sociology) ຄື ຈຳພວກ "ສັດສັງຄົມ" ແລະ ຈຳພວກ "ສັດໂລກ" (ຫຼື ສັດບໍ່ສັງຄົມ).

- **ສັດສັງຄົມ:** ເມື່ອເວົ້າເຖິງສັດ, ຫລື ມະນຸດ(ຊຶ່ງກໍແມ່ນສັດສະຫຼາດ), ໂດຍທຳມະຊາດແລ້ວ ຍ່ອມຢູ່ຮ່ວມກັນເປັນກຸ່ມ, ເປັນໝູ່ ແລະ ມີຄວາມປະຕິສຳພັນຕໍ່ກັນໃນລັກສະນະໃດໜຶ່ງ ແລະ ມີລະບຽບ ເພື່ອທຳຄວາມເຂົ້າໃຈກັນໄດ້ ໂດຍສັນຊາດຍານຂອງມັນ, ເພື່ອປ້ອງກັນກຸ່ມຂອງມັນ ແລະ ຕໍ່ສູ້ກັບກຸ່ມຂອງພັນອື່ນ ຫຼື ສັງຄົມອື່ນໄດ້.
- **ສັດໂລກ:** ຫລືສັດດ່ຽວ (ສັດບໍ່ສັງຄົມ) ໂດຍທຳມະຊາດແລ້ວກໍຍ່ອມຢາກ ດຳລົງຊີວິດໂດຍລຳພັງ, ບໍ່ຢູ່ຮ່ວມກັນເປັນສັງຄົມ ເຊັ່ນ: ແມວ, ກົບ, ນົກບາງຊະນິດ. ບໍ່ຢູ່ເປັນຄອບຄົວ.

ສະນັ້ນ, ອີງຕາມການຄົ້ນຄວ້າດ້ານມະນຸດວິທະຍາ, ສາຂາຕ່າງໆ, ເພິ່ນຈຶ່ງສາມາດໃຫ້ຄຳນິຍາມຄວາມວ່າ "ມະນຸດ" ຊຶ່ງໝາຍເຖິງຄົນເຮົາກໍຕ່າງກັນອອກໄປອີກຄື:

- ມະນຸດ ເປັນສັດລ້ຽງລູກດ້ວຍນົມ (ສາຂາສະລິລະສາດ)

(Physiology)

- ມະນຸດ ເປັນສັດທີ່ມີອາລົມ, ມີຄວາມຮູ້ສຶກ (ສາຂາຈິດຕະວິທະຍາ) (Psychology) ແລະ (Pedagogy)
- ມະນຸດ ເປັນສັດສັງຄົມ (ສາຂາສຶກສາ-ສັງຄົມວິທະຍາ) (Sociology) -(Education)
- ມະນຸດ ເປັນສັດທີ່ມີວັດທະນະທຳ (ສາຂາວັດທະນະທຳ ສຶກສາ) (Cultural study)
- ມະນຸດເປັນສັດການເມືອງ (ສາຂາລັດຖະສາດສຶກສາ) (Political study) ແລະ ຍັງມີຫຼາຍໆສາຂາອີກຕໍ່ໆໄປ, ແລ້ວແຕ່ນັກຄົ້ນຄວ້າຈະພາກັນກຳນົດອອກ.

ສະຫຼຸບແລ້ວ, ມະນຸດມີຄຸນສົມບັດ ຫຼື ຈຸດພິເສດຫຼາຍຢ່າງແຕກຕ່າງກັບສັດ (ສັດເດຍລະສານ) ຊຶ່ງເຮົາບໍ່ຈຳເປັນຈະນຳເອົາມາພັນລະນາ ໃນທີ່ນີ້. ແຕ່ຄວາມຕ້ອງການພື້ນຖານຂອງມະນຸດ, ຊຶ່ງຫຼີກບໍ່ໄດ້, ອາດແບ່ງເປັນ 3 ປະເພດດັ່ງຕໍ່ໄປນີ້ໄດ້:

(1) ຄວາມຕ້ອງການທາງຊີວະພາບ: (Biology) ໝາຍເຖິງ ຄວາມຕ້ອງການໃນສິ່ງທີ່ຈຳເປັນໃນການດຳລົງຊີວິດ ເພື່ອໃຫ້ຢູ່ລອດ, ແລະ ສິ່ງອຳນວຍຄວາມສະດວກອັນຕ່ຳສຸດໃນຊີວິດເຊັ່ນ ຄວາມຕ້ອງການອາຫານ, ຕ້ອງການນ້ຳດື່ມເພື່ອບັນເທົາຄວາມຫິວ, ຕ້ອງການທາງເພດສຳພັນເພື່ອສືບພັນ, ຕ້ອງການອາກາດຫາຍໃຈ, ຕ້ອງການຂັບຖ່າຍຂອງເບື່ອຂອງເສຍຈາກຮ່າງກາຍ, ຕ້ອງການປ້ອງກັນໂລກໄພໄຂ້ເຈັບຕ່າງໆ...ເປັນຕົ້ນ.

(2) ຄວາມຕ້ອງການທາງສັງຄົມ ແລະ ວັດທະນະທຳ (Social and

Cultural) ໝາຍເຖິງ ຄວາມຕ້ອງການຂັ້ນພື້ນຖານ ເພື່ອຢູ່ຮ່ວມກັນເປັນສັງຄົມຂອງມະນຸດໄດ້ເຊັ່ນ: ຕ້ອງການມີເພື່ອນຝູງ, ຕ້ອງການມີຜູ້ຄົບຫາສະມາຄົມ, ຕ້ອງການຊ່ວຍເຫຼືອເກື້ອກູນກັນ, ຕ້ອງການມີສະຖານະພາບ ຫຼື ຖານະ ຫລື ບົດບາດ (ຖານະ ຫຼື ກຽດສັກສີຂອງມະນຸດ), ຕ້ອງການມີພາສາປາກເວົ້າເພື່ອເຂົ້າໃຈຄວາມຮູ້ສຶກ, ຕ້ອງການພາສາຂຽນເພື່ອເປັນສື່ຂອງຄວາມເຂົ້າໃຈຕໍ່ກັນເປັນຕົ້ນ.

(3) ຄວາມຕ້ອງການທາງຈິດຕະວິທະຍາ ຫຼື ທາງດ້ານຈິດໃຈ ແລະ ດ້ານອາລົມ: (Emotion) ໝາຍເຖິງ ຄວາມຕ້ອງການຄວາມຮັກ, ຄວາມອົບອຸ່ນໃຈ, ຄວາມເອື້ອເຟື້ອ ຄວາມເຫັນອົກເຫັນໃຈຈາກຜູ້ອື່ນ, ຄວາມຮູ້ສຶກໝັ້ນໃຈໃນຕົນເອງ, ການຍອມຮັບຈາກຜູ້ອື່ນ, ເຖິງວ່າຄວາມຕ້ອງການທາງຈິດໃຈນີ້ ຈະເບິ່ງບໍ່ເຫັນໂດຍກົງ ກໍ່ສຳນຶກເອົາໄດ້ດ້ວຍພຶດຕິກຳ, ທ່າທີ, ສາຍຕາ ແລະ ອື່ນໆ...ນັ້ນ, ເປັນສິ່ງທີ່ຈຳເປັນຕໍ່ຊີວິດມະນຸດທີ່ຈັດເປັນປະເພດໃຫຍ່ໆ, ຂອງຄວາມຕ້ອງການຂັ້ນພື້ນຖານ.

ດັ່ງນັ້ນ, ທຳມະຊາດຂອງມະນຸດຈຶ່ງມີ **ຄວາມຕ້ອງການທີ່ຈະຢູ່ຮ່ວມກັນເປັນສັງຄົມ ແລະ ຈະຕ້ອງຮຽນຮູ້ລະບຽບຂອງສັງຄົມທີ່ຕົນອາໄສ** ໃຫ້ດີ ເພື່ອຄວາມເຂົ້າໃຈດີຕໍ່ກັນ, ຖ້າສັງຄົມໃດຫາກຂາດຄວາມຕ້ອງການຕ່າງໆດັ່ງກ່າວມານີ້, ສັງຄົມນັ້ນກໍ່ຈະເປັນສັງຄົມທີ່ຄ່ອຍໆຫ່ຽວແຫ້ງໄປ, ບໍ່ມີຊີວິດຊີວາ ແລະ ຄ່ອຍໆຕາຍໄປເອງຢ່າງບໍ່ຮູ້ສຶກຕົວເຖິງວ່າຈະບໍ່ມີສັງຄົມອື່ນບຽດບຽນກໍຕາມ.

2. **ເນື້ອແທ້ຂອງວັດທະນະທຳແມ່ນຫຍັງ?**

ຕາມຫລັກວິຊາການ, ເພິ່ນໄດ້ນິຍາມຄຳ "ວັດທະນະທຳ " ວ່າ ໝາຍເຖິງ ວິຖີຊີວິດ ຫຼື ແບບລັກສະນະພຶດຕິກຳຂອງສັງຄົມ ເຊິ່ງສະມາຊິກໃນສັງຄົມນັ້ນໄດ້ປະພຶດປະຕິບັດ, ຖ່າຍທອດສືບຕໍ່ກັນມາຕາມແນວຄິດສ້າງສັນໃນເລື່ອງກ່ຽວກັບຄວາມເຊື່ອ, ຄວາມຮູ້ສຶກ ແລະ ສິ່ງປະດິດເພື່ອຄວາມຈະເລີນງອກງາມ" ຂອງສັງຄົມນັ້ນເອງ.

ລັກສະນະສຳຄັນຂອງ "ວັດທະນະທຳ " ອາດກ່າວຫຍໍ້ໄວ້ວ່າ ມີຮອດ 8 ຂໍ້ ຫຼື ຈຸດພິເສດດ້ວຍກັນ ດັ່ງລຸ່ມນີ້:

(1) ວັດທະນະທຳເປັນວິຖີທາງ(ແບບແຜນ) ຂອງການດຳລົງຊີວິດຂອງມະນຸດ.

(2) ວັດທະນະທຳເປັນສິ່ງທີ່ໄດ້ມາຈາກການຮຽນຮູ້.

(3) ວັດທະນະທຳຕັ້ງຢູ່ບົນພື້ນຖານຂອງ ທຳນຽມປະເພນີທີ່ ແນ່ນອນ ແລະ ຕ້ອງເປັນທີ່ຍອມຮັບນັບຖືຂອງສະມາຊິກໃນ ສັງຄົມນັ້ນໆ ຫລື ໃນຊຸມຊົນນັ້ນໆ.

(4) ວັດທະນະທຳມີລັກສະນະເປັນມະໂນຄະຕິໄດ້ (ເປັນຄະຕິເຕືອນໃຈໄດ້).

(5) ວັດທະນະທຳເປັນເໝືອນມາດຕະຖານ ຫລື ມາດຕະການ ຫຼື ເງື່ອນໄຂ ໃນການປະເມີນຄ່າພຶດຕິກຳຂອງມະນຸດ ໄດ້ວ່າຄົນຜູ້ນັ້ນຖ້າປຽບໃສ່ວັດຖຸວ່າມີ ຄ່າພຽງໃດ, ລະດັບໃດ. (ບຸກຄົນໃນລະດັບວັດທະນະທຳແຕກຕ່າງກັນ ບໍ່ສາມາດໃຫ້ຄຸນຄ່າ ຕໍ່ສິ່ງປະດິດແນວດຽວກັນຢ່າງຖືກຕ້ອງ ຫຼື ທຳມະຊາດອັນດຽວກັນນັ້ນໄດ້ຄືກັນ); ຕົວຢ່າງ: ຊາວຕາເວັນຕົກເຂົ້າໃຈຕໍ່ພາຂວັນຍາກ, ເຖິງຈະອະທິບາຍໃຫ້ເຂົາເຂົ້າໃຈໄດ້ ກໍຍັງບໍ່ແນ່ໃຈວ່າຄວາມເຂົ້າໃຈຂອງເຂົາຈະໄດ້ຕາມຈິດໃຈຂອງຄົນໃນຊາດນັ້ນໆ ຫຼື ບໍ່.

(6) ວັດທະນະທຳເປັນມໍລະດົກໃນສັງຄົມ, ຜົນຂອງການຮຽນຮູ້ ຫຼື ການຖ່າຍທອດດ້ານພາສາເວົ້າ, ພາສາຂຽນ, ເຮັດໃຫ້ ວັດທະນະທຳຕ່າງໆສາມາດ ສືບທອດຈາກຄົນລຸ້ນກ່ອນມາເຖິງລຸ້ນປັດຈຸບັນ ຫຼື ລຸ້ນຕໍ່ໆໄປ ໃນອະນາຄົດ ໄດ້ເປັນຢ່າງດີ.

(7) ວັດທະນະທຳເປັນຈຸດລວມຂອງບັນທັດຖານ, ຄ່ານິຍົມ ແລະ ຄວາມເຊື່ອ.

(8) ວັດທະນະທຳມີການປ່ຽນແປງໃຫ້ເຂົ້າກັບສິ່ງແວດລ້ອມຢູ່ສະເໝີ.

**ປະເພດຂອງວັດທະນະທຳມີຢູ່ 2 ປະເພດໃຫຍ່ຄື:**

ກ. ວັດທະນະທຳທາງຈິດໃຈ ຫຼື ນາມມະທຳ (Culture intangible ຫຼື culture immatérielle ຫຼື culture non-physique..)ໄດ້ແກ່ ແບບຢ່າງຂອງການປະຕິບັດ ຫຼື ຂອງແນວທາງແຫ່ງ ຄວາມຄິດ, ຄວາມເຊື່ອ, ອຸດົມການ, ສິນທຳ, ຈາລິຍະທຳ, ທຳນຽມປະເພນີ, ປັດຊະຍາ, ລະບຽບກົດໝາຍ ແລະ ພິທີການຕ່າງໆ...

ຂ. ວັດທະນະທຳທາງວັດຖຸ ຫຼື ຮູບປະທຳ (Culture tangible ຫຼື culture matérielle ຫຼື culture physique) ໄດ້ແກ່ສິ່ງປະດິດຕ່າງໆ ແລະ ເຕັກໂນໂລຊີທີ່ມະນຸດປະດິດຂຶ້ນໄດ້ ເຊັ່ນ: ໂຕະ, ຕັ່ງ, ອາຄານ, ເຄື່ອງກິນ ເຄື່ອງດົນຕີ, ຜົນງານທາງດ້ານ ສິລະປະກຳຕ່າງໆ...

ນອກຈາກສອງປະເພດໃຫຍ່ທີ່ກ່າວມານີ້ ເພິ່ນຍັງຈຳແນກໃຫ້ເຫັນໄດ້ອີກວ່າ ມີປະເພດຍ່ອຍຕ່າງໆ ດັ່ງລຸ່ມນີ້ຊຶ່ງກໍ່ນອນຢູ່ໃນສອງປະເພດໃຫຍ່ນັ້ນຄື:

(1) **ຄະຕິທຳ ຄື:** ວັດທະນະທຳທີ່ກ່ຽວກັບ ຫຼັກໃນການດຳເນີນຊີວິດ,

ສ່ວນໃຫຍ່ແມ່ນເປັນເລື່ອງຂອງຈິດໃຈ ແລະ ໄດ້ມາຈາກ ວັດທະນະທຳທາງສາສະໜາ ເຊັ່ນ: "ຄວາມພາກພຽນ" ນຳໄປສູ່ຄວາມສຳເລັດຜົນ "ຄວາມສາມັກຄີເຮັດໃຫ້ເກີດກຳລັງ"... (ເກົ້າອິດເກົ້າເຍື້ອນຫາກຊິໄດ້ຫ່ອນຄຳ, ໄມ້ລຳດຽວລ້ອມຮົ້ວບໍ່ໄຄວໄຜ່ບໍ່ພ້ອມແປງບ້ານບໍ່ເຮືອງ...).

(2) **ເນຕິທຳ ຄື:** ວັດທະນະທຳທາງກົດໝາຍ, ລວມທັງລະບຽບປະເພນີຕ່າງໆ ທີ່ເປັນທີ່ຍອມນັບຖືກັນວ່າມີຄວາມສຳຄັນ ພຽງພໍເທົ່າກັບກົດໝາຍເຊັ່ນ: ຜູ້ເປັນລູກຕ້ອງນັບຖືພໍ່ແມ່ ຜູ້ເປັນສິດຕ້ອງ ເຄົາລົບຄູ, ຜູ້ເປັນຍິງລາວຄວນນຸ່ງສິ້ນ...

(3) **ວັດຖຸທຳ ຄື:** ວັດທະນະທຳທາງວັດຖຸ, ເປັນເລື່ອງທີ່ກ່ຽວກັບ ຄວາມຢູ່ດີກິນດີ, ເຄື່ອງມື, ເຄື່ອງໃຊ້, ທີ່ຢູ່ອາໄສ, ເຄື່ອງນຸ່ງຫົ່ມ...

(4) **ສະຫະທຳ ຄື:** ວັດທະນະທຳທາງສັງຄົມ, ເປັນວັດທະນະທຳທີ່ກ່ຽວກັບຫຼັກປະຕິບັດຕ່າງໆ ທີ່ຈະເຮັດໃຫ້ຄົນຢູ່ຮ່ວມກັນ ດ້ວຍຄວາມຜາສຸກ, ລວມທັງເລື່ອງທີ່ກ່ຽວກັບລະບຽບ ມາລະຍາດ, ມາລະຍາດທາງສັງຄົມ ທີ່ຕິດຕໍ່ກ່ຽວຂ້ອງກັນໃນສັງຄົມ, (Le svoir-vivre), ເຊັ່ນ: ມາລະຍາດໃນການຮັບໂທລະສັບ, ມາລະຍາດໃນການເວົ້າຈາປາໄສ, ມາລະຍາດໃນການກິນ, ການນຸ່ງຖື...

(5) **ວັດທະນະທຳ "ຫຼັກ"** ໝາຍເຖິງ ວັດທະນະທຳທາງ "ສັງຄົມ ໃຫຍ່", ສັງຄົມໃຫຍ່ນີ້ປະກອບດ້ວຍສັງຄົມຍ່ອຍຫຼາຍໆ ຮູບແບບຂອງສັງຄົມເຊັ່ນ: ໃນວັດທະນະທຳລາວ, ເຖິງຈະບໍ່ໄດ້ບົ່ງບອກຢ່າງເປັນທາງການ, ວ່າເປັນ **ສັງຄົມຫລັກ** ກໍ່ເຂົ້າໃຈນຳກັນວ່າ ແມ່ນວັດທະນະທຳລາວລຸ່ມເປັນວັດທະນະທຳຫຼັກຂອງລາວໃນທົ່ວໄປ ຫລືວັດທະນະທຳຂອງຊາດ (ເວລາສະແດງອອກໃຫ້ຄົນຕ່າງປະເທດ

ຮູ້). ສ່ວນວັດທະນະທຳຊົນເຜົ່າຕ່າງໆ ໃນລາວກໍ່ຖືວ່າເປັນ ວັດທະນະທຳຍ່ອຍຂອງລາວ (ບໍ່ແມ່ນບໍ່ສຳຄັນ, ແຕ່ແມ່ນສ່ວນໜຶ່ງອີກ), ຖືວ່າເປັນເອກະລັກອັນໜຶ່ງ (Cultural Identity) ຂອງວັດທະນະທຳລາວ. ຂ້າພະເຈົ້າຢາກເນັ້ນວ່າ "ຄວາມເອື້ອເຟື້ອຕໍ່ກັນ" ນີ້ເປັນເອກະລັກວັດທະນະທຳຂອງລາວກໍໄດ້. ໝາຍຄວາມວ່າ "ຄວາມເອື້ອເຟື້ອຕໍ່ກັນ" ເປັນ Identité culturelle ຂອງລາວໄດ້.

(6) **ວັດທະນະທຳຍ່ອຍ** ໝາຍເຖິງ ຮູບແບບພຶດຕິກຳຂອງ ຄົນກຸ່ມໃດກຸ່ມໜຶ່ງທີ່ມີ ລັກສະນະເດັ່ນ, ເປັນເອກະລັກຂອງຕົນເອງ ໃນສັງຄົມ, ແຕ່ມີລັກສະນະສອດຄ່ອງກັບວັດທະນະທຳຫຼັກ ອັນເປັນວັດທະນະທຳຂອງສັງຄົມໃຫຍ່ ທີ່ຄົນກຸ່ມນັ້ນເປັນສະມາຊິກຢູ່ເຊັ່ນ:

- ວັດທະນະທຳຍ່ອຍຕາມເຊື້ອຊາດ
- ວັດທະນະທຳຍ່ອຍຕາມເພດໄວ
- ວັດທະນະທຳຍ່ອຍຕາມທ້ອງຖິ່ນ
- ວັດທະນະທຳຍ່ອຍຕາມອາຊີບ... ແລະ ອື່ນໆ.

- **ອົງປະກອບຂອງວັດທະນະທຳ ມີ 4 ປະການ ຄື:**

(1) ມະຕິ (Concepts) ໄດ້ແກ່ຄວາມຮູ້, ແນວຄວາມຄິດ (ຄວາມຄິດລວມຍອດ ຫຼື ມະໂນມະຕິ ຫຼື ມະໂນຄິດ) ຄວາມເຊື່ອ, ຄ່ານິຍົມ ແລະ ອຸດົມການເຊິ່ງໄດ້ເປັນແນວທາງໃນການສ້າງພຶດຕິກຳ ຂອງສັງຄົມມະນຸດ.

(2) ພິທີການ (Usages ຫຼື us et coutumes, ອັງກິດວ່າ ways and customs) ໄດ້ແກ່ຮູບການປະຕິບັດ ຫຼື ທຳນຽມປະເພນີເພື່ອໃຫ້ເປັນໄປຕາມປົກກະຕິ ເຊັ່ນ ພິທີແຕ່ງດອງ, ພິທີປົງສົບ, ພິທີທາງ

ສາສະໜາ... ເປັນຕົ້ນ.

(3) ອົງການ (Organization) ເປັນການລວມໝູ່ (ຮ່ວມກຸ່ມ) ໂດຍມີຈຸດປະສົງ ແລະ ວິທີການດຳເນີນງານ ຢ່າງມີລະບົບລະບຽບທີ່ແນ່ນອນ, ເພື່ອປະຕິບັດວິທີການ ຫຼື ພິທີທາງການ.

(4) ວັດຖຸ (Symbol object) ເປັນເຄື່ອງມືທີ່ມີຮູບຮ່າງສຳພັດໄດ້, ລວມທັງ ພາສາເວົ້າ (ບາງກໍລະນີເພິ່ນວ່າ "ຄາຍ", ຫລື "ບ້າງ" ລາງວັນ ຫຼື "ສິນນ້ຳໃຈ" ແລະ ອື່ນໆ).

- **ໜ້າທີ່ຂອງວັດທະນະທຳ ປະກອບ ດ້ວຍສິ່ງຕໍ່ໄປນີ້ຄື:**

ກ. ສາມາດກຳນົດຮູບແບບຂອງສະຖາບັນຕ່າງໆ ເຊັ່ນ: ສະຖາບັນສາສະໜາ, ສະຖາບັນການວິໄຈສັງຄົມ, ສະຖາບັນ... ສະຖາບັນປະຊາທິປະໄຕແຫ່ງຊາດ... ເຊິ່ງຕ້ອງໄດ້ກຳນົດອອກຢ່າງຈະແຈ້ງ, ຖ້າ ຍັງກຳນົດບໍ່ໄດ້, ກໍຈະເປັນສະຖາບັນບໍ່ທັນໄດ້.

ຂ. ສາມາດກຳນົດພຶດຕິກຳຂອງມະນຸດໃນສັງຄົມ, ອີງໃສ່ຮູບແບບຂອງສະຖາບັນ.

ຄ. ສາມາດໃຊ້ເປັນເຄື່ອງມືໃນການຄວບຄຸມ ແລະ ຄຸ້ມຄອງສັງຄົມ.

ສະນັ້ນ, ການຮຽນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ຄວາມວ່າ "ວັດທະນະທຳ" ນີ້ ຈຶ່ງເປັນສິ່ງທີ່ຈຳເປັນທີ່ສຸດໃນສັງຄົມມະນຸດ, ໂດຍສະເພາະແມ່ນພາຍໃນຜູ້ນຳພາສັງຄົມກ້າວເດີນຕໍ່ໄປໃນປັດຈຸບັນກໍ່ຄື ໃນອະນາຄົດ, ບໍ່ວ່າໃນອຳນາດການປົກຄອງໃດ, ລັດທິໃດກໍ່ຕາມ, ຖ້າຂາດການວາງ "ມະຕິ" (Resolution) ຢ່າງຖືກຕ້ອງ, ຖ້າບໍ່ມີ ຫຼື ຂາດ "ພິທີການ" (Usage, custom) ຢ່າງລະອຽດ ແລະ ບໍ່ສອດຄ່ອງດີ, ຫຼື ຖ້າບໍ່ມີ "ວັດຖຸ" (Symbolic object )

ຫຼື "ຄາຍ" ຫຼື "ນະໂຍບາຍ" ດີ, ການດຳເນີນວັດທະນະທຳ ໃນສັງຄົມກໍຈະມີບັນຫາ; ຖ້າເຮົາຫາກ ວາງ "ນະຕິ" ບໍ່ຖືກ, ວາງເງື່ອນໄຂຕ່າງໆຕາມໃຈມັກຂອງເຮົາເອງ ແລະ ບັງຄັບເອົາຕາມເຮົາຕ້ອງການໂດຍ ບໍ່ຄຳນຶງເຖິງສິ່ງທີ່ສັງຄົມເຄີຍຍອມຮັບກັນມາແລ້ວນັ້ນ, ການກະທຳຂອງເຮົາກໍອາດຈະກາຍເປັນການມ້າງເພສັງຄົມທີ່ດີມາກ່ອນ ແລະ ຈະທຳລາຍຄວາມເຊື່ອໝັ້ນຂອງມະນຸດ ທີ່ເຄີຍມີຄວາມຊາບຊຶມ ໃນແບບອື່ນມາກ່ອນແລ້ວນັ້ນ ຢ່າງບໍ່ຮູ້ສຶກຕົວ.

ຈາກນັ້ນ ເຮົາອາດຈະບໍ່ໄດ້ຮັບການຮ່ວມມືຢ່າງເຕັມສ່ວນຈາກສັງຄົມນັ້ນໆ. ເວລານັ້ນການພັດທະນາສັງຄົມ-ວັດທະນະທຳ ໃນສັງຄົມນັ້ນກໍຈະເປັນໄປໄດ້ຍາກ. (ເຮົາອາດນຳເອົາຕົວຢ່າງການລະດົມໃຫ້ປະຊາຊົນເຂົ້າສະຫະກອນ). ໃນໄລຍະການເລີ່ມຫັນປ່ຽນສັງຄົມລາວ ໃຫ້ໄປຕາມ "ສັງຄົມນິຍົມ" ຫຼື ຕາມ ການຜະລິດລວມໝູ່

(ມີຄະຕິເຕືອນໃຈໜຶ່ງໄດ້ບອກໄວ້ວ່າ: "ຢາກປູກພືດໃຫ້ກຽມດິນ, ຢາກກິນໃຫ້ກຽມອາຫານ, ຢາກພັດທະນາການ ໃຫ້ ພັດທະນາປະຊາຊົນ, ຢາກພັດທະນາບຸກຄົນ ໃຫ້ພັດທະນາຈິດໃຈ, ຢາກພັດທະນາຜູ້ໃດກໍໃຫ້ພັດທະນາຕົນເອງກ່ອນ).

24/VII
ຫ້າມຈຳໜ່າຍ

## ບົດທີ 2. ສັງຄົມ ແລະ ວັດທະນະທຳລາວໃນປັດຈຸບັນ

(ບົດນີ້ຄັດມາຈາກ, ສຳມະນາເປັນທາງການປີ 2001)

### 1. ຄວາມເຂົ້າໃຈຕໍ່ບັນຫາສັງຄົມ ແລະ ວັດທະນະທຳລາວ ໃນປັດຈຸບັນ

ກ່ອນຈະຕອບໄດ້ຢ່າງຖືກຕ້ອງຕໍ່ຄຳຖາມເຈາະຈົ້ມທີ່ວ່າ, ໃນໄລຍະຜ່ານມາ 20 ກວ່າປີນີ້ ການພັດທະນາໃນຂົງເຂດສັງຄົມ ແລະ ວັດທະນະທຳນັ້ນມີອັນໃດໄດ້ບັນລຸຜົນສຳເລັດ ແລະ ມີຄວາມກ້າວໜ້າອັນສຳຄັນໃດແດ່?, ພວກເຮົາຄິດວ່າ ຄວນຈະຈັດຂອບເຂດຂອງຄວາມເຂົ້າໃຈຢ່າງຊັດເຈນ ແລະ ເປັນເອກະພາບກັນຕໍ່ຄວາມໝາຍຂອງ ສັງຄົມ-ວັດທະນທຳນີ້ນຳກັນເສຍກ່ອນ.

ຄຳສອງຄຳນີ້ອາດເວົ້າໄດ້ວ່າເປັນຄື 2 ໜ້າຂອງເງິນຫຼຽນດຽວ. ໜ້າໜຶ່ງແມ່ນສັງຄົມ, ໜ້າໜຶ່ງແມ່ນວັດທະນະທຳຊຶ່ງແຍກອອກຈາກກັນບໍ່ໄດ້ ເພາະວ່າຖ້າມີວັດທະນະທຳ ດີຈຶ່ງມີສັງຄົມດີ ຖ້າບໍ່ມີວັດທະນະທຳດີ, ສັງຄົມກໍດີບໍ່ໄດ້, ຢາກສ້າງໃຫ້ສັງຄົມດີໄດ້ຕ້ອງ ສ້າງຄົນໃຫ້ເປັນຄົນດີ ເພາະວ່າຄວາມໝາຍ ຂອງວັດທະນະທຳນັ້ນແມ່ນໝາຍເຖິງ " ການເພາະປູກ"(Culture) ຫຼື ການປູກຝັງ. ການຝຶກຝົນຫລໍ່ຫລອມ, ການພັດທະນາໃຫ້ງອກງາມ. ຖ້າເຮົາປູກພັນໄມ້ຍືນຕົ້ນ, ເມື່ອເກີດງອກງາມດີ ມັນເປັນຕົ້ນໄມ້ໄດ້, ຖ້າເຮົາປູກພັນໄມ້ປະເພດເຄືອ, ເມື່ອເກີດງອກງາມຂຶ້ນກໍຕ້ອງຫາຄ້າງມາໃຫ້ທາວເຄືອ.

**ສະຫຼຸບແລ້ວ** ກໍ່ແມ່ນມະນຸດ ເປັນຜູ້ປູກຝັງອົບຮົມ ບົ່ມນິດໄສໃຫ້ເກີດຄວາມຈະເລີນງອກງາມ, ສະນັ້ນ ຄຳວ່າວັດທະນະທຳ ຈຶ່ງໄດ້ແກ່

ລັກສະນະທີ່ສະແດງຄວາມຈະເລີນງອກງາມ, ຄວາມເປັນລະບຽບ, ຄວາມກົມກຽວກ້າວໜ້າຂອງຊາດ ແລະ ສິນທຳອັນດີງາມຂອງປະຊາຊົນ. ຖ້າເຮົາເຂົ້າໃຈໄດ້ດັ່ງກ່າວນີ້ ວັດທະນະທຳຈຶ່ງເປັນສ່ວນທັງໝົດ ທີ່ສະຫຼັບສັບຊ້ອນປະກອບເຂົ້ານຳກັນດ້ວຍ: ຄວາມຮູ້, ຄວາມເຊື່ອ, ສິນລະປະ, ສິນທຳ, ກົດໝາຍ, ຂະໜົບທຳນຽມ, ປະເພນີອັນດີງາມ, ຊຶ່ງເປັນສິ່ງທັງຫຼາຍທັງປວງທີ່ມະນຸດໄດ້ສ້າງຂຶ້ນ ຕະຫຼອດຮອດລັກສະນະ ນິດໄສໃຈຄໍຂອງຄົນໃນສັງຄົມ, ເປັນເວລາອັນດົນນານສົມຄວນ, ແຕ່ບໍ່ສາມາດເກີດຂຶ້ນໄດ້ໃນຊົ່ວໄລຍະສັ້ນໆ. ດັ່ງທີ່ທຸກຄົນຮູ້ດີ, ວຽກງານສັງຄົມ-ວັດທະນະທຳ ເປັນວຽກງານທີ່ກ້ວາງຂວາງ, ເກືອບເວົ້າໄດ້ວ່າບໍ່ມີຂອບເຂດ, ເບິ່ງໄດ້ຍາກ, ຖ້າບໍ່ມີລະດັບແນວຄິດອັນຖືກຕ້ອງເພື່ອເບິ່ງຄັກແນ່, ເພາະມັນບໍ່ເປັນຮູບປະທຳເໝືອນກັບວຽກງານເສດຖະກິດ ຫຼື ວຽກງານໃນຂົງເຂດການຜະລິດ ເຊິ່ງເຮົາສາມາດ ຕີລາຄາຄຸນຄ່າໄດ້ງ່າຍກວ່າ, ດັ່ງໄດ້ກ່າວມາໃນບົດ ກ່ອນນີ້ແລ້ວ.

ສ່ວນວຽກງານ ສັງຄົມ-ວັດທະນະທຳ ເປັນວຽກງານທີ່ກະທົບໂດຍກົງໃສ່ຈິດໃຈຂອງສະມາຊິກໃນສັງຄົມ. ຜົນຂອງການກະທົບທີ່ດີນັ້ນ ສະແດງໃນໃບໜ້າຂອງຄົນໃນຊາດ ທີ່ສະທ້ອນໃຫ້ເຫັນຄວາມຫ້າວຫັນ, ຄວາມກະຕືລືລົ້ນ (Enthusiasm) , ຄວາມຍິ້ມແຍ້ມແຈ່ມໃສ ແລະ ຄວາມມີລະບຽບວິໄນດີ. ກົງກັນຂ້າມຜົນຂອງການກະທົບທີ່ບໍ່ດີນັ້ນ ສະແດງອອກໃນໃບໜ້າຂອງຄົນໃນຊາດ ທີ່ໂສກເສົ້າຫງ່ອມເຫງົາ, ບໍ່ມີຄວາມເບີກບານມ່ວນຊື່ນ, ບໍ່ຫ້າວຫັນ, ບໍ່ຢາກເໜັງຢາກຕີງ, ບໍ່ຢາກສ້າງຢາກສາ ແລະບໍ່ນັບຖືລະບຽບວິໄນຂອງສັງຄົມ.

ຍ້ອນບັນຫາ ສັງຄົມ-ວັດທະນະທຳ ບໍ່ສາມາດສະແດງໃຫ້ເຫັນຜົນທີ່ແທ້ຈິງໄດ້ສຳລັບຫຼາຍໆຄົນ, ພວກເຮົາຈຶ່ງໄດ້ເວົ້າກັນ ໃນໜ່ວຍຄົ້ນຄວ້າ

ມື້ວານນີ້ໝົດນີ້ ແຕ່ວຽກງານສຶກສາ, ວຽກງານຂ່າວສານ, ວຽກງານການຄຸ້ມຄອງລັດ, ຄຸ້ມຄອງແຮງງານ ແລະ ສະຫວັດດີການສັງຄົມ; ທັງໝົດທີ່ກ່າວມາແລ້ວນັ້ນ ກໍ່ລ້ວນແລ້ວແຕ່ແມ່ນວຽກງານສັງຄົມແທ້, ແຕ່ເປັນພຽງກິດຈະກຳແຕ່ລະສ່ວນຂອງສັງຄົມເທົ່ານັ້ນ ເຖິງວ່າຈະເຮັດວຽກງານການສຶກສາ ໄດ້ຢ່າງແຂງແຮງປານໃດກໍຕາມ ເຖິງຈະມີມະຫາວິທະຍາໄລ ໄດ້ທຸກໆແຂວງໃນທົ່ວປະເທດກໍຕາມ, ກໍ່ຍັງບໍ່ແມ່ນວ່າສັງຄົມ-ວັດທະນະທຳຂອງຊາດຈະຈະເລີນງອກງາມໄດ້, ຖ້າໝົດທຸກກິດຈະກຳຫາກບໍ່ມີການປະສານ ສົມທົບກັນ ແລະ ມີຜົນກະທົບຊຶ່ງກັນແລະ ກັນເປັນຢ່າງດີ, ຢ່າງສອດຄ່ອງກັບ ຍຸກສະໄໝ, ທັງພາຍໃນ ແລະ ພາຍນອກອີກ.

ລວມຄວາມແລ້ວ, ສະມາຊິກຂອງສັງຄົມເຊິ່ງແມ່ນ ມວນມະນຸດຂອງຊາດ ນັ້ນມີຄວາມຕ້ອງການພື້ນຖານຫຼາຍໆຢ່າງທີ່ຂາດບໍ່ໄດ້. ຖ້າຂາດສິ່ງໃດສິ່ງໜຶ່ງລົງໄປ ກໍ່ຈະເຮັດໃຫ້ສັງຄົມນັ້ນບໍ່ສົດໃສ.

ບັດນີ້, ເຮົາລອງນຳເອົາຄວາມຕ້ອງການຕ່າງໆ ອັນພື້ນຖານຂອງສັງຄົມມະນຸດ ທີ່ໄດ້ກ່າວມາແລ້ວໃນບົດກ່ອນນັ້ນ ມາເຍືອງເບິ່ງສັງຄົມລາວເຮົາໃນປັດຈຸບັນນີ້ ເບິ່ງດູວ່າເຮົາໄດ້ສະໜອງຄວາມຈຳເປັນອັນພື້ນຖານນັ້ນຕໍ່ສັງຄົມເຮົາໄດ້ດີໃນຂອບເຂດທົ່ວປະເທດຫຼາຍປານໃດ? ຈຶ່ງຈະຮູ້ວ່າ ການພັດທະນາ ວັດທະນະທຳ- ສັງຄົມ ເຮົາກ້າວໜ້າໄປໄດ້ດີ ຫຼື ບໍ່ດີພຽງໃດ?

ແຕ່ເຮົາບໍ່ຄວນລືມວ່າ, ໃນເມື່ອເຮົາກ່າວເຖິງສັງຄົມລາວ ກໍ່ຄວນເບິ່ງໃຫ້ທົ່ວປະເທດຢ່າງລະອຽດ ຕ້ອງຮູ້ໂຄງສ້າງຂອງສັງຄົມລາວ ໃຫ້ເປັນເອກະພາບກັນອີກ.

ຂ້າພະເຈົ້າຄິດວ່າ ວັດທະນະທຳລາວ ລະຫວ່າງສັງຄົມເມືອງ ແລະສັງຄົມຊົນນະບົດ ຫຼື ເຂດພູດອຍຫ່າງໄກສອກຫຼີກ ກໍ່ຍັງມີຫຼາຍຢ່າງ

ແຕກຕ່າງກັນ. ເຊິ່ງເຮົາບໍ່ຈຳເປັນ ມາຈຳແນກໃຫ້ເຫັນລະອຽດໃນທີ່ນີ້ໄດ້ໝົດ. ແຕ່ສິ່ງທີ່ຄວນຮັບຮູ້ນຳກັນເຮົາຄວນ **ເສີມສ້າງ** ໃຫ້ມີສັງຄົມແຫ່ງຊາດ ຫຼື ວັດທະນະທຳຫຼັກດ້ານໜຶ່ງ ແລະ ອີກດ້ານໜຶ່ງແມ່ນ **ເສີມສ້າງ** ໃຫ້ມີສັງຄົມທ້ອງຖິ່ນ ຫຼື ວັດທະນະທຳຍ່ອຍເຊັ່ນ: ຢູ່ປະເທດໄທ, ເພິ່ນກໍ່ພາກັນສືບສານວັດທະນະທຳ "ອີສານ" ເຊິ່ງກໍ່ແມ່ນວັດທະນະທຳຂອງເຊື້ອຊາດລາວເຮົາແທ້ໆ, ແຕ່ລາວ ເຮົາບາງຄົນພັດວ່າ "ບໍ່ໃຫ້ເຮັດຄືໄທ"ເພາະເຮົາເອງຈຳແນກເຮົາເອງບໍ່ອອກ ບາງຢ່າງຂອງວັດທະນະທຳເຮົາທີ່ເຮົາເຄີຍຮັບຮູ້ວ່າ ດີມາແຕ່ດົນນານ ແລະ ຄວນສົ່ງເສີມ ວັດທະນະທຳຍ່ອຍນັ້ນຕາມຊຸມຊົນ, ຕາມເຊື້ອຊາດ-ຊົນເຜົ່າພັນ, ຕາມເພດ, ຕາມໄວ, ຕາມທ້ອງຖິ່ນ, ຕາມອາຊີບ... ແລະ ອື່ນໆ, ເຮົາພັດໄປບອກ ວ່າຂອງຜູ້ອື່ນ, ຈຶ່ງເຮັດໃຫ້ຫຼາຍຄົນງົງໄດ້.

ເມື່ອເຮົາຕີລາຄາຄວາມກ້າວໜ້າ ທາງສັງຄົມຢູ່ລາວເຮົາ ຈຳເປັນຕ້ອງໄດ້ເບິ່ງໃນ ແງ່ລະດັບຊາດ ຊຶ່ງຈຳເປັນຕ້ອງເຂົ້າໃຈກັນຢ່າງຖືກຕ້ອງໄດ້, ບໍ່ດັ່ງນັ້ນກໍຈະຖຽງກັນບໍ່ແລ້ວ ເປັນຈັກເທື່ອ.

**ຕອບຂໍ້ເຈາະຈົ້ມ 1.**

- ຜ່ານມາສິ່ງທີ່ພໍກ່າວໄດ້ວ່າ ມີຄວາມສຳເລັດ ຂັ້ນພື້ນຖານໃນ ດ້ານສັງຄົມ ເຫັນວ່າຄືຈະແມ່ນສັງຄົມມີຄວາມສະຫງົບດີສົມຄວນຕະຫຼອດ 20 ກວ່າປີ ຜ່ານມາ, ເຖິງຈະແມ່ນມີການ ລັກເລັກຂະໂມຍນ້ອຍຢູ່. ຕາມສັງຄົມຕົວເມືອງກໍຕາມ, ເວົ້າທົ່ວໄປ ແລ້ວປະຊາຊົນບັນດາເຜົ່າ ກໍ່ມີການໄປມາຫາສູ່ກັນຢ່າງສະດວກ ສະບາຍຕາມເຂດຊົນນະບົດກໍ່ຄື ເຂດຕົວເມືອງໃຫຍ່. ສັງຄົມອຸ່ນອຽນສະຫງົບດີສົມຄວນ.
- ມີຄວາມສາມັກຄີບັນດາເຜົ່າໃນທົ່ວສັງຄົມ, ພັກ-ລັດ ກໍ່ໄດ້ ພະຍາ

ຍາມກໍ່ສ້າງ ຖັນແຖວບັນດາເຜົ່າເຂົ້າໃນການຈັດຕັ້ງ ຂອງລັດ ໄດ້ດີທັງມີຢູ່ໃນທຸກລະດັບຊັ້ນຄົນ(1) ນັບແຕ່ຊັ້ນວິຊາການນ້ອຍຈົນຮອດຊັ້ນນຳ.

- ໄດ້ມີຄວາມພະຍາຍາມປົກປັກຮັກສາມູນເຊື້ອ ວັດທະນະທຳແຫ່ງຊາດ ເປັນຕົ້ນແມ່ນຮັບຮູ້ວ່າ ໄດ້ມີການປະດັບປະດາ ວັດວາອາຮາມດີຂຶ້ນ, ສ້າງແຫຼ່ງທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳຫລາຍຂຶ້ນ, ແຕ່ເນື້ອໃນຂອງການປະດັບປະດາດັ່ງກ່າວ ຍັງບໍ່ທັນເປັນທີ່ພໍໃຈໃນທົ່ວສັງຄົມເທົ່າທີ່ຄວນ.
- ໄດ້ມີຂະບວນປະດິດຄິດແຕ່ງສິລະປະດົນຕີ ທີ່ມີລັກສະນະຊາດ ແລະ ລັກສະນະເຜົ່າຊົນ. ແຕ່ຄຽງຄູ່ກັບການກ້າວໜ້າທາງສັງຄົມທີ່ກ່າວມານີ້, ເຫັນວ່າຍັງມີຂໍ້ຄົງຄ້າງໃນຫຼາຍໆດ້ານ ຊຶ່ງເຮົາພໍຈຳແນກໄດ້ດັ່ງລຸ່ມນີ້:

- ແນວຄິດພາກສ່ວນ ນັບມື້ນັບຂະຫຍາຍຕົວແຮງ, ບໍ່ວ່າຢູ່ຕາມຂະແໜງການຕ່າງໆຂອງລັດ ກໍຄືຢູ່ຕາມຊັ້ນຄົນຕ່າງໆ ໃນສັງຄົມ.
- ແນວຄິດບໍ່ປະຢັດ, ສິ້ນເປືອງ, ຟູມເຟືອຍ, ອວດຮັ່ງອວດມີ, ແຂ່ງຂັນກັນຫລິ້ນ ເສັ້ນຫຼິ້ນສາຍ.
- ແນວຄິດຂີ້ຄ້ານມັກງ່າຍ, ມັກພາກັນເວົ້າໄດ້ຕາມການເຜີຍແຜ່ຂໍ້ມູນຂ່າວສານຂອງຊັ້ນເທິງແບບກົນຈັກ,ບໍ່ຊອກເຂົ້າໃຈ, ແລະບໍ່ສົນໃຈວ່າຕົນເອງເປັນແບບຢ່າງດີແລ້ວບໍຫຼືຍັງ,ໃນຖານະຕົນເປັນຜູ້ຊີ້ນຳ;
- ແນວຄິດເມີນເສີຍຕໍ່ລະບຽບວິໄນຂອງບ້ານເມືອງ, ຍັງມັກຖິ້ມຂີ້ເຫຍື້ອແບບ ຊະຊາຍໜັກຢູ່.

(1) ຄວນເຂົ້າໃຈ "ຊັ້ນຄົນ" ໃຫ້ຖືກ. ໝາຍຄວາມວ່າ, ຊັ້ນໃນໜ້າທີ່ຕຳແໜ່ງທີ່ ພັກ-ລັດມອບໝາຍໃຫ້, ເພື່ອໃຫ້ກຽດຊຶ່ງກັນແລະກັນ ແຕ່ບໍ່ແມ່ນສ້າງ "ຊົນຊັ້ນ" ຄືສະໄໝສັກດີນາ, ຜູ້ອາວຸໂສກໍຕ້ອງໄດ້ໝອບຄານເຂົ້າຫາ "ເຊື້ອສາຍສັກດີນາ". ທີ່ມີອາຍຸຕ່ຳກວ່າ (ຮັບບໍ່ໄດ້)!

ສາຍເຫດຕົ້ນຕໍຂອງຂໍ້ຄົງຄ້າງເຫຼົ່ານີ້, ໃນທັດສະນະສ່ວນຕົວຂອງຂ້າພະເຈົ້າ, ແມ່ນຖືກໝົດທຸກຂໍ້ຂອງຫົວຂໍ້ຕ່າງໆທີ່ເພິ່ນຍົກຂຶ້ນມາເຊັ່ນ: ຍ້ອນດ້ານນະໂຍບາຍບໍ່ຈະແຈ້ງ, ລະບຽບກົດໝາຍບໍ່ເຄັ່ງຄັດທັງທາງພາກທິດສະດີ ທັງທາງພາກປະຕິບັດ, ການລົງທຶນ ແລະ ການຄຸ້ມຄອງບໍລິຫານ, ທັງການຈັດຕັ້ງ ແລະ ບຸກຄະລາກອນ, ຜົນສະທ້ອນທີ່ບໍ່ດີມາຈາກພາຍນອກຍັງມີຫລາຍ. ຍັງມີເຈດຕະນາຝ່າຝືນລະບຽບກົດໝາຍບ້ານເມືອງຢູ່.

ແຕ່ໃນນັ້ນ, ເດັ່ນກວ່າໝູ່ແມ່ນ ຍ້ອນຄວາມບໍ່ໂປ່ງໃສໃນການຄຸ້ມຄອງ ບໍລິຫານໃນສັງຄົມ ເວົ້າລວມ, ການກຳນົດສະຖາບັນ ປະຊາທິປະໄຕບໍ່ທັນລະອຽດຈະແຈ້ງເຮັດໃຫ້ ຄົນໃນສັງຄົມໂດຍສະເພາະຜູ້ທີ່ມີອຳນາດ "ໝູນໃຊ້" ຊ່ອງຫວ່າງຈົນບໍ່ມີຂອບເຂດ.

**ຕອບຂໍ້ເຈາະຈົ້ມ 2**

- ບັນຫາທີ່ພົ້ນເດັ່ນທີ່ສຸດ, ໃນສະພາບແວດລ້ອມແຫ່ງ ເສດຖະກິດຕະຫຼາດ ແລະ ເປີດກ້ວາງການພົວພັນກັບສາກົນ ແມ່ນການ ສໍ້ລາດບັງຫຼວງ ຊຶ່ງທຸກຄົນກໍ່ຮູ້ດີແຕ່ບໍ່ມີໃຜແກ້ໄດ້, ຈົນເຮັດໃຫ້ມີການກຳນົດໂດຍ ຂໍ້ດຳລັດນາຍົກລັດຖະມົນຕີອອກຫວ່າງມໍ່ໆນີ້ ຊຶ່ງສະແດງໃຫ້ເຫັນວ່າ ມີຜູ້ເປັນບັນຫາເດັ່ນທີ່ຮ້າຍແຮງຕໍ່ສະພາບການ **ສູນເສຍຄຸນທາດປະຕິວັດ**, ດັ່ງທີ່ສະຫາຍ ຫົວໜ້າກົມ ຈັດຕັ້ງກະຊວງສຶກທິການໄດ້ຍົກຂຶ້ນໃນກອງປະຊຸມ.
- ການທີ່ຈະກຳນົດທິດທາງ ແລະ ມາດຕະການແກ້ໄຂບັນຫານີ້ໄດ້ ມີແຕ່ເຮັດໃຫ້ມີຄວາມໂປ່ງໃສ, ໃຫ້ປະຊາຊົນເຫັນໄດ້ວ່າ ລັດເຮົາມີຄວາມສາມາດປາບປາມພວກ "ໜ້າເງິນ" ໄດ້ແທ້ ຕ້ອງໄດ້ປະຕິບັດກົດໝາຍຢ່າງເຄັ່ງຄັດເທົ່ານັ້ນ ບໍ່ວ່າຜູ້ໃຫຍ່, ບໍ່ວ່າຜູ້ນ້ອຍ, ທຸກຄົນ

ຕ້ອງສະເໜີພາບຕໍ່ໜ້າກົດໝາຍຂອງບ້ານເມືອງ. ຕາບໃດເຮົາບໍ່ເຮັດໃຫ້ການຄຸ້ມຄອງບໍລິຫານໂປ່ງໃສດີ, ປະຊາຊົນກໍຈະຂາດຄວາມເຊື່ອໝັ້ນຕໍ່ການນຳຕະຫລອດໄປ, ແລະ ກໍຈະສະແດງອອກເຖິງຄວາມບໍ່ນັບຖືລະບຽບວິໄນຕໍ່ໄປໄດ້ຢູ່.

**ຕອບຂໍ້ເຈາະຈົ້ມ 3**

- ຕໍ່ຍຸກແຫ່ງສະຕິປັນຍາ ແລະ ຂໍ້ມູນຂ່າວສານນີ້, ຂ້າພະເຈົ້າເຫັນດີເຫັນພ້ອມນຳສະຫາຍໜຶ່ງທີ່ຍົກໃຫ້ເຫັນວ່າ "ພວກເຮົາຍັງຄານຳລະດັບການຮັບຮູ້ຕໍ່ຍຸກ ແຫ່ງສະຕິປັນຍາ", ຕໍ່ຍຸກສ້າງຄົນໃຫ້ມີຄວາມສາມາດຢ່າງແທ້ຈິງ; ພວກເຮົາຍັງມີວິໄສທັດແບບ "ສຳພັດ" ທີ່ໝາຍເຖິງການໄດ້ສຳພັດຕົວຈິງ ແລ້ວຈຶ່ງແກ້ ແທນທີ່ຈະມີວິໄສທັດ ແລະ ຍຸດທະສາດລວມຢ່າງ ຈະແຈ້ງນຳກັນໄວ້ລ່ວງໜ້າໂລດ. ສະພາບທີ່ພວກເຮົາເຫັນນຳກັນ ໃນໄລຍະຜ່ານມາແມ່ນພວກເຮົາເຮັດວຽກແບບ "ຊາວນາ" ຕາມພວກເຮົາເຄີຍເວົ້າກັນມາເລື້ອຍໆນັ້ນ ແຕ່ກໍບໍ່ມີຫຍັງປ່ຽນພຶດຕິກຳໄດ້. ຈະຖ້າໃຫ້ໃຜປ່ຽນໃຫ້ຖ້າຕົນເອງບໍ່ຕັດສິນໃຈປ່ຽນເອງ.. ການເບິ່ງງົບປະມານກໍ່ເບິ່ງແບບບໍ່ໂປ່ງໃສ. ການຫາເງິນເຂົ້າລັດໄດ້ແນວໃດກໍ່ຄວນໃຫ້ແຈ້ງຕໍ່ປະຊາຊົນຮັບຊາບແຕ່ລະໄລຍະ, ເຂົາຈຶ່ງຈະພໍໃຈ ປະກອບສ່ວນ ຫຼື ເຂົາຈຶ່ງຢາກຈະມີສ່ວນຮ່ວມໃນການສ້າງສາພັດທະນາປະເທດຊາດນຳກັນໄດ້.
- ໃນຍຸກນີ້, ທາງທີ່ດີພວກເຮົາຄວນຟັງມະຫາຊົນ, ປິ່ນໜ້າໃສ່ມະຫາຊົນ, ແທນທີ່ຈະປິ່ນຫຼັງໃສ່ມະຫາຊົນເໝືອນກັນກັບພວກອາດຍາສິດຢູ່ ລະບອບເກົ່າ, ໝາຍຄວາມວ່າ ເຮົາຍັງບໍ່ໄດ້ຖືວ່າ

ປະຫາຊົນສຳຄັນແທ້. ການຫາເງິນເຂົ້າລັດ ຫຼື ເຂົ້າງົບປະມານແຜ່ນດິນກໍຄວນໃຫ້ ຮູ້ກັນເປັນທາງການຢ່າງຈະແຈ້ງ, ການຄຸ້ມຄອງແຂວງ ໂດຍຂັ້ນສູນກາງກໍໃຫ້ເຂັ້ມງວດກວ່າເກົ່າ, ບໍ່ຄວນປະປ່ອຍໃຫ້ແຕ່ລະອຳນາດການປົກຄອງແຂວງ ກາຍເປັນ "ເຈົ້າຖິ່ນນ້ອຍ ຫຼື ໃຫຍ່ ພໍໃຜພໍລາວ" ຢູ່ແຂວງໃຜແຂວງລາວ. ຕົວຢ່າງທີ່ເຫັນໄດ້ແຈ້ງ ໃນໄລຍະຜ່ານມາແມ່ນ ຂັ້ນສູນກາງຈັດງົບປະມານແຫ່ງຊາດ, ເມື່ອບອກວ່າໃຫ້ງົບການສຶກສາວ່າໃຫ້ໄດ້ 15% ຂອງງົບແຜ່ນດິນ ແຕ່ໃນຕົວຈິງ ບາງແຂວງກໍ່ໃຫ້ໄດ້ ແຕ່ 6 ຫລື 7% ກໍມີ, ພຽງແຕ່ຕອບວ່າ "ບໍ່ມີເງິນ" ກໍ່ແລ້ວໄປ. ພາກສ່ວນຮັບຜິດຊອບການເງິນ ຢູ່ບາງບ່ອນ ສະແດງເຖິງຖານະຕຳແໜ່ງຢ່າງອອກໜ້າອອກຕາ. ກົງກັນຂ້າມ, ພວກຄູອາຈານບາງຄົນຈຳເປັນໄດ້ລີ້ຢູ່, ລີ້ກິນບໍ່ມີຖານະບົດບາດຫຍັງໃນສັງຄົມກໍມີ.

- ແຕ່ຕໍ່ບັນຫາການກຳນົດທັດສະນະວິໄສ ແລະ ການຄາດໝາຍສູ້ຊົນ ຕໍ່ການພັດທະນາຊັບພະຍາກອນມະນຸດນັ້ນ ພວກເຮົາກໍຕ້ອງໄດ້ລົງທຶນ ແລະມີແຜນການຈະແຈ້ງຕໍ່ຍຸດທະສາດ ການສຶກສາແຫ່ງຊາດ. ພວກເຮົາຕ້ອງໄດ້ກໍ່ສ້າງການສຶກສາຂັ້ນພື້ນຖານຢ່າງມີປະສິດທິພາບ ຢູ່ໃນທົ່ວສັງຄົມເສຍກ່ອນ ບໍ່ແມ່ນເວົ້າຕາມໃຈວ່າ ບ່ອນໃດມີເງື່ອນໄຂຈຶ່ງເຮັດ. ຈາກນັ້ນຈຶ່ງເລືອກເຟັ້ນໃຫ້ຜູ້ທີ່ດີມີຄຸນສົມບັດຖືກຕ້ອງແລະ ເກັ່ງແທ້ໃຫ້ໄປຮັບການກໍ່ສ້າງ ໃນລະດັບສູງຂຶ້ນສະເພາະແຕ່ຜູ້ມີແວວ ແລະ ມີຄວາມສະຫລາດຢ່າງແທ້ຈິງ, ບໍ່ຄວນໃຫ້ມີການເກື້ອກູນກັນຕໍ່ໄປເລື້ອຍໆ ມັນຕ້ອງເອົາສະຕິປັນຍາແທ້ໆ ແຂ່ງຂັນກັນ ເພື່ອຈະສາມາດຊ່ວງເສັ່ງກັບບັນດາ ປະເທດເພື່ອນບ້ານ ໄດ້ໃນໂອກາດຕໍ່ໄປ, ຖ້າເຮົາຫາກຖືວ່າ

ຍຸກນີ້ເປັນຍຸກສະຕິປັນຍາແທ້. ບໍ່ຄວນໃຫ້ມີ "ຜູ້ຮູ້ບໍ່ໄດ້ເຮັດຫຍັງ ແຕ່ຜູ້ໄດ້ເຮັດ ພັດບໍ່ຮູ້ ຫຍັງ" ດັ່ງຫຼາຍຄົນເວົ້າກັນເລື້ອຍໆ.

- ລະອຽດກ່ຽວກັບບັນຫາການກໍ່ສ້າງຊັບພະຍາກອນມະນຸດນີ້ ຄວນເບິ່ງທຸກສິ່ງທຸກຢ່າງ ໂດຍຜ່ານການສຶກສາຄື: ເຮັດໃຫ້ການສຶກສາຖືກຄົ້ນຄວ້າຈາກທຸກໆຂະແໜງການທີ່ກ່ຽວຂ້ອງ ຕໍ່ການນຳໃຊ້, ເພາະກະຊວງສຶກສາທິການ ເປັນຜູ້ຮັບຜິດຊອບຜະລິດຄົນທີ່ມີຄຸນນະພາບ ແລະ ຂະແໜງການອື່ນຕ້ອງເປັນຜູ້ນຳໃຊ້ແລ້ວຕ້ອງ Feetback (ສົ່ງຂ່າວ) ໃຫ້ກັນຮູ້. ຖ້າຜະລິດ ຢ່າງມີຄຸນນະພາບດີ, ຂະແໜງການຜູ້ທີ່ຮັບເອົາໄປກໍຈະບໍ່ເສຍເວລາ ແລະ ບໍ່ຕ້ອງເສຍທຶນຮອນສົ່ງໄປສ້າງເອົາເອງ ຫຼື ສ້າງເອົາໃຜເອົາລາວຄືຜ່ານມາ. ເຮົາຕ້ອງມີວິໄສທັດເໝືອນກັບ ທ່ານ ລີກວນຢູ (ຜູ້ນຳ ສິງກະໂປ) ໃນ 40-50 ປີ ກ່ອນໜ້ານີ້ ທີ່ກຳນົດວ່າ: ຄົນ ສິງກະໂປ ຕ້ອງເປັນຄົນທີ່ມີຄຸນນະພາບດີເດັ່ນກວ່າໝູ່, ເມືອງ ສິງກະໂປ ຈະຕ້ອງເປັນເມືອງສະອາດກວ່າໝູ່ (ເວົ້າເຖິງ ວິທີ ທ່ານ ລີກວນຢູ ວາງວິໄສທັດເຮັດແທ້ໃນປີ 1962 ນັ້ນຄືວ່າເພິ່ນຈັດ 20% ຂອງງົບປະມານແຫ່ງຊາດສຸມໃສ່ການສຶກສາ ຂັ້ນອະນຸບານກ່ອນ (ລາວເຮົາມີພຽງ 8% ໃນ ປີ 2000), ເວລາຂຽນບົດນີ້ຢູ່ ປີ 2006-2007 ອາດຫຼາຍຂຶ້ນ ແດ່ແລ້ວ, ແຕ່ບໍ່ໝາຍຄວາມວ່າຄຸນນະພາບການສຶກສາດີຂຶ້ນກວ່າເກົ່າ, ເພາະບໍ່ທັນມີການຕີລາຄາແບບ "ນອກຕົວ" ຫຼື ແບບສາກົນ (external evaluation) ກ່ອນຈະກຽມການປະຕິຮູບດັ່ງເຂົາ ປະຕິບັດກັນຢູ່ຕ່າງປະເທດ.

**ຕອບຂໍ້ເຈາະຈີ້ມ 4**

ເປົ້າໝາຍພັດທະນາສັງຄົມແມ່ນ ຖ້າຢາກສ້າງສັງຄົມສີວິໄລ ແລະ ຍຸດຕິທຳ ຕ້ອງກຳນົດນະໂຍບາຍ ແລະ ທິດທາງການພັດທະນາ ການສຶກສາ ໃຫ້ລະອຽດຈະແຈ້ງ ພ້ອມທັງພາກປະຕິບັດກໍຕ້ອງໄດ້ກວດກາ ຕີລາຄາກັນ ຢ່າງເປັນຂະບວນ. ສ່ວນການຂະຫຍາຍຂະແໜງການອື່ນໆ ນັ້ນອາດຍັງບໍ່ ເປັນການຮີບດ່ວນເທົ່າກັບການສຶກສາປານໃດກໍ່ໄດ້ ເພາະການສຶກສາ ເປັນ ບັນຫາໃຈກາງຂອງການພັດທະນາຊັບພະຍາກອນມະນຸດ. ຖ້າຍັງເຮັດ ໃຫ້ການສຶກສາເປັນລູກ "ກ່ຳພ້າ" ໄປເລາະຂໍເງິນນຳທຸກໆຄົນ ຄືທຸກວັນນີ້, ຂະແໜງການອື່ນກໍບໍ່ມີທາງທີ່ຈະສາມາດມີບຸກຄະລາກອນທີ່ດີໄດ້, ໃນທົ່ວ ສັງຄົມ, ກໍ່ຈະກາຍເປັນ " ການເອົາຕົວລອດເປັນຍອດດີ" ຕໍ່ໄປເລື້ອຍໆ.

ສະຫລຸບແລ້ວ, ການທີ່ເຮົາຈະສາມາດຕີລາຄາໄດ້ວ່າ ໃນ 20 ກວ່າ ປີຜ່ານມານີ້, ສັງຄົມ-ວັດທະນະທຳດີຂື້ນ ຫລື ມີສ່ວນຫຍໍ້ທໍ້ຢູ່. ຕ້ອງຕອບວ່າ ດີຂື້ນພຽງ 30% ເທົ່ານັ້ນ, ແຕ່ພ້ອມກັນນັ້ນ, ສ່ວນຫຍໍ້ທໍ້ຍັງມີທ່າຂະຫຍາຍ ແຮງຂື້ນຕື່ມຢູ່, ຖ້າບໍ່ຟ້າວມີມາດຕະການແກ້ໄຂຢ່າງເຄັ່ງຄັດໂດຍດ່ວນ.

(ບົດນີ້ແມ່ນໄດ້ຕອບໃນການສຳມະນາເພື່ອກຽມເນື້ອໃນໃຫ້ກອງປະຊຸມ
ໃຫຍ່ ໃຫ້ຄັ້ງທີ VII ປີ 2001).

# ບົດທີ 3.

# ບາງຄວາມຄິດກ່ຽວກັບຄວາມຈຳເປັນຕ້ອງມີໂຄງການປະຕິຮູບການສຶກສາທີ່ສອດຄ່ອງ ເຊື່ອມໂຍງກັບ ລະບົບການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຊາດ

(ບົດນີ້ໄດ້ຂຽນຂຶ້ນໄວ້ແຕ່ກ່ອນບໍ່ທັນຮູ້ວ່າຈະມີການຈັດສຳມະນາກ່ຽວກັບ ບັນຫາສັງຄົມ ແລະ ວັດທະນະທຳ, ຈັດຂຶ້ນໂດຍຄະນະໂຄສະນາອົບຮົມ, ເພື່ອກະກຽມຮ່າງລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ VII ຂອງ ພັກ, ຜູ້ຂຽນຈຶ່ງຖືວ່າເປັນໂອກາດທີ່ຄວນສະເໜີເພື່ອໃຫ້ຂັ້ນເທິງພິຈາລະນາ).

## 1. ສາຍເຫດ ແລະ ຄວາມຈຳເປັນຕ້ອງມີການປະຕິຮູບການສຶກສາຂອງຊາດ.

- ຍ້ອນປະເທດຊາດຂອງພວກເຮົາ ເຄີຍຕົກເປັນຫົວເມືອງຂຶ້ນຂອງ ຕ່າງປະເທດມາໄດ້ເກືອບ 200 ປີ,(115 ປີ ຕົກເປັນເມືອງສ່ວຍຂອງສະຫຍາມ, 62 ປີ ຕົກເປັນເມືອງຂຶ້ນແບບເກົ່າຂອງຝຣັ່ງ ແລະ 23 ປີ ຕົກເປັນຫົວເມືອງຂຶ້ນແບບໃໝ່ ຂອງຈັກກະພັດ ອາເມລິກາ) ຈຶ່ງບໍ່ມີໂອກາດໄດ້ຄິດຄົ້ນຄວ້າ ການສຶກສາຂອງຊາດຢ່າງເລິກເຊິ່ງເທື່ອງຖອງເອົາເອງຈັກເທື່ອ.

- ຫຼັງຈາກພວກເຮົາໄດ້ສະຖາປະນາປະເທດໃຫ້ເປັນ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ", ພັກ ແລະ ລັດຖະບານ ກໍ່ໄດ້ເອົາໃຈໃສ່ ຢາກແກ້ໄຂທຸກບັນຫາຂອງຊາດ ໃນເວລາອັນຮີບດ່ວນ ຫຼາຍໆບັນຫາໄປພ້ອມກັນ, ເປັນຕົ້ນແມ່ນການປົກປັກຮັກສາຄວາມສະຫງົບ ແລະການພັດທະນາປະເທດ. ແຕ່ກຳລັງທັງເຫື່ອແຮງທັງມັນສະໝອງທີ່ຈະນຳເອົາມາ ຮັບໃຊ້ເຂົ້າໃນການ ຈະພັດທະນາປະເທດຊາດ ໃນໄລຍະຜ່ານມາ

ພັດເປັນກຳລັງທີ່ບໍ່ທັນກຽມພ້ອມ ເພື່ອປະເຊີນໜ້າກັບທຸກບັນຫາຂອງຊາດ, ໂດຍສະເພາະກໍແມ່ນ ກຳລັງເພື່ອຄົ້ນຄວ້າບັນຫາການສຶກສາຢ່າງເລິກເຊິ່ງ, ຈຶ່ງໄດ້ພາກັນນຳໃຊ້ຮູບແບບການສຶກສາ ທີ່ພວກລ່າເມືອງຂຶ້ນປະໄວ້ໃຫ້ເປັນພື້ນຖານຂອງ ການສຶກສາ"ແຫ່ງຊາດ" ຕໍ່ໄປຢູ່. ມີບາງໄລຍະກໍໄດ້ພະຍາຍາມປັບປຸງ, ປ່ຽນແປງແດ່, ກໍໄດ້ພາກັນປັບປຸງຕັດກິ່ງ, ຕັດງ່າ, ໃສ່ຝຸ່ນ **ຕົ້ນໄມ້** ທີ່ເອີ້ນວ່າ " ການສຶກສາລາວ " ນີ້ຕໍ່ໄປພໍບໍ່ໃຫ້ຕາຍຊື່ໆ, ແຕ່ເນື້ອແທ້ ຂອງ **ຕົ້ນໄມ້** ຕົ້ນນີ້ ຍັງແມ່ນເມັດຂອງໝາກໄມ້ພັນເກົ່າຢູ່. ຜົນຂອງໝາກໄມ້ພັນນີ້ຈຶ່ງບໍ່ ສາມາດໃຫ້ລົດຊາດ"ອັນຫອມຫວານ" ສົດໃສອ່ອນຊ້ອຍນີ້ມນວນຕາມໃຈ ນັກຂອງຄົນລາວທີ່ມີວັດທະນະທຳ ອັນດີງາມມາແຕ່ບູຮານນະການໄດ້. ສະນັ້ນ, ມັນເຖິງເວລາແລ້ວທີ່ພວກເຮົາຈະມາຄົ້ນຄິດເຖິງບັນຫາໃໝ່, ພາກັນຊອກຫາພັນທີ່ໃຫ້ລົດຊາດ ຖືກກັບຄວາມຕ້ອງການຂອງຊາດລາວ ແທ້ໆນັ້ນໃຫ້ໄດ້ ພ້ອມກັນນັ້ນ ກໍ່ຕ້ອງຟ້າວເສີມສ້າງຮ່ວມກັນທາງດ້ານສັງຄົມ ລາວໃຫ້ມີໃບໜ້າອັນສະຫງ່າ, ມີກຽດ ແລະ ສັກສີ, ມີຄວາມພາກພູມໃຈ ແລະ ທະນົງໃຈຕໍ່ມູນເຊື້ອຂອງຊາດ, ທັງມີຄວາມຈຳເປັນຕ້ອງໄດ້ເສີມ ກິ່ງງ່າທີ່ກ່ຽວຂ້ອງກັບຍຸກສະໄໝ ແລະ ເຕັກໂນໂລຊີອັນສອດຄ່ອງກັບ ສະພາບຂອງເສດຖະກິດ-ສັງຄົມຂອງຕົນໃຫ້ໄດ້, ເພື່ອສາມາດປະກອບສ່ວນເຂົ້າເປັນສະມາຊິກຂອງວົງຄະນາຍາດສາກົນຢ່າງ ມີກຽດສະຫງ່າໄດ້ຕາມເໝາະສົມ.

ດັ່ງນັ້ນ, ການສຶກສາຂອງປະເທດບໍ່ຄວນຈະເບິ່ງແບບຜິວເຜີນ, ແລະ ກໍບໍ່ຄວນປະໃຫ້ຖືກເບິ່ງໂດຍແຍກອອກຈາກຄວາມເປັນຈິງ ຂອງການພັດທະນາປະເທດຊາດໄດ້ເປັນຢ່າງດີ. ການສຶກສາຕ້ອງສອດຄ່ອງເປັນຢ່າງດີທີ່ສຸດ, ເທົ່າທີ່ຈະສອດຄ່ອງໄດ້ເປັນຢ່າງດີ, ກັບຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ, ໃນໄລຍະປັດຈຸບັນກໍຄືໃນໄລຍະຍາວ.

ພ້ອມກັນນັ້ນ, ການສຶກສາກໍຕ້ອງໃຫ້ປັບຕົວໃຫ້ໃກ້ສິດເຂົ້າກັບວິຖີຊີວິດ ແລະ ວັດທະນະທຳຂອງ ປະຊາຊົນບັນດາເຜົ່າໃນປະເທດຕົນເປັນຢ່າງດີອີກເພື່ອກ້າວຂຶ້ນພ້ອມໆກັນກັບ ປະຊາຊົນບັນດາເຜົ່າທຸກທົ່ວໜ້າ ໃນທົ່ວປະເທດໃຫ້ໄດ້.

ການສຶກສາຂອງຊາດຈຶ່ງຕ້ອງສອດຄ່ອງກັບຄວາມຈິງຂອງການລົງທຶນຈາກງົບປະມານແຫ່ງຊາດເພື່ອການຂະຫຍາຍຕົວ ແລະ ການຄົງຕົວຂອງມັນ. ຍ້ອນແນວນັ້ນ, ການສຶກສາຈຶ່ງຈຳເປັນຕ້ອງໄດ້ນຳໃຊ້ ທຸກສິ່ງທຸກຢ່າງທີ່ປະເທດຕົນມີ ແລະ ຕອບສະໜອງໃຫ້ໄດ້ເອງເສຍກ່ອນ, ໃນຂອບເຂດໃດໜຶ່ງຢ່າງຈະແຈ້ງບໍ່ວ່າໃນ ດ້ານຊັບພະຍາກອນທຳມະຊາດ ກໍ່ຄືຊັບພະຍາກອນບຸກຄົນທີ່ດີ ແລະ ມີຄຸນສົມບັດສູງເພື່ອສ້າງໃຫ້ມີການລະດົມກຳລັງທີ່ດີຂອງຕົນຊ່ວຍຊຸກຍູ້ສົ່ງເສີມການກ້າວ ຂຶ້ນເທື່ອລະກ້າວໄປພ້ອມໆກັນ, ແຕ່ບໍ່ແມ່ນເຮັດໃຫ້ການສຶກສານີ້ກາຍເປັນການສຶກສາທີ່ບີບບັງຄັບສັງຄົມ ໂດຍບໍ່ຮັບໃຊ້ສັງຄົມຂອງຊາດ[(1)], ເພາະວ່າໃຜໆກໍ່ຮູ້ດີວ່າການສຶກສາເປັນຂອດຕັດສິນ ການຂະຫຍາຍຕົວຂອງສັງຄົມ. ແຕ່ບໍ່ແມ່ນບີບບັງຄັບສັງຄົມ, ໃນທີ່ນີ້ຢາກ ໝາຍຄວາມວ່າ ການສຶກສາສ້າງໃຫ້ຄົນໜີຈາກທ້ອງຖິ່ນ ການຜະລິດ, ບັງຄັບໂດຍ ທາງກົງ ຫຼື ທາງອ້ອມໃຫ້ຂາຍດິນນາເພື່ອໃຫ້ລູກ ຫລານໄດ້ຮຽນຕໍ່ສູງ ແຕ່ບໍ່ມີວຽກເຮັດງານທຳຮອງຮັບໄດ້ຕາມຄວາມ ເໝາະສົມ, ຈາກນັ້ນກໍເປັນການສ້າງຄວາມບໍ່ພໍໃຈໃຫ້ສັງຄົມ...

ສະນັ້ນ, ຢູ່ໃນຂອບເຂດຂອງການວາງແນວຄິດ (Concept) ຄືແນວນັ້ນ ພວກເຮົາຈຶ່ງຈຳເປັນຕ້ອງໄດ້ຄົ້ນຄວ້າ, ໂດຍແມ່ນໃຫ້ລາວ ເຮົາເອງເປັນຫຼັກ, ຄິດເອງຮ່ວມກັນເສຍກ່ອນ ໃນວິທີສະເໜີໃຫ້ເຂົ້າໃຈບັນຫາ ການ

---

(1) ຖ້າຈະເຂົ້າໃຈຄວາມໝາຍນີ້, ຄວນເບິ່ງພຽງແຕ່ວ່າ, ຖ້າລູກຫຼານປະຊາຊົນຢາກຮຽນໄດ້ສູງຕາມຄວາມເກັ່ງແທ້ຂອງເຂົາ, ພໍ່ແມ່ຜູ້ບໍ່ມີທຶນຫຼາຍຕ້ອງໄດ້ຂາຍດິນໄຮ່ດິນນາ ຊື້ລົດຈັກ, ເຊົ່າເຮືອນໃຫ້ລູກໄດ້ເຂົ້າຮຽນໃນເມືອງໃຫຍ່ໆ, ບາງທີກໍ່ບໍ່ກັບມາຊ່ວຍພໍ່ແມ່ໃຫ້ພົ້ນທຸກຊ້ຳກໍມີບາງຄົນ.

ສຶກສາ ຂອງຊາດຢ່າງເລິກເຊິ່ງເຖິງຖອງນຳກັນ ແລະ ໃຫ້ຖືກກັບເປົ້າໝາຍທີ່ສຸດຊຶ່ງເຮົາອາດຈະພໍ ແຍກກຸ່ມບັນຫາໃຫ້ເຫັນໄດ້ ເປັນສອງກຸ່ມໃຫຍ່ເສຍກ່ອນດັ່ງລຸ່ມນີ້:

ກ. **ກຸ່ມບັນຫາທີໜຶ່ງ:** ດ້ານໜຶ່ງ, ພວກເຮົາມີຄວາມຈຳເປັນ, ແລະໄວທີ່ສຸດເທົ່າທີ່ຈະໄວໄດ້, ຕ້ອງເຮັດໃຫ້ປະຊາຊົນບັນດາເຜົ່າ ທັງໝົດປະເທດໄດ້ຮັບການສຶກສາຂັ້ນພື້ນຖານ, ເພື່ອຈະຕ້ອງນຳເອົາການສຶກສາຂັ້ນພື້ນຖານນີ້ເປັນ " ຖານທີ່ໝັ້ນ " ເພື່ອສ້າງຄຸນນະພາບຊີວິດໃຫ້ແກ່ປະຊາຊົນ, ສ້າງລະບົບ ຫຼື ມາດຖານຄວາມກ້າວໜ້າດ້ານເສດຖະກິດໂດຍຕົນເອງໄດ້, ໂດຍສະເພາະແມ່ນພີ່ນ້ອງຮ່ວມຊາດ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ ຊຶ່ງເມື່ອເບິ່ງເລິກໆເຂົ້າໄປແທ້ໆແລ້ວກໍແມ່ນມີແຕ່ ທັນເຂົ້າປັບປຸງການສຶກສາເທົ່ານັ້ນ ຈຶ່ງພໍຈະແກ້ບັນຫາຕ່າງໆໄດ້ສ່ວນໃດສ່ວນໜຶ່ງ, ພ້ອມທັງຍົກຄຸນນະພາບ ຊີວິດປະຊາຊົນບັນດາເຜົ່າໄດ້ ໃນຈັງຫວະອັນໄວຂຶ້ນໄດ້. ຕາມຄວາມຕ້ອງການຂອງແນວທາງຂອງພັກ. ຕໍ່ບັນຫານີ້, ພວກເຮົາໄດ້ຕັດສິນໃຈຮ່ວມກັບ ປະຊາຄົມໂລກຢູ່ກອງປະຊຸມໃຫຍ່ສາກົນຈັດຂຶ້ນ ຢູ່ຈອມທຽນ, ປະເທດໄທ ໃນປີ 1990 (ລາວເຮົາກໍໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໂດຍແມ່ນ ທ່ານ ສະໝານ ວິຍາເກດ ກົມການເມືອງ ສູນກາງພັກ, ລັດຖະມົນຕີວ່າການກະຊວງສຶກສາທິການໃນເວລານັ້ນໄດ້ພາຄະນະຜູ້ແທນໄປຮ່ວມ) ແລະ ໄດ້ແຈ້ງໃຫ້ໂລກຊາບວ່າຈະເຮັດໃຫ້ປະຊາຊົນບັນດາເຜົ່າ ໄດ້ຮັບການສຶກສາຂັ້ນພື້ນຖານໂດຍທົ່ວເຖິງ, ເຮັດໃຫ້ເດັກໃນ ໄວຮຽນຂັ້ນປະຖົມສຶກສາ ຢູ່ເຂດຫ່າງໄກສອກຫຼີກໄດ້ເຂົ້າຮຽນໝົດທຸກຄົນ, ຫຼື ຢ່າງຕ່ຳກໍໃຫ້ໄດ້ເຂົ້າຮຽນ 80% ໃນ ປີ 2000. (ດຽວນີ້ ປີ 2010 ຍັງບໍ່ທັນໄດ້ 90%).

ຂ. ກຸ່ມບັນຫາທີສອງ: ດ້ານໜຶ່ງອີກ, ພວກຊາວໜຸ່ມທີ່ຈົບຈາກ

ໂຮງຮຽນຂອງລັດອອກໄປ ຊຶ່ງສ່ວນໃຫຍ່ກໍໄດ້ຮັບຈາກການສຶກສາຊັ້ນມັດທະຍົມຕອນປາຍ ໄປຫຼາຍສົມຄວນແລ້ວ, ແຕ່ກໍໄດ້ຮັບການສຶກສາຊຶ່ງຮູ້ແຕ່ທິດສະດີແບບລວມໆບໍ່ເຄີຍມີການທົດລອງ(Lab) ທີ່ບໍ່ໄດ້ຕິດແທດກັບຊີວິດຕົວຈິງ ຂອງສັງຄົມເລີຍ; ທັງບໍ່ມີໂອກາດໄດ້ຮຽນແບບມີການທົດລອງວິທະຍາສາດຈະແຈ້ງເພື່ອເຂົ້າໃຈທິດສະດີໄດ້ຢ່າງຊັດເຈນ ແລະລືມບໍ່ໄດ້. ໃນໂຮງຮຽນ ຍ້ອນຄູຂາດຄວາມສາມາດ ແລະ ຂາດອຸປະກອນການຮຽນ- ການສອນ, ຂາດຄວາມຮັກອາຊີບ... ຊຶ່ງແທນທີ່ຈະເປັນຊາວໜຸ່ມທີ່ຮັບ ໃຊ້ສັງຄົມຄອບຄົວໄດ້ດີ, ພັດກາຍເປັນຊາວໜຸ່ມທີ່ແຍກຕົວອອກຈາກ ສັງຄົມຄອບຄົວ, ບໍ່ວ່າຢູ່ໃນ ເມືອງ ຫຼື ຢູ່ຊົນນະບົດ, ຊາວໜຸ່ມທີ່ຖືກຖອນຮາກ (Déracinés/up rooted) ພວກທີ່ໄດ້ເຂົ້າ ໂຮງຮຽນ, ເກືອບເວົ້າໄດ້ ວ່າທຸກໆຄົນທີ່ໄດ້ຮັບ ໃບປະກາດສະນິຍະບັດການສຶກສາແລ້ວ, ບໍ່ວ່າໃນລະດັບໃດກໍຕາມ, ກໍມີແຕ່ຕ້ອງການແຍກໜີຈາກພໍ່ແມ່ໜີຈາກທ້ອງຖິ່ນ ເຖິງວ່າຜູ້ກ່ຽວເອງບໍ່ຄິດຢາກໜີ, ແຕ່ລະບົບ,ໂຄງປະກອບການສຶກສາ ກໍຍູ້ໃຫ້ໜີຈາກບ້ານເກີດເມືອງນອນຂອງຕົນເຂົ້າໄປຫາວຽກເຮັດງານ ທຳຢູ່ໃນສັງຄົມຕົວເມືອງ, ເທົ່າທີ່ຈະຫາໄດ້ຖ້າຫາບໍ່ໄດ້ກໍກາຍເປັນຜູ້ສ້າງ ບັນຫາໃຫ້ສັງຄົມເມືອງໃຫຍ່ ຫຼື ຢາກແຕ່ຮຽນຕໍ່ສູງຂຶ້ນໄປເລື້ອຍໆໂດຍບໍ່ຢາກຮັບໃຊ້ສັງຄົມ ຫຼື ບໍ່ຄິດຢາກປະກອບສ່ວນພັດທະນາປະເທດ, ຫຼືຖ້າຈະຮັບໃຊ້ກໍຕ້ອງການໜ້າທີ່ ຕຳແໜ່ງສູງຢູ່ຕາມການຈັດຕັ້ງຂອງລັດຖະບານ ເຮັດໃຫ້ງົບປະມານແຫ່ງລັດຕົກເຂົ້າຢູ່ໃນ ສະພາບບໍລິຫານເກືອກູນສູງຂຶ້ນເລື້ອຍໆ.

ຕາບໃດເສດຖະກິດຂອງປະເທດ ບໍ່ທັນຕອບສະໜອງວຽກເຮັດງານທຳໄດ້ດີເທົ່າທີ່ຄວນ ເຮົາກໍບໍ່ຄວນເປີດໂຮງຮຽນຊັ້ນສູງຂຶ້ນເລື້ອຍໆຊຶ່ງຈະເປັນພຽງແຕ່ໃຫ້ໄດ້ ແຈກຢາຍໃບປະກາດສະນິຍະບັດ ເພື່ອສ້າງ

ບັນຫາໃຫ້ຫຼາຍຂຶ້ນຕະຫລອດໄປເທົ່ານັ້ນ ແລະ ຜູ້ທີ່ໄດ້ຮັບໃບປະກາດສະນີຍະບັດກໍ່ບໍ່ຮູ້ຊອກຫາອາຊີບໃຫ້ຕົນເອງໄດ້, ບໍ່ມີຄວາມຮັບຜິດຊອບຕໍ່ສັງຄົມ, ມີແຕ່ຄິດວ່າໃບປະກາດສະນີຍະບັດນັ້ນ ເປັນສິດທິອັນໜຶ່ງທີ່ຈະພາໃຫ້ຕົນໄດ້ຮັບນະໂຍບາຍໃຫ້ໄປຮຽນສູງຕໍ່ໆໄປ ແລະ ຕ້ອງໄດ້ໄປຮຽນສູງຂຶ້ນເລື້ອຍໆ, ຖ້າບໍ່ມີບ່ອນຮຽນຢູ່ພາຍໃນປະເທດກໍຕ້ອງ ໄດ້ໄປຮຽນຕ່າງປະເທດ ແລະ ບາງກໍລະນີ ເມື່ອກັບເຂົ້າມາປະເທດ ກໍ່ບໍ່ຢາກຮັບໃຊ້ສັງຄົມ ຕາມຄວາມຕ້ອງການຂອງລັດອີກ. ເວົ້າແນວນີ້ບໍ່ໝາຍຄວາມວ່າບໍ່ຢາກໃຫ້ຄົນໄດ້ຮຽນສູງ ແລະ ບໍ່ຢາກໃຫ້ການສຶກສາຂະຫຍາຍຕົວ. ກົງກັນຂ້າມ, ພວກເຮົາຕ້ອງການເຮັດໃຫ້ຜົນທີ່ດີຂອງ ການສຶກສາຂະຫຍາຍຕົວແທ້ແຕ່ຂະຫຍາຍຕົວຢ່າງສົມສ່ວນ, ຕ້ອງໄດ້ເບິ່ງເປີເຊັນຂອງການຂະຫຍາຍຕົວຂອງແຕ່ລະລະດັບການສຶກສາແຕ່ລະຂະແໜງການຂອງວຽກງານໄປນຳໃຊ້ໃຫ້ໄດ້ໃນແຕ່ລະໄລຍະ, ຕົວຢ່າງ: ອາດຈະຕ້ອງໃຫ້ເດັກທຸກຄົນ ໃນເກນອາຍຸ ໄດ້ຮຽນຢູ່ໃນໂຮງຮຽນຢ່າງຕ່ຳ 9 ປີຈຶ່ງປະໃຫ້ເຂົາອອກຈາກ ໂຮງຮຽນໄດ້ ແລະ ໃນໄລຍະ 9 ປີ ໃນລະບົບສາມັນນີ້ເດັກຈະຕ້ອງມີ ອາຍຸ 14-15 ປີ (ເລີ່ມເຂົ້າຮຽນໃນອາຍຸ 7 ປີ ຢ່າງຊ້າ) ແລະ ເຂົາເຈົ້າກໍຈະມີຄວາມຮູ້ຂັ້ນພື້ນຖານໄດ້ຄື ຮູ້ຄິດ, ຮູ້ເຫດ, ຮູ້ຜົນ, ຮູ້ຮັບຜິດຊອບຕໍ່ຕົນເອງ ແລະ ຕໍ່ສັງຄົມໄດ້, ເຂົາເຈົ້າຈະສາມາດເຂົ້າໃຈລະບຽບກົດໝາຍບ້ານເມືອງ, ຮູ້ທຳຕົນເອງໃຫ້ມີຄຸນນະທຳ, ມີຄຸນນະພາບຊີວິດທີ່ດີໄດ້. ຖ້າເຮັດຫຼັກສູດການສຶກສາໃນລະດັບນີ້ໄດ້ຢ່າງມີພື້ນຖານຄວາມຮັບຜິດຊອບໜັກແໜ້ນອອກຮັບໃຊ້ເໝາະສົມກັບເຮົາຕ້ອງການບຸກຄະລະກອນ ອອກຮັບໃຊ້ຄືງເປັນພື້ນຖານ ທີ່ດີໃນລະດັບໜຶ່ງໃນສັງຄົມໄດ້, ສຳລັບປະເທດກຳລັງພັດທະນາ ໃນຂັ້ນຕົ້ນເໝືອນປະເທດພວກເຮົາ. ແຕ່ກໍ່ບໍ່ໝາຍຄວາມວ່າຈະບໍ່ໃຫ້ມີຜູ້ຮຽນສູງໄປກວ່ານັ້ນ, ກົງກັນ

ຂ້າມ, ສູງໄປກວ່ານັ້ນ. ຄວນໃຫ້ນັບຖືການເລືອກ ເຟັ້ນຕາມຄວາມຍຸຕິທໍາໃຫ້ໄດ້, ຄວນເລືອກເຟັ້ນເອົາແຕ່ຜູ້ມີຄວາມສາມາດ ( ມີທັກສະ ຫຼື ຄວາມສະຫຼາດ ພິເສດ ຫຼື ມີ ( Talent ແລະ Skill) ເພື່ອຈະຊຸກຍູ້ເຂົາໃຫ້ໄປໄດ້ໄກ ເພື່ອເປັນກໍາລັງແຮງສືບທອດໃຫ້ປະ ເທດຊາດຕໍ່ໄປໄດ້. ຢູ່ໃນຈຸດນີ້ຄວາມ ເຂົ້າໃຈຂອງບາງຄົນ ກໍຍັງຂາດເຂື່ອນ ຕໍ່ຄໍາວ່າ "ການສຶກສາເພື່ອທຸກຄົນ " ຫຼື Education for All ເຊິ່ງເປັນ ທິດຂອງອົງການ Unesco ຊີ້ນໍາໃຫ້ທຸກປະເທດເຫັນໄດ້ວ່າຄວນໃຫ້ມີ ການສຶກສາເພື່ອທຸກຄົນໃນຂັ້ນພື້ນຖານ (Basic Education),ຄໍາວ່າ "ພື້ນຖານ" ໃນທີ່ນີ້ຕ້ອງເຂົ້າໃຈວ່າແຕ່ລະປະເທດ, ຮັບເອົາພື້ນຖານແຕກຕ່າງກັນເພື່ອເຮັດໃຫ້ເດັກທຸກຄົນໃນປະເທດຕ້ອງໄດ້ຮັບ "ພື້ນຖານ" ພາກບັງຄັບນີ້ໄດ້ຄືກັນທັງໝົດໃນເກນອາຍຸດຽວກັນ. ບໍ່ແມ່ນປະປ່ອຍໃຫ້ ຜູ້ຢູ່ໃນຕົວເມືອງໄດ້ຮຽນ, ແຕ່ວ່າຢູ່ເຂດຊົນນະບົດບໍ່ມີຄູກໍບໍ່ໄດ້ຮຽນກໍຕາມ. ຈາກພື້ນຖານນີ້ຈິ່ງຕ້ອງມີການເລືອກເຟັ້ນຫາຜູ້ທີ່ດີເດັ່ນ ເພື່ອສົ່ງເສີມໃຫ້ໄປໄດ້ໄກຈິ່ງຈະດີ, ແຕ່ບໍ່ແມ່ນສົ່ງເສີມໃຫ້ໝົດທຸກຄົນ ໃຫ້ໄດ້ຮຽນຮອດມະຫາວິທະຍາໄລ ຫຼື ຫຼັງມະຫາວິທະຍາໄລໃຫ້ໄດ້ໝົດ, ຈຶ່ງຖືວ່າເຮັດການສຶກສາ "ເພື່ອທຸກຄົນ" ໄດ້ ແຕ່ການເລືອກເຟັ້ນນີ້ກໍຄວນເລືອກຈາກ ພື້ນຖານການສຶກສາ **ທີ່ມີຄຸນນະພາບດຽວກັນ ແລະ ເລືອກ ຈາກໝົດທຸກຊັ້ນ ຄົນທຸກເພດທຸກໄວ ຈຶ່ງຈະມີຄວາມເປັນທໍາໃນສັງຄົມໄດ້.** ໂຄງການ "ການສຶກສາເພື່ອທຸກຄົນ" ນີ້ຈຶ່ງເປັນທີ່ຍອມຮັບ ແລະ ຍອມສະໜັບສະໜູນ ໂດຍ 4 ອົງການສາກົນທີ່ຈັດໃຫ້ມີກອງປະຊຸມໃຫຍ່ທົ່ວໂລກຂຶ້ນຢູ່ ຈອມທຽນ, ເມືອງ ພັດທະຍາ, ປະເທດໄທ ໃນປີ 1990, ຕາມໄດ້ກ່າວມາແລ້ວຂ້າງເທິງນີ້. ໃນ 4 ອົງການສາກົນນີ້ມີ Unesco, Unicef, World Bank ແລະ ADB ຊຶ່ງໄດ້ຕຶກລົງສົ່ງເສີມໃຫ້ທຸກໆປະເທດທີ່ກໍາລັງພັດທະນາຂະຫຍາຍ "ການສຶກສາ

ຂັ້ນພື້ນຖານ" ຂອງ ປະເທດຕົນໃຫ້ໄດ້ຢ່າງທົ່ວເຖິງ, ຄືໃຫ້ມີພື້ນຖານຄວາມສາມາດສະເໝີພາບກັນພາຍໃນ ປະເທດກ່ອນເພື່ອເລືອກເຟັ້ນ (ບໍ່ໃຫ້ມີຜູ້ດ້ອຍໂອກາດ, ແລະ ບໍ່ໃຫ້ໄປເລືອກເອົາແຕ່ຜູ້ມີໂອກາດໄດ້ຮຽນແຕ່ບໍ່ແມ່ນຜູ້ເກັ່ງແທ້). ແຕ່ປີ 1990 ນັ້ນມາ ທະນາຄານໂລກ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ພ້ອມທັງອົງການ ອຸຍແນດສະໂກ ແລະ ອຸຍນີແຊັບ (ແມ່ແລະເດັກ) ຈຶ່ງພາກັນຕັດສິນໃຈເຂົ້າຊ່ວຍ ໃຫ້ທຸກປະເທດກຳລັງພັດທະນາເອົາ ໃຈໃສ່ ຕໍ່ການສຶກສາ ເພື່ອທຸກຄົນນີ້ ເປັນພິເສດ.

ດັ່ງນັ້ນ, ພວກເຮົາທີ່ເປັນປະເທດໜຶ່ງໃນບັນດາປະເທດເປົ້າໝາຍ, ຊຶ່ງມີສະພາບ ຂະຫຍາຍການສຶກສາຂອງຊາດແບບບໍ່ທັນສອດຄ່ອງ ກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ກັບການຂະຫຍາຍຕົວ ຂອງເສດຖະກິດ, ຈຶ່ງຕ້ອງໄດ້ປັບປຸງການສຶກສາ ຂອງຊາດໃຫ້ເຂົ້າກັບເງື່ອນໄຂຄວາມເປັນຈິງ ແລະ ຕ້ອງຟ້າວປັບໃຫ້ມີຄວາມດຸ່ນດ່ຽງ ແລະ ເຊື່ອມໂຍງກັນເປັນຢ່າງດີ ລະຫວ່າງການຂະຫຍາຍຕົວຂອງການສຶກສາ ແລະ ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງຊາດ ໃຫ້ໄດ້, ເພື່ອຈະໃຫ້ອົງການສາກົນ ຫຼື ປະເທດເພື່ອນມິດຊ່ວຍຂະຫຍາຍ ການສຶກສາຢ່າງຖືກເປົ້າໝາຍ ແລະ ຖືກກັບນະໂຍບາຍລວມຂອງປະເທດໄດ້, ຕາມເປົ້າໝາຍທີ່ສາກົນຢາກສະໜັບສະໜູນຢ່າງສຸດຂີດຢູ່ແລ້ວ.

## 2. ເນື້ອໃນໃຫຍ່ໆຂອງການປະຕິຮູບການສຶກສາເພື່ອໃຫ້ເຊື່ອມໂຍງກັບ ເສດຖະກິດສັງຄົມ.

ໃນໄລຍະຜ່ານມາ, ລັດຖະບານເຮົາກໍໄດ້ປັບປຸງການສຶກສາໃຫ້ມີເນື້ອໃນໃໝ່ຂຶ້ນເລື້ອຍໆ ຊຶ່ງພວກເຮົາເຂົ້າໃຈນຳກັນດີແລ້ວວ່າ ນັບແຕ່ໄດ້ສ້າງຕັ້ງ ສ.ປ.ປ ລາວ ຂຶ້ນ, ໃນໄລຍະ 30 ກວ່າປີເປັນຕົ້ນມາ, ລັດຖະບານ

ກໍໄດ້ອອກແຮງຂະຫຍາຍການສຶກສາຢ່າງແຂງແຮງ; ພ້ອມກັນນັ້ນກໍ່ໄດ້ປັບປຸງເນື້ອໃນຂອງ ໂຄງການ ສິດສອນ, ຍົກລະດັບຄູ ອາຈານໃຫ້ມີຄຸນວຸດທິສູງຂຶ້ນ.

ແຕ່, ເໝືອນເຮົາໄດ້ກ່າວຢູ່ໃນຂັ້ນຕົ້ນຂອງການສະເໜີນີ້ແລ້ວວ່າ "ເນື້ອແທ້ຂອງ ພັນໄມ້ຕົ້ນນີ້" ເຊິ່ງໝາຍເຖິງລະບົບການສຶກສາຂອງປະເທດຍັງເປັນພັນຂອງປະເທດລ່າເມືອງຂຶ້ນພາປູກໄວ້ຜ່ານມາ, ບໍ່ວ່າລະບອບເກົ່າຫຼື ລະບອບໃໝ່, ພວກເຮົາພຽງແຕ່ໄດ້ຫົດນໍ້າ, ໃສ່ຝຸ່ນເລັກໆນ້ອຍໆພໍບໍ່ໃຫ້ຕາຍ "ແຕ່ບໍ່ເຄີຍໄດ້ຄົ້ນຄວ້າດ້ວຍຄົນລາວເຮົາເອງວ່າ" ຈະເອົາ ພັນໄມ້ໃໝ່ແນວໃດມາປູກຈຶ່ງຈະເຮັດໃຫ້ການສຶກສາຂອງຊາດສອດຄ່ອງ ແລະ ເຊື່ອມໂຍງ ເປັນຢ່າງດີກັບສະພາບເສດຖະກິດ-ສັງຄົມ ແລະ ວັດທະນະທໍາຂອງປະເທດໄດ້.

ກ່ອນຈະຊອກຫາພັນໃໝ່ນີ້, ພວກເຮົາຈໍາເປັນຕ້ອງໄດ້ຄົ້ນຄິດນໍາກັນຢ່າງເອົາຈິງເອົາຈັງ ບໍ່ແມ່ນປະໃຫ້ແຕ່ກະຊວງສຶກສາທິການຜູ້ດຽວເປັນຜູ້ຄົ້ນຄວ້າ. ກະຊວງສຶກສາທິການກໍ່ຈໍາເປັນມອບລົງໄປຫານັກວິຊາການຄົ້ນຄວ້າ, ນັກວິຊາການພວກເຮົາກໍມີເທົ່າທີ່ມີໄດ້, ພວກເຮົາກໍຄົ້ນຄວ້າແຕ່ "ປາຍ " ຂອງບັນຫາ ແລະ ບໍ່ເຄີຍໄດ້ຍົກຫາ "ກົກ" ຂອງບັນຫາເລີຍ. ຄືບໍ່ໄດ້ຄິດຫາການຈະປະຕິຮູບການສຶກສາໃຫ້ສອດຄ່ອງແນວໃດ ຕໍ່ເສດຖະກິດ-ສັງຄົມ ແລະ ວັດທະນະທໍາທີ່ຊາດຕ້ອງການຢ່າງແທ້ຈິງນັ້ນ, ໃນໄລຍະຍາວນານ.

ກ່ອນຈະຕອບບັນຫານີ້ໄດ້, (ບໍ່ແມ່ນຈະຕອບພໍໃຜພໍລາວ ເອົາແຕ່ໃຜຢາກເວົ້າ ແລ້ວແຕ່ໃຜຢາກຄິດ ແລະ ບໍ່ອອກບໍ່ເຂົ້າຕາມເຄີຍ.) ມັນຕ້ອງມີຄະນະກໍາມະການ ຄົ້ນຄວ້າຄັກແນ່ປະກອບດ້ວຍຫຼາຍໆຊັ້ນຄົນ ແລະຊົນເຜົ່າຕ່າງໆທີ່ສໍາຄັນຢູ່ໃນທົ່ວປະເທດ, ໄດ້ມີໂອກາດໄດ້ຄົ້ນຄິດເປັນ

ຂະບວນ ແລະ ມີການຈັດຕັ້ງຄັກແນ່ຈິ່ງຈະສາມາດ ຮູ້ໄດ້ວ່າເຮົາຈະຄວນເຮັດແນວໃດເໝືອນຫຼາຍໆປະເທດເພິ່ນຈັດກັນ.

ດັ່ງນັ້ນ, ເຮົາຈິ່ງພຽງແຕ່ຢາກສະເໜີບາງເນື້ອໃນເບື້ອງຕົ້ນໃຫ້ ເຫັນນຳກັນ ເພື່ອເປັນການເຈາະຈີ້ມບັນຫາດັ່ງລຸ່ມນີ້:

- ຢູ່ຂັ້ນທ້ອງຖິ່ນ, ບ່ອນໃດທີ່ພໍໃຫ້ພະສົງອົງຄະເຈົ້າສອນຊ່ວຍໄດ້ ກໍຄວນໃຫ້ເພິ່ນໄດ້ປະກອບສ່ວນຢ່າງຕັ້ງໜ້າ; ຫັນໂຮງຮຽນປະຖົມເຂົ້າສູ່ວັດຕາມປະເພນີນິຍົມ, ແຕ່ກໍຄວນມີວິທີການຝຶກອົບຮົມພະສົງໃຫ້ມີວິຊາຊີບນີ້ຢ່າງຄັກແນ່ເສຍກ່ອນ ເພື່ອໃຫ້ສອດຄ່ອງກັບຍຸກສະໄໝ. ເຖິງຢ່າງໃດພະສົງກໍມີພາລະໜ້າທີ່ ສິດສອນເດັກມາແຕ່ບູຮານຢູ່ແລ້ວ ທັງຈະເປັນວິທີທີ່ດີເພື່ອຫຼຸດຜ່ອນການໃຊ້ຈ່າຍຂອງລັດ ເພາະຊຸມຊົນທີ່ມີວັດກໍມີປະເພນີນິຍົມຢາກຊ່ວຍວັດຢູ່ແລ້ວ, ເຖິງວ່າບໍ່ໄດ້ຊ່ວຍການສຶກສາ ຂອງຊາດ ເຂົາກໍຍັງຖອກເທເງິນເຂົ້າວັດຢ່າງມະຫາສານ ພວກເຮົາຄວນມີວິທີການຄົ້ນຄິດ ໃຫ້ສາມາດນຳໃຊ້ງົບປະມານ ຂອງປະຊາຊົນໃນດ້ານນີ້ໃຫ້ເປັນປະໂຫຍດຕໍ່ສັງຄົມໄດ້ຫຼາຍດ້ານແຕ່ບໍ່ໃຫ້ແຕະຕ້ອງຈິດໃຈຂອງຜູ້ຢາກທານທຶນ ເຂົ້າວັດນັ້ນຢ່າງແນ່ນອນ. (ຕ້ອງສ້າງຄວາມເຂົ້າໃຈຈາກ ຊຸມຊົນກ່ອນ).

ໃນທິດທາງນີ້, ເຮົາສາມາດຈັດໃຫ້ແຕ່ລະວັດ ມີໂຮງຮຽນສາມັນຊັ້ນປະຖົມ 3 ປີ ຕົ້ນໄດ້ຍິ່ງດີ; ພ້ອມກັນນັ້ນ ກໍ່ສາມາດຈັດໃຫ້ແຕ່ລະວັດເຄື່ອນໄຫວການສຶກສານອກລະບົບ, ສົມທົບກັບປະຊາຊົນເຊັ່ນ: ຈັດໃຫ້ມີສູນວິຊາຊີບຂັ້ນພື້ນຖານໄດ້ຄືຈະດີ, ເຊັ່ນ: ຕີພ້າ, ມີດ, ປູກຝັງ, ປົກປັກຮັກສາສິ່ງແວດລ້ອມ, ເກັບກຳຢາພື້ນເມືອງ ແບບມີ ວິທະຍາສາດ, ມີເຕັກນິກຢ່າງເປັນລະບົບ, ພາຍໃຕ້ການຕິດຕາມຂອງແພດຜູ້ຊ່ຽວຊານດ້ານນີ້. ຫຼືຜູ້ຊົງຄຸນວຸທິໃນບ້ານເຂົ້າຮ່ວມມືນຳ ເພື່ອເຜີຍແຜ່ພູມປັນຍາຊາວບ້ານ.

• ໃນການລົບລ້າງການບໍ່ຮູ້ໜັງສື ກໍເປັນກິດຈະກຳໜຶ່ງ ທີ່ລັດຖະບານໄດ້ລົງມືປະຕິບັດມາຫຼາຍແລ້ວ, ແຕ່ຍັງເຫັນວ່າຍັງບໍ່ທັນສາມາດຈັດໃຫ້ການລົງທຶນດ້ານນີ້ ມີປະສິດທິຜົນອັນເປັນຮູບປະທຳ ໄວ້ໃນຊຸມຊົນໄດ້, ທັງບໍ່ທັນມີລັກສະນະຍືນຍົງ (ແບບຢັ້ງຢືນໄດ້), ຍ້ອນບໍ່ແມ່ນຊຸມຊົນຕ້ອງການເອງຢ່າງແທ້ຈິງ. ສ່ວນໃຫຍ່ໂຄງການຕ່າງໆ ທີ່ ອີງການຊ່ວຍເຫຼືອໃນດ້ານນີ້ກໍເປັນ ໂຄງການທີ່ຂຽນມາຈາກຂັ້ນກະຊວງຫຼືຂັ້ນແຂວງ, ຂັ້ນເມືອງ, ແຕ່ບໍ່ແມ່ນປະຊາຊົນມີສ່ວນຮ່ວມ ໃນການຢາກເຮັດແທ້ ແລະ ບໍ່ສະແດງຄວາມຕ້ອງການອອກແທ້ ຕັ້ງແຕ່ເບື້ອງຕົ້ນຂອງການຄົ້ນຄິດສ້າງໂຄງການຂຶ້ນ, ຈຶ່ງບໍ່ເປັນອັນຍືນຍົງໄດ້. ເມື່ອໝົດໂຄງການ, ກໍໝົດວຽກ, ປະຊາຊົນກໍບໍ່ໄດ້ສົນໃຈສືບຕໍ່.

• ອີກດ້ານໜຶ່ງ, ວັດກໍເປັນສູນວັດທະນະທຳຂອງປະຊາຊົນລາວມາແຕ່ບູຮານ, ພູມປັນຍາປະຊາຊົນຍັງສາມາດຢັ້ງຢືນໃຫ້ເຫັນໄດ້ເທົ່າທຸກວັນນີ້ ການປົກປັກຮັກສາໜັງສືໃບລານຢູ່ຕາມວັດຕ່າງໆ ເຮົາບໍ່ຄວນປະຖິ້ມກຳລັງແຮງຂອງຊາວບ້ານໃນດ້ານນີ້. ພັກ ແລະ ລັດບໍ່ມີໃຜເອົາຈິງເອົາຈັງຊີ້ນຳຄັກແນ່ ກະຊວງສຶກສາກໍເຂົ້າໃຈວ່າ ແມ່ນກະຊວງ ວັດທະນະທຳ, ແຕ່ກະຊວງວັດທະນະທຳກໍຖືວ່າແມ່ນຂອງ ແນວໂຮມ ຫຼື ບໍ່ເຄີຍໄຈ້ແຍກໃຫ້ຂັ້ນໃດຮັບຜິດຊອບແນວໃດຄັກແນ່ໄດ້ຢ່າງເປັນຮູບປະທຳ.. ເຮົາຄວນເພີ່ມທະວີການສ້າງພື້ນຖານອັນໜັກແໜ້ນ ນີ້ໃຫ້ສັງຄົມລາວສາມາດປະກອບສ່ວນໃຫ້ການພັດທະນາຄຸນນະພາບ ຊີວິດຂອງເຂົາເຈົ້າໃຫ້ໄດ້, ໂດຍບໍ່ຈຳເປັນຕ້ອງໄດ້ລົງທຶນຢ່າງຫຼວງຫຼາຍ, ຜ່ານມາ (ເມື່ອບາງບ້ານຢາກໄດ້ພ້າ, ຢາກໄດ້ສຽມກໍຈຳເປັນຕ້ອງໄດ້ແລ່ນ ເຂົ້າໄປ ຊື້ຂອງຕ່າງປະເທດ) ໃນເມືອງໃຫຍ່ພຽງແຕ່ພວກເຮົາສ້າງເປັນ ໂຄງການ ແລະ ມີການປະສານສົມທົບກັນຂອງໜ່ວຍງານວິຊາການໃຫ້ດີ ກໍສາມາດແກ້ໄຂບັນຫາ

ໄດ້ ບໍ່ຄວນເຮັດໃຜເຮັດລາວ, ແລ້ວແຕ່ໃຜຈະຫາ ທຶນຊ່ວຍເຫຼືອຈາກຕ່າງປະເທດໄດ້ ກໍເຮັດໄປໂດຍບໍ່ຄຳນຶງເຖິງຜົນດີຜົນ ເສຍຕໍ່ສັງຄົມ. ການສຶກສາເດັກກໍ່ບໍ່ໃຫ້ແຍກອອກຈາກການສຶກສາຊຸມຊົນ ຫຼື ການສຶກສາຜູ້ໃຫຍ່. ການສຶກສາຂອງຊາດ ແລະ ວັດທະນະທຳຂອງຊາດ ຈະຢູ່ລອດໄປໄດ້ກໍ່ຕໍ່ເມື່ອໄດ້ຮັບການສະໜັບສະໜູນຈາກວັດ ແລະ ຊຸມຊົນ ເທົ່ານັ້ນ. ຖ້າເຮົາຄົ້ນຄວ້າປະຕິຮູບລະດັບທ້ອງຖິ່ນ ກ່ຽວກັບການສຶກສາໄດ້ໃນທິດທາງ ທີ່ກ່າວມານີ້, ພວກປະເທດທີ່ຢາກຊ່ວຍເຮົາຢູ່ແລ້ວ ເພິ່ນຍິ່ງຈະດີໃຈຢາກຊ່ວຍ ຫຼາຍກວ່າເກົ່າ, ຍ້ອນເຫັນວ່າເຮົາຄິດຢາກເປັນເຈົ້າຕົນເອງແທ້.

- ຈຳນວນໂຮງຮຽນປະຖົມສົມບູນ ຊຶ່ງອາດຈະຕ້ອງມີຄູທີ່ມີລະດັບມາດຕະຖານສູງກວ່າ ກໍຕ້ອງໄດ້ປັບຕົວເຂົ້າຮັບໃຊ້ຊຸມຊົນເໝືອນກັນ. ຫຼັກສູດຂອງໂຮງຮຽນປະຖົມໃນແງ່ນີ້, ຕ້ອງໄດ້ປັບປຸງໃຫ້ມີກິດຈະກຳທີ່ຕິດແທດກັບທ້ອງຖິ່ນຢ່າງກວ້າງຂວາງຂຶ້ນ ແລະ ໃຫ້ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ, ບໍ່ແມ່ນຈະເປັນຫຼັກສູດທີ່ສ້າງແນວຄິດໃຫ້ເດັກຢາກ ໜີອອກຈາກທ້ອງຖິ່ນດິນນາຂອງຕົນຕໍ່ໄປ, ປະໃຫ້ແຕ່ຜູ້ເຖົ້າຜູ້ແກ່ເຮັດນາ ຫຼື ປະໃຫ້ລູກຄຸມໃຫ້ພໍ່ແມ່ຂາຍດິນນາໃຫ້ນາຍທຶນ ຫຼື ໃຫ້ຜູ້ສວຍໂອກາດຕ່າງປະເທດ, ດັ່ງທີ່ມີທ່າອ່ຽງ ເປັນໄປແດ່ແລ້ວ ໃນປັດຈຸບັນຊາວໜຸ່ມຜູ້ທີ່ມີແວວແທ້ໆ, ມີຄວາມຕັ້ງໃຈມັກຮຽນແທ້ ເຮົາຈຶ່ງສົ່ງເສີມໃຫ້ໄດ້ຖືກເລືອກເຟັ້ນຮຽນໄປຮອດມັດທະຍົມ ແລະ ສູງຂຶ້ນດັ່ງໄດ້ກ່າວມາແລ້ວ.

- ລັດຖະບານ ໝາຍເຖິງອຳນາດການປົກຄອງ, ໂດຍສົມທົບກັບ ຊຸມຊົນ, ຄວນຈັດວາງໃຫ້ແຕ່ລະໂຮງຮຽນຈົບຊັ້ນມັດທະຍົມຕົ້ນມີວິຊາຊີບ ຂັ້ນພື້ນຖານໄປນຳໂລດຢູ່ທຸກໆແຫ່ງ ແລະ ອາດຈະຄົ້ນຄວ້າໃຫ້ທຸກໆ ໂຮງຮຽນຊົນນະບົດໃຫ້ກາຍເປັນໂຮງຮຽນ ທີ່ ກຸ້ມຕົນເອງໄດ້ໃນ ດ້ານການຜະລິດເປັນສິນຄ້າໄດ້ໃນຕໍ່ໄປ (ຕົວຢ່າງໂຮງຮຽນມັດທະຍົມຊົນນະ

ບົດຢູ່ ປະເທດກູບາ, ຢູ່ບາງປະເທດໃນເອເຊຍ.ທີ່ອົງການ ອຸຍແນດສະໂກ ໄດ້ ຍົກຂຶ້ນໃຫ້ໂລກຮູ້ມາແລ້ວ ຢູ່ກອງປະຊຸມໃຫຍ່ ອຸຍແນດສະໂກ.

- ໂຮງຮຽນມັດທະຍົມສົມບູນ (ຕອນຕົ້ນ ແລະ ຕອນປາຍ) ທຸກແຫ່ງ ຄວນສ້າງຕັ້ງຂຶ້ນຢ່າງມີແຜນການ: ມີຈຸດສຸມຄັກແນ່, ໂດຍກຳນົດ ມາດຖານ ຂັ້ນພື້ນຖານໃຫ້ມີຫ້ອງສະໝຸດ, ຫ້ອງທົດລອງ(Laboratory) ເພື່ອຮັບໃຊ້ການ ທົດລອງວິທະຍາສາດໃຫ້ໄດ້. ຄວາມຈິງ, ການທົດລອງ ວິທະຍາສາດໃນສະໄໝນີ້ ກໍບໍ່ແມ່ນເລື້ອງຍາກຄືແຕ່ກ່ອນ ເພາະມີສື່ ການຮຽນຫຼາຍຮູບແບບ ຂາຍເຕັມໄປໝົດ. ຖ້າບໍ່ທັນມີ 2 ຫາ 3 ເງື່ອນໄຂ ຂັ້ນພື້ນຖານທີ່ກ່າວນີ້ ກໍບໍ່ຄວນໃຫ້ຂະຫຍາຍອອກຢ່າງຊະຊາຍ. ບໍ່ຄວນ ປະປ່ອຍ ໃຫ້ນັກຮຽນລົ້ນຫ້ອງຮຽນລ້າໆ, ຮຽນແບບບໍ່ມີຄຸນນະພາບຮຽນ ພໍແລ້ວມື້ ແລ້ວວັນພໍເສັງຈົບໄປເປັນປີໆ, ກໍແລ້ວໄປໂດຍສະເພາະຢູ່ໃນ ເຂດເມືອງໃຫຍ່ ຫຼື ເຂດຊານເມືອງຄວນຈະເລືອກເຟັ້ນແຜນການຜະລິດ ໄປນຳ; ເວລານັ້ນເພິ່ນຈຶ່ງຖືວ່າການສຶກສາສອດ ຄ່ອງກັບການພັດທະນາ ເສດຖະກິດ ແລະ ສັງຄົມໄດ້. ຖ້າຈະປຸກສ້າງໂຮງຮຽນ ມັດທະຍົມສົມບູນ ຢ່າງ ເຂົ້າຮູບເຂົ້າແຜນກໍ່ຄວນ ໃຫ້ບູລິມະສິດແກ່ເຂດທີ່ຈະຂະຫຍາຍ ການຜະລິດ ໄປນຳກັນໄດ້ (ດັ່ງໄດ້ຈັດ ຕັ້ງຂຶ້ນແລ້ວຢູ່ບາງໂຮງຮຽນ SOS ຢູ່ຊຽງຂວາງ) ເປັນຕົ້ນແມ່ນເຂດຊົນນະບົດ, ບ່ອນທີ່ມີສະຖານທີ່ກວ້າງ ຂວາງ ເພື່ອໃຫ້ມີການກໍ່ສ້າງຟາມຜະລິດ ສິ່ງໃດສິ່ງໜຶ່ງຕິດພັນຢູ່ນຳກັນ ໂລດເພາະເຮົາ ມີແຮງງານເດັກທີ່ກຳລັງຢາກມີກິດຈະກຳ. ເຊັ່ນ: ການ ປູກເຫັດເຟືອງ, ລ້ຽງປາ, ປູກໝາກໄມ້ອຸດສະຫະກຳ ຢ່າງຖືກແບບແຜນ, ລ້ຽງຈີ່ຫຼີດ, ລ້ຽງໄກ່, ລ້ຽງກົບ, ແປງລົດຖີບ, ລົດຈັກ, ໄຖໄຮ່, ໄຖນາ ໄປນຳກໍບໍ່ຜິດຫຍັງ. ຮັກສາສິ່ງແວດລ້ອມ, ເຮັດຊາໃບມອນ ແລະ ອື່ນໆ... ຊຶ່ງໃນປັດຈຸບັນນີ້ພວກອົງການ SIDA ແລະ GTZ ກໍກຳລັງສະໜັບສະໜູນ

ຂະຫຍາຍໂຮງຮຽນ ວິຊາຊີບແບບປະສົມຢູ່ແຂວງນ້ຳທາ (Integred Vocational school ) ແລະ ບາງແຂວງ, ບາງເມືອງ ເຂດຫ່າງໄກສອກຫຼີກ, ຊຶ່ງກໍເຫັນວ່າຈະເປັນ ຄືໂຮງຮຽນມັດທະຍົມແບບປະສົມຟ້າງຸ່ມທີ່ເຄີຍຈັດໃຫ້ມີມາແລ້ວໄລຍະ ໜຶ່ງ. ຂ້າພະເຈົ້າເຫັນວ່າ ວິທະຍາໄລຄູ 5 ແຫ່ງໃນທົ່ວປະເທດ, ຖ້າບໍ່ຈັດໃຫ້ມີການກຸ້ມຕົນເອງ ດ້ານເສດຖະກິດໄປນຳ, ການດຳເນີນການສອນໃຫ້ມີ ຄຸນນະພາບກໍຈະບໍ່ຍາກ ຍ້ອນງົບປະມານລັດຈະບໍ່ ຕອບສະໜອງໝົດການ ປົວແປງອາຄານໄດ້. ແລະ ເຫັນວ່າທັງ 5 ແຫ່ງນີ້ກໍມີເງື່ອນໄຂການຜະລິດໄດ້ດີ, ຖ້າມີແຜນການເຄື່ອນໄຫວຢ່າງຈິງຈັງ. ໃຫ້ຄ່ອຍໆສາມາດກຸ້ມຕົວເອງໄປນຳເລື້ອຍໆ.

ສະຫລຸບແລ້ວ, ເນື້ອໃນທີ່ຄວນສ້າງຂຶ້ນເພື່ອເຮັດການປະຕິຮູບການສຶກສາຂອງຊາດ ດັ່ງທີ່ກ່າວມານີ້ກໍເປັນພຽງແຕ່ສ່ວນນ້ອຍໆໜຶ່ງ (ອາດມີພຽງແຕ່ 10% ເທົ່ານັ້ນ ຂອງຄວາມເປັນໄປໄດ້.) ເພື່ອເຮັດໃຫ້ຄວາມຄິດຄວາມເຫັນນີ້ສາມາດເປັນໄປໄດ້, ກະຊວງສຶກສາຄວນຈະຕ້ອງມີແຜນສົ່ງເສີມການຄົ້ນຄິດ, ໂດຍໃຫ້ມີສ່ວນຮ່ວມຈາກອົງການຕ່າງໆ. ກ່ອນເນື້ອໃນຂອງການປະຕິຮູບການສຶກສາຈະສົມບູນໄດ້, ຈຳເປັນຕ້ອງຮຽກຮ້ອງໃຫ້ມີກອງປະຊຸມສຳມະນາແຕ່ລະດ້ານ ຫຼາຍຫຼືບຫຼາຍຕ່າວ, ໂດຍມີຂໍ້ມູນອ້າງອີງຢ່າງຄັກແນ່, ເພື່ອຈະຈັດການສຶກສາໃຫ້ເປັນລະບົບ ຄົບຊຸດແບບໃໝ່, ແບບທີ່ຈະຕ້ອງເຊື່ອມໂຍງເສດຖະກິດ-ສັງຄົມ ແລະ ວັດທະນະທຳ ຂອງຊາດເຂົ້າກັນໄດ້ດີຂຶ້ນ. ຖ້າເຮົາບໍ່ຄິດເຮັດລະອຽດ ວິທີການຮຽນການສອນໃໝ່ແບບພັດທະນາ ຢ່າງຍືນຍົງໃຫ້ເຮົາເອງໄດ້ແຕ່ດຽວນີ້ໄປຄິດວ່າຄົງຈະບໍ່ແມ່ນຍາກ ເຮັດການປະຕິຮູບການສຶກສາຂອງຊາດ.

ຍ້ອນວ່າ ພວກເຮົາຕ້ອງການຢາກໃຫ້ການສຶກສາຂອງຊາດ ເປັນການສຶກສາທີ່ມີປະໂຫຍດໃຫ້ແກ່ຊຸມຊົນ ແລະ ໃຫ້ແກ່ການຜະລິດຫຼາຍ

ກວ່າເກົ່າ, ແທນທີ່ຈະປະປ່ອຍໃຫ້ການສຶກສາ ກາຍເປັນການສິ້ນເປືອງເສດຖະກິດຄອບຄົວ ແລະ ຂອງລັດຢ່າງບໍ່ມີວັນສິ້ນສຸດນັ້ນ, ພວກເຮົາຈຶ່ງຈຳເປັນຕ້ອງພາກັນຄິດໃໝ່, ຄົ້ນຄວ້າຫາວິທີການໃໝ່, ຕ້ອງໄດ້ຊອກຫາທຸກວິທີທາງຫັນແນວທາງການສຶກສາໃຫ້ເຊື່ອມໂຍງກັບເສດຖະກິດ-ສັງຄົມ ແລະກັບວັດທະນະທຳຂອງຊາດໃຫ້ໄດ້ ໃນທຸກໆລະດັບການສຶກສາ ເພື່ອຄວາມຢູ່ລອດ ທັງທາງດ້ານເສດຖະກິດ ແລະ ທາງດ້ານວັດທະນະທຳ, ເພື່ອເປັນການສຶກສາ ທີ່ແນໃສ່ປົກປັກຮັກສາມູນເຊື້ອ ແລະ ຄວາມເປັນຊາດລາວຕໍ່ໄປໃຫ້ໄດ້. ຫຼາຍໆຄົນອາດສົງໄສວ່າ ຄົງເປັນໄປໄດ້ຍາກ, ບໍ່ມີໃຜຈະຢາກໃຫ້ລູກຕົນລົງໄປງົມຂີ້ຕົມເຮັດນາກິນຕໍ່ໄປແລ້ວ. ອາຊີບຊາວນາ ຢູ່ຫຼາຍປະເທດບໍ່ເຄີຍເຫັນເປັນເສດຖີໄດ້... ແຕ່ກໍອາດໄດ້, ຖ້າຈັດເປັນຕ່ອງໂສ້ແບບອຸດສາຫະກຳທັນສະໄໝ. ຂ້າພະເຈົ້າຂໍສະເໜີໃຫ້ໄດ້ມີໂອກາດຄົ້ນຄິດກັນລອງເບິ່ງກ່ອນ, ຈະບໍ່ຫຼ້າບໍ່ສວຍຫຍັງ, ບໍ່ຕ້ອງໃຈຮ້ອນຟ້າວແລ່ນນຳເວລາ. ແລ່ນໄປຫາໃຜ? ເພື່ອແຂ່ງຂັນກັບໃຜ?.

**ຕົວຢ່າງ:**

- ມີວິທີເລືອກເອົາແຕ່ທິດສະດີຂອງວິຊາຄະນິດສາດ, ຟີສິກສາດ, ເຄມີສາດ ທີ່ເປັນພື້ນຖານທີ່ກ່ຽວຂ້ອງກັບການທົດລອງຕົວຈິງຢູ່ໃນຫ້ອງຮຽນໃຫ້ໄດ້.

- ເນັ້ນການທົດລອງໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ໃນຫຼັກສູດ ການສອນ ວິຊາວິທະຍາສາດຫຼັກໆ ເພື່ອໃຫ້ເດັກນັກຮຽນຮູ້ຜົນປະໂຫຍດຕົວຈິງຂອງ ທິດສະດີນັ້ນອອກມາໃຫ້ເຫັນໃນສັງຄົມ, ທັງຢັ້ງຢືນໃຫ້ເຫັນວ່າເປັນປະໂຫຍດໃຫ້ການພັດທະນາປະເທດ, ເຊັ່ນ: ການຕໍ່ສູ້ກັບສິ່ງແວດລ້ອມ ທີ່ກຳລັງຖືກຄຸກຄາມຢ່າງໜັກໃນທົ່ວປະເທດດັ່ງໃນທຸກວັນນີ້.

- ພໍ່ແມ່, ຜູ້ປົກຄອງນັກຮຽນທັງໝົດກໍຄວນຢຸດຕິການສົ່ງເສີມໃຫ້ລູກຫຼານ ອາໄສແຕ່ກິນນຳຕົນຕະຫຼອດໄປ ຫຼື ງົດສົ່ງເສີມໃຫ້ເຂົາມັກຈ່າຍຫຼາຍກວ່າມັກອອກແຮງງານດ້ວຍລຳແຂນ, ລຳຂາຕົນເອງ. ຖ້າຊາວໜຸ່ມບໍ່ຮູ້ອອກແຮງງານດ້ວຍຕົວເອງ, ຕໍ່ໄປໃຜຈະເປັນຜູ້ອອກເພື່ອສືບຕໍ່ປົກປັກຮັກສາປະເທດ.

- ເນັ້ນການອ່ານ(ທັງພາສາລາວ ແລະ ພາສາຕ່າງປະເທດ) ຢ່າງເຂົ້າໃຈເນື້ອໃນຢ່າງແທດເໝາະ ທັງຊອກຫາເຫດຜົນຂອງເນື້ອໃນນັ້ນ ເພື່ອໄປເຮັດວິໄຈ-ວິເຄາະ ໃນບົດຕ່າງໆ ເພື່ອນຳໃຊ້ໃນສັງຄົມໃຫ້ຖືກຕ້ອງດີ.

- ເນັ້ນຄວາມເຂົ້າໃຈຕໍ່ລະບຽບການປົກຄອງບ້ານເມືອງ ໃນຂັ້ນພື້ນຖານຂອງຊຸມຊົນໃຫ້ໄດ້...ພ້ອມກັນນັ້ນກໍໃຫ້ເນັ້ນຄວາມມີ ປະຊາທິປະໄຕທີ່ເປັນປະໂຫຍດໃຫ້ແກ່ສັງຄົມ, ບໍ່ແມ່ນປະຊາທິປະໄຕເພື່ອຍາດກັນເປັນນາຍ ແລ້ວກໍປຸ້ນກັນຂູດຮີດປະຊາຊົນຄືຢູ່ບາງປະເທດນັ້ນ.

# ບົດທີ 4. ທິດທາງເພື່ອກຽມການສ້າງແຜນການສຶກສາຂອງຊາດ

(ແນວຄວາມຄິດກ່ຽວກັບການສຶກສາຂອງຊາດທີ່ຢາກເປັນເຈົ້າຕົນເອງ)

## 1. ສະພາບແນວຄິດກ່ຽວກັບການສຶກສາຂອງລາວ

ບໍ່ມີໃຜຈະປະຕິເສດໄດ້ວ່າ ການສຶກສາຂອງຊາດຈະບໍ່ແມ່ນພື້ນຖານຂອງ ການສ້າງຊັບພະຍາກອນມະນຸດໃຫ້ແກ່ຊາດ. ບໍ່ວ່າຊາດໃດ, ປະເທດໃດໃນໂລກນີ້, ເຖິງວ່າຈະເປັນປະເທດທີ່ທຸກຈົນ ຫຼື ປະເທດທີ່ມັ່ງຄັ່ງທີ່ສຸດກໍຕ້ອງມີຂະແໜງການສຶກສາ ( Education Sector ) ເປັນຂອງຕົນເອງຢ່າງເປັນລະບົບຄົບຊຸດ, ເພື່ອສ້າງສະຕິຊາດ ແລະ ສະຕິວິງຄະນາຍາດແຫ່ງຊາດ.

ທຸກວັນນີ້, ໂລກກຳລັງຢາກຫັນໃຫ້ເປັນ "ໂລກໜຶ່ງດຽວ" ຫຼື "ໂລກາພິວັດ" ແຕ່ມີຫຼາຍໆປະເທດຍັງບໍ່ທັນໂລ່ງຕໍ່ທິດສະດີນີ້, ແລະ ກໍມີຫຼາຍປະເທດ ທີ່ກຳລັງຕ້ານຄືນກັບທິດສະດີນີ້ດ້ວຍຫຼາຍຮູບແບບ. ໃນທີ່ສຸດ, ກໍຈຳເປັນໄດ້ໄປຕາມ "ລວງ" (ກະແສ) ຂອງທິດສະດີນີ້ຢູ່, ດັ່ງທີ່ເຮົາເຫັນ, ບາງປະເທດທີ່ເຫັນວ່າຈະຕ້ານ "ກັບກະແສ" ນຳໄຫຼນີ້ບໍ່ໄດ້ແທ້ໆ, ກໍເລີຍປະກາດນະໂຍບາຍອອກວ່າ "ສ້າງສັງຄົມນິຍົມແບບສີສັນຂອງຕົນເອງ".

ເວົ້າແທ້ກໍແມ່ນຄວາມສະຫຼາດຂອງການນຳໃນປະເທດນັ້ນເອງທີ່ຕ້ອງການສ້າງ "ຊັບພະຍາກອນມະນຸດໃຫ້ແກ່ຊາດຕົນ" ຕາມຄວາມຕ້ອງການຂອງຊາດຕົນເອງ.

ຈຶ່ງພໍສະຫຼຸບໄດ້ໂລດວ່າ ຕ້ອງແມ່ນເຮົາເອງເປັນຜູ້ຄິດຢາກກຳນົດອອກວ່າເຮົາຈະສ້າງສັງຄົມຂອງເຮົາໃຫ້ເປັນສັງຄົມຄືແນວໃດ? ສັງຄົມທີ່ມີ

"ສີສັນ" ເປັນຂອງຕົນເອງນັ້ນ ແລ້ວຈະເປັນຕົວຊີ້ບອກ (Indicators) ເພື່ອການກະກຽມແຜນການສຶກສາຂອງຊາດໄດ້. ຖ້າບໍ່ມີຕົວຊີ້ບອກໄວ້ຄັກແນ່, ແລະ ຖ້າບໍ່ມີວິໄສທັດຈະແຈ້ງໄວ້ລ່ວງໜ້າ, ການກະກຽມຫລັກສູດ ເພື່ອພັດທະນາຊັບພະຍາກອນມະນຸດຂອງຊາດ ກໍ່ບໍ່ມີມາດຖານທີ່ເໝາະສົມໄດ້ຈັກເທື່ອ. ຕົວຢ່າງ, ຖ້າເຮົາຕັ້ງຄຳຖາມຂຶ້ນວ່າ "ເຮົາຕ້ອງການໃຫ້ສັງຄົມຂອງປະເທດເຮົາມີປະຊາທິປະໄຕບໍ່? " ເຮົາຕ້ອງໄດ້ຕອບເຮົາເອງວ່າ" ຢາກໃຫ້ມີປະຊາທິປະໄຕ ຫລື ບໍ່ " ຕໍ່ຄຳຖາມນີ້ຍັງຈະໄດ້ເຈາະຈົ້ມອີກຕໍ່ໄປວ່າ: "ຖ້າຢາກໃຫ້ມີ, ພວກເຮົາຈະກຳນົດຄວາມເຂົ້າໃຈຕໍ່ "ປະຊາທິປະໄຕ" ແບບເຮົາຢາກໄດ້ນັ້ນແນວໃດ? ເພື່ອຈະໄດ້ນຳເຂົ້າໃນຫລັກສູດການສຶກສາຂອງຊາດໃຫ້ໄດ້; ເພື່ອຈະໃຫ້ນັກຮຽນແຕ່ລະຊັ້ນຂອງລະບົບການສຶກສາໄດ້ຮຽນ ແລະ ໃຫ້ທັງຄູສອນ ແລະ ນັກຮຽນເຂົ້າໃຈໄດ້ແຈ້ງ, ທັງຜູ້ສອນ ແລະ ຜູ້ຮຽນນັ້ນ. ເຂົ້າໃຈຄືກັນ. ເຮົາບໍ່ສາມາດປະປ່ອຍໃຫ້ເວົ້າແບບລວມໆໄດ້. ເພາະການເວົ້າແບບລວມໆ ບໍ່ສາມາດຕີອອກເປັນກິດຈະກຳໄດ້ເພື່ອນຳໃຊ້ເຂົ້າໃນຫລັກສູດການຮຽນການສອນ; ຫລື ວ່າຈະຕັ້ງຄຳຖາມອື່ນອີກ "ເຮົາຢາກໃຫ້ເດັກລາວມີມາລະຍາດ ແລະ ຄຸນສົມບັດດີບໍ່? " ຖ້າຕອບວ່າຢາກໃຫ້ມີຄຸນສົມບັດດີ ກໍ່ຄວນຈະກຳນົດນຳກັນໃຫ້ແນ່ໃຈອີກວ່າ "ມາລະຍາດ" ທີ່ດີນັ້ນແມ່ນເຮັດແນວໃດ? ເພາະວ່າການ "ມີມາລະຍາດດີ " ກໍ່ຂຶ້ນກັບສັງຄົມພາກັນຮັບເອົາໄດ້, ຫລື ທີ່ເຂົາເອີ້ນວ່າ: "ຄ່ານິຍົມ" (Value) ; ຫລື ຕົວຢ່າງ: ຄຳຖາມໜຶ່ງອີກ ເຊັ່ນ: ເຮົາຢາກໃຫ້ບ້ານເມືອງເຮົາສະອາດ ດີບໍ່? "ຕໍ່ກັບຄຳຖາມຂໍ້ນີ້ແມ່ນກ່ຽວຂ້ອງກັບບັນຫາ " ສິ່ງແວດລ້ອມຊຶ່ງຈຳເປັນຕ້ອງໄດ້ສອນໃຫ້ນັກຮຽນ ນັບແຕ່ຊັ້ນອະນຸບານຈົນຮອດ ຊັ້ນມັດທະຍົມຕົ້ນ, ຢ່າງນ້ອຍ, ຕ້ອງໄດ້ຮູ້, ໄດ້ເຂົ້າໃຈ ແລະ ມີກິດຈະກຳໃນໂຮງຮຽນຢ່າງເປັນປົກກະຕິອາທິດໜຶ່ງ 2 ຫຼື 3 ເທື່ອ ຕໍ່ບັນຫາສິ່ງແວດລ້ອມ, ຈົນໃຫ້ກາຍ

ເປັນຄວາມເຄີຍຊິນ ແລະ ກາຍເປັນພຶດຕິກຳຂອງແຕ່ລະຄົນໃນສັງຄົມ.

ຄຳຖາມຕ່າງໆ ທີ່ຍົກຕົວຢ່າງອອກໃຫ້ເຫັນຂ້າງເທິງນີ້. ເປັນພຽງແນວຄວາມຄິດບາງຢ່າງ ເຊິ່ງຜູ້ນຳຕ້ອງການຢາກໃຫ້ສັງຄົມຂອງຊາດ ເປັນໄປໄດ້. ນັ້ນເພິ່ນເອີ້ນວ່າ ແນວທາງນະໂຍບາຍການສຶກສາຂອງຊາດ (National Education Policy) ຫລື ເພິ່ນເອີ້ນອີກແນວໜຶ່ງວ່າ "ວິໄສທັດ" (Vision) ຫລື ຄວາມເຫັນກວ້າງໄກ.

ຜ່ານມາ, ພວກເຮົາກໍ່ໄດ້ຂຽນແຜນພັດທະນາການສຶກສາອອກເປັນໄລຍະໆແລ້ວ ຕາມຄວາມຕ້ອງການຂອງຜູ້ຢາກຊ່ວຍເຫລືອເຮົາ ແຕ່ບໍ່ແມ່ນຂຽນອອກຕາມຄຳຕອບທີ່ກ່າວມາຂ້າງເທິງນີ້ໄດ້. ແນ່ນອນວ່າ ແຜນພັດທະນາດັ່ງກ່າວນັ້ນ ກໍ່ແມ່ນພວກຊ່ຽວຊານຕ່າງປະເທດມາສົມທົບກັບພວກເຮົາຕາມການຈັດຕັ້ງຂອງລັດ ໃຫ້ການຮ່ວມມືກັບຊ່ຽວຊານຕ່າງປະເທດສ້າງຂຶ້ນ. ແຕ່ພວກເຮົາຕ້ອງຍອມຮັບນຳກັນວ່າພວກຊ່ຽວຊານຕ່າງປະເທດກໍ່ໄດ້ຄົ້ນຄິດຕາມແບບຂອງຄົນຕ່າງປະເທດຄິດທຸກຢ່າງ. ມັນເປັນໄປໄດ້ຍາກທີ່ຈະໃຫ້ເຂົາເຈົ້າເຂົ້າໃຈແນວຄວາມຄິດຂອງຄົນລາວເຮົາ ແລະແນວທາງນະໂຍບາຍຂອງເຮົາ ເໝືອນກັບເຮົາເອງຢາກໄດ້ແທ້ໆ. ຕັ້ງແຕ່ຄົນເຮົາເອງແທ້ ກໍຍັງຫາຜູ້ທີ່ເຂົ້າໃຈສິ່ງທີ່ເຮົາຢາກໄດ້ນັ້ນຍາກ ຢູ່ແລ້ວ. ສິ່ງທີ່ພາໃຫ້ຍາກວ່ານັ້ນ ກໍ່ແມ່ນເຮົາເອງບໍ່ທັນມີ "ປັດຊະຍາ" ການສຶກສາ ຂອງຊາດໄດ້ເປັນຫລັກເສຍກ່ອນ. ປັດຊະຍາການສຶກສາ ຫຼື (National Education Philosophy) ແມ່ນພື້ນຖານ ຫລື ຮາກເຫງົ້າຂອງຄວາມເປັນຊາດ, ເຊິ່ງລັດຖະບານຕ້ອງການສົ່ງເສີມໃຫ້ເກີດມີໃນຊາດ ຢ່າງໜັກແໜ້ນຢູ່ເລື້ອຍໆ ແລະ ບໍ່ຍອມໃຫ້ມີການປ່ຽນແປງໄດ້ງ່າຍຖ້າບໍ່ ຈຳເປັນແທ້ໆ. "ປັດຊະຍາ ການສຶກສາ" ນີ້ເອງຈະເປັນເບົ້າຫລໍ່ຫລອມ ໃຫ້ຊັບພະຍາກອນມະນຸດຂອງຊາດ ມີເອກະລັກຂອງຄວາມເປັນລາວ ຊຶ່ງບໍ່ຄືຊາດອື່ນໄດ້;

ແລະ ຊາດອື່ນກໍ່ບໍ່ສາມາດເປັນຄື "ຊາດລາວ" ໄດ້. ຕໍ່ກັບປັດຊະຍາການສຶກສານີ້, ການສຶກສາຈຶ່ງກາຍເປັນບັນຫາດຽວກັນກັບ ວັດທະນະທຳຈົນແຍກບໍ່ອອກ. ເພິ່ນບໍ່ສາມາດເວົ້າເຖິງການສຶກສາ ໂດຍບໍ່ໃຫ້ຕິດພັນ ກັບວັດທະນະທຳຂອງຊາດ ແລະ ເພິ່ນກໍ່ບໍ່ສາມາດ ສ້າງວັດທະນະທຳ ໃໝ່ໄດ້ໂດຍ ບໍ່ຮັບຮູ້ຄວາມເປັນມາຂອງພື້ນຖານ ວັດທະນະທຳ-ສັງຄົມ ຂອງຊາດ. ສັງຄົມຂອງຊາດໜຶ່ງໆ ມີຫລາຍໆຢ່າງ ທີ່ຈະແຕກຕ່າງກັບສັງຄົມ ປະເທດອື່ນໆໄດ້. ແຕ່ເມື່ອເວົ້າລວມເຂົ້າແທ້ໆ ກໍ່ແມ່ນເນື້ອໃນຂອງວັດທະນະທຳໃນສັງຄົມນັ້ນເອງ.

ນັກວິເຄາະການພັດທະນາຊັບພະຍາກອນມະນຸດໄດ້ກ່າວໄວ້ວ່າ: << Rootless Growth Causes People's Cultural Indentity to Wither >> ຊຶ່ງໝາຍຄວາມວ່າ **"ການຕັດຮາກເຫງົ້າບໍ່ໃຫ້ຂະຫຍາຍຕົວໄດ້, ເປັນສາຍເຫດຕົ້ນຕໍບໍ່ໃຫ້ປະຊາຊົນມີເອກະລັກ ວັດທະນະທຳ ແລະ ເອກະລັກທີ່ມີມາແລ້ວ ຈະຄ່ອຍໆຫ່ຽວແຫ້ງລົງ "** ຄວາມເວົ້າຂອງນັກວິເຄາະນີ້ຈະປຽບທຽບກັບການຕັດຮາກແກ້ວຕົ້ນໄມ້ຕົ້ນໜຶ່ງໄດ້ ແລະ ຕົ້ນໄມ້ນັ້ນ ກໍ່ຈະຕາຍ ໄປເອງໃນທີ່ສຸດ.

ຖ້າເຮົາຫາກວິເຄາະເລິກໆລົງໄປອີກ, ເຮົາຈະເຫັນແຈ້ງວ່າ ການສຶກສາຂອງຊາດ ບໍ່ພຽງແຕ່ຈະເຮັດໃຫ້ຊາດຈະເລີນຍ້ອນວິທະຍາສາດ ແລະ ເຕັກນິກຕ່າງໆທີ່ໂລກຄົ້ນພົບມານຳໃຊ້ເທົ່ານັ້ນ, ແຕ່ຄວາມຈະເລີນຂອງຊາດຍັງຕ້ອງການໃຫ້ແຕ່ລະຊາດມີເອກະລັກ ແລະ ສີສັນຂອງໃຜມັນໄປພ້ອມໆກັນອີກ, ຖ້າບໍ່ດັ່ງນັ້ນກໍ່ຈະບໍ່ຈຳເປັນຕ້ອງມີຊາດແຕກຕ່າງກັນອີກຕໍ່ໄປ. ຍ້ອນແນວນັ້ນ, ຈຶ່ງມີການຕ້ານທິດສະດີ "ໂລກໜຶ່ງດຽວ" ໄດ້.

ຊາວໂລກເຄີຍຖາມຂຶ້ນວ່າ " ຄົນສະຫະລັດອາເມລິກາ ມີວັດທະນະທຳບໍ່? " ວັດທະນະທຳຂອງຊາວອາເມລິກັນເປັນແນວໃດ?, ບາງຄົນກໍ

ຕອບວ່າ "ແມ່ນສັງຄົມທີ່ສະແດງໃຫ້ເຫັນໃນຮູບເງົາຊາວອາເມລິກັນ ໄປຊອກຫາເໝືອງແຮ່ຄຳ ຢູ່ພາກຕາເວັນຕົກໄກ (Far West) ຂອງປະເທດໃນຕົ້ນສະຕະວັດ ທີ 20 ນັ້ນເອງ; ເຊິ່ງສະແດງໃຫ້ເຫັນຊີວິດຂອງ " Cow Boy" ຢູ່ Far-West (ຄົນລ້ຽງງົວຢູ່ພາກຕາເວັນຕົກໄກຂອງອາເມລິກາ), ສະແດງໃຫ້ເຫັນເອກະລັກຂອງສັງຄົມທີ່ມີຜູ້ໃດຈົກປືນອອກ ມາຍິງໝູ່ໄດ້ໄວກວ່າໝູ່ ແມ່ນຜູ້ນັ້ນຊະນະໝູ່ໃນສັງຄົມ.

ເອກະລັກດັ່ງກ່າວນີ້ ເລີຍກາຍເປັນພາບຂອງຊາວອາເມລິກັນ ທີ່ປະກົດໃຫ້ສັງຄົມມະນຸດປັດຈຸບັນເຫັນເທົ່າທຸກວັນນີ້; ຈຶ່ງມີຄົນສາມາດຕອບໄດ້ວ່າສັງຄົມອາເມລິກາ ເປັນແນວນັ້ນ. (ຄວາມຈິງກໍບໍ່ຊົ່ວເຖິງຂະໜາດນັ້ນ).

ຄັນຊັ້ນ ເອກະລັກຂອງຊາດລາວເຮົາເປັນແນວໃດ?, ແມ່ນບໍທີ່ບາງຄົນຕອບວ່າແມ່ນເປັນ "ຄົນຊື່ໆ" ( ຄືໝາຍຄວາມວ່າເປັນຄົນບໍ່ຮ້ອນບໍ່ຮົນກັບສະພາບແວດລ້ອມ, ຈະຟ້າວໄປໃສ, ຈົນຄົນຕ່າງປະເທດ ເຂົາມັກຕີລາຄາແບບກົງໄປກົງມາວ່າ ລາວເຮົາເປັນຄົນ **"ບໍ່ເປັນຫຍັງ"** ເພາະອອກປາກຄວາມໃດກໍມີແຕ່ຕອບວ່າ "ບໍ່ເປັນຫຍັງ" ເຊິ່ງມີຄວາມໝາຍວ່າບໍ່ມີຫຍັງຈະຕ້ອງເຮັດໃຫ້ຮ້ອນໃຫ້ເຄືອງ, ບໍ່ກ່ຽວກັບການແຂ່ງຂັນກັບຜູ້ອື່ນ, ບາງຄັ້ງຄາວຊາວຕ່າງປະເທດກໍ່ເຄີຍເຍີ້ຍອີກວ່າ " Lao P.D.R " ຊຶ່ງແປວ່າ ສ.ປ.ປ ລາວ ນັ້ນແມ່ນຫຍໍ້ມາຈາກຄຳວ່າ << Lao Please Don't Rush>> ຊຶ່ງແປວ່າ " **ລາວກະລຸນາຢ່າຟ້າວຢ່າຟັ່ງ** " ເມື່ອໄດ້ຍິນເຂົາເວົ້າແບບນີ້, ເຮົາຜູ້ເປັນຄົນລາວຈະຮັບໄດ້ບໍ່? ຖ້າຮັບບໍ່ໄດ້ຈະຕອບໂຕ້ເຂົາຄືນວ່າແນວໃດ? ພວກເຮົາສອນກັນໃຫ້ຟ້າວໃຫ້ຟັ່ງແດ່ບໍໃນຊີວິດຕົວຈິງ? ພວກເຮົາຄວນຊອກຫາ "ປັດຊະຍາ" ຫລື ພາບພົດອັນດີກວ່ານີ້ໃຫ້ແກ່ເຮົາເອງ ບໍ່ໄດ້ບໍ່? ສິ່ງທີ່ເຮົາຕ້ອງຊອກໃຫ້ໄດ້ແມ່ນເອກະລັກຂອງຊາດ (National

Indentity) ນີ້ເພື່ອຈະນຳໄປຜັນຂະຫຍາຍອອກໃນໂຮງຮຽນໃຫ້ໄດ້ ແລະ ເພື່ອໃຫ້ໄດ້ເນັ້ນອອກໃນທຸກລະດັບການສຶກສາ. ຂ້າພະເຈົ້າຢາກສະເໜີວ່າ ເອກະລັກຂອງລາວເຮົາ ແມ່ນ "ຄວາມເອື້ອອາລີຕໍ່ກັນ" ແມ່ນຈະເປັນໄປໄດ້ບໍ?ຖ້າເປັນໄປໄດ້ຈະຄວນຂະຫຍາຍບັນຫານີ້ອອກໄດ້ແນວໃດ?.

ພວກເຮົາອາດຈື່ຈຳໄດ້ວ່າ ມີໄລຍະໜຶ່ງ ພັກ ແລະ ລັດຖະບານໄດ້ຊີ້ນຳໃຫ້ສ້າງຕົນໃຫ້ "ເປັນຄົນໃໝ່ສັງຄົມນິຍົມ". ເມື່ອຟັງຄຳນີ້ໃນເບື້ອງຕົ້ນທຸກຄົນກໍ່ມີຄວາມຍິນດີ ແລະ ມີຄວາມກະຕືລືລົ້ນຢາກເປັນຄົນ "ໃໝ່" ແທ້. ເພາະເຫັນວ່າຄົນໃນລະບອບເກົ່ານັ້ນໃຜໆກໍປະນາມວ່າ " ເນົ່າເໝັນ" ໃຜໆກໍ່ພະຍາຍາມ ຢາກປະຖິ້ມໝົດທຸກສິ່ງທຸກຢ່າງທີ່ເຄີຍເຮັດມາໃນລະບອບເກົ່າ, ເປັນຕົ້ນແມ່ນສິ່ງທີ່ພວກຈັກກະພັດລ່າເມືອງຂຶ້ນ, ບໍ່ວ່າລ່າເມືອງຂຶ້ນແບບເກົ່າກໍຄື ລ່າເມືອງຂຶ້ນແບບໃໝ່, ເຄີຍນຳພາກະທຳມາ, ເຊັ່ນ ການຫຼິ້ນກິນຟູມເຟືອຍ, ການສໍ້ໂກງກິນບ້ານກິນເມືອງ, ການຖືຊັ້ນວັນນະ, ການເຫັນແກ່ສ່ວນຕົວຫຼາຍກວ່າສ່ວນລວມ, ແລະ ອື່ນໆທີ່ລະບອບເກົ່າມີມາແລ້ວ ນັ້ນ. ແຕ່ເມື່ອຢາກເປັນ "ຄົນລະບອບໃໝ່ສັງຄົມນິຍົມ" ດັ່ງກວ່ານັ້ນ , ພັດບໍ່ສາມາດກຳນົດອອກໄດ້ໃຫ້ແຈ້ງວ່າຕ້ອງເຮັດແນວໃດ, ຝຶກຝົນຫຼໍ່ຫຼອມກັນແບບໃດ, ເອົາເຂົ້າໃນຫຼັກສູດການສຶກສາໃນແຕ່ລະຊັ້ນຮຽນແນວໃດ, ຫັນອອກເປັນກິດຈະກຳແທ້ໆຢ່າງໃດ? ຍ້ອນແນວນັ້ນ, ຄູອາຈານຈຶ່ງບໍ່ສາມາດນຳພາກັນຮຽນເປັນ "ຄົນໃໝ່ສັງຄົມນິຍົມ"ດັ່ງພັກຊີ້ນຳໄດ້. ໜັກໄປກວ່ານັ້ນ, ສັງຄົມໃໝ່ນີ້ກໍບໍ່ສາມາດເປັນແວ່ນແຍງ ໃຫ້ແກ່ຄົນລຸ້ນໃໝ່ໄດ້ວ່າຕ້ອງເປັນແນວໃດ?ຄ່ານິຍົມຂອງຄົນໃນສັງຄົມໃໝ່ກໍເລີຍກາຍເປັນຄ່ານິຍົມແບບ "ຊອດກະຈາ" ຈະເປັນສັງຄົມນິຍົມແທ້ໆກໍບໍ່ແມ່ນ,ຈະເປັນທຶນນິຍົມ ພັດແຮ່ງບໍ່ໄດ້. ແຕ່ກໍບໍ່ປະຕິເສດ...ເຖິງວ່າບໍ່ເປັນ "ທຶນນິຍົມ" ກໍນິຍົມທຶນຫຼາຍທີ່ສຸດຢູ່ແລ້ວ; ຄືບູຊາເງິນທີ່ໃຊ້ໄດ້, ຈະໄດ້ດ້ວຍວິທີໃດກໍຕາມ, ໄດ້ຍ້ອນຂໍທານກໍ

ຕາມ, ໄດ້ຍ້ອນບັງຄັບເອົາໂດຍບໍ່ມີມາລະຍາດກໍຕາມ, ໄດ້ຍ້ອນການມອບກາຍຖວາຍຕົນຕໍ່ຜູ້ມີເງິນກໍຕາມ, ໄດ້ຍ້ອນຂາຍຊັບໃນດິນສິນໃນນ້ຳຂອງຊາດທຸກຮູບແບບກໍຕາມ... ຈົນວ່າຈະກາຍເປັນຊາດທີ່ບໍ່ມີກຽດສັກສີຫຍັງກໍຕາມ, ຈະກາຍເປັນຊາດ "ຂໍທານ" ຊາດອື່ນກິນໄປຕະຫຼອດຊາດກໍຕາມ. **ຂໍຮ້ອງແດ່, ແນວໃດກໍຕາມ, ພຽງແຕ່ຈົ່ງຢ່າພະຍາຍາມເຮັດໃຫ້ເລື່ອງດັ່ງກ່າວມານີ້ກາຍເປັນ "ຄ່ານິຍົມ" ຂອງຊາດກໍເປັນພໍ.**

ແຕ່ຖ້າວ່າ ລາວເຮົາເອງ ຜູ້ເຫັນບັນຫາແລ້ວ ກໍຄວນຊອກທຸກວິທີທາງແກ້ໄຂຢ່າງຮີບດ່ວນ ກ່ອນມັນຈະກາຍເປັນຄ່ານິຍົມຂອງຊາດໄດ້. ການແກ້ໄຂເລື່ອງດັ່ງກ່າວນີ້ ແມ່ນຈະເຮັດແນວໃດ? ຄຳຕອບກໍຄືວ່າ **ແມ່ນການສຶກສານັ້ນເອງຈະແກ້ໄດ້ຖ້າຢາກແກ້ແທ້ໆ** ເພາະເຫັນໄດ້ຈາກຕົວຢ່າງຫຼາຍໆປະເທດໄດ້ມີຜົນດີຍ້ອນການສຶກສາມາຫຼາຍແລ້ວເຊັ່ນ:

ຊາວຍີ່ປຸ່ນ... ເຮົາຄິດວ່າເອກະລັກອັນດີຂອງລາວເຮົາ ອາດເລືອກເອົາຄວາມມີ "ຈິດໃຈເອື້ອເຟື້ອເຜື່ອແຜ່" ເຖິງວ່າຢູ່ໃນສັງຄົມເມືອງຫາກຖືກສູນເສຍໄປແດ່ກໍບໍ່ເປັນຫຍັງ, ແຕ່ຢູ່ເຂດຊົນນະບົດ, ຄົນລາວເຮົາຍັງຖືສຳຄັນຢູ່ຕະຫຼອດ. ຖ້າເຮົານຳເອົາຄຸນສົມບັດນີ້ມາຫຼໍ່ຫຼອມກັນໃຫ້ຖືເອົາເປັນເອກະລັກຂອງຊາດ (Indentité nationale)ໄດ້ຄືຈະເປັນສິ່ງ ພໍອວດອ້າງໂລກໄດ້ຢູ່ໃນປັດຈຸບັນນີ້, ບໍ່ວ່າຢູ່ໃນຕົວເມືອງ ຫຼື ຢູ່ຊົນນະບົດ.

## 2. ເຮັດການສຶກສາ ແມ່ນເຮັດຫຍັງ?

ຄຳຕອບຕໍ່ຄຳຖາມນີ້ ເວົ້າແນວໜຶ່ງຄືຂອງງ່າຍໆ, ເພາະໃຜໆກໍຮູ້ວ່າເຮັດການສຶກສາກໍແມ່ນເຮັດໂຮງຮຽນ, ສ້າງຄູ, ສອນໜັງສື, ສອນໃຫ້ເດັກຮູ້ອ່ານຮູ້ຂຽນ ແລະ ໄດ້ຂຶ້ນຫ້ອງສູງຂຶ້ນໄປເລື້ອຍໆ, ເມື່ອເດັກ ຫຼື ຊາວໜຸ່ມຢຸດການເຂົ້າຫ້ອງຮຽນແລ້ວກໍບໍ່ແມ່ນໜ້າທີ່ຂອງການສຶກສາ. ຕອບແບບນີ້,

ເມື່ອຟັງກໍຄືຖືກທີ່ສຸດ ຖືກແບບເອົາກຳປັ້ນຕີດິນ.

ແຕ່, ເມື່ອນັກສຶກສາວິໄຈໄປຄັກໆ, ເຂົາພັດຖາມຕໍ່ໄປອີກວ່າ: " ຜູ້ທີ່ໄດ້ຜ່ານການສຶກສາ ແລ້ວຈະເຮັດຫຍັງ? ຖ້າພໍແຕ່ຈະຕອບວ່າ "ກໍອອກໄປຫາຢູ່ຫາກິນຕາມມີຕາມເກີດ", ຮອດຍາມສ້າງຄອບຄົວແລ້ວກໍສ້າງ, ເຂົາເປັນພະນັກງານລັດໄດ້ຢູ່ໃສກໍຮັບເຮັດ, ຖ້າເຂົາບໍ່ໄດ້ກໍຫາວຽກອື່ນໆຕາມຄວາມສາມາດຫາເງິນລ້ຽງຄອບຄົວໃຜມັນກໍແລ້ວໄປ. ອອກຈາກໂຮງຮຽນໄປຕັ້ງແຕ່ຮຽນຈົບປະຖົມສົມບູນກໍຍັງລວຍໄດ້ໃນຊີວິດ. ຢູ່ບາງປະເທດຜູ້ໄດ້ຮຽນສູງເທົ່າໃດ ຍິ່ງບໍ່ໄດ້ເຮັດວຽກໃຫ້ການຈັດຕັ້ງຂອງລັດກໍມີຖົມໄປ ກໍຍັງໄດ້...ຖ້າຕອບພຽງເທົ່ານີ້ກໍບໍ່ຈຳເປັນໃຫ້ມີກະຊວງສຶກສາ, ເພາະການສຶກສາ ຫຼື ກະຊວງສຶກສາ ຈຳເປັນຕ້ອງເປັນບ່ອນຄິດອອກແບບໃຫ້ຄົນຄິດເອົາເອງເປັນ, ແກ້ໄຂບັນຫາເປັນເພື່ອສາມາດເອົາຕົວລອດທີ່ດີຢູ່ໃນສັງຄົມມະນຸດ.

ນັກວິເຄາະການສຶກສາ ຫຼື ນັກການສຶກສາ (Educators or Specialist in Education) ເຂົາຈຶ່ງຕອບວ່າ **"ເຮັດການສຶກສາແມ່ນເຮັດການພັດທະນາພຶດຕິກຳຂອງມະນຸດ ໃນຊາດນັ້ນເອງ"** ເວົ້າງ່າຍໆກໍແມ່ນເຮັດການພັດທະນາຊາດນັ້ນເອງ. "ຖ້າບໍ່ອາໃສເຮັດໃຫ້ການສຶກສາກາຍເປັນຂະບວນການໜຶ່ງຂອງການພັດທະນາປະເທດ, ເຂົາບອກວ່າບໍ່ຈຳເປັນຕ້ອງສ້າງ ກະຊວງສຶກສາຂຶ້ນ ໃຫ້ເສຍງົບປະມານຂອງຊາດລ້າໆ" ເພາະວ່າກົກຂອງບັນຫາ, ຕົ້ນເຫດຂອງການ ຈະພັດທະນາປະເທດຊາດໄດ້ແມ່ນຂຶ້ນຢູ່ກັບພຶດຕິກຳຂອງມະນຸດໃນຊາດ... ບໍ່ແມ່ນຂຶ້ນກັບໄດ້ຮຽນສູງ ຫຼື ໄດ້ຮຽນຕ່ຳ. ຜູ້ທີ່ໄດ້ຮຽນສູງໝົດເງິນຂອງພໍ່ແມ່ ແລະ ຂອງຊາດ ຫຼື ຂອງປະເທດອື່ນຊ່ວຍເຫຼືອ ຫຼື ຂອງຄອບຄົວລົງທຶນໃຫ້, ບໍ່ຮູ້ວ່າຫຼາຍເທົ່າໃດ ກໍຍັງກາຍເປັນຄົນຂາຍຊາດໄປໄດ້; ທັງນີ້ກໍຍ້ອນພຶດຕິກຳ ຄື ຄວາມປະພຶດນັ້ນເອງ. ຖ້າຈະເຈາະຈົ້ມເຂົ້າໄປຕື່ມອີກວ່າ ເປັນຫຍັງຈຶ່ງມີຄົນຮຽນສູງ

ຫຼາຍໆຄົນຈາກພາຍໃນປະເທດ ຫຼື ຈາກຕ່າງປະເທດມາ ກໍຍັງມີພຶດຕິກຳບໍ່ດີໄດ້ຢູ່? ຄຳຖາມນີ້ຍິ່ງຕອບໄດ້ວ່າ ຍ້ອນເຮັດການສຶກສາບໍ່ຖືກເປົ້າໝາຍທີ່ປະເທດນັ້ນໆຕ້ອງການແທ້ໆ. ເພາະວ່າການທີ່ຈະພັດທະນາພຶດຕິກຳຂອງມະນຸດໄດ້ນັ້ນ ມັນມີຫຼາຍອົງປະກອບສົມທົບເຂົ້າກັນຄື:

- ດ້ວຍການຮຽນຮູ້ (Learning)
- ດ້ວຍຄ່ານິຍົມ (Values)
- ດ້ວຍການມີບັນທັດຖານ ຫຼື ມາດຖານຊີວິດ (Norms)
- ດ້ວຍເຈດຕະນະຄະຕິ (Attitudes)
- ດ້ວຍຄວາມເຊື່ອ (Belief) ແລະ
- ດ້ວຍການປະຕິສຳພັນທາງສັງຄົມ (Social Interaction)

## 2.1. ການຮຽນຮູ້ແມ່ນຫຍັງ (Learning) ?

- ການຮຽນຮູ້ແມ່ນ ຂະບວນການໜຶ່ງ ທີ່ເຮັດໃຫ້ເກີດການປ່ຽນແປງການຕອບສະໜອງຂອງສິ່ງທີ່ປຸກໃຈ (ປຸກເສັ້ນປະສາດ) ຫຼື ການຕະກຸກເສັ້ນດ້ວຍການຝຶກ ຫຼື ດ້ວຍປະສົບການ.
- ການຮຽນຮູ້ເປັນຂະບວນການທີ່ສ້າງຄວາມຮູ້ສຶກ, ຄວາມມີຈິດສຳນຶກ(ວິນຍານ) ເພື່ອປ່ຽນພຶດຕິກຳຈາກປະສົບການທີ່ໄດ້ຮັບມາແລ້ວ(ເຊັ່ນການຮຽນຮູ້ຂັບລົດ, ຊຶ່ງປ່ຽນຈາກພຶດຕິກຳຂັບລົດບໍ່ເປັນ, ມາເປັນພຶດຕິກຳຂັບລົດເປັນ). ຈາກການກຳນົດຄຳນິຍາມໃນເບື້ອງຕົ້ນໄວ້ດັ່ງນີ້, ເພິ່ນສາມາດຈຳແນກໃຫ້ເຫັນແຈ້ງຂຶ້ນໄປອີກຄື:

a) ການຮຽນຮູ້ຄືຂະບວນການທີ່ມີອົງປະກອບຫຼາຍໆຢ່າງເຂົ້າ

ມາກ່ຽວຂ້ອງເຊັ່ນ: ການມີປະສົບການຂອງຮ່າງກາຍ ຫຼື ການທີ່ຮ່າງກາຍປັບຕົວເພາະມີປະສົບການແບບອື່ນມາກ່ອນນັ້ນ ບໍ່ສາມາດຮັບເອົາປະສົບການນີ້ໄດ້ຖ້າບໍ່ປັບ; **ການຊອກຫາຫົນທາງທີ່ຈະປັບເພື່ອແກ້ບັນຫາທີ່ກຳລັງປະສົບຢູ່ນັ້ນໄດ້,ຈຶ່ງຮັບໄດ້ວ່າແມ່ນການຮຽນຮູ້.** ຜົນຂອງການຮຽນຮູ້ສະແດງອອກ ເປັນການປ່ຽນແປງພຶດຕິກຳຂອງຮ່າງກາຍ ເພາະມີປະສົບການໃໝ່. ດັ່ງນັ້ນ, ນັກຈິດຕະວິທະຍາ ຈຶ່ງໄດ້ຕັ້ງສົມມຸດຖານໃໝ່ (Hypothesis) ວ່າ: **ການຮຽນຮູ້ເປັນການປ່ຽນແປງໃນລະບົບປະສາດສ່ວນກາງຂອງຮ່າງກາຍ;** ແຕ່ ການປ່ຽນແປງດັ່ງກ່າວນີ້ ບໍ່ສາມາດອະທິບາຍໄດ້ຢ່າງຊັດເຈນເທື່ອ (ກຳລັງຄົ້ນຄວ້າທາງດ້ານສະລີລະວິທະຍາ) (Physiology). ແຕ່ການທີ່ຮູ້ໄດ້ວ່າ ຄົນເກີດການຮຽນຮູ້ ຈຶ່ງສາມາດວັດແທກການປ່ຽນແປງທີ່ເກີດມີໄດ້ເຊັ່ນ: ຖ້າວ່ານັກສຶກສາຄົນໜຶ່ງ ສາມາດຕີພິມດີດໄດ້ຢ່າງຄ່ອງແຄ້ວໄດ້ແລ້ວກ່ອນ ເວລາທີ່ບໍ່ທັນໄດ້ເຂົ້າຍາກ ຫຼື ຮຽນຕາມແບບ ຮຽນຕີພິມດີດນັ້ນນັກສຶກສາຜູ້ນັ້ນ, ຈະຕີພິມດີດໃຫ້ຖືກແບບແຜນບໍ່ໄດ້ເລີຍ, ຈຶ່ງຖືໄດ້ວ່າ **ເມື່ອເກີດການຮຽນຮູ້ຂຶ້ນແລ້ວ, ກໍ່ເກືອບຖືໄດ້ວ່າ ເປັນການປ່ຽນແປງພຶດຕິກຳທີ່ເກືອບຖືວ່າ ຖາວອນໄດ້,** ເພາະຈະປ່ຽນແປງໃໝ່ຍາກ, ມີບາງຄົນເຄີຍຮຽນຈາກຄວາມ ເຄີຍຊິນທີ່ພໍ່ແມ່ຖ່າຍທອດໃຫ້ຕາມຄອບຄົວ, ເມື່ອເຂົ້າຮ່ຳເຂົ້າຮຽນຕາມ ຂັ້ນຕອນຂອງຫລັກສູດກໍອາດປັບຕົວຕາມໄດ້ຍາກ. ແຕ່ກໍມີບາງກໍລະນີທີ່ຮຽນແບບຄອບຄົວເອົາຊະນະ ແບບໂຮງຮຽນໄດ້ ຖ້າພໍ່ແມ່ຫາກມີວິທີທີ່ດີສອນໄດ້.

b) ປະສົບການເປັນອົງກອນທີ່ສຳຄັນຂອງການຮຽນຮູ້.

**ປະສົບການ ໝາຍເຖິງ ໄລຍະທີ່ຮ່າງກາຍມີຄວາມສຳພັນກັບ ສະພາບແວດລ້ອມມາແລ້ວ** ຫລື ສິ່ງປຸກສະຕິທີ່ສ້າງຄວາມສຳພັນ ກັບສະພາບແວດລ້ອມແລ້ວ ຫລື ສິ່ງປຸກສະຕິທີ່ສ້າງຄວາມສຳພັນເຊື່ອມໂຍງລະຫວ່າງ

ຕົວກະຕຸ້ນ ແລະ ພຶດຕິກຳສະແດງອອກ, ຊຶ່ງພຶດຕິກຳນັ້ນຈະຄົງຢູ່ຕະຫລອດໄປ, ຖ້າໄດ້ຮັບການຝຶກຝົນ ຫລື ໄດ້ຮັບການສະໜັບສະໜູນ. ແຕ່ການປ່ຽນແປງພຶດຕິກຳໃນໄລຍະສັ້ນໆ ບໍ່ໄດ້ດີກໍອາດເປັນຜົນມາຈາກຄວາມເມື່ອຍ ຫລື ອາລົມບໍ່ສະຫງົບຮູ້ ຫຼື ຈາກຄວາມບັງຄັບໃຈ, ແລະ ອື່ນໆຊຶ່ງບໍ່ຖືວ່າມາຈາກການຮຽນ. ດັ່ງນັ້ນ, ເພິ່ນຈຶ່ງສະຫລຸບໄດ້ວ່າ **ການຮຽນຮູ້ເປັນພຶດຕິກຳຂອງມະນຸດ; ຂະບວນການຮຽນຮູ້ (The learning process) ເປັນສ່ວນປະກອບ ຄວາມຊົງຈຳ ຊຶ່ງເປັນສູນຄວບຄຸມສັ່ງການ.** ສູນນີ້ເປັນທ່າອ່ຽງຂອງການ ປະຕິບັດຕອບສະໜອງຕ່າງໆຊຶ່ງປະກອບດ້ວຍ **ການຮັບຮູ້, ດ້ວຍລັກສະນະທ່າທາງ, ອຸປະນິໄສ, ອາລົມ ແລະ ພຶດຕິກຳທີ່ບຸກຄົນສະແດງອອກມາ ດັ່ງທີ່ ແຜນພູມ (Chart) ສະແດງອອກໃຫ້ເປັນຮູບປະທຳລຸ່ມນີ້:**




ຮູບພາບສະແດງສ່ວນປະກອບຂອງຂະບວນການຮຽນຮູ້
(ໝົດທຸກສ່ວນປະກອບນີ້ສົມທົບກັນໄດ້ດີຈຶ່ງເປັນການຮັບຮູ້ໄດ້)

ບໍ່ມີທາງເປັນໄປໄດ້ທີ່ການຮັບຮູ້ ແລະ ເຂົ້າໃຈດີນັ້ນ ຈະແຍກອອກຈາກການປະຕິບັດໄດ້ (There can be no knowledge apart from practice ) ທັງໝົດນີ້ ຈຶ່ງແມ່ນຂະບວນການຮຽນຮູ້ແທ້. ເວົ້າງ່າຍໆແມ່ນ: ຖ້າເຮັດ ເປັນຈິງແມ່ນເຂົ້າໃຈດີ, ຖ້າເຂົ້າໃຈບໍ່ດີກຈຶ່ງປະຕິບັດບໍ່ໄດ້. ໝາຍຄວາມວ່າ ການລົງມືປະຕິບັດໄດ້ດີຈຶ່ງຖືວ່າຮຽນຮູ້ໄດ້.

## 2.2 ຄ່ານິຍົມແມ່ນຫຍັງ ? (Values)

ເປັນເລື່ອງຂອງພຶດຕິກຳທີ່ກ່ຽວກັບຄວາມຄິດໃນສິ່ງທີ່ຄວນຈະເປັນ ແລະ ເປັນສິ່ງທີ່ຄົນສ່ວນໃຫຍ່ປາຖະໜາ ຫຼື ຄວນປະຕິບັດເພື່ອໃຫ້ບັນລຸເຖິງຄວາມປາຖະໜານັ້ນໆ (ເຊັ່ນ: ຄົນສ່ວນໃຫຍ່ຂີ້ຄ້ານມັກງ່າຍ, ບໍ່ຢາກປະຕິບັດຕາມລະບຽບ, ຂີ້ລັດບໍ່ຢາກນັບຖືກົດຈາລະຈອນ, ເມື່ອປ່ອຍໃຫ້ເປັນໄປເລື້ອຍໆ ກໍກາຍເປັນຄ່ານິຍົມໄດ້).

ຄິດວ່າ "ຄ່ານິຍົມ" ໝາຍເຖິງ ຄວາມນິຍົມ ຫຼື ຄວາມພໍໃຈທີ່ຕັ້ງໄວ້ເປັນຫຼັກຖານ ຫຼື ເປັນມາດຕະຖານວ່າ **ສິ່ງນັ້ນ, ສິ່ງນີ້ ມີຄຸນຄ່າ ຫຼື ມີຄວາມສຳຄັນໃນຊີວິດ**, ເປັນສິ່ງສະແດງເຖິງຄວາມຮູ້ສຶກໃນຈິດໃຈຂອງມະນຸດ ທີ່ຕັ້ງຂຶ້ນຕໍ່ສິ່ງໃດສິ່ງໜຶ່ງ, ລວມທັງ **ຕໍ່ພຶດຕິກຳທີ່ຖືວ່າດີງາມດ້ວຍ**, ເປັນສິ່ງທີ່ຄົນຈຳນວນຫຼາຍເປັນຫລາຍ ເຫັນພ້ອມກັນວ່າສິ່ງນັ້ນມີປະໂຫຍດ ຫຼື ມີຄຸນຄ່າພຽງພໍທີ່ ຈະປະຕິບັດຕາມ, ເມື່ອສັງຄົມປະຕິບັດຕາມສິ່ງນັ້ນໆ, ສິ່ງນັ້ນຈຶ່ງກາຍເປັນ **ຄ່ານິຍົມ** ຂອງສັງຄົມໄປໄດ້ ເຊັ່ນ: ຄ່ານິຍົມຂອງສັງຄົມລາວໃນ (ສະໄໝບູຮານ) ທີ່ຖືວ່າລູກຕ້ອງຟັງຄວາມພໍ່ແມ່, ຄົນໜຸ່ມຕ້ອງມີຄວາມເອື້ອເຟື້ອ ມີນ້ຳໃຈກັບເດັກ ແລະ ຄົນເຖົ້າຄົນແກ່; ສິ່ງເຫຼົ່ານີ້ເປັນຄ່ານິຍົມຂອງສັງຄົມ ທີ່ຍຶດຖືກັນມາຈົນກາຍເປັນບັນທັດຖານ (Norms)

ຂອງສັງຄົມລາວໄປໃນຕົວ, ຄ່ານິຍົມອາດເກີດຂຶ້ນໄດ້ຈາກຄວາມນຶກຄິດ ຫຼື ສະຕິປັນຍາຂອງມະນຸດທີ່ ມອງເຫັນຄຸນຄ່າຂອງສິ່ງໃດສິ່ງໜຶ່ງ ຫຼື ອາດເກີດຈາກການສັ່ງສອນ, ການຈູງໃຈຂອງຜູ້ອື່ນກໍໄດ້.(ເຊັ່ນ: ການໃຊ້ໂທລະສັບມືຖືກໍເປັນຄ່ານິຍົມໄດ້).

ສະຫລຸບແລ້ວ, ຄ່ານິຍົມ ຄືກຸ່ມພຶດຕິກຳ, ທ່າທີ, ແນວຄິດ... ທີ່ສັງຄົມໜຶ່ງໆເຫັນວ່າເປັນສິ່ງທີ່ມີຄ່າ ເຫັນຄວນພາກັນກະທຳ, ໜ້າຈະກະທຳໄດ້, ໜ້າຈະຍົກຍ້ອງ ຫຼື ວ່າຖືກຕ້ອງໄດ້.

**ຄວາມສຳຄັນຂອງຄ່ານິຍົມ.**

ຄ່ານິຍົມເປັນເໝືອນແນວທາງເດີນທີ່ວາງໄວ້ ເມື່ອຄົນທົ່ວໄປດຳເນີນຊີວິດໄປຕາມແນວນັ້ນຄ່ານິຍົມກໍເກີດຂຶ້ນ, ຖ້າເປັນໄປໃນທາງທີ່ຖືກຕ້ອງເປັນປະໂຫຍດ ການດຳເນີນຕາມກໍຈະສົ່ງຜົນກະທົບອັນດີງາມເກີດຂຶ້ນແກ່ບຸກຄົນ, ແກ່ສັງຄົມ ແລະ ແກ່ປະເທດຊາດ. ຄ່ານິຍົມ ມີຄວາມສຳຄັນແກ່ການດຳລົງຊີວິດຂອງມະນຸດຄື:

(1) ເປັນແນວທາງໃນການດຳເນີນຊີວິດຂອງມະນຸດ (ຕົວຢ່າງນິຍົມຜູ້ທີ່ "ເວົ້ານົວຫົວມ່ວນ")

(2) ເປັນຫຼັກໃນການປະເມີນຄ່າຂອງຄວາມປະພຶດຂອງ ມະນຸດ (ຕົວ ຢ່າງ "ມີທ່າທີສຸກຂຸມ")

• ຕໍ່ຄຳວ່າ ຄ່ານິຍົມເປັນແນວທາງໃນການດຳລົງຊີວິດ ຂອງມະນຸດ ກໍເພາະວ່າ ການກະທຳໃນແບບຕ່າງໆຂອງມະນຸດ ຫຼື ເອີ້ນວ່າພຶດຕິກຳຂອງມະນຸດ (Human Behavior) ນັ້ນຍ່ອມມີຄ່ານິຍົມ ເປັນຕົວກຳນົດທີ່ສຳຄັນຮ່ວມຢູ່ດ້ວຍ. ມະນຸດຈະມີຄວາມປະພຶດເປັນຄົນ ທີ່ເຫັນແກ່ປະໂຫຍດສ່ວນຕົວ ຫຼື ເຫັນແກ່ປະໂຫຍດສ່ວນລວມ ຫຼື ເຫັນແກ່ຄວາມ

ຖືກຕ້ອງມັນຂຶ້ນກັບປັດຊະຍາຊີວິດ ທີ່ ແຕ່ລະຄົນຫາກຍຶດຖື, (ເຊັ່ນມີບາງພວກທີ່ຖືວ່າປັນຍາ ແລະ ເຫດຜົນເປັນສິ່ງ ທີ່ດີທີ່ສຸດ ກ່ອນຈະເຮັດຫຍັງລົງໄປ ຫຼື ກ່ອນຈະຕັດສິນໃຈກໍຕ້ອງໃຊ້ປັນຍາ ແລະ ເຫດຜົນ ເປັນບ່ອນອ້າງອີງ, ແຕ່ກໍມີພວກທີ່ຖືວ່າບໍ່ຈຳເປັນຈະໃຊ້ປັນຍາ ຫຼື ການຮຽນຮູ້ສູງກໍຍັງມີລາຍໄດ້ດີ; ຄົນເຮົາຕ້ອງການພິຈາລະນາຫາຜົນດີ ແລະ ຜົນເສຍທີ່ຈະເກີດຂຶ້ນຈາກ ການກະທຳ ແລ້ວຈິ່ງເລືອກທຳໃນສິ່ງທີ່ຖືກ).

- ຕໍ່ຄຳວ່າ ຄ່ານິຍົມເປັນຫຼັກໃນການປະເມີນຄ່າຂອງ ຄວາມປະພຶດ, ກໍເພາະວ່າ ການທີ່ຄົນເຮົາຈະປະເມີນວ່າອັນໃດດີ ອັນໃດຊົ່ວ, ອັນໃດຖືກ, ອັນໃດຜິດ, ຕ້ອງໃຫ້ຄ່ານິຍົມເປັນເຄື່ອງຕັດສິນ (ເຊັ່ນ: ເຮົາມີຄວາມເຊື່ອວ່າຄວາມຊື່ສັດສຸດຈະຣິດນັ້ນ ດີທີ່ສຸດໃນສັງຄົມ, ການກະທຳອັນໃດທີ່ຊື່ສັດສຸດຈະຣິດ ຖືວ່າເປັນສິ່ງທີ່ຖືກຕ້ອງ, ມີປະໂຫຍດ, ແລະ ມີຄຸນຄ່າດີຄວນໃຫ້ກະທຳຕໍ່ໆໄປ. ຫຼື ຖ້າເຮົາເຊື່ອວ່າ ຄວາມສຸກຂອງເຮົາເອງດີກວ່າຄວາມສຸກຂອງຄົນອື່ນ ເປັນສິ່ງທີ່ເຮົາຕ້ອງທຳກ່ອນອື່ນໝົດ ກໍອາດຖືກ ຫຼືໃນທາງກົງກັນຂ້າມ, ຖ້າວ່າການກະທຳໃດໆທີ່ບໍ່ກໍ່ໃຫ້ເກີດຄວາມສຸກແກ່ເພື່ອນຮ່ວມຊາດຂອງຕົນກ່ອນ ເຮົາຈະເກີດມີຄວາມທຸກໃຈຖືວ່າ ເປັນການກະທຳທີ່ຜິດ (ກໍອາດຝຶກໃຫ້ມີຂຶ້ນໄດ້ຖ້າເຮົາຕ້ອງການ) ແລະ ຄ່ານິຍົມອາດປ່ຽນແປງໄປໄດ້ເໝືອນກັນ ທັງນີ້ຂຶ້ນຢູ່ກັບປັດໃຈຕ່າງໆ ທີ່ມີອິດທິ ພົນຕໍ່ຄ່ານິຍົມ, ຊຶ່ງມີຫລາຍປະການ ເປັນຕົ້ນວ່າຄອບຄົວ, ເພື່ອນບ້ານ (ບ້ານໃກ້ເຮືອນຄຽງ), ໂຮງຮຽນ, ສາສະໜາ, ບົດວັນນະກຳ, ສິນທຳ, ສື່ມວນຊົນ, ສະຖານທີ່ພັກຜ່ອນຍ່ອນໃຈ, ພາວະເສດຖະກິດ ແລະ ຂະໜົບທຳນຽມປະເພນີເປັນຕົ້ນ ).

## 2.3. ບັນທັດຖານ (Norms) ແມ່ນຫຍັງ?

ບັນທັດຖານ (Norms ຫຼື Standard) ຄື ກົດ ຫລື ແບບແຜນສຳລັບປະຕິບັດ ຊຶ່ງຖືກຈັດສ້າງຂຶ້ນເພື່ອຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ, ຊຶ່ງຈະຕ້ອງໄດ້ຕິດຕາມດ້ວຍກົດຂໍ້ບັງຄັບທາງສັງຄົມໃນ 2 ຮູບແບບຄື:

(1) ໃນແງ່ບວກ ໄດ້ແກ່ການຍົກຍ້ອງ, ສັນລະເສີນ, ການຈັດລາງວັນຕ່າງໆ ໃນກໍລະນີ ທີ່ເຫັນວ່າສະມາຊິກຂອງສັງຄົມປະຕິບັດຕາມລະບຽບຂອງສັງຄົມໄດ້ດີ ຫລື ຂອງການຈັດຕັ້ງໃດໜຶ່ງເຮັດໄດ້ຢ່າງ ຖືກຕ້ອງ, ທັງໝົດທຸກຄົນເຫັນວ່າແມ່ນແທ້.

(2) ໃນແງ່ລົບໄດ້ແກ່ການລົງໂທດໃຫ້ເຂັດຫຼາບ ໃນກໍລະນີທີ່ສະມາຊິກ ຂອງສັງຄົມ ມີພຶດຕິກຳທີ່ຜິດແຜກແຕກຕ່າງໄປຈາກ ບັນທັດຖານທີ່ກຳນົດໄວ້. ບັນທັດຖານເປັນແນວທາງໃນການປະຕິບັດ ທັງທີ່ມີອິດທິພົນສູງກວ່າຄວາມນຶກຄິດຂອງບຸກຄົນ, ເປັນພຶດຕິກຳທີ່ມະນຸດ ຫລື ສະມາຊິກຂອງສັງຄົມຄາດການໄດ້ລ່ວງໜ້າ ທຸກຄົນຄວນຈະກະທຳ ຫລື ຄວນມີພຶດຕິກຳໄປ ໃນຮູບແບບນັ້ນໆເພາະສັງຄົມເຫັນວ່າດີ ຊຶ່ງເປັນສິ່ງສຳຄັນໃນການຢູ່ຮ່ວມກັນ (ເຊັ່ນ: ລູກຄວນເຄົາລົບ ແລະ ເຊື່ອຟັງພໍ່ແມ່ ແລະຍາດຕິພີ່ນ້ອງທີ່ອາວຸດໂສກວ່າ, ພໍ່ແມ່ກໍ່ຕ້ອງສັ່ງສອນ ແລະ ລ້ຽງດູລູກດັ່ງນີ້ເປັນຕົ້ນ ຫຼື ການປະຕິບັດໂມງເວລາທີ່ ຖືກຕ້ອງຊີ້ຕົງຄວນລົງໂທດ).

ບັນທັດຖານສາມາດແບ່ງອອກເປັນ 3 ປະເພດໄດ້ຄື:

(1) **ໄດ້ຍ້ອນປະຊາຊົນຖື** (Folkways): ຄືແນວທາງ ຫລືວິທີປະຕິບັດ ສືບຕໍ່ກັນມາຂອງປະຊາຊົນໃນ ຊຸມຊົນຈົນເກີດມີຄວາມ ຊິ້ນເຄີຍ, ບໍ່ຈຳເປັນຕ້ອງມີກົດໝາຍບັງຄັບ, ບໍ່ຮູ້ສຶກວ່າເປັນພາລະໜ້າທີ່ຂອງຜູ້ປະຕິບັດ ຫລື ບໍ່? ຖ້າບໍ່ປະຕິບັດກໍ່ບໍ່ຖືກໂທດຫຍັງ, ພຽງແຕ່ຈະຖືກ

ສັງຄົມເບິ່ງເຫັນວ່າບໍ່ເໝາະສົມເທົ່ານັ້ນ ເຊັ່ນ ບາງຄົນທີ່ໄປຮ່ວມໄວ້ທຸກ ຢູ່ເຮືອນດີ (ເຮືອນຄົນຕາຍ) ຈະຕ້ອງນຸ່ງເຄື່ອງດຳ, ຫລື ສີເສົ້າ, ນັ້ນເປັນພຽງແຕ່ປະຊານິຍົມ ຖືເອົາ, ຖ້າມີຜູ້ບໍ່ປະຕິບັດກໍ່ພຽງແຕ່ຈະໄດ້ຍິນຄົນຈົ່ມວ່າບໍ່ຮູ້ກາລະເທສະເທົ່ານັ້ນ, ແຕ່ຈະເອົາຜິດເອົາ ແມ່ນນຳບໍ່ໄດ້.

(2) **ໄດ້ຍ້ອນສິນທຳ ຫລື ຈາຣິຍະທຳ** (Moral) ຄື: ແບບແຜນຄວາມ ປະພຶດກ່ຽວກັບຄວາມດີຄວາມຊົ່ວ ຫລື ຄວາມຜິດຄວາມຖືກ.

- ຄວາມຖືກທີ່ຕ້ອງການໃຫ້ມີການປະຕິບັດໃນບາງເລື່ອງ ແລະ ຫ້າມບໍ່ໃຫ້ປະຕິບັດໃນບາງເລື່ອງ, ຖ້າສະມາຊິກໃນສັງຄົມບໍ່ປະຕິບັດ ກໍຖືວ່າຜິດສິນທຳ, ຜິດຈາຣິຍະທຳ (ເຊັ່ນ ລູກຕ້ອງມີຄວາມກະຕັນຍູຕໍ່ຜູ້ເປັນພໍ່ແມ່, ຈະດູຖູກພໍ່ແມ່ຜູ້ບັງເກີດເກົ້າບໍ່ໄດ້ເດັດຂາດ, ຫລື ການລ້ຽງໝາ ຫລື ແມວຢູ່ໃນຄອບຄົວກໍຖືວ່າ ເປັນຜູ້ມີໃຈບຸນ, ການລ້ຽງສັດທີ່ໜ້າຮັກ ແລະ ໃກ້ຊິດກັບຄົນ ໃນຄອບຄົວນັ້ນດີທີ່ສຸດ, ຖ້ານຳເອົາສັດນັ້ນໄປຂ້າກິນ, ຜູ້ທີ່ກິນນັ້ນ ກໍຈະຖືກຕີລາຄາວ່າເປັນຄົນໜ້າ ລັງກຽດຂອງສັງຄົມ, ເພາະຈະຖືວ່າເປັນຄົນທີ່ຂາດສິນທຳ ຈາຣິຍະທຳເປັນຕົ້ນ) ການທີ່ຈະລົງໂທດ ຫລື ບໍ່ລົງໂທດຕໍ່ບຸກຄົນຜູ້ນັ້ນກໍຂຶ້ນ ກັບສັງຄົມທີ່ຈະຍອມຮັບ ຫລື ບໍ່ ? ເທົ່ານັ້ນ. (ຕົວຢ່າງອີກ ເຊັ່ນ: ຄູໃຫ້ຄະແນນລື່ນຄວາມເໝາະສົມຕໍ່ລູກສິດຜູ້ທີ່ຕົນໄດ້ຮັບຜົນປະໂຫຍດສ່ວນຕົວນຳ, ກໍຖືວ່າຂາດຈັນຍາບັນ) ບໍ່ມີໃຜລົງໂທດໄດ້ເພາະເປັນຄວາມຕັດສິນໃຈຂອງຄູເອງ, ແຕ່ກໍ່ມີຜົນສະທ້ອນບໍ່ດີ ໄດ້ພາຍຫລັງ, ໃຫ້ແກ່ຕົນເອງ ແລະ ໃຫ້ແກ່ນັກຮຽນຜູ້ນັ້ນ. ທັງເປັນການຜິດລະບຽບຢ່າງຮ້າຍແຮງຂອງຄູ.

(3) **ກົດໝາຍ** (Law): ເປັນຂໍ້ບັນຍັດຂອງລັດຖະບານທີ່ຕົກລົງແຕ່ງຕັ້ງຂຶ້ນ, ເພື່ອໃຫ້ຄົນໃນສັງຄົມພ້ອມກັນປະຕິບັດ, ຖ້າຫາກມີຜູ້ຝ່າຝືນຕ້ອງຖືກລົງໂທດ ເພາະວ່າການຈະນຳໃຊ້ແຕ່ປະຊານິຍົມ ຫລື ສິນທຳ

ຈາຣິຍະທຳໄປເລື້ອຍໆ ກໍ່ຈະບໍ່ໄດ້ຜົນ. ກົດໝາຍຈຶ່ງເປັນສິ່ງຈຳເປັນໃນສັງຄົມ. ສັງຄົມໃດບໍ່ນັບຖືກົດໝາຍຂອງປະເທດນັ້ນ ສັງຄົມນັ້ນກໍຈະບໍ່ມີຄວາມສະຫງົບໄດ້. ດັ່ງນັ້ນ, ຈຶ່ງຕ້ອງໄດ້ແຕ່ງຕັ້ງໃຫ້ມີບຸກຄົນ ຫຼື ອົງກອນໜຶ່ງຮັບຜິດຊອບ ເຮັດໜ້າທີ່ອອກກົດໝາຍ (ນິຕິບັນຍັດ) ແລະ ມີຕົວແທນທີ່ເຮັດໜ້າທີ່ບັງຄັບໃຫ້ບຸກຄົນປະຕິບັດຕາມ (ເຊັ່ນ: ສານ, ຕຳຫຼວດ, ທະຫານເປັນຕົ້ນ).

2.4. ທັດສະນະຄະຕິ (Attitudes): ທັດສະນະຄະຕິ ຫຼື ເຈດຕະນາຄະຕິ ໝາຍເຖິງ ຄວາມຮູ້ສຶກນຶກຄິດຂອງບຸກຄົນທີ່ມີຕໍ່ສິ່ງ ກະທົບຕໍ່ຈິດ ໃຈ, ຫຼື ສິ່ງແວດລ້ອມຮອບໆຕົວທີ່ມີທ່າອ່ຽງ ໂນ້ມນ່ຽວຕໍ່ການຕອບສະໜອງທາງດ້ານອາລົມ ເຊັ່ນ: ເຄື່ອງໝາຍ, ຄຳເວົ້າ, ສັນຍາລັກ, ວັດຖຸສິ່ງຂອງ ຫຼື ສິ່ງທີ່ເປັນນາມມະທຳ ເຊັ່ນ: ຄວາມພໍໃຈ ຫຼື ບໍ່ພໍໃຈ ຂອງຜູ້ຖືກກະທົບຕໍ່ສິ່ງເຫຼົ່ານັ້ນ.

**ທັດສະນະຄະຕິອາດແບ່ງອອກໄດ້ເປັນ 3 ພາກສ່ວນຄື:**

1.) ຄວາມຮູ້, ຄວາມເຂົ້າໃຈ ຫຼື ຄວາມເຊື່ອຂອງບຸກຄົນຕໍ່ສິ່ງຍົວະເຍົ້າປຸກລະດົມ.

2.) ອາລົມ ຫຼື ຄວາມຮູ້ສຶກຂອງບຸກຄົນທີ່ມີຕໍ່ສິ່ງຍົວະເຍົ້າອັນໃດອັນໜຶ່ງ ເຊັ່ນ: ຈະພໍໃຈ ຫຼື ບໍ່ພໍໃຈ (ຖ້າເປັນຜົນຈາກການປະເມີນ). ມີອາລົມດີ ຫຼື ບໍ່ດີກໍສາມາດກະທົບໃສ່ສຸຂະພາບ.

3.) ພຶດຕິກຳພາຍນອກຂອງບຸກຄົນທີ່ສະແດງອອກຕໍ່ສິ່ງຍົວະເຍົ້າຕາມຄວາມເຊື່ອຄວາມຮູ້ສຶກ.

**ທັດສະນະ ຂອງ ທັດສະນະຄະຕິ**

ທັດສະນະຄະຕິ ເປັນເລື່ອງກ່ຽວກັບຕົວບຸກຄົນ, ມີທັດສະນະ ສະ

ເພາະຕົວຂອງໃຜມັນ, ຊຶ່ງເປັນເລື່ອງຈັດລະບຽບແນວຄວາມຄິດ, ຄວາມເຊື່ອ, ອຸປະນິໄສໃຈຄໍ ແລະ ສິ່ງຈູງໃຈຕ້ອງກ່ຽວຂ້ອງກັບສິ່ງໜຶ່ງສະເໝີ.

ສາຍເຫດແມ່ນຍ້ອນວ່າຄົນທຸກຄົນ ຈະຕ້ອງກ່ຽວຂ້ອງກັບສິ່ງໃດສິ່ງໜຶ່ງ ຫຼື ກັບຄົນໃດຄົນໜຶ່ງຢູ່ເລື້ອຍໆ.

ໃນເລື່ອງຈັດລະບຽບແນວຄວາມຄິດ ແລະ ຄວາມເຊື່ອອາດຈະເປັນໄປໃນທາງໃດທາງໜຶ່ງສະເໝີ ຄື ທາງທີ່ດີ ຫຼື ທາງບໍ່ດີ, ມັກ ຫຼື ບໍ່ມັກ, ພໍໃຈ ຫຼື ບໍ່ພໍໃຈ, ສົນໃຈ ຫຼື ບໍ່ສົນໃຈ. ແຕ່ສ່ວນທີ່ມີຄວາມເປັນກາງນັ້ນມີໜ້ອຍ. ເພາະວ່າຄົນທຸກຄົນຈະມີສິ່ງຈູງໃຈ ແລະ ອາລົມແຕກຕ່າງກັນ ແລ້ວແຕ່ບຸກຄົນ, ແລ້ວແຕ່ລະດັບຄວາມຮັບຮູ້ ຄື:

(1) ເປັນສິ່ງທີ່ບໍ່ແມ່ນໄດ້ມາແຕ່ເກີດ, ແຕ່ເປັນສິ່ງທີ່ບຸກຄົນຮຽນຮູ້ເອົາ, ແລະ ສາມາດສ້າງຂຶ້ນໄດ້ເອງ, ບໍ່ວ່າໃນທາງບວກ ຫຼື ທາງລົບ, ຖ້າບຸກຄົນ ມີປະສົບການບໍ່ດີໃນການກະທຳຂອງບຸກຄົນອື່ນທີ່ມີຕໍ່ຕົວເຂົາ, ເຂົາກໍ່ ຈະເກີດຄວາມຮູ້ສຶກໃນທາງລົບຕໍ່ບຸກຄົນນັ້ນໆ, ຊຶ່ງທັດສະນະຄະຕິນີ້ຈະຕິດຢູ່ກັບຕົວບຸກຄົນໆນັ້ນ ຢ່າງດົນນານໄດ້.

(2) ເປັນສິ່ງທີ່ໝັ້ນຄົງຖາວອນ ແລະ ຍາກທີ່ຈະປ່ຽນແປງທັດສະນະຄະຕິຂອງບຸກຄົນໆນັ້ນ ຖ້າບຸກຄົນນັ້ນຫາກມີທັດສະນະ ຄະຕິທີ່ດີ ຫລື ບໍ່ດີຕໍ່ສິ່ງໃດສິ່ງໜຶ່ງແລ້ວ ຫລື ມີຄວາມຮູ້ສຶກ ຫລື ມີຄວາມເຊື່ອຕໍ່ສິ່ງນັ້ນໆ ແລ້ວ, ສິ່ງນັ້ນກໍ່ຈະຕິດຝັງແໜ້ນກັບບຸກຄົນໆນັ້ນຕໍ່ໄປ ແລະ ຍາກທີ່ຈະເຮັດໃຫ້ເຂົາປ່ຽນແປງໄດ້ງ່າຍ. ດ້ານໜຶ່ງອີກ, ທັດສະນະຄະຕິກໍເປັນວັດທະນະທຳ ອັນໜຶ່ງໄດ້ໃນສັງຄົມ ໃດໜຶ່ງ.

(3) ທັດສະນະຂອງຜູ້ທີ່ຈະມາປ່ຽນແປງທັດສະນະຄະຕິຂອງຜູ້ໃດ ຜູ້ໜຶ່ງໄດ້ນັ້ນຕ້ອງມີຫລັກຖານ, ຂໍ້ມູນອ້າງອີງ ແລະ ສະແດງໃຫ້ເຫັນໄດ້ຈິນ ບໍ່ສາມາດຢັ້ງຢືນດ້ວຍວິທີອື່ນໄດ້, ທັດສະນະຄະຕິເດີມ ຈຶ່ງ

ຈະຄ່ອຍໆຜ່ອນຄາຍລົງໄດ້, ແຕ່ຍັງບໍ່ແນ່ວ່າຈະໝົດໄປໄດ້ງ່າຍ ຖ້າບໍ່ອາໃສເວລາດົນນານສົມຄວນເພື່ອ ພິສູດ.

(4) ທັດສະນະຄະຕິຂອງບຸກຄົນໆໜຶ່ງອາດຈະໜັກ ຫລື ເບົາໃນຕົວ, ຫລື ອາດຈະຂັດແຍ້ງພາຍໃນຕົວບຸກຄົນໆນັ້ນເອງກໍໄດ້ ເຊັ່ນ: **ບາງຄົນມີທັດສະນະຄະຕິວ່າ ການຫລອກລວງໝູ່ເປັນ ສິ່ງທີ່ບໍ່ດີ**, ບໍ່ຄວນກະທຳ, ແຕ່ຕົວຂອງເຂົາເອງພັດຖືວ່າການ ຫລອກລວງຈະເປັນຜົນດີໃຫ້ ແກ່ຜູ້ທີ່ຖືກຫລອກລວງກໍອາດມີໄດ້, ຖ້າວ່າຫລອກລວງໃຫ້ໄປໃນທາງທີ່ດີເພື່ອຊາດ, ເພື່ອປະ ຊາຊົນຢ່າງແທ້ຈິງ.

2.5) **ຄວາມເຊື່ອ ຫລື ຄວາມເຊື່ອຖື (Belief):** ໃນທາງທິດສະດີ, ຄວາມເຊື່ອ ໝາຍເຖິງ ແບບຄວາມຄິດກ່ຽວກັບຕົວເອງຕໍ່ກັບຄວາມສຳພັນລະຫວ່າງຕົວເອງກັບສິ່ງແວດລ້ອມໃດໜຶ່ງ, ເປັນຄວາມຍຶດໝັ້ນໃນ ໃຈໃນເວລານັ້ນໆ ອາດຈະຈິງ ຫລື ບໍ່ຈິງກໍ່ໄດ້ເຊັ່ນຄວາມເຊື່ອໃນ ເລື່ອງກ່ຽວກັບຄອບຄົວຊຶ່ງສ່ວນຫລາຍ ຄົນເຮົາມັກເຊື່ອວ່າພໍ່ແມ່ຈະຕ້ອງຮັກລູກ ແລະລູກຕ້ອງຮັກພໍ່ແມ່ (ອາດຈະແມ່ນ, ແຕ່ກໍ່ຈະບໍ່ສະເໝີໄປ), ການເຊື່ອເລື່ອງຂອງບາບ ແລະ ບຸນ, ເລື່ອງເຊື່ອໝໍດູ, ໝໍມໍ, ເລື່ອງເຊື່ອກ່ຽວກັບຊາດນີ້ ແລະ ຊາດໜ້າ...ອາດຖືກ ຫລື ຜິດກໍເປັນເລື່ອງຂອງຄວາມເຊື່ອ, ຄວາມເຊື່ອມີຜົນຕໍ່ຄວາມຄິດ ແລະ ຄວາມປະພຶດຂອງມະນຸດ ເຊັ່ນ: ເລື່ອງນາລົກ ຫລື ສະຫວັນກໍໄດ້ ເຮັດໃຫ້ມະນຸດສ້າງຄວາມດີ ຫລື ຄວາມບໍ່ດີໄດ້ຍ້ອນ

2.6) **ຜົນກະທົບສັງຄົມ ຫລື ປະຕິສຳພັນທາງສັງຄົມ** (Social Interaction) ໃນຊີວິດປະຈຳວັນຂອງຄົນເຮົານັ້ນ, ຈະຕ້ອງມີການ ຄົບຄ້າສະມາຄົມກັນ, ຂັດແຍ່ງກັນ ຫລື ບໍ່ໃສ່ໃຈຕໍ່ກັນ... ມັນເປັນຂະບວນການປະຕິບັດທີ່ມີການຄຳນຶງເຖິງບຸກຄົນອື່ນໃນສັງຄົມ; ເປັນການພະຍາຍາມປະຕິບັດໄປຕາມວິຖີທາງທີ່ສັງຄົມຍອມຮັບ, ນັ້ນເພິ່ນເອີ້ນວ່າ ການມີປະຕິກິຣິຍາ

ຕອບກັນ. ການມີປະຕິກິຣິຍາໂຕ້ຕອບຕໍ່ກັນນີ້ ຈະມີແບບແຜນໃນ ການປະຕິບັດ ເຊັ່ນ ຄູກັບນັກຮຽນ, ນາຍຈ້າງກັບລູກຈ້າງ, ລູກກັບພໍ່... ເປັນຕົ້ນ.

ອັນໜຶ່ງອີກ, ຍັງມີການກະທຳລະຫວ່າງກັນ ຫລື ຫລາຍຢ່າງທີ່ບໍ່ມີແບບແຜນໃນການປະຕິບັດ ເຊັ່ນຈະຄົບຄ້າສະມາຄົມກັບໃຜເພື່ອໃຫ້ເປັນເພື່ອນສະໜິດສະໜົມກັນໃນໂຮງຮຽນ, ໃນບ່ອນເຮັດວຽກກໍໄດ້, ແຕ່ຖ້າບຸກຄົນໃດຕັດສິນໃຈເລືອກເປັນສະມາຊິກຂອງກຸ່ມ ເຂົາຈະຕ້ອງຍອມຮັບກົດເກນຂອງກຸ່ມທີ່ເຂົ້າຮ່ວມນຳ ເຊັ່ນ ຈະເປັນນັກຮຽນ ຫລື ພະນັກງານ ຈະຕ້ອງປະຕິບັດໄປຕາມກົດຂອງສະຖາບັນທີ່ຕົນເຂົ້າຮ່ວມ ຫລື ຖ້າໄປເຮັດວຽກທຳງານກໍ່ຕ້ອງປະຕິບັດຕາມກົດຂອງໜ່ວຍງານນັ້ນໆ. ການມີປະຕິກິຍາໂຕ້ຕອບກັນຂອງທຸກຄົນແຕ່ລະກຸ່ມ ບໍ່ເຖິງກັບມີກົດເກນຕາຍຕົວແນ່ນອນ, ພຽງແຕ່ມີກົດເກນເປັນແນວທາງທີ່ໃຊ້ແກ້ບັນຫາໃນຊີວິດປະຈຳວັນ.

ປະຕິສຳພັນທາງສັງຄົມມີມາກມາຍກ່າຍກອງ ເຊັ່ນຄວາມເປັນເພື່ອນ, ຄວາມເປັນພໍ່ແມ່ ການເປັນຫົວໜ້າ, ການແຕ່ງງານຮ່ວມຊີວິດນຳກັນ... ເປັນປະຕິສຳພັນທີ່ແຕກຕ່າງກັນອອກໄປ, ພັນທະ (Bond) ບາງຢ່າງກໍ່ໝັ້ນຄົງເຊັ່ນ ການແຕ່ງງານ, ການລ້ຽງດູລູກເຕົ້າ, ປະຕິສຳພັນບາງຢ່າງ ກໍມີສ່ວນສຳພັນກັນໄດ້ໝົດ (ຄົນບໍ່ເຂົ້າໝູ່), ນອກຈາກຄົນທີ່ຈຳເປັນຕ້ອງມາກ່ຽວຂ້ອງຕົວດ້ວຍເທົ່ານັ້ນ, ຄືມີຄົນຖາມຈຶ່ງເວົ້ານຳ ແລະ ບໍ່ຕໍ່ຄວາມເພື່ອສ້າງຄວາມສຳພັນນຳໝູ່ກໍອາດເປັນໄປໄດ້.

ສັງລວມແລ້ວ, ການສ້າງຄົນ ຫລື ການພັດທະນາຊັບພະຍາກອນມະນຸດບໍ່ແມ່ນຢາກສ້າງແນວໃດກໍໄດ້, ຢາກຕີລາຄາແນວໃດກໍໄດ້; ຖ້າຈັດຕັ້ງບໍ່ຖືກກັບເປົ້າໝາຍຂອງຄວາມຕ້ອງການຂອງປະເທດແທ້ໆ, ຫຼື ບໍ່ຖືກກັບຈິດໃຈຜູ້ທີ່ເປັນເຈົ້າຂອງປະເທດຊາດແທ້ນັ້ນ, ຊັບພະຍາກອນທີ່ເຮົາເປັນຜູ້ປູກຝັງອອກມາໄດ້ກໍອາດມີສິ່ງມາແອບແຝງກ້ຽວຣັດ, ເຮັດໃຫ້ເປັນຊັບພະ

ຍາກອນທີ່ບໍ່ສົມບູນທາງດ້ານ "ຈິດໃຈ" ໄດ້. ສະນັ້ນ ຈຶ່ງຈຳເປັນຕ້ອງໄດ້ສ້າງໃຫ້ມີ "ຄຸນນະທຳ" ຫລື "ສິນທຳ" ປະຈຳໃຈຢ່າງໜັກແໜ້ນ ຫຼື ເອີ້ນແນວໜຶ່ງວ່າ "ມີພູມປ້ອງກັນແທ້", ເພິ່ນຈຶ່ງສາມາດຮັບປະກັນ "ທາດແທ້" ຂອງຜູ້ທີ່ເພິ່ນສ້າງຂຶ້ນມາໄດ້.

Social Conventions and Protocol



Comment: ເປັນຄວາມຈິງແຕ່ບໍ່ຖືກຕ້ອງ , it's true but not correct

# ພາກທີ III: ສະເໜີແນວຄິດເບື້ອງຕົ້ນກ່ຽວກັບ ການສຶກສາຂອງຊາດ

## 1. ບາງບັນຫາພື້ນຖານທີ່ຄວນເປັນເອກະພາບກັນ.

### 1.1 ກຸ່ມຄົນ ຫລື ຊັບພະຍາກອນມະນຸດສຳຄັນຂອງຊາດ.

(1) ການເຮັດການປະຕິຮູບການສຶກສາ ຈະກ່າຍໂດຍກົງເອົາຂອງປະເທດອື່ນບໍ່ໄດ້, ແຕ່ຕ້ອງໄດ້ຮັບຮູ້ວິທີການກະກຽມການປະຕິຮູບ, ຊຶ່ງຈະຕ້ອງມີລັກສະນະວິທະຍາສາດ ແລະ ລັກສະນະຊາດໄດ້.

(2) ການຈະພັດທະນາຊັບພະຍາກອນມະນຸດ ຕ້ອງໄດ້ເລີ່ມຈາກການກຳນົດກຸ່ມບຸກຄົນໃນຊາດໃຫ້ແຈ້ງນຳກັນຄັກແນ່ເສຍກ່ອນ, ຈຶ່ງຈະພັດທະນາຖືກຕ້ອງຕາມ ກຸ່ມຊັບພະຍາກອນມະນຸດໄດ້ດີ ແລະ ຖືກຈຸດ. ຕົວຢ່າງຢູ່ໃນລາວເຮົາອາດຈັດໃຫ້ເປັນ 5 ກຸ່ມສຳຄັນໃຫຍ່ໆໄດ້ດັ່ງກ່າວນີ້:

- ກຸ່ມພະສົງ ຫຼື ກຸ່ມນັກບວດ
- ກຸ່ມລາວມົ້ງ-ອິວມຽນ ຊຶ່ງມີວັດທະນະທຳສະເພາະຂອງເພິ່ນ
- ກຸ່ມລາວມອນຂະແມ(ຂອມ) ຊຶ່ງມີວັດທະນະທຳສະເພາະຂອງເພິ່ນ
- ກຸ່ມລາວ-ໄຕ ຊຶ່ງມີວັດທະນະທຳສະເພາະຂອງເພິ່ນ
- ກຸ່ມລາວ-ຈີນ-ຕິເບດ ຊຶ່ງມີວັດທະນະທຳສະເພາະຂອງເພິ່ນ

ກ່ອນອື່ນໝົດເຮົາຕ້ອງໄດ້ສຳຫຼວດລະດັບຕາມເງື່ອນໄຂທີ່ອາດຈະພັດທະນາໄປໃຫ້ໄດ້ດີ, ການດຳເນີນການປະຕິຮູບການສຶກສາໃນແຕ່ລະກຸ່ມຕ່າງໆ ກໍ່ຕ້ອງໄດ້ຍົກໃຫ້ເຫັນຈຸດພິເສດຄັກແນ່ເສຍກ່ອນ ຂອງແຕ່ລະກຸ່ມ ເຊິ່ງຕ້ອງໄດ້ຈັດເຂົ້າໃນໂຄງການລວມຂອງ ການພັດທະນາຄົນໃນແຕ່

ລະກຸ່ມ ພຽງເທົ່ານີ້ກໍຍັງບໍ່ທັນພໍ. ຕ້ອງໄດ້ອີງໃສ່ວ່າ ໃນ 5 ກຸ່ມຄົນນີ້ ດຳລົງຊີວິດຢູ່ເຂດໃດຂອງປະເທດ, ຕ້ອງຄົ້ນຄວ້າເຖິງສິ່ງແວດລ້ອມອີກ. ປະເທດເຮົາສາມາດແບ່ງເປັນ 3 ເຂດ ເສດຖະກິດແຕກຕ່າງກັນ ຖ້າລວມກັນໃຫ້ເປັນພາກ:

- 8 ແຂວງ ພາກເໜືອ ( ຖານະການເປັນຢູ່ຍັງທຸກກວ່າໝູ່) ຕາມການສຳຫຼວດຂອງ ອົງການ ສ ປ ຊ ໃນປີ 1994
- 5 ແຂວງ ພາກກາງ (ຖານະການເປັນຢູ່ດີກວ່າໝູ່)
- 4 ແຂວງ ພາກໄຕ້ (ຖານະການເປັນຢູ່ຍັງທຸກຢູ່)

ປັດຈຸບັນນີ້ 2007 ອາດປ່ຽນ ແດ່ແລ້ວ. ແຕ່ວ່າລະດັບຄວາມເຂົ້າໃຈຕໍ່ການພັດທະນາ ຍັງຂຶ້ນກັບຄວາມເຂົ້າໃຈຕໍ່ການສຶກສາຢູ່ຫຼາຍ. ຊຶ່ງໝາຍຄວາມວ່າແມ່ນການພັດທະນາການສຶກສາ ທີ່ມີຄຸນນະພາບເທົ່ານັ້ນຈຶ່ງຈະນຳພາການພັດທະນາຄືນໄດ້. ຕ້ອງໄດ້ເບິ່ງ 47 ເມືອງທີ່ລັດເຮົາໄດ້ຈັດຂຶ້ນທະບຽນເປັນເມືອງ ທຸກຍາກນັ້ນ. ຈຶ່ງຈະເຫັນແຈ້ງຂຶ້ນ.

## 1.2 ການກຳນົດເປົ້າໝາຍ ແລະ ຈຸດປະສົງຂອງການປະຕິຮູບ

ຕໍ່ຫລັກການນີ້ຕ້ອງໄດ້ຕັ້ງຄຳຖາມວ່າ: " ເປັນຫຍັງຈຶ່ງຕ້ອງປະຕິຮູບການສຶກສາຂອງຊາດ " ຄຳຕອບກໍ່ຕ້ອງຈະແຈ້ງເຊັ່ນ: ມີຄຳຕອບວ່າຍ້ອນ:

(1) ການສຶກສາຍັງ **ບໍ່ທັນຮັບໃຊ້ສັງຄົມຂອງຊາດໄດ້ດີເທົ່າທີ່ຄວນ.** (ຖ້າແມ່ນຕ້ອງໄດ້ຂະຫຍາຍຄວາມ) ຊຶ່ງແມ່ນສຳມະນາກອນຈະພາກັນຄົ້ນຄິດຊ່ວຍກັນ.

(2) ການສຶກສາຍັງຢູ່ໃນລະດັບຕ່ຳ, ບໍ່ທັນມີຄຸນນະພາບ (ຖ້າແມ່ນ, ຕ້ອງໄດ້ກຳນົດສອງຄຳ)

- ລະດັບຕ່ຳ (ນິຍາມລະອຽດ) ໝາຍເຖິງຫຍັງ
- ຄຸນນະພາບ (ນິຍາມລະອຽດ) ໝາຍເຖິງຫຍັງ

(3) ວິທີການສິດສອນຍັງຢູ່ໃນສະພາບຫລ້າຫລັງ (ຖ້າແມ່ນ, ຕ້ອງໄດ້ກຳນົດ "ລະດັບຫລ້າຫຼັງ" ໃຫ້ແຈ້ງ)

(4) ນະໂຍບາຍການສຶກສາຍັງບໍ່ທັນມີລັກສະນະ ເປັນປະຊາທິປະໄຕ ເທົ່າທີ່ຄວນ, ໝາຍຄວາມວ່າແນວໃດ? ( ຕ້ອງໄດ້ພາກັນຂະຫຍາຍຄວາມ). ເພື່ອໃຫ້ຖືກຈຸດ.

ທຸກໆຄຳຖາມ ແລະ ຄຳຕອບຂ້າງເທິງນີ້ຈຳເປັນຕ້ອງໄດ້ຜ່ານການສຳມະນາ ວິຊາການກັນຄັກແນ່ດ້ວຍເຫດດ້ວຍຜົນ.

## 2. ບາງບັນຫາມາດຕະຖານຕ່າງໆ ທີ່ຄວນຍອມຮັບເພື່ອແກ້ໄຂໃຫ້ໄດ້.

### 2.1 ການສຶກສາຕ້ອງຮັບໃຊ້ຈິດຕະສາດ ແລະ ພອນສະຫວັນຂອງເດັກ ໃນຊາດ.

ຕໍ່ຂໍ້ນີ້, ຕ້ອງຍອມຮັບມາດຕະຖານຂອງການສ້າງຄົນໃຫ້ແຈ້ງ ແຕ່ນ້ອຍຕັ້ງແຕ່ເດັກເປັນນັກຮຽນອະນຸບານຈົນຮອດ ມະຫາວິທະຍາໄລ.

**ຈິດຕະສາດຂອງມະນຸດເວົ້າລວມ ມີຢ່າງຕ່ຳ 4 ຂັ້ນແຕ່ຕ່າງກັນ:**

(1) ເດັກອະນຸບານ: (3 ຫາ 6) ຕ້ອງໃຫ້ເຂົາສະແດງອອກ ໃຫ້ເຫັນວ່າ ເຂົາຈະເປັນຄົນແນວໃດ? (ຄວນປະປ່ອຍຕາມໃຈໃນຫ້ອງຮຽນເພື່ອເບິ່ງ) ພຶດຕິກຳຂອງເຂົາ. ຖ້າເຂົາຂີ້ໄຫ້ໂດຍບໍ່ມີເຫດຜົນ, ບໍ່ເຈັບເປັນຫຍັງກໍ ຄວນເບິ່ງ ຕ່າງຄົນຂີ້ພະຍາດ, ຫຼື ຄົນຂາດຄວາມອົບອຸ່ນ...

(2) ເດັກປະຖົມ : (7 ຫາ 12 ) ເມື່ອຮູ້ວ່າຈະເປັນຄົນແນວໃດແລ້ວ ຕ້ອງແປງດ້ວຍຄວາມບອກສອນໃຫ້ຮູ້ ແລະ ສົ່ງເສີມສິ່ງທີ່ເຂົາຢາກຮູ້ເອງໃຫ້ຫລາຍ. ຕ້ອງຫຼີກເວັ້ນການນາບຂູ່ເດັກ, ປ້ອຍດ່າເດັກເດັດຂາດ.

ຫຼີກເວັ້ນ ທີ່ສຸດບໍ່ຄວນເຮັດໃຫ້ເດັກຢ້ານ ແລະ ບໍ່ມັກຕອບຄໍາຖາມ.ຄວນສ້າງສະພາບຄວາມອົບອຸ່ນເຊື່ອໝັ້ນໃຫ້ເຂົາເວົ້າອອກຫຼາຍໆ.

(3) ເດັກມັດທະຍົມຕົ້ນ: (13ຫາ16)ຕ້ອງໃຫ້ຟັງຄູ ແລະ ເຂົ້າໃຈສິ່ງທີ່ຜິດ, ທີ່ຖືກແທ້, ແລະ ປ່ອຍໃຫ້ເຂົາສໍ້ຖາມສິ່ງທີ່ເຂົາຢາກຮູ້ຫລາຍໆຈົນໃຫ້ເຂົາເຂົ້າໃຈຄວາມຈິງຂອງສັງຄົມມະນຸດໄດ້ສ່ວນໃດສ່ວນໜຶ່ງ.

(4) ເດັກມັດທະຍົມຕອນປາຍ: (17 ຫາ 19) ຕ້ອງໃຫ້ຄິດເອງຫລາຍໆ ແລະ ໃຫ້ໄດ້ມີໂອກາດອອກຄວາມເຫັນໃຫ້ຫລາຍເພື່ອໃຫ້ຮູ້ວ່າເຂົາເຈົ້າເຂົ້າໃຈໂລກດີ, ເປັນເຈົ້າຕົນເອງໄດ້, ເຊື່ອໝັ້ນຕົນເອງ. ເຂົາຢາກເຮັດຫຍັງໃນ ຊີວິດເມື່ອເຂົາເປັນຜູ້ໃຫຍ່, ເຂົາຈະເກັ່ງຫຍັງໄດ້. ເຂົາມັກຫຍັງຫຼາຍກວ່າໝູ່. ບໍ່ຄວນຄຸມລູກຫຼານໃຫ້ໄປຮຽນວິຊາທີ່ພໍ່ແມ່ເລືອກໃຫ້ເອງ.

(5) ນັກສຶກສາ: (19 ປີ ຂຶ້ນໄປ) ຕ້ອງຄົ້ນຄວ້າຫາເຫດຫາຜົນເອງເປັນໃນທຸກໆກໍລະນີທີ່ຕົນເອງຢາກຮຽນ. ກ່ອນອື່ນຕ້ອງຮູ້ວ່າ ຕົນເກັ່ງຫຍັງ? ມັກຫຍັງ? ເປັນຫຍັງຈຶ່ງມັກ?.

ຈິດຕະສາດເດັກທີ່ກ່າວຫຍໍ້ໆໃຫ້ເຫັນນີ້, ຢູ່ປະເທດເຮົາຍັງມີຄູ ແລະ ພໍ່ແມ່ຫຼາຍຄົນບໍ່ທັນເຂົ້າໃຈຢ່າງເລິກເຊິ່ງນໍາກັນເທື່ອ, ສ່ວນຫຼາຍແມ່ນປະຕິບັດກົງກັນຂ້າມກັບການຂະຫຍາຍຕົວທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກ.

ເຊັ່ນເວລາເຂົາຍັງນ້ອຍມີແຕ່ຖືກຮ້າຍ, ບໍ່ໃຫ້ປາກໃຫ້ຕີງໃນຫ້ອງຮຽນ. ໃຫ້ແຕ່ຟັງຄູ(ຄູເວົ້າບໍ່ເຂົ້າໃຈກໍຍັງຄຸມໃຫ້ເຂົາຟັງຢູ່ກໍມີ).

ເວລາເຂົາໃຫຍ່ໃຫ້ຄິດເອງເປັນພັດຄຸມເຂົາໃຫ້ເຂົາຟັງຄວາມພໍ່ແມ່ຫຼາຍຂຶ້ນ. ພໍ່ແມ່ຢາກໃຫ້ຮຽນວິຊາຫຍັງກໍບັງຄັບລູກຮຽນຢ່າງບໍ່ຮູ້ວ່າເຂົາເກັ່ງວິຊາໃດ ໃນເວລາເຂົາຮຽນ ແລະ ເຂົາຈະເໝາະກັບອາຊີບໃດ, ຄວນສົ່ງເສີມເຂົາເຮັດຫຍັງດີ. ໃນຊີວິດຜູ້ໃຫຍ່ຂອງເຂົາ.

### 2.2 ການສຶກສາຕ້ອງສ້າງຄົນໃຫ້ຮັບໃຊ້ເສດຖະກິດສັງຄົມຂອງຊາດ.

ຕອນນີ້ ລັດກໍຄວນຄົ້ນຄວ້າເບິ່ງລັກແນ່ວ່າ ຕ້ອງການຢາກໃຫ້ຄົນໃນສັງຄົມປະກອບອາຊີບແນວໃດຫຼາຍກວ່າແນວໃດ, ໂດຍເບິ່ງຕາມທ່າແຮງທຳມະຊາດ ແລະ ນະໂຍບາຍເຊັ່ນ:

- ປະເທດເຮົາເປັນປະເທດກະສິກຳ-ລ້ຽງສັດ, ມະຕິຂອງພັກເວລາໃດກໍ່ເວົ້າມາເລື້ອຍໆ ແຕ່ບໍ່ທັນເຫັນຜົນເທົ່າທີ່ຄວນ, ໃນດ້ານການຊຸກຍູ້ປະຕິບັດໃຫ້ໄດ້ຕາມ.
- ປະເທດເຮົາເປັນປະເທດອຸດສາຫະກຳບໍ່ແຮ່ ຫຼື ອຸດສາຫະກຳພະລັງງານ "ໝໍ້ໄຟອາຊຽນ" ແມ່ນແທ້ແລ້ວບໍ?
- ປະເທດເຮົາເປັນປະເທດທ່ອງທ່ຽວທຳມະຊາດ

ດັ່ງນັ້ນ ລັດຖະບານຕ້ອງໄດ້ແບ່ງສ່ວນທ່າແຮງຕ່າງໆນີ້ໃຫ້ເຫັນໄວ້ເປັນ ແຕ່ລະໄລຍະ 5 ປີ ຫຼື 10 ປີ, ແລະ ຈັດເຂົ້າໃນແຜນການ ໄລຍະຍາວໄວ້ຢ່າງລະອຽດ.

<u>ຕົວຢ່າງ:</u>

ປະເທດສິງກະໂປ ກັບລາວ ອາດກົງກັນຂ້າມກັນໃນດ້ານການສ້າງຊັບພະຍາກອນມະນຸດ, ເຊັ່ນຕາຕະລາງລຸ່ມນີ້:

| ປະເທດສິງກະໂປ | ການແບ່ງກຸ່ມອາຊີບປຽບໃສ່ລາວກັບສິງປະໂປ | ປະເທດລາວ |
|---|---|---|
| 10% | ກຸ່ມI.ປະຖົມມາຊີບ(ໂດຍອີງໃສ່ທຳມະຊາດຫລາຍກວ່າການຜະລິດດ້ວຍຄົນ) | 50% |
| 50% | ກຸ່ມII.ກຳມະກອນ(ໂດຍອີງໃສ່ມີເຕັກນິກ,ມີໂຮງຈັກໂຮງງານໃນການປຸງແຕ່ງເປັນ) | 30% |
| 40% | ກຸ່ມIIIບໍລິການ(ໂດຍອີງໃສ່ມີຫົວຄິດໄຫວພິບແລະເຕັກໂນໂລຢີການບໍລິການຮັບໃຊ້)ເຊັ່ນ:ການຕະຫຼາດ,ການຈັດການ,ການຂົນສົ່ງ,ການທະນາຄານ,ການບໍລິການຂອງພະນັກງານລັດ.ຫຼືຂອງເອກະຊົນຢ່າງສົມສ່ວນ | 20% |
| 100% | | 100% |

ກຸ່ມອາຊີບຂອງຄົນໃນສັງຄົມນີ້, ຖ້າສ້າງໃຫ້ຖືກແຕ່ຕົ້ນ ເຂົາຈຶ່ງຈະຢູ່ໃນຄວາມມັກ ຂອງເຂົາເອງໄດ້. ລັດກໍ່ຕ້ອງໂຄສະນາຢ່າງຈະແຈ້ງຢູ່ໃນຫລັກສູດການຮຽນ, ເພື່ອດຶງດູດໃຫ້ເດັກສ້າງທັດສະນະຄະຕິທີ່ຖືກຕ້ອງໄປນຳແຕ່ລະໄລຍະ. ທັງຕ້ອງໄດ້ສ້າງຫຼັກສູດໃຫ້ຮັບໃຊ້ໃນພາກປະຕິບັດອີກ. ຈະປ່ອຍໃຫ້ເຂົາມັກເອງແມ່ນເປັນໄປໄດ້ຍາກ, ຖ້າບໍ່ສ້າງເງື່ອນໄຂໃຫ້ເຫັນຕົວຈິງໄປນຳ.

ໃນເວລາສອນຢູ່ຊັ້ນມັດທະຍົມ, ໃນວິຊາປະຊາກອນນັ້ນ ຄວນເນັ້ນບັນຫາມະນຸດໃນສັງຄົມຂອງຕົນເອງໃຫ້ຫຼາຍ. ແຕ່ຜ່ານມາ ພັດເນັ້ນບໍ່ໄດ້ເພາະນະໂຍບາຍຂອງລັດເຮົາ ກໍຍັງບໍ່ທັນບົ່ງບອກຢ່າງຈະແຈ້ງໄດ້ໃນ ເລື່ອງການສົ່ງເສີມການແບ່ງງານ, ການແບ່ງອາຊີບ ແລະ ການເຄື່ອນໄຫວໃນສັງຄົມດ້ານການໃຫ້ຂໍ້ມູນຂ່າວສານລະອຽດ ແລະ ຖືກຕ້ອງຕາມຕົວຈິງໃນດ້ານນີ້ຍັງຈຳກັດຢູ່, ຄູອາຈານກໍ່ບໍ່ສົນໃຈຢາກຊອກຮູ້. ການຜະລິດຊັບພະຍາກອນມະນຸດ ອອກຮັບໃຊ້ສັງຄົມ ກໍບໍ່ທັນມີເປົ້າໝາຍຈະແຈ້ງ. ມັນສະແດງອອກໃນການຮັບເອົາທຶນໄປສຶກສາ, ຫຼື ການລົງທຶນສ້າງຄົນໂດຍບໍ່ເອົາໄປນຳໃຊ້ຕາມວິຊາການຂອງເຂົາທີ່ໄດ້ຮຽນມາ. ເຂດທ້ອງຖິ່ນໃດ ຂອງປະເທດເຮົາ ຕ້ອງການແຮງງານດ້ານໃດຫຼາຍກວ່າດ້ານໃດ ກໍຍັງກຳນົດບໍ່ທັນ ໄດ້ແຈ້ງຕາມແຕ່ໄລຍະແຜນການ 5 ປີ.

- ສັງຄົມໃນເມືອງ ຫລື ສັງຄົມເມືອງ ແລະ ສັງຄົມຊົນນະບົດ ຫຼືເຂດຫ່າງໄກສອກຫຼີກ, ພັກ ແລະ ລັດຖະບານກໍຄວນວິເຄາະວິໄຈ ແບບມີວິທະຍາສາດຄັກແນ່. ການໃຫ້ຂໍ້ມູນແຈ້ງເພື່ອນຳ ໄປສອນຢູ່ໂຮງຮຽນ ຫລືຢູ່ມະຫາວິທະຍາໄລນີ້ຍັງຖືກຈຳກັດຢູ່ຫຼາຍ ຍ້ອນລັດບໍ່ທັນລົງທຶນ ໃສ່ການຄົ້ນຄວ້າຂໍ້ມູນ ຢ່າງເປັນທາງການ ແລະ ເຜີຍແຜ່ອອກໄດ້ຢ່າງກວ້າງຂວາງໃຫ້ຖືກທິດ ທາງຄັກແນ່. ໃນໄລຍະປັດຈຸບັນ, ຫຼັງຈາກເຮົາໄດ້ເປັນສະມາຊິກອາຊຽນແລ້ວ, ເລື່ອງຂໍ້ມູນກໍໄດ້ຄ່ອຍໆເປັນໄປຕາມສາກົນໄດ້ເທື່ອລະກ້າວ.

ຕົວຢ່າງ: ມີຊາວຕາເວັນຕົກ, ໂດຍສະເພາະຝຣັ່ງເສດໄດ້ແຈ້ງໄວ້ເກືອບ 50 ຫາ 60 ປີ ກ່ອນພຸ້ນວ່າ: ຊົນເຜົ່າລາວສູງ ບໍ່ຢາກໃຫ້ລູກຜູ້ຍິງໄປຮຽນ ໜັງສືຍ້ອນຜິດປະເພນີ. ປັດຈຸບັນນີ້ເຂົາພັດຮຽນເກັ່ງກວ່າຜູ້ຊາຍລາວລຸ່ມຊໍ້າ, ເຮົາຍັງເກັບເອົາມາເວົ້າຄືເກົ່າຢູ່ເພື່ອບໍ່ຂະຫຍາຍໂຮງຮຽນ, ໄປຫາເຂດຊົນເຜົ່າຢູ່ຕໍ່ໄປ. ເຮົາຄວນສຶກສາເບິ່ງບັນຫານີ້ຄືນໃນສະພາບປັດຈຸບັນ.

**2.3 ການສຶກສາເຮົາຍັງຢູ່ໃນລະດັບຕໍ່າ ແລະ ບໍ່ທັນມີຄຸນນະພາບ?**

ຕໍ່ບັນຫານີ້ ຕ້ອງກຳນົດຄຳວ່າ "ຕໍ່າ" ໃຫ້ແຈ້ງ ແລະ ໃຫ້ຖືກຈຸດຄັກແນ່

(1) **ຕໍ່ຄຳວ່າ "ຕໍ່າ" ໃນທີ່ນີ້ບໍ່ສາມາດປຽບກັບປະເທດອື່ນໄດ້. ຕ້ອງເຂົ້າໃຈວ່າ "ຕໍ່າ" ກວ່າກຸ່ມອາຍຸເດັກດຽວກັນທີ່ຄວນຮູ້ໄດ້ໃນຊີວິດ ຂອງມະນຸດ ທີ່ກ້າວໜ້າທັນສະໄໝ. ເຊັ່ນ:** ຢູ່ຊັ້ນປະຖົມຕ້ອງໃຫ້ອ່ານອອກ ແລະ ເຂົ້າໃຈໄດ້ດີ ຂໍ້ຄວາມທີ່ໄດ້ອ່ານແລ້ວ ທັງຕ້ອງອະທິບາຍຫຍໍ້ໄດ້ສິ່ງທີ່ອ່ານ, ຂຽນໃຫ້ຖືກຄວາມລາວໃນປະໂຫຍກງ່າຍໆ ໃຫ້ເລົ່າບັ້ງສູດໃຫ້ໄດ້ດີ ແຕ່ 2 ຫາ 9 ແລະ ເຂົ້າໃຈວ່າ ເປັນຫຍັງຈຶ່ງອອກຕາມບັ້ງສູດ? ບໍ່ແມ່ນໃຊ້ຈັກຄິດໄລ່ ແລະ ບໍ່ຊອກເຂົ້າໃຈພົນອອກ. ຕ້ອງເຮັດເລກ 4 ປະການໃຫ້ໄດ້ (ບວກ, ລົບ, ຄູນ, ຫານ) ຮອດຫົວໜ່ວຍ, ຫົວສິບ, ຫົວຮ້ອຍ, ຫົວພັນ, ແລະຂຽນໃຫ້ຖືກ ຈະແຈ້ງໃນຄວາມເຂົ້າໃຈ. ບໍ່ຄວນເວົ້າໄປຕາມຄູບອກຢ່າງບໍ່ເຂົ້າໃຈເຫດຜົນ. ຕ້ອງ ສົນໃຈນຳທຳມະຊາດຫຼາຍຂຶ້ນ, ສັດ, ພືດ... ຕ້ອງຮູ້ຮັກ ແລະ ຫວງແຫນ ທຳ ມະຊາດບໍ່ທຳລາຍທຳມະຊາດ... ບໍ່ຄວນເຂົ້າໃຈຄຳວ່າ "ຕໍ່າ" ແບບຜິດໆ "ຕໍ່າ" ເມື່ອປຽບໃສ່ປະເທດອື່ນ. ຢູ່ສາກົນເຂົາມີຫຼັກການວັດແທກເດັກທີ່ຄວນຮູ້ເຮັດຫຍັງຢູ່ໃນເກນອາຍຸຄັກແນ່. ເປັນຕົ້ນແມ່ນວັດແທກ IQ (Intelligence Quotient) ແປເປັນຄວາມລາວກໍ່ເຂົ້າໃຈຍາກແດ່ ຖ້າບໍ່ໄດ້ຮຽນຮູ້ ວິຊາ Psychologie (ຈິດຕະວິທະຍາ) . ແລະ ຖ້າບໍ່ໄດ້ຮຽນການປະເມີນ ຄວາມຮູ້ເດັກມາກ່ອນ.

ໝາຍຄວາມວ່າ: ເພິ່ນຈັດວິທີວັດແທກຜົນຂອງຄວາມສະຫຼາດ ຕາມຊັດສ່ວນຂອງສະຕິປັນຍາ, ຄວາມສາມາດ, ຄວາມເຂົ້າໃຈ, ຄວາມ ໄຫວພິກຂອງເດັກຕໍ່ເກນອາຍຸ. ຈຶ່ງຈະຮູ້ວ່າເຂົາມີປັນຍາ, ເຂົາມີຄວາມຄິດ ໄວ.

ເລື່ອງນີ້, ເປັນເລື່ອງຝຶກໄດ້ໂດຍຕອບຄຳຖາມໃດໜຶ່ງໄດ້, ບໍ່ພຽງແຕ່ ໄດ້ຮຽນມາເທົ່ານັ້ນ ໄດ້ຮຽນມາແຕ່ຖ້າວ່າເດັກບໍ່ສະຫຼາດພໍຈະຕອບໄດ້ທັງ ໄວກວ່າກັນອີກກໍມີ, ຖ້າຝຶກໃຫ້ເຂົາຄິດເອງເປັນ ທັງໄດ້ຝຶກແອບໃຫ້ຄິດ ໄວອີກ. ຈຶ່ງຈະເປັນຜູ້ສະຫຼາດໄດ້, ເປັນເຈົ້າຂອງແກ້ບັນຫາເອງໄດ້.

ແມ່ນດ້ານນີ້ ທີ່ເຫັນວ່າ ນັກຮຽນລາວເຮົາຍັງມີລະດັບຕ່ຳຢູ່ຫຼາຍ, ຖ້າ ທຽບກັບປະເທດອື່ນແມ່ນຫຼຸດເຂົາຫຼາຍ ເພາະບໍ່ແອບວິທີຄິດໄວຈັກເທື່ອ. ຄູເອງກໍບໍ່ "ຝຶກ" ຄວາມສະຫຼາດຂອງເດັກໃຫ້ພັດທະນາໄດ້, (ຝຶກທັກສະ Skill training), ບໍ່ເຄີຍຝຶກໃຫ້ ອ່ານເປັນ, ຝຶກໃຫ້ຮັກການອ່ານແຕ່ຍັງນ້ອຍ (Reading skill). ໃຫ້ໄດ້ດີຈັກເທື່ອ. ໂມງຫັດອ່ານກໍອ່ານແບບປະປ່ອຍ ໃຫ້ເຂົາ ອ່ານໄປຕາມເລື່ອງຂອງເຂົາ, ບາງເທື່ອອ່ານຜິດຄູກໍບໍ່ໄດ້ຕັ້ງໃຈຟັງ ກໍມີ, ບໍ່ມັກຕິດຕາມນັກຮຽນອ່ານ.ບາງໂຮງຮຽນຂອງລັດ, ຄູອອກໄປລົມກັນ ແລ້ວປະໃຫ້ເດັກອ່ານເອງໃນໂມງຫັດອ່ານກໍມີ, ບາງແຫ່ງ.

ຄວາມຜິດດ້ານນີ້ແມ່ນຈະໂທດໃຜ ? ຕ້ອງໂທດລະບົບການສຶກສາ ແລະ ກໍແມ່ນຜູ້ຮັບຜິດຊອບການສຶກສາບໍ່ຈັດຕັ້ງຄົ້ນຄວ້າຈັກເທື່ອ ແລະ ກໍ່ບໍ່ມີວິທີການສົ່ງເສີມໃຫ້ຄູໄດ້ຝຶກແອບເປັນຢ່າງດີ ຢູ່ໃນໂຮງຮຽນສ້າງຄູ.

**(2) ຕໍ່ຄຳວ່າບໍ່ທັນມີ "ຄຸນນະພາບ " ໝາຍຄວາມວ່າແນວໃດ? ເຮົາຈຳ ເປັນຕ້ອງໄດ້ຄິດຄັກໆຕໍ່ຄຳສັບຄຳນີ້ອີກ.**

ການກຳນົດ "ຄຸນນະພາບ" ແມ່ນຂຶ້ນກັບສິ່ງທີ່ເຮົາ "ຢາກໄດ້" ບໍ່ຕ່າງ

ຫຍັງກັບເຮົາຢາກກິນໝາກໄມ້ "ສົ້ມ" ຫຼື ໝາກໄມ້ "ຫວານ" ແລ້ວແຕ່ຜູ້ມັກ. ຖ້າແມ່ນຜູ້ມັກສົ້ມກໍແມ່ນຄຸນນະພາບ "ສົ້ມ" ດີກວ່າຄຸນນະພາບ "ຫວານ" .

ສະນັ້ນ **"ຄຸນນະພາບ"** ຂອງການສ້າງບຸກຄະລາກອນ ຫຼື ການສ້າງນັກຮຽນໃຫ້ເປັນຊັບພະຍາກອນມະນຸດໃຫ້ດີຂອງຊາດໄດ້ ກໍຄືກັນ, ມັນກໍຂຶ້ນກັບເຮົາຢາກໄດ້,ຂຶ້ນກັບຈຸດປະສົງ ແລະ ເປົ້າໝາຍຂອງການສ້າງ.

ຖ້າເຮົາຢາກໄດ້ຊັບພະຍາກອນຂອງຊາດ " ດີ " ກໍຕ້ອງໄດ້ກຳນົດນຳກັນອີກວ່າ " ດີ " ນັ້ນແມ່ນແນວໃດ ? ເພາະບາງຄົນກໍອາດເຂົ້າໃຈວ່າ " ດີ " ແມ່ນ " ຟັງຄວາມ " ບໍ່ຖຽງຄືນ, ບໍ່ໃຫ້ຄວາມເຫັນຫຍັງບໍ່ຕ້ອງຄິດຫຍັງອີກເພາະມີຜູ້ຄິດໃຫ້ແລ້ວ, ມີແຕ່ປະຕິບັດຕາມຄຳສັ່ງຂັ້ນເທິງຈຶ່ງວ່າ " ດີ " .

ຄວາມເຂົ້າໃຈແບບນີ້ກໍບໍ່ຜິດ ຖ້າເຮົາ**ຢາກໄດ້ແບບນີ້.** ແຕ່ເມື່ອໄດ້ແບບນີ້ກໍຕ້ອງນຳໃຊ້ສຳລັບໃນຂອບເຂດໃດໜຶ່ງໄດ້ດີແທ້, ບໍ່ຄວນໃຫ້ເປັນທົ່ວໜ້າໝູ່. ແຕ່ບໍ່ຄວນເນັ້ນໃນຄົນ " ດີ " ແບບນີ້ໃຫ້ມີຫລາຍໃນສັງຄົມ ເພາະສັງຄົມຈະກາຍເປັນສັງຄົມ "ລໍຖ້າແຕ່ຄຳສັ່ງ " ບໍ່ຄິດເອງຈັກເທື່ອ ຖ້າຊັບພະຍາກອນໃນສັງຄົມບໍ່ຄິດເອງ ສັງຄົມກໍບໍ່ມີຄວາມຈະເລີນໄດ້, ມີແຕ່ລໍຖ້າໃຫ້ຜູ້ອື່ນຄິດໃຫ້.

ຖ້າເຮົາຢາກໄດ້ຊັບພະຍາກອນຮູ້ຄິດ, ຮູ້ໃຫ້ຄວາມເຫັນ, ຮູ້ວ່າອັນໃດຖືກ ວ່າອັນໃດຜິດໃນຊີວິດສັງຄົມມະນຸດ, ກໍຕ້ອງໄດ້ແອບ, ໄດ້ຝຶກໃຫ້ຄົນໄດ້ຄິດຫຼາຍ, ຊອກຫາເຫດຜົນຫຼາຍ, ຮູ້ຈຳແນກລະອຽດຄວາມຄິດຂອງຄົນໃນສັງຄົມ, ຮູ້ຈັກລະດັບວິທະຍາສາດຂອງຈິດສຳນຶກຂອງຄົນໃນສັງຄົມ, ຮູ້ບັນຫາກວ້າງ, ຮູ້ບັນຫາເລິກ, ຮູ້ບັນຫາສະເພາະໜ້າ, ຮູ້ບັນຫາຍາວນານ, ຮູ້ ສັງລວມບັນຫາ, ຮູ້ຕອບໂຕ້ສິ່ງທີ່ຕົນເຫັນວ່າຜິດ, ສະຫຼຸບແລ້ວ, ຕ້ອງແອບ ໃຫ້ຄົນມີວິໄສທັດ (Vision), ຄຳນີ້ປະກອບດ້ວຍ 2 ຄຳຄື ຄຳວ່າ: "ວິໄສ " ແລະ " ທັດ " (ທັດສະນະ)

- “ວິໄສ” ແມ່ນກຳລັງ, ເຫຼືອວິໄສ: ໝົດກຳລັງບໍ່ມີກຳລັງພຽງພໍເພື່ອສູ້
- “ ທັດ ” ແມ່ນການເບິ່ງ, ການເຫັນໄດ້ໄກ. ຫຼື ມີກຳລັງ ຄວາມຄິດທີ່ຮູ້ກວ້າງເຫັນໄກໄດ້.

ສະນັ້ນ, ໃນ: ຄຳວ່າ ບໍ່ທັນມີ “ຄຸນນະພາບ” ນີ້ແມ່ນບໍ່ທັນມີອັນໃດແທ້? ບາງຄົນກໍ່ຕອບງ່າຍໆວ່າ ບໍ່ທັນມີ “ຄວາມຮູ້ພຽງພໍ” ໝາຍຄວາມວ່າຮູ້ຫຍັງ? ຮູ້ແລ້ວບໍ່ເຮັດກໍ່ມີຖິ້ມໄປ. ອາດຕອບວ່າ: ຮູ້ພັດທະນາຕົນເອງໃຫ້ມີພຶດຕິກຳທີ່ດີຕໍ່ຊາດ, ຕໍ່ສັງຄົມ, ແລະ ເພື່ອພັດທະນາປະເທດຊາດ ໃຫ້ຈະເລີນ, ກ້າວໜ້ານຳປະເທດອື່ນເຂົາ, ຈິ່ງຈະເປັນການເຂົ້າໃຈການສຶກສາທີ່ມີ “ຄຸນນະພາບ ” . ຢ່າງຖືກຕ້ອງ. ຮຽນແລ້ວຕ້ອງຄິດເປັນ-ປະຕິບັດເປັນ ແລະ ແກ້ໄຂບັນຫາສະເພາະໜ້າໄດ້, ຈິ່ງຖືວ່າມີຄຸນນະພາບໄດ້,

## 3. ວິທີການສິດສອນຍັງຢູ່ໃນສະພາບ “ລ້າຫຼັງ” ປຽບໃສ່ຫຍັງ? ຫຼື ປຽບໃສ່ໃຜ?

3.1 ຖ້າຢາກຕອບຄຳຖາມທີ່ວ່າ “ປຽບໃສ່ຫຍັງ” ກໍຄືງຈະເຂົ້າໃຈວ່າເຮົາ ຍັງບໍ່ທັນມີອຸປະກອນທັນສະໄໝມານຳໃຊ້ໃນການສິດສອນ. ຖ້າຈຳແນກ ໄປອີກກໍ່ຢາກໝາຍເຖິງວ່າ ບໍ່ມີເຄື່ອງຄອມພິວເຕີ, ເຄື່ອງທົດລອງວິທະຍາສາດ, ເຄື່ອງເອເຫຼັກໂຕຼນິກຕ່າງໆ ທີ່ໂລກອື່ນເພິ່ນມີໝົດ, ເຊັ່ນ: CD, VDO, DVD...

3.2 ຖ້າຢາກຕອບຄຳຖາມວ່າ “ປຽບໃສ່ໃຜ” ກໍຄືງເຂົ້າໃຈວ່າປຽບໃສ່ປະເທດໃກ້ຄຽງເຮົາ. ໃນຂໍ້ນີ້, ເຮົາກໍໄດ້ສົ່ງນັກສຶກສາເຮົາໄປຮຽນຢູ່ປະເທດ ໃກ້ຄຽງເຮົາຫຼາຍສົມຄວນ, ເປັນຫຍັງຈິ່ງຍັງເຫັນວ່າ “ລ້າຫຼັງ” ຢູ່ ?

ຕໍ່ບັນຫານີ້ກໍຄວນຈຳແນກໃຫ້ເຫັນນຳກັນອີກວ່າ : “ເປັນນຳເວລາໄປຮຽນນຳໝູ່ນັ້ນເຂົາມີເຄື່ອງຮັບໃຊ້ໃນການສິດສອນຄົບຊຸດ, ບາດມາຮຽນນຳເຮົາພັດບໍ່ມີຫຍັງ? ແມ່ນບໍ? ຫຼື ເຮົາຫາກບໍ່ຢາກດຳເນີນການປະຕິບັດ

ແບບເຂົາພາເຮົາເຮັດເວລາຮຽນ? ເຖິງວ່າໄດ້ຊື້ເຄື່ອງທັນສະໄໝໃຫ້ແລ້ວກໍຍັງບໍ່ເຮັດ, ບໍ່ນໍາໃຊ້ກໍມີຖິ້ມໄປ . ຕໍ່ບັນຫາ "ລ້າຫຼັງ" ນີ້ ເວົ້າແທ້ກໍ່ມີຫຼາຍປະເດັນທີ່ຄວນຍົກຂຶ້ນມາຖົກຖຽງກັນ, ເພື່ອຊອກຫາສາເຫດທີ່ຄວນຂະຫຍາຍຄວາມ ໃຫ້ ສາມາດເຂົ້າໃຈນໍາກັນໃຫ້ແຈ້ງຂຶ້ນ.

## 4. ນະໂຍບາຍການສຶກສາຍັງບໍ່ທັນມີຄວາມເປັນປະຊາທິປະໄຕເທົ່າທີ່ຄວນ.

ອັນນີ້ແມ່ນເວົ້າສັບ "ການເມືອງ" ຖ້າເວົ້າແຈ້ງໆ, ແມ່ນໝາຍຄວາມວ່າແນວໃດ?

**ໝາຍຄວາມວ່າ:**

4.1 ເຮົາບໍ່ໄດ້ນໍາໃຊ້ລະບົບການເລືອກເຟັ້ນ, ຫາຄົນເກັ່ງ ແລະສະຫຼາດແທ້ໃນ ການສຶກສາຮໍ່າຮຽນຂອງເດັກນັກຮຽນແມ່ນບໍ? ບາງເທື່ອ, ແມ່ນຄູເອງທີ່ ສອນບໍ່ເປັນແລ້ວຕິແຕ່ເດັກນ້ອຍ "ຂີ້ຄານ" ເປັນໄປໄດ້ບໍ? .

4.2 ເຮົາບໍ່ໄດ້ສ້າງໃຫ້ຄູ ຜູ້ສິດສອນມີຈັນຍາບັນຄູທີ່ດີ. ຄູທີ່ດີ, ທີ່ເກັ່ງຈະຮູ້ ເບິ່ງນັກຮຽນທີ່ເກັ່ງແທ້ເປັນ. ບາງທີ່ຄູກໍຖືກ "ຄອບງໍາ" ໂດຍອໍານາດມືດຢູ່ກໍມີ, ຈິ່ງໄປເລືອກໃຫ້ຄະແນນນັກຮຽນຕາມລູກຜູ້ນັ້ນ, ລູກຜູ້ນີ້ຢູ່ກໍອາດເປັນໄປໄດ້ ເພາະເຮົາຖືວ່າຄູສາມາດເຮັດໄດ້ຕາມໃຈທຸກຢ່າງ ຖ້າຂາດຈັນຍາບັນ. ເຊັ່ນ: ນັກຮຽນເສັງຕົກ, ພໍ່ແມ່ຜູ້ປົກຄອງມາຮ້ອງຂໍໃຫ້ປ່ຽນເປັນເສັງໄດ້ ກໍພາກັນປ່ຽນກໍໄດ້ (ແປກປະຫຼາດທີ່ສຸດ,ແຕ່ມັນກໍເປັນໄປໄດ້), ມັນມີນັກຮຽນເສັງ ຕົກ ຢູ່ໂຮງຮຽນໜຶ່ງຢູ່ແຂວງອື່ນ, ຂໍຍ້າຍໄປໂຮງຮຽນໃໝ່, ຢູ່ແຂວງໃໝ່ກໍມີ ປຶ້ມຕິດຕາມການຮຽນທົ່ວໃໝ່ໆ (ປີກ່ອນໆບໍ່ມີຄະແນນຫຍັງ, ໝາຍຄວາມວ່າເຮັດສະເພາະແຕ່ປີຈະຍ້າຍເພື່ອຕົວະ) ມີແຕ່ປີສຸດ

ທ້າຍວ່າເສັງໄດ້ຂຶ້ນຫ້ອງ. ກໍຈໍາເປັນໄດ້ເອົາຂຶ້ນກໍເປັນໄດ້... ເລື່ອງບໍ່ມີຄວາມເປັນປະຊາ ທິປະໄຕນີ້ມີຫຼາຍຢ່າງຫຼາຍແນວ, ຈະບໍ່ຈໍາເປັນຂຽນອອກໃຫ້ໝົດຈະຍືດຍາວລ້າໆ (ປ່ອຍໃຫ້ຜູ້ສົນທະນາໃນການຈັດສໍາມະນາເວົ້າຕໍ່).

4.3 ເດັກໃນຕົວເມືອງຈະມີເງື່ອນໄຂໄດ້ຮຽນດີກວ່າ ເດັກຢູ່ ຊົນນະບົດ ຫຼື ຢູ່ເຂດພູດອຍຫ່າງໄກສອກຫຼີກ. ຍ້ອນມີຫຼາຍເງື່ອນໄຂບໍ່ຄືກັນ. ອັນນີ້ເຂົາກໍ່ ເອີ້ນວ່າ ບໍ່ມີປະຊາທິປະໄຕຄືກັນ ຫຼື ເດັກທີ່ພໍ່ແມ່ມີເງິນຈ້າງຮຽນໃຫ້ລູກຮຽນໄດ້, ລູກກໍ່ເສັງໄດ້ດີອີ່ຫຼີ, ອັນນີ້ກໍ່ຕົກຢູ່ໃນຄວາມບໍ່ມີປະຊາທິປະໄຕ ອີກແບບໜຶ່ງ, ຖ້າຈໍາແນກໃຫ້ເລິກ. (La démocratie de l'éducation) . ບ່ອນມີໄຟຟ້າໄຕ້ໃຫ້ຮຽນ ແລະ ບ່ອນທີ່ຍັງຮຽນໂດຍດັງໄມ້ຫຼືວຢູ່ກາງບ້ານ...ກໍແມ່ນຂາດໂອກາດເທົ່າທຽມ...ຫຼືຈະວ່າຂາດການບໍ່ຂະຫຍາຍໂອກາດໃຫ້ພວກຢູ່ເຂດຫ່າງໄກສອກຫຼີກກໍໄດ້ ຄືນັກຮຽນໃນເມືອງໃຫຍ່...ແລ້ວແຕ່ຈະເຂົ້າໃຈ, ແລະ ຕີຄວາມ.

ທັງໝົດນີ້ແມ່ນໂທດຂອງລະບົບ, ລະບົບຫຍັງ? ລະບົບ " ບໍ່ຢາກເຮັດດີ " (ບໍ່ແມ່ນລະບອບເນີ!) ລະບົບໃນທີ່ນີ້ແມ່ນວິທີການຄຸ້ມຄອງ, ການຈັດການ, ການກວດກາ, ການບໍ່ຢາກໃຫ້ມີ "ຕົກ" ຖ້າຕົກຫຼາຍຈະບໍ່ມີຫ້ອງຮຽນໃຫ້ຜູ້ຮຽນຢູ່ຊັ້ນຕໍ່າກວ່າ ຂຶ້ນມາຮຽນຕໍ່ໄປ.. ຈະບໍ່ມີບ່ອນນັ່ງ, ບໍ່ມີຄູສອນ... ຈໍາເປັນຕ້ອງໄດ້ໃຫ້ "ຕົກ" ພຽງແຕ່ 2% ຫລື 3% ຢ່າງຫຼາຍ ກໍ່ໝາຍຄວາມວ່າກາຍນັ້ນເກັ່ງໝົດຈຶ່ງໄດ້ຂຶ້ນຊັ້ນ ຫຼື ຖ້າຕົກຫຼາຍຫົວໜ້າໂຮງຮຽນຈະຖືກຕ້ອງຕິຈາກຂັ້ນເທິງ. ກໍ່ເລີຍຕົວະກັນ. ໂທດຂອງລະບົບອີກອັນໜຶ່ງແມ່ນການຍອມຮັບຄວາມເຫັນໃຈ, ຍອມຮັບເຮັດໃຫ້ຜິດກະຕິກາຫຼາຍໂພດ, ໂດຍການນໍາໃຊ້ອິດທິພົນສ່ວນຕົວຂອງບຸກຄົນ ຫຼືຂອງຄູ-ອາຈານ ເອງ ທີ່ຂາດ ຈາຣິຍະທໍາກໍເປັນໄປໄດ້.

# ພາກທີ IV ສະເໜີການອອກແບບ ການປະຕິຮູບການສຶກສາແຫ່ງຊາດ.

(ປີ 2009 ລັດຖະບານໄດ້ຮັບຮອງເອົາ " ຂອບພັດທະນາຂະແໜງການສຶກສາ" (2009-2015) ໂດຍດຳລັດແລ້ວ, ຕາມການຄົ້ນຄວ້າສະເໜີຂອງຄະນະປະຕິຮູບການສຶກສາແຫ່ງຊາດແລ້ວ)

ຄຳເວົ້າວ່າການ "ອອກແບບ" ກໍຍັງບໍ່ທັນເໝາະປານໃດ. ເພາະຢ້ານເຂົ້າໃຈວ່າແມ່ນມີແບບດີ, ແບບບໍ່ດີ..ຫລື ເປັນ "ແບບ" ທີ່ຖືກ ຕ້ອງໂລດ. ຈຶ່ງຢາກອີງໃສ່ຄຳໜຶ່ງວ່າ: "ການວາງແຜນການ" ຄືເປັນໜ້າຟັງກວ່າ.

ຄວາມເຂົ້າໃຈສັບຢາກຍາກແດ່ກໍບໍ່ໝາຍຄວາມວ່າຈະເຮັດການ "ປະຕິຮູບການສຶກສາ" ເປັນໄປບໍ່ໄດ້, ຫຼື ບໍ່ຖືກ, ຢ່າງສົມບູນໄດ້ຈັກເທື່ອແລ້ວບໍ່ຢາກເຮັດ. ປະເທດໃດກໍຈຳເປັນຕ້ອງໄດ້ເຮັດການປະຕິຮູບການສຶກສາເປັນໄລຍະໆໄປເລື້ອຍໆ. ເຖິງວ່າ ເຂົາທັນສະໄໝໝົດແລ້ວກໍຍັງຕ້ອງເຮັດອີກ, ເພາະສັງຄົມມະນຸດກ້າວໜ້າໄປເລື້ອຍໆ. ຖ້າເຮົາບໍ່ເຮັດຫຍັງກໍຍັງບໍ່ໝາຍ ຄວາມວ່າເຮົາຢູ່ບ່ອນເກົ່າ, ເພາະທຸກໆປະເທດກໍເດີນໜ້າເລື້ອຍໆ.

ຄວາມຈິງ, ເຮັດການປະຕິຮູບການສຶກສາແມ່ນ ການປ່ຽນແປງໝົດລະບົບການສຶກສາ ຍ້ອນຄວາມຈະເລີນຂອງຊາດຂະຫຍາຍຕົວ. ການສຶກສາຂອງຊາດກໍຕ້ອງມີການປ່ຽນແປງນຳເລື້ອຍໆ. ມັນແຕກຕ່າງກັນກັບ "ລະບົບແນວຄິດ " ກ່ຽວກັບການສຶກສາ. (ເຊີນອ່ານຄືນ) "ບາງຄວາມຄິດກ່ຽວກັບຄວາມຈຳເປັນຕ້ອງມີໂຄງການປະຕິຮູບການສຶກສາທີ່ສອດຄອ່ງ, ເຊື່ອມໂຍງ ກັບລະບົບການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຊາດ, ຢູ່ໜ້າ(ກ່ອນນີ້). ໃນໄລຍະຜ່ານມາ, ພວກເຮົາບໍ່ເຄີຍໄດ້ຄິດຢາກປັບປຸງລະບົບແນວຄິດກ່ຽວກັບການສຶກສາຂອງປະເທດເຮົາດ້ວຍເຮົາເອງຈັກເທື່ອ.

- ດ້ານໜຶ່ງກໍ່ຍ້ອນວ່າເຮົາບໍ່ເຄີຍຄິດວ່າການສຶກສາຂອງເຮົາບໍ່ທັນດີ, ດ້ານໜຶ່ງອີກກໍ່ແມ່ນເຮົາບໍ່ເຄີຍເປັນເຈົ້າຕົນເອງຈັກເທື່ອ, ບໍ່ເຄີຍຄິດຫາລະບຽບວິໄນໃນການເຮັດວຽກຂອງຊາດໃຫ້ດີກວ່າເກົ່າຫຼາຍປານໃດ. ມັກມີແຕ່ທ່າອ່ຽງ ສ້າງຄວາມພໍໃຈໃຫ້ພາຍໃນອົງກອນຕົນເອງຖ້າແມ່ນພາກ ລັດ.

## 1. ສະເໜີຮູບແບບການສ້າງລະບົບການສຶກສາໃໝ່

1.1 ໂຄງສ້າງການສຶກສາທີ່ມີລັກສະນະຊາດ ຕ້ອງຕິດພັນກັບໂຄງສ້າງ ການພັດທະນາເສດຖະກິດສັງຄົມຂອງຊາດ.

1.2. ໂຄງສ້າງການສຶກສາທີ່ມີລັກສະນະຊາດ ຕ້ອງເປັນຂອງຄົນລາວ ຄິດເອງໂດຍສະເພາະແມ່ນ "ແກນນຳ" ຂອງຄວາມຢາກໄດ້. ຖ້າແມ່ນຜູ້ອື່ນ "ຄິດມາ" ໃຫ້ເຮົາແລ້ວ, ມັນບໍ່ພຽງແຕ່ວ່າບໍ່ແທດເໝາະກັບສະພາບສັງຄົມ- ວັດທະນະທຳ ແລະ ເສດຖະກິດຂອງສັງຄົມເຮົາເທົ່ານັ້ນ, ແຕ່ຍັງເປັນ "ແກນນຳ" ທີ່ເຮົາຈະຕ້ອງອີງໃສ່ແຕ່ຜູ້ອື່ນຕໍ່ໄປເລື້ອຍໆຈົນເຮົາເອງກໍຈະບໍ່ສາມາດເປັນເຈົ້າຕົນເອງໄດ້ຈັກເທື່ອ, ເພາະເຮົາບໍ່ຢາກຄິດເອງ ບໍ່ຊອກເຂົ້າໃຈບັນຫາຂອງເຮົາເອງ. ໜັກໄປກວ່ານັ້ນ ສິ່ງທີ່ເຮົາຫຼີກບໍ່ໄດ້ ຫຼື ຫຼີກໄດ້ຍາກໃນຍຸກສະໄໝນີ້ແມ່ນ "ກຳລັງເງິນ" ຫຼື "ອຳນາດເງິນ" ທີ່ມີນ້ຳໜັກແຮງ ກວ່າທຸກສິ່ງທຸກຢ່າງໃນສັງຄົມ "ບໍລິໂພກນິຍົມ" (ຫຼື ສັງຄົມທີ່ພາກັນຄິດຫາແຕ່ຊື້).ວັດຖຸທີ່ຕົນມີກໍບໍ່ຍອມໃຊ້, ບໍ່ຍອມປະດິດເອົາເອງ ເພື່ອປະຢັດ, ໂດຍສະເພາະແມ່ນຢູ່ໃນສັງຄົມເມືອງ.

ດັ່ງນັ້ນ, ຮູບແບບຂອງໂຄງສ້າງນີ້, ຈຳເປັນຕ້ອງໄດ້ຄ່ອຍໆເຮັດຄ່ອຍໆໄປ ຕາມກຳລັງເຮົາເອງເປັນເຈົ້າພາທາງ, ທັງເປັນ "ແກນນຳ" ຊຶ່ງເຮົາສ້າງຂຶ້ນເອງ, ຕາມຄວາມຢາກໄດ້ຂອງເຮົາ. ແນ່ນອນ, ເມື່ອເຮົາຮູ້ວ່າເຮົາຢາກໄດ້ ແນວໃດ ຄິດຄັກແນ່ແລ້ວ, ຜູ້ຈະມາຊ່ວຍເຮົາຈະຕ້ອງຄິດຕາມເຮົາຢາກໄດ້, ເຮົາກໍຕ້ອງຮັບເອົາແນວຄວາມຄິດທີ່ເຮົາຕ້ອງການທີ່ເປັນເອກະ

ພາບກັນແລ້ວນັ້ນ ອອກມາສະເໜີໃຫ້ເພິ່ນເຫັນໃຈຊ່ວຍ.

1.3. ເຮົາຕ້ອງໄດ້ອີງໃສ່ເອກະສານ ທີ່ເຮົາໄດ້ເຊັນກັບສາກົນ ມາແລ້ວນັ້ນ ເປັນຫຼັກທັງເປັນເປົ້າໝາຍຂອງການຄົ້ນຄິດໃຫ້ມີລັກສະນະຊາດກວ່າເກົ່າ, ຄືໃຫ້ຮູ້ວ່າເຮົາຢາກໄດ້ຫຍັງແທ້ຈາກເຂົາຊ່ວຍເຫຼືອ. ສິ່ງທີ່ເຂົາສະເໜີມາໃຫ້ເຮົາຮັບນັ້ນ, ເຮົາຄວນຄົ້ນຄິດພາຍໃນເຮົາເອງຄັກແນ່ເສຍກ່ອນທຸກເທື່ອ, ເພື່ອຄວາມເຂົ້າໃຈເປັນເອກະພາບກັນ.

ເຮົາເຂົ້າໃຈນຳກັນແລ້ວວ່າພວກທີ່ເຮົາເອີ້ນວ່າ "ຊ່ຽວຊານສາກົນ " ນັ້ນເຂົາກໍ່ບໍ່ສາມາດສ້າງຄົນລາວໃຫ້ເປັນລາວຮັກຊາດຕົນເອງໄດ້ຈັກເທື່ອ. ເຂົາພຽງແຕ່ຢາກໃຫ້ເຮົາເຮັດທຸກສິ່ງທຸກຢ່າງຄືເຂົາຄິດ. ແນ່ນອນສິ່ງທີ່ເຂົາຄິດກໍ່ບົນພື້ນຖານຂອງຄ່ານິຍົມຂອງເຂົາ. "ຄ່ານິຍົມ" ທີ່ວ່ານີ້ ອາດຕີລາຄາໄດ້ວ່າແມ່ນຄ່ານິຍົມທີ່ມີທ່າອ່ຽງໃຫ້ໂລກທັງໂລກເປັນ "ໜຶ່ງດຽວ" ຜູ້ໃດຮັ່ງມີກວ່າໝູ່ຕ້ອງເປັນ "ນາຍໝູ່" ແລະ ຜູ້ໃດທຸກກວ່າໝູ່ຕ້ອງ "ຟັງຄວາມ" ຜູ້ຮັ່ງເລື້ອຍໆ ໄປ."ປາໃຫຍ່ຕ້ອງກິນປານ້ອຍ" !

ພວກເຮົາກໍ່ຮູ້ດີວ່າ ຄວາມຄິດແບບນີ້ເປັນໄປບໍ່ໄດ້ ທັງໃນລະດັບສາກົນ, ທັງໃນລະດັບປະເທດຊາດ, ເຮົາຮັບນຳບໍ່ໄດ້,ແຕ່ກໍ່ຕ້ອງຄິດຫຼາຍເພື່ອເຂົ້າໃຈວ່າ ມັນຈະເປັນໄປຍາກ. ກະແສຂອງ ການຂະຫຍາຍຕົວຂອງທຶນນິຍົມນີ້ມັນແຮງກວ່າຫຼາຍແລ້ວ. ສ່ວນກະແສ ຂອງຊາດນິຍົມນັ້ນ ຍາກຫຼຸດຜ່ອນລົງຫຼາຍ, ເພາະວ່າແນວຄິດຊາດນິຍົມກໍ່ມີ ອັນພາໃຫ້ເຂົ້າໃຈຜິດພາດມາແລ້ວຄືກັນຖ້າບໍ່ລະວັງໃຫ້ດີ.

ສະນັ້ນ, ການອີງໃສ່ໂຄງການທີ່ຜູ້ອື່ນເຮັດມາໃຫ້ແລ້ວນັ້ນ, ເຮົາກໍ່ຕ້ອງໄດ້ອອກແຮງສາມັກຄີກັນເປັນອັນໜຶ່ງອັນດຽວກັນ ພາຍໃຕ້ການນຳພາຂອງພັກຊີ້ນຳ ເພື່ອຜັນຂະຫຍາຍສິ່ງທີ່ເຂົາເຮັດມານັ້ນໃຫ້ສອດຄ່ອງໄປເທື່ອລະກ້າວກັບທິດທາງຂອງພັກເຮົາຢາກໄດ້ແທ້ໆນັ້ນ. ເຮົາກໍຈຳເປັນບໍ່ເຫັນແກ່ຜົນປະໂຫຍດບຸກຄົນຫຼາຍກວ່າຜົນປະໂຫຍດຂອງຊາດ.ແລະ

ກໍບໍ່ຄວນຟ້າວຈູດໄລຍະໂພດໄປ.ຍ້ອນຢາກອວດອ້າງຜົນງານໄວໂພດ. ຫຼືຍ້ອນຂາດຄວາມເຂົ້າໃຈຂະບວນການພັດທະນາ.

ຢູ່ໃນມະຕິ VIII ພາກທີ II ທິດທາງ ແລະ ໜ້າທີ່ (ໜ້າທີ 38) ຢ່າລືມວ່າມີແນວຄິດຊີ້ນຳໜຶ່ງທີ່ຂ້າພະເຈົ້າ **ພໍໃຈນຳທີ່ສຸດ, ນັ້ນກໍຄື: "ແນວຄິດຊີ້ນຳໜຶ່ງອີກທີ່ຕ້ອງກຳແໜ້ນ, ແມ່ນຕ້ອງເຊີດຊູຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂຸດຄົ້ນກຳລັງແຮງພາຍໃນຢ່າງສຸດຂີດ ສົມທົບກັບການຍາດແຍ່ງການຮ່ວມມືຈາກພາຍນອກຢ່າງຕັ້ງໜ້າ, ຕ້ອງບຸກບືນເຮັດທຸກວຽກງານດ້ວຍຄວາມພະຍາຍາມສູງສຸດເທົ່າທີ່ຈະເຮັດໄດ້, ເພື່ອພັດທະນາປະເທດຊາດ, ບໍ່ດັ່ງນັ້ນປະເທດເຮົາ, ຈະຕົກໃນສະພາບຫ່າງໄກອອກຈາກກະແສພັດທະນາຂອງໂລກ, ຖືກປະປ່ອຍແລະ ຖືກເຊື່ອມຍຶດກືນກິນ...** (ແຈ້ງດີທີ່ສຸດ!), ເຮົາ(ຄວນຂະຫຍາຍຄວາມຕື່ມ) ບໍ່ອືດຕົວຢ່າງທີ່ມີມາແລ້ວໃນໂລກອະດີດແລະ ໂລກປັດຈຸບັນກໍຍັງມີໄດ້ຢູ່ຕໍ່ໄປ, ຖ້າເຮົາບໍ່ເປັນເຈົ້າຕົນເອງໄດ້.

ດັ່ງນັ້ນ, ໂຄງການທີ່ເຮົາສະໜັບສະໜູນທີ່ສຸດໃນຕໍ່ໜ້ານີ້, ສຳລັບການສຶກສາຂ້າພະເຈົ້າຄິດວ່າຕ້ອງເອົາໂຄງການ "Swap " (Sector.Wide Approach) ຊຶ່ງອົງການ SIDA ໄດ້ລົງທຶນໃຫ້ຊ່ຽວຊານມາຄົ້ນຄວ້າ ແລະ ໄດ້ຂຽນບົດລາຍງານອອກໃນວັນທີ 23/05/2005 ໄປແລ້ວ.

ໂຄງການ " S.W.A.P " ນີ້, ລາວເຮົາແປ ແລະ ໃຫ້ຄວາມໝາຍວ່າ "ວິທີການຮ່ວມມືແບບທົ່ວຂະແໜງການ " ໃນການພັດທະນາການສຶກສາຢູ່ ສປປ ລາວ. ສຸດທ້າຍກໍແມ່ນ ESDF ຫຼື ຂອບພັດທະນາຂະແໜງການສຶກສາທີ່ລັດຖະບານເຮົາຮັບປະຕິບັດຢູ່ດຽວນີ້ແລ້ວ.

ບົດລາຍງານດັ່ງກ່າວ ຂອງໂຄງການນີ້ໄດ້ໃສ່ຫົວຂໍ້ວ່າ **ບົດລາຍງານກ່ຽວກັບຄວາມເປັນໄປໄດ້ໃນການນຳໃຊ້ວິທີການຮ່ວມມືແບບທົ່ວຂະແໜງ**

ການໃນການພັດທະນາການສຶກສາຢູ່ ສປປລາວ".

ບົດລາຍງານນີ້ມີຫົວຂໍ້ເປັນພາສາອັງກິດໃນເບື້ອງຕົ້ນວ່າ "Report on the feasibility of a Sector Wide Approach to education development in Lao PDR) 50 ກວ່າໜ້າເທົ່ານັ້ນ. ຫລັງຈາກລັດຖະບານຮັບ "ຂອບພັດທະນາຂະແໜງການສຶກສາ (ESDF) ນີ້ເຮົາກໍ່ຄວນຕັ້ງໜ້າປະຕິບັດຍຸດທະສາດທີ່ມີນັ້ນໃຫ້ເປັນຮູບປະທຳໂດຍຮ່ວມມືນຳຜູ້ປະກອບທຶນທີ່ນັບຖືຂອບນີ້, ຕາມເຮົາຕົກລົງກັບເຂົາມາແລ້ວ.

ໂຄງການ SWAP ນີ້ ແມ່ນສະເໜີໃຫ້ລັດຖະບານຈັດການສຶກສາຂອງຕົນແບບຄົບຊຸດເສຍກ່ອນ ນັບແຕ່ອະນຸບານຈົນຮອດວິທະຍາໄລ ແລະມະຫາວິທະຍາໄລຢ່າງເປັນລະບົບກົມກືນກັນຄັກແນ່ເສຍກ່ອນ. (ເຂົາເອີ້ນວ່າ National Education Policy Framework ) ຫຼື (ນະໂຍບາຍການສຶກສາແຫ່ງຊາດແບບທົ່ວຂະແໜງການ)

ຫຼັງຈາກລັດຖະບານມີ (National Education Policy Framework) ນີ້ແລ້ວຈຶ່ງມາພາກັນແບ່ງໃຫ້ຜູ້ໃຈຢາກຊ່ວຍດ້ານໃດ, ຢູ່ ຂັ້ນການສຶກສາໃດ, ຊ່ວຍຢ່າງໃດ?, (ຊ່ວຍເລີກ ຫຼື ຕື້ນຊ່ຳໃດ, ເນື້ອໃນແນວໃດ).

ສ່ວນລັດຖະບານເອງຈະຮັບຜິດຊອບມອບງົບປະມານສ່ວນໃຫຍ່ຂອງຕົນເອງໃສ່ບ່ອນໃດ, ຢູ່ໃນລະບົບລວມ ນັ້ນກໍສຸດແລ້ວແຕ່ຈະເຫັນສົມຄວນ. ແຕ່ກໍຄວນເປັນເອກະພາບເຮັດໃຫ້ການປະຕິບັດໃຫ້ໄດ້ຕາມແຜນ, ເຮັດໃຫ້ຜູ້ປະກອບທຶນເຊື່ອໝັ້ນເຮົາ.

ອັນນີ້ເພິ່ນຈຶ່ງເອີ້ນວາ "ທົ່ວຂະແໜງການ" "Sector-wide" "Approach" (ວິທີການຄິດແບບນີ້ເຂົາຄິດກັນມາດົນແລ້ວ ເພື່ອຢາກໃຫ້ຜົນການຊ່ວຍເຫຼືອຂອງເຂົາປະກົດຜົນເປັນຈິງ ແລະ ໃຫ້ສອດຄ່ອງກັບແຜນນະໂຍບາຍລວມຂອງລັດເຮົາ. ເພາະຜ່ານມາເຂົາຕີລາຄາວ່າໃຫ້ການຊ່ວຍ

ເຫຼືອໄປຫຼາຍແລ້ວ ແຕ່ບໍ່ໄປຮອດເປົ້າໝາຍ ແລະ ບໍ່ຮູ້ວ່າລັດຖະບານເຮົາພໍໃຈນຳແທ້ ຫຼື ບໍ່. ເຂົາໄດ້ຄົ້ນຄວ້າກັນຕໍ່ບັນຫານີ້ຢູ່ Washington 10 ກວ່າປີກ່ອນໜ້ານີ້ເພື່ອຊ່ວຍ 3 ປະເທດອິນໂດຈີນ ໃນສັດຕະວັດທີ່ 21 ນີ້ໃຫ້ມີໃບໜ້າໃໝ່.

ແຕ່ພວກເຮົາບໍ່ທັນເຂົ້າໃຈເຈດຕະນາດີຂອງຂະບວນການກຸ່ມນີ້ເຊິ່ງຍົກຂຶ້ນໂດຍປະເທດ ຊູເອດ (ປະເທດ Sweden). ກ່ອນໝູ່ຢູ່ກອງປະຊຸມ WB (ທະນາຄານໂລກ).

ຕໍ່ແນວຄິດນີ້ ຫວຽດນາມໄດ້ຮັບກະກຽມການປະຕິຮູບກ່ອນໝູ່ ແລະ ປະຕິບັດມາແລ້ວເກືອບ 10 ກວ່າປີ.

ເວລານີ້ດີກວ່າເວລາໃດໝົດ, ທີ່ເຮົາຈະຄວນຮັບເອົາ ໂຄງການ ESDF ນີ້ມາເບິ່ງຄືນ ແຕ່ລະຈຸດຂອງແຜນຍຸດທະສາດການປະຕິຮູບການສຶກສາແຫ່ງຊາດຂອງເຮົາ. ຖ້າເຮົາຂໍການຊ່ວຍເຫຼືອເພື່ອກະກຽມການປະຕິຮູບຂອງເຮົາກໍຄົງບໍ່ມີບັນຫາ, ເພາະອົງການສາກົນພ້ອມທັງທະນາຄານໂລກ (WB) ແລະ ທະນາຄານອາຊີເພື່ອການພັດທະນາ (ADB) ກໍກຽມພ້ອມໃຫ້ຄວາມສະດວກຢູ່ແລ້ວ.ພຽງແຕ່ໃຫ້ເຮົາຕັ້ງໜ້າຮັບຜິດຊອບຢ່າງມີຜົນປະກົດເປັນຈິງໄດ້.

ຍ້ອນແນວນັ້ນ ຂ້າພະເຈົ້າຈິ່ງຢາກໃຫ້ຄິດ "ຮູບແບບ" ໂຄງສ້າງຂອງການປະຕິຮູບການສຶກສາຂອງຊາດນີ້ເປັນແບບ "ຄົບຊຸດ" ໄວ້.

2. ການກຳນົດນະໂຍບາຍການສຶກສາແຫ່ງຊາດແບບຄົບຊຸດ.

**ໝາຍຄວາມວ່າ**: ຕ້ອງກຳນົດ "ການສຶກສາຂອງຊາດ " ຫຼື National Education Policy Framework. ນີ້ໃຫ້ແຈ້ງນຳກັນກ່ອນ **ທັງໝົດລະບົບ** ເວົ້າເຖິງ "ລະບົບ" ກໍຢາກໃຫ້ເຂົ້າໃຈໃຫ້ເປັນເອກະພາບກັນວ່າແມ່ນຫຍັງ? (System ) National Education Systiem : (NES).

ຕໍ່ຄຳວ່າ: **ລະບົບການສຶກສາແຫ່ງຊາດ** ຊຶ່ງແປເປັນອັງກິດວ່າ National Education System "ແມ່ນໝົດໂຄງປະກອບເພື່ອຈັດຕັ້ງການ **ບໍລິຫານ** ແລະ **ການເຜີຍແຜ່** ການສຶກສາໃຫ້ປະຊາຊົນໃນຊາດຕາມ **ຊັ້ນຕ່າງໆ** (ຊັ້ນອະນຸບານ, ປະຖົມ, ມັດທະຍົມ ແລະ ຊັ້ນສູງ) ຫຼື ມະຫາວິທະຍາໄລ ຕາມ **ສາຍວິຊາຕ່າງໆ** (ໃນລະບົບໂຮງຮຽນ, ນອກລະບົບ ໂຮງຮຽນ) ໂດຍມີການສະໜັບສະໜູນດ້ານການບໍລິຫານ ແລະ ຄຸ້ມຄອງວິຊາການ ຄັກແນ່ຕາມແຕ່ລະຊັ້ນຮຽນ.

ຄຳນິຍາມ: "ລະບົບການສຶກສາແຫ່ງຊາດ" ຢູ່ເທິງນີ້ແມ່ນໄດ້ຂຽນ ແລະ ແປອອກຢ່າງຈະແຈ້ງໃນປຶ້ມຫົວໜຶ່ງ, ພິມໂດຍ ໂຄງການ ແລະ ມີຫົວຂໍ້ວ່າ **"ປະມວນຄຳສັບວິຊາການສຶກສາ" (Glossary of Education terms)** ແມ່ນກົມຈັດຕັ້ງຂອງກະຊວງສຶກສາຮ່ວມກັບ ໂຄງການ ສົ່ງເສີມການຄຸ້ມຄອງການສຶກສາຕາມລະບົບແລະຂັ້ນຄວາມຮັບຜິດຊອບໂດຍ ໂຄງການADB/ UNESCO TA. 3871 ພິມອອກໃນປີ 2003 ແຕ່ບໍ່ມີໃຜອ່ານ ແລະ ຊອກເຂົ້າໃຈ, ບໍ່ສູ່ຮູ້ຈັກນຳໃຊ້) ຂ້າພະເຈົ້າເອງກໍໄດ້ມີໂອກາດເຂົ້າຮ່ວມໃນໂຄງການນີ້ປະມານ 4 ເດືອນ, ທ່ານ ຄຳຕັນ ຈັນທະລາ ໄດ້ຢູ່ຮ່ວມນຳຈົນຮອດ 8 ຫຼື 9 ເດືອນ. ຈົນຈົບໂຄງການ. (ປຶ້ມນີ້ຍັງມີຢູ່ກົມຈັດຕັ້ງຫຼາຍສະບັບ).

3. ບົດຮຽນຂອງການສຳຫຼວດການສຶກສາກ່ອນປີ 1962.

ພວກເຮົາຄວນນຳເອົາ ຄຳນິຍາມຂອງໝົດລະບົບການສຶກສາແຫ່ງຊາດ ນີ້ມາທຳຄວາມເຂົ້າໃຈກັນໃຫ້ແຈ້ງນຳກັນກ່ອນແລ້ວຈຶ່ງຂຽນ. "ໂຄງການປະຕິຮູບການສຶກສາ " ທີ່ລັດຖະບານຕ້ອງການ. ຈຶ່ງຈະພາກັນເຂົ້າໃຈດີຂຶ້ນໄດ້. ປັດຈຸບັນນີ້, ບັນຫາໜັກແມ່ນຜູ້ຢາກໄດ້ (ລັດ) ເຂົ້າໃຈຄວາມຢາກໄດ້ແຈ້ງຂຶ້ນ, ແຕ່ຜູ້ຂຽນສະເໜີອອກໃນດ້ານ ວິຊາການເພື່ອໃຫ້ເຂົ້າໃຈຄວາມຢາກໄດ້ໃຫ້ເປັນເອກະພາບກັນ ແຕ່ເທິງລົງລຸ່ມນັ້ນ, ອາດຍັງບໍ່ທັນເຂົ້າໃຈກັນ

ຢ່າງສົມບູນໄດ້ເທື່ອ (ຂ້າພະເຈົ້າຜູ້ຄົ້ນຄວ້າມີຄວາມວິຕົກຢ້ານຈະປະປ່ອຍໃຫ້ຕ່າງປະ ເທດມາບົ່ງການຕໍ່ໄປອີກຄືເກົ່າ). ເພາະເຮົາບໍ່ສູ້ເອົາຈິງເອົາຈັງປານໃດນຳພາກປະຕິບັດຕົວຈິງທັງບໍ່ມີການກວດກາຕິດຕາມຢ່າງເປັນລະບົບ.

ຄວາມຈິງ ພວກຕ່າງປະເທດເຂົາກໍມີເຈດຕະນາດີ, ເຂົາບໍ່ຢາກບົ່ງການດ້ວຍເຂົາເອງແຕ່ເຂົາມີເງິນ ເຮົາພັດບໍ່ມີ, ແຕ່ເຮົາຕ້ອງການເງິນເພື່ອມາພັດທະນາການສຶກສາຂອງຊາດ. ແຕ່ພັດບໍ່ຮູ້ວ່າຈະພັດທະນາຫຍັງກ່ອນ, ແລະ ພັດທະນາຫຍັງລຸນບໍ່ທັນເຂົ້າໃຈເປັນເອກະພາບກັນວ່າລະບົບມັນຂຶ້ນລົງແນວໃດ, ເຮັດອັນໃດເປັນພື້ນຖານ, ເຮັດອັນໃດເປັນສຳຮອງ, ອັນໃດກໍຢາກໄດ້ໝົດ, ແຕ່ບໍ່ສາມາດເຮັດໃຫ້ມີຄຸນນະພາບໄດ້ຕາມໃຈມັກໝົດບາດດຽວ, ເລີຍບໍ່ອອກບໍ່ເຂົ້າ.ສ່ວນໃຫຍ່ມັກເຮັດເອົາແຕ່ຮູບນອກຫຼາຍກວ່າ.

ຍ້ອນເຮົາຕົກຢູ່ໃນສະພາບຄືດັ່ງກ່າວມານີ້, ຂ້າພະເຈົ້າຈຶ່ງໄດ້ເອົາປື້ມສອງຫົວຂອງບົດຮຽນການກຽມປະຕິຮູບການສຶກສາຂອງລະບອບເກົ່າມາເບິ່ງ ຂັ້ນຕອນ ແລະ ວິທີການຂອງເຂົາ:

ຫົວທີ 1: ແມ່ນບົດລາຍງານ(ເປັນພາສາຝຣັ່ງ) ຂອງຄະນະສາກົນມາສຳຫຼວດສະພາບການສຶກສາຂອງລາວເຮົາໃນປີ 1957. (ລັດຖະບານປະສົມຂໍເອົາເຂົ້າມາ). ແມ່ນລັດຖະບານປະສົມຄັ້ງທີ 1 ເປັນຜູ້ຂໍໃຫ້ Unesco ຈັດຄະນະນີ້ມາສຳຫຼວດເພື່ອເຮັດການປະຕິຮູບໃນປີ 1962 ເລີ່ມປະຕິຮູບແຕ່ຊັ້ນປະຖົມສຶກສາກ່ອນ. (ເພາະເຮັດໝົດລະບົບບໍ່ທັນໄດ້, ລັດຖະບານລາວເຮົາເວລານັ້ນບໍ່ທັນສາມາດກຳບັນຫາມັດທະຍົມສຶກສາໄດ້ ເພາະຝຣັ່ງຍັງບໍ່ທັນຍອມປະ) ເຂົາບໍ່ປະກໍມີເຫດຜົນຂອງເຂົາເພາະເຂົາມີຜົນປະໂຫຍດເພື່ອສືບຕໍ່ເປັນນາຍ. ເຮົາບໍ່ທັນມີອາຈານຄົນລາວ ຈະສອນມັດທະຍົມໄດ້ກໍຍ້ອນຝຣັ່ງເອງບໍ່ຢາກກຽມໃຫ້ປະໄດ້. ໂຮງຮຽນສ້າງອາຈານສອນມັດທະຍົມຍັງບໍ່ທັນມີ ເຮົາຈຶ່ງຕ້ອງເຂົ້າໃຈວ່າ "ໝົດລະບົບ ແມ່ນມັນເກາະກ່າຍກັນເປັນ

ພວງພະນັງໂລດ". ເຮັດແຕ່ຊັ້ນປະຖົມໄດ້ກໍຂະຫຍາຍຊັ້ນມັດທະຍົມບໍ່ໄດ້ຕໍ່ ເພາະປະໃຫ້ນັກຮຽນປະຖົມຮຽນຈົບຊັ້ນນີ້ແລ້ວເສັງ ເອົາບ່ອນເຂົ້າຮຽນຊັ້ນ ມັດທະຍົມຕົ້ນກໍບໍ່ໄດ້ (ຕົວຢ່າງປີ 1966 ມີນັກຮຽນເສັງຈົບປະຖົມທົ່ວປະເທດ 6.689 ຄົນ, ເສັງເຂົ້າ ມ1 ໄດ້ແຕ່ 390 ຄົນ ເທົ່ານັ້ນ, ຍ້ອນມີຫ້ອງຮຽນມ1 ທົ່ວປະເທດພຽງ 10 ແຫ່ງໆໜຶ່ງຮັບເອົາໄດ້ 30-40 ຄົນ.

ທີວທີ 2: ແມ່ນວາລະສານ "ສຶກສາທິການ " ພິມອອກປີ 1962 , ເວົ້າເຖິງຂັ້ນຕອນ ແລະ ວິທີການດຳເນີນການປະຕິຮູບປະຖົມສຶກສາ.

ກ່ອນຈະອອກພະຣາຊະອົງການ ເປັນລັກສະນະກົດໝາຍບັງຄັບ ໃຫ້ຈັດຕັ້ງເຮັດການປະຕິຮູບແຕ່ ຊັ້ນປະຖົມສຶກສາໄດ້ ກໍຍັງຕ້ອງໄດ້ສູ້ຊົນ ຫຼາຍດ້ານໄປພ້ອມກັນ, ຂັ້ນຄູ-ອາຈານ ຕ້ອງເຂົ້າໃຈ, ລັດຖະມົນຕີຕ້ອງ ຕັດສິນໃຈ, ນາຍົກລັດຖະມົນຕີຈຶ່ງໄດ້ສະເໜີຕໍ່ສະພາລັດຖະມົນຕີ (ຄະນະ ລັດຖະບານ) ແລ້ວຈຶ່ງໄດ້ອອກກົດໝາຍກຳນົດຮູບແບບໃຫ້ ພະຣາ ຊະວັງເຊັ່ນ, ເປັນກົດໝາຍການປະຕິຮູບການສຶກສາຊັ້ນປະຖົມສຶກສາ. ຖ້າ ຈະເວົ້າເຖິງປະວັດການກຽມການປະຕິຮູບການສຶກສາ 1962 (ຊຶ່ງແມ່ນ ລັດຖະບານປະສົມເທື່ອທີ 2) ເປັນຜູ້ດຳເນີນງານເວລານັ້ນ, ກໍຖືວ່າເຮົາໄດ້ ບົດຮຽນນຳຫຼາຍສົມຄວນ. ຍ້ອນເຮົາຂະຫຍາຍໂຮງຮຽນປະຖົມເຮົາໄດ້ ແໜ້ນ ສົມຄວນໃນດ້ານການຈັດຕັ້ງ ແລະ ດ້ານເນື້ອໃນ, ຈຶ່ງຂະຫຍາຍໄດ້ ໄວສົມຄວນ ທັງຍູ້ໃຫ້ຝຣັ່ງ ຕ້ອງໄດ້ຍອມປະມັດທະຍົມສຶກສາ ເປັນກ້າວໆ ແລະ ຍອມສ້າງໃຫ້ຄົນລາວສາມາດສອນຢູ່ມັດທະຍົມຕົ້ນໄດ້ ຫຼາຍຂຶ້ນ ຢ່າງໜັກແໜ້ນ ນັບແຕ່ປີ 1967 ຫາ 1972 ລັດຖະບານ ອາເມລິກາ, ເວລານັ້ນຍັງສຸມ ໃສ່ສົງຄາມທົ່ວອິນດູຈີນ, ແຕ່ກໍໄດ້ມີນະໂຍບາຍເອົາໃຈ ຊ່ວຍຊຸກຍູ້ສ້າງໂຮງຮຽນມັດທະຍົມທີ່ເຮົາເອີ້ນວ່າ: "ມັດທະຍົມແບບປະສົມ ຟ້າງຸ່ມ " ແລະ ກໍໄດ້ ສ້າງນັກຮຽນມັດທະຍົມປາຍອອກໄດ້ 2 ລຸ້ນກ່ອນປີ 1975,

ເຮັດໃຫ້ຊັ້ນມັດທະຍົມແບບປະສົມຟ້າງຸ່ມຖືກຮັບເອົາແນວຄິດປະຕິຮູບ 1962 (ຊຶ່ງຖືວ່າເຮັດແຕ່ປະຖົມ) ຂະຫຍາຍມັດທະຍົມໄດ້ດີຂຶ້ນຖ້າບໍ່ມີປະຕິຮູບ 1962 ຝຣັ່ງກໍຍັງຈະບີບເຮົາ, ບໍ່ໃຫ້ຮຽນພາສາລາວຢູ່ຊັ້ນມັດທະຍົມໄດ້ຕາມເກົ່າ. ເຂົາພຽງແຕ່ໃຫ້ເຫດຜົນວ່າເຮົາສ້າງອາຈານສອນ ບໍ່ທັນໄດ້ ແລະ ເຂົາກໍ່ບໍ່ຍອມສ້າງວິ ທະຍາໄລສ້າງຄູໃຫ້ເຮົາເລີຍຈົນຮອດ 1975.

ເມື່ອເຮົາປົດປ່ອຍທົ່ວປະເທດໄດ້, ການປະຕິວັດຊາດປະຊາທິປະໄຕໄດ້ "ທັບມ້າງ" ຄວາມຍາກທີ່ວ່າຂະຫຍາຍມັດທະຍົມບໍ່ໄດ້ນັ້ນໝົດບາດດຽວ ເຮັດໃຫ້ການຂະຫຍາຍຊັ້ນມັດທະຍົມກະໂດດໄປແຮງຈົນພົບວ່າບໍ່ໄດ້ຄຸນນະພາບກໍຍັງຢຸດບໍ່ໄດ້. ດັ່ງເຮົາເຫັນໃນປັດຈຸບັນ.

ຂ້າພະເຈົ້າສະເໜີເລື່ອງປະຫວັດການປະຕິຮູບການສຶກສາ 1962 ໃຫ້ເຫັນໂດຍຫຍໍ້ໆນີ້ກໍເພື່ອໃຫ້ສຳນຶກນຳກັນໄດ້ວ່າ ການຈະເຮັດການປະຕິຮູບການສຶກສາມີຄວາມເປັນໄປໄດ້ດີ,ມີປະສິດທິຜົນ, ມັນຕ້ອງຄ່ອຍໆດຳເນີນໄປເປັນຂັ້ນຕອນແຕ່ໃຫ້ໜັກແໜ້ນເມືອໜ້າເລື້ອຍໆ ຈຶ່ງຈະເປັນການສຶກສາແຫ່ງຊາດຢ່າງມີຜົນໃຫ້ແກ່ຊາດໄດ້. ບໍ່ດັ່ງນັ້ນ, ກໍຈະເປັນການສຶກສາທີ່ຍອມຮັບເປັນ "ທາດ" ຂອງຜູ້ອື່ນເລື້ອຍໆຍ້ອນອາໄສແຕ່ຜູ້ອື່ນ ເຂົາພາເຮັດ. ຍ້ອນເຮົາບໍ່ຊອກໃຫ້ມີທຶນ ເຮົາເອງເປັນຫຼັກ ໄປນຳເທື່ອລະກ້າວ.

ການຂໍທຶນຂອງຕ່າງປະເທດນີ້ຈະງ່າຍຂຶ້ນຖ້າເຮົາຫາກເປັນເຮົາເອງໄດ້ເສຍກ່ອນ. ດຽວນີ້ທຸກໆປະເທດກໍ່ເລີ່ມຢາກຊ່ວຍເຮົາ, ຢາກໃຫ້ເຮົາເປັນເຮົາເອງຢູ່ແລ້ວຍ້ອນແນວທາງລັດຖະບານເຮົາຖືກ. ແຕ່ການຊ່ວຍຂອງເຂົານັ້ນຍັງຈຳເປັນໄດ້ເປັນໄປຕາມໃຈເຂົາຢູ່ຫຼາຍຢ່າງ. ຈະໃຫ້ໄດ້ຕາມໃຈເຮົາໝົດໂລດກໍຍາກເພາະເຂົາເປັນຜູ້ກຳເງິນ ລວມທັງເງິນທີ່ເຮົາຢືມ.

4. ສະເໜີໃຫ້ນຳເອົາແຜນSWAP ຫຼືທີ່ເອີ້ນວ່າ"ຂອບພັດທະນາຂະແໜງການສຶກສາ"(ESDF)ເຂົ້າເປັນການປະຕິຮູບທັງ ລະບົບຂອງຊາດ

ຄ່ອຍດຳເນີນໃຫ້ໄດ້.(ໃນຕົວຈິງເວລາພິມປຶ້ມຫົວນີ້, ລັດຖະບານກໍຮັບຮອງເອົາ (ESDF) ນີ້ແລ້ວ)[1].

ໂດຍສະຫຼຸບແລ້ວ, ຕາມຂ້າພະເຈົ້າເຂົ້າໃຈ, ໃນເມື່ອ (SWAP) ໄດ້ເລີ່ມມີການຄົ້ນຄວ້າມາແດ່ແລ້ວ ແລະ SWAP ກໍ່ຖືກສະໜັບສະໜູນແຕ່ເບື້ອງຕົ້ນໂດຍ SWEDEN ແດ່ແລ້ວ, ຂ້າພະເຈົ້າແນ່ໃຈວ່າປະເທດ ເຂົາຄົງຈະອອກທຶນໃຫ້ເຮົາໄດ້ໂລດເວລາເຮົາກະກຽມນີ້ແຕ່ຕ້ອງໄດ້ຂຽນຈົດໝາຍໄປຫາລັດຖະບານເຂົາຊ່ວຍໃນດ້ານການສຳຫຼວດກະກຽມນີ້ ຄັກແນ່ກ່ອນ, ພ້ອມກັບການຮ່ວມມືຈາກ UNESCO ຖ້າລັດຖະບານຫາກຂຽນຄຳຮ້ອງໄປຫາອົງການ UNESCO ສະເໜີໃຫ້ອົງການນີ້ມາຊ່ວຍພາເຮົາລົງສຳຫຼວດຂໍ້ມູນເພື່ອກຽມການສ້າງ ໂຄງການປະຕິຮູບການສຶກສາແຫ່ງຊາດຢ່າງຈິງຈັງ, ອີງໃສ່ມະຕິຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ VIII ນີ້ຄັກແນ່, ເຂົາຄົງຂືນເຮົາບໍ່ໄດ້.

ທັງຊູເອດ ທັງ ອຸຍແນດສະໂກ ພ້ອມໆກັນ. ຂັ້ນຕອນຂອງການກະກຽມການປະຕິຮູບການສຶກສາແຫ່ງຊາດຂອງເຮົາຄວນຈະເປັນໄປດັ່ງນີ້:

(3 ປີ) 2007-2010: ການກະກຽມລະບົບ ແລະ ເນື້ອໃນໂຄງສ້າງຫຼັກສູດລະດັບຕ່າງໆ.

(5 ປີ) 2010-2015 : ເລີ່ມປະຕິບັດເທື່ອລະກ້າວ

(5 ປີ) 2015-2020 : ສະຫຼຸບຕີລາຄາບາດກ້າວທີ່ປະຕິບັດມາ.

ຕ້ອງປັບປຸງໄປບາງອັນໃຫ້ທັນສະໄໝຂຶ້ນ ຕາມຄວາມຮັ່ງມີຂອງປະເທດເຮົາຂະຫຍາຍຕົວ. ຊຶ່ງເວລານັ້ນເຮົາຈະເລີ່ມເປັນເຈົ້າຕົນເອງໄດ້ຫຼາຍຂຶ້ນ, ເປັນຕົ້ນໃນດ້ານການກໍ່ສ້າງຊັບພະຍາກອນມະນຸດໃຫ້ແກ່ຊາດ.

ຖ້າເຮົາສ້າງຊັບພະຍາກອນມະນຸດໃຫ້ແກ່ຊາດທີ່ເປັນຄົນຂອງຊາດ

---

(1) ຂໍ້ 4 ນີ້ໄດ້ຂຽນໄວ້ແຕ່ເວລາພິມຄັ້ງທີ 1, ອອກໃຊ້ໃນຂອບເຂດຈຳກັດແຕ່ 2007.

ເຮົາເອງເຮັດໄດ້ເຮົາຈຶ່ງຈະຖືວ່າ ເຮົາມີຄວາມສາມາດເປັນປະເທດເອກະລາດແຫ່ງຊາດໄດ້ເຕັມສ່ວນ.

ດັ່ງນັ້ນ: 2007-2010: 3 ປີ ກະກຽມນີ້ກໍ່ບໍ່ຫຼາຍ, ແຕ່ເຮົາອາດຈະເຮັດໄດ້ເພາະເຮົາມີແນວທາງ ໃນມະຕິ VIII ຈະແຈ້ງແດ່ແລ້ວຂໍ້ສຳຄັນ, ຂໍຢ່າຟ້າວຟັ່ງຈູດໄລຍະຫຼາຍ.

(1) ກະຊວງສຶກສາຕ້ອງຄົ້ນຄວ້າໝົດລະບົບຂອງການສຶກສາໃຫ້ຂັ້ນເທິງຮັບຮູ້ນຳກ່ອນ.

## ຕົວຢ່າງ: ຕາຕະລາງຂອງລະບົບຂອງແຕ່ລະຂະແໜງການການສຶກສາ.

### ລະບົບການສຶກສາທີ່ສະເໜີໃໝ່ເພື່ອຄົ້ນຄິດເລີກແນໃສ່ ໃຫ້ໄດ້ຄູອາຊີບ,ຊ່າງອາຊີບ

ສະນັ້ນຈຶ່ງຕ້ອງໄດ້ເຮັດໝົດລະບົບການສຶກສາແຫ່ງຊາດ
ຕິດຄັດເຂົ້ານຳເອກະສານຂໍ້ຕົກລົງຈຶ່ງຈະເຂົ້າໃຈດີ.

| ຊັ້ນສຶກສາ | ອະນຸບານ | | | ປະຖົມ | | | | | ມ/ຍ ຕົ້ນ | | | | ມ/ຍ ປາຍ | | | ປ/ຕີ | | | | ປ/ໂທ | | ປ/ເອກ | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ຊັ້ນຮຽນ | 1 | 2 | 3 | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | | | | | | | | | | |
| ອາຍຸ | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 | 26 | 27 |
| ລະບົບສາມັນ(1) | | | | | | | | | | | | | | | | | | | | | | | | | |
| ລະບົບອາຊີວະ(1) | ຊັ້ນຮຽນ → | | | | | | | | | | | | ປວຊ I Certif | | | | ຝຶກງານ | | ປວສ Diploma | | | | | | |
| | ປີຮຽນ+ຝຶກງານ-ຫຼັງຈົບ ມັດທະຍົມຕົ້ນ → | | | | | | | | | | | | 1 | 2 | 3 | 4 | 1 | 2 | 1 | 2 | 3 | | | | |
| ລະບົບສ້າງຄູອາຊີບ(1) | ຊັ້ນຮຽນ → | | | | | | | | | | | | ຄູຝຶກ | | | ຄູອາຊີບ I | | | ຄູອາຊີບ II | | | | | | |
| | ປີຮຽນ+ຝຶກສອນ-ຫຼັງຈົບ ມັດທະຍົມຕົ້ນ → | | | | | | | | | | | | 1 | 2 | 3 | 1 | 2 | 3 | 1 | 2 | 3 | | | | |
| | | | | | | | | | | | | | | | | | | | ສາຂາຕ່າງໆ<br>-ພາສາ<br>-ອະນຸບານ<br>-ປະຖົມ<br>-ມ/ຍວິຊາຕ່າງໆ | | | | | | |

(1) ດ່ວນທີ່ສຸດ: ສ້າງຫຼັກສູດໃໝ່ຊຶ່ງເນັ້ນ ຄູອາຊີບ ແລະ ນາຍຊ່າງສີມືແທ້.

(2) **ຂໍ້ຄິດທີ່ພໍສະຫຼຸບໄດ້.**

ສະຫຼຸບແລ້ວມີ 3 ດ້ານທີ່ຄວນເບິ່ງຄືນຢ່າງຕັ້ງໜ້າເພື່ອຊຸກຍູ້ ແລະ ສົ່ງເສີມກຳລັງໃຈຂອງຄະນະອາຈານຢ່າງສົມເຫດສົມຜົນຄື:

1. **ດ້ານການຈັດຕັ້ງ**

ໃນກໍລະນີປັດຈຸບັນນີ້ ຢາກຂໍໃຫ້ຄົ້ນຄວ້າແຕ່ລະບົບພາຍໃນ ກະຊວງສຶກສາ ຮັບຜິດຊອບໂດຍສະເພາະເສຍກ່ອນເຊັ່ນ:

- ສາມັນສຶກສາ
- ອະຊີວະສຶກສາ
- ສ້າງຄູສຶກສາ

} 3 ລະບົບນີ້ ສ້າງຄຸນນະພາບຂັ້ນພື້ນຖານໃຫ້ຊັບພະຍາກອນມະນຸດ

ສ່ວນພາກສ່ວນອື່ນເຊັ່ນ: ການສຶກສານອກລະບົບ ແລະການສຶກສາພາກເອກະຊົນ, ກະຊວງສຶກສາ ພຽງໃຫ້ຄວາມຮ່ວມມືເປັນຢ່າງດີ ອາດມີກະຊວງອື່ນ ເປັນເຈົ້າການຮ່ວມ, ບໍ່ແມ່ນຂອງ ກະຊວງສຶກສາຮັບຜິດຊອບແຕ່ຝ່າຍດຽວ, (ກະຊວງສຶກສາ ອາດມີຄົນຊ່ວຍແຕ່ບໍ່ໃຫ້ຂື້ນນຳຄວາມຮັບຜິດຊອບຂອງ ກະຊວງສຶກສາແຕ່ຜູ້ດຽວ). ຊຶ່ງເຂົາຢາກໃຫ້ກຳນົດ Mendate ລາຍລະອຽດ ຖ້າກະຊວງສຶກສາຮັບຜິດຊອບໂດຍກົງກໍໝາຍຄວາມວ່າ (ຂັ້ນເທິງຕິແຕ່ເຮົາຜູ້ດຽວໄດ້) ງົບປະມານຂອງ ກະຊວງສຶກສາຈະຕ້ອງກຳນົດໃຫ້ແຈ້ງ ແລະ ຕ້ອງຮັບຜິດຊອບແທ້ໆແຕ່ 3 ຂົງເຂດເທົ່ານັ້ນເສຍກ່ອນ: ຕາບໃດງົບປະມານບໍ່ກວມຫກໆຢ່າງທຸກໆກົມທີ່ມີພາກສ່ວນອື່ນກ່ຽວຂ້ອງມາ.

<u>**ສະເໜີໂຄງປະກອບໃນລະບົບໃໝ່**</u>

1. ກົມສາມັນສຶກສາ ມີ 2 ກົມ : (1) ກົມອະນຸບານ-ປະຖົມສຶກສາ

(2) ກົມມັດທະຍົມສຶກສາ

(ມ.ມ.ຕົ້ນ+ມ.ປາຍ)

2. ກົມອາຊີວະສຶກສາ ມີ 1 ກົມ: (1) ພະແນກວິຊາຊີບ (ປວຊ )

(2) ພະແນກຕິດຕາມການຝຶກງານ

(3) ພະແນກການຊ່າງ(ປວສ )

3. ກົມສ້າງຄູສຶກສາ ມີ 1 ກົມ: (1) ພະແນກກຽມຄູອາຊີບ (3 ປີ)

(2) ພະແນກຄູອາຊີບ I

(3) ພະແນກຄູອາຊີບ II

ສ້າງຄູ + ຝຶກອົບຮົມ(ທັງປະຖົມ,ອະນຸບານ ແລະ ມັດທະຍົມ) ຕ້ອງກຳນົດວ່າ "ຄູ" ແມ່ນຜູ້ສອນແຕ່ອະນຸບານຈົນຮອດ ມ. ປາຍ ຫຼື ໝົດລະບົບສາມັນ. "ອາຈານ"ແມ່ນຜູ້ສອນຢູ່ວິທະຍາໄລ, ສ້າງອາຈານແມ່ນຂົງເຂດຂອງມະຫາວິທະຍາໄລ ຫຼື ສະຖາບັນສ້າງຄູຊັ້ນສູງ ແລ້ວແຕ່ຈະໃຫ້ຊື່ແຈ້ງ. ສະຖາບັນນີ້ຈະຕ້ອງຕິດກັບມະຫາວິທະຍາໄລ ເພື່ອຈະອາໄສອາຈານ ມ.ຊ. ສອນ.

ສ່ວນການສຶກສານອກລະບົບ ແລະ ກົມການສຶກສາພາກເອກະຊົນ ບໍ່ ຄວນເອີ້ນກົມ, ແຕ່ຄວນຈະເອີ້ນວ່າ ຄະນະກຳມະການ ເພາະມັນບໍ່ແມ່ນເຮັດແຕ່ໜ້າວຽກສຶກສາຊັ້ນສາມັນສະເພາະ ມັນມີວຽກສຶກສາຊັ້ນເຕັກນິກ, ຊັ້ນມະຫາວິທະຍາໄລນຳອີກ. ສ່ວນສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.(ສວສ), ຄວນໃຫ້ເອີ້ນວ່າ ສະຖາບັນຄົ້ນຄວ້າຫຼັກສູດການສຶກສາ (ເທົ່ານັ້ນ). ແຕ່ຄວນຄົ້ນຄວ້າພາລະບົດບາດໃຫ້ແຈ້ງຕື່ມກວ່າເກົ່າອີກ, ເຊັ່ນຈັດວຽກແບບຕ່ອງໂສ້, ໃຫ້ເປັນຂະບວນການຫຼາຍກວ່າ ບໍລິຫານດ້ານໜຶ່ງອີກ, ຫຼັງຈາກຄົ້ນຄວ້າຫຼັກສູດແລ້ວ ຄວນເປີດໂອກາດໃຫ້ຄົນມີວິຊາສະເພາະເຄີຍສອນໄດ້ຂຽນປື້ມແບບເຮົາປະມູນຫາຜູ້ຂຽນນອກ.

- ຖ້າໃຫ້ແທດເໝາະກັບວິຊາການສຶກສາແທ້ໆ, ຄວນຕັ້ງສະຖາບັນໜຶ່ງອີກ ຢູ່ລະດັບມະຫາວິທະຍາໄລ ຊຶ່ງອາດເອີ້ນວ່າ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ. ຫຼື Institut National de Recherche

des Sciences de l'Education (INRSE) / National Institute for Research of Education Sciences.(NIRES) ຊຶ່ງຈະມີໜ້າທີ່ສອນວິທີຄົ້ນຄວ້າຫຼັງປະຣິຍາຕີ ດ້ານບັນຫາການສຶກສາຂອງຊາດ.

ເມື່ອເວົ້າເຖິງ "ກົມການສຶກສາ" ແທ້ໆ, ຕ້ອງໄດ້ເບິ່ງວ່າມີໜ້າທີ່ຫຍັງ? ໜ້າທີ່ຄວາມຮັບຜິດຊອບຕົ້ນຕໍຂອງກົມການສຶກສາແມ່ນມີ 3 ໜ້າທີ່ຫຼັກຄື:

(1) ໜ້າທີ່ລາຍງານ. (ສິ່ງທີ່ຕົນຮັບຜິດຊອບຕໍ່ຂັ້ນເທິງ)

(2) ໜ້າທີ່ວິຊາການ (ຮູ້ແທ້, ຮູ້ທາງເລິກ+ ທາງກວ້າງ, ແຕ່ບໍ່ເຮັດເອງ, ພຽງແຕ່ຊີ້ນຳໃຫ້ຖືກຕາມນະໂຍບາຍທີ່ກະຊວງວາງອອກ.

(3) ໜ້າທີ່ກວດກາວິຊາການສະເພາະ(ກວດກາຄຸນນະພາບ) ຕິດພັນກັບນະໂຍບາຍຂອງຂັ້ນເທິງວາງອອກ, ພ້ອມທັງກວດກາການປະຕິບັດຍຸດທະສາດລວມ. ສ່ວນຍຸດທະສາດສະເພາະຄວນແມ່ນແຂວງເປັນເຈົ້າການຫຼາຍກວ່າ.

ດັ່ງນັ້ນ ກົມຈຶ່ງຕ້ອງມີຂອບເຂດຈະແຈ້ງ (ບໍ່ຄວນມີລັກສະນະຄູມເຄືອ) ຕ້ອງກຳໄດ້ແໜັນການປະຕິບັດງານຂອງຂັ້ນແຂວງ ຫຼື ຈຸລະພາກ.

* **ການສາມັນສຶກສາຄວນແບ່ງເປັນສອງກົມ:**

1.) **ການອະນຸບານ ແລະ ປະຖົມສຶກສາ:**

- ອະນຸບານສຶກສາ 3 ປີ
- ປະຖົມສຶກສາ 5 ປີ

2.) **ກົມມັດທະຍົມສຶກສາ:**

- ມັດທະຍົມຕົ້ນ 4 ປີ
- ມັດທະຍົມປາຍ 3 ປີ

* ກົມອາຊີວະສຶກສາ ຊຶ່ງປະກອບດ້ວຍ ພະແນກຕ່າງໆດັ່ງນີ້:

1.) ວິຊາຊີບ (ຝີມື) ຊຶ່ງມີ:

1. ວິຊາຊີບຂັ້ນ I, 4 ປີ (ລະດັບຈົບມ/ຍ ຕົ້ນສອບເຂົ້າ)

2. ວິຊາຊີບຂັ້ນ II, 3 ປີ (ຫຼັງຈາກ 2 ປີ ຝຶກງານຕົວຈິງ, ເສັງເຂົ້າ)

2.) ການຊ່າງ (ຝີມື) ຊຶ່ງປະກອບມີ:

- ເຕັກນິກ I, 4 ປີ (ລະດັບ ປວຊ.) ຫຼື ວິຊາຊີບ ຊັ້ນກາງ
- ຝຶກງານ (ນອກໂຮງຮຽນ) 2 ປີ, ໄດ້ເງິນຄ່າແຮງງານ.
- ເຕັກນິກ II, 3 ປີ (ລະດັບ ປວສ) ຫຼື ວິຊາຊີບ ຊັ້ນສູງ

* ກົມສ້າງຄູ ຊຶ່ງປະກອບມີ:

1) ຄູຝຶກ ຫຼື ກຽມ ຄູອາຊີບ 3 ປີ

2) ຄູອາຊີບ I, 3 ປີ

3) ຄູອາຊີບ II, 3 ປີ

ແຕ່ຕ້ອງເສັງເຂົ້າຄັກແນ່ເພື່ອຮຽນໃຫ້ກາຍເປັນ "ມືອາຊີບ", ທັງໄດ້ທຶນສູງ, ສ່ວນຜູ້ທີ່ຈະບໍ່ເປັນຄູ "ມືອາຊີບ" ບໍ່ຄວນມີທຶນໃຫ້ ສ່ວນສ້າງຄູມັດທະຍົມປາຍ ຄວນແມ່ນສະຖາບັນສ້າງຄູຊັ້ນສູງ ຫຼື ມະຫາວິທະຍາໄລຮັບ ຜິດຊອບໂດຍກົງ ໂດຍການປະສານສົມທົບກັບກົມສ້າງຄູໃນການສ້າງຫຼັກສູດ ແລະ ລົງພາກ ຝຶກຫັດ ຕົວຈິງເປັນສຳຄັນ.

ສ່ວນກົມການສຶກສາພາກເອກະຊົນ ແລະ ກົມການສຶກສານອກລະບົບ ຄວນຈັດຕັ້ງແບບ "ຄະນະກຳມະການ". ບໍ່ແມ່ນຄືກົມ ເພາະມັນກວມຫຼາຍຂັ້ນຕ່າງໆຂອງການສຶກສາ ແລະ ກໍບໍ່ຄວນແມ່ນແຕ່ ກະຊວງສຶກສາຕັດສິນຜູ້ດຽວໄດ້.

ສ່ວນ ສວສ. ຄວນຈັດໃຫ້ເປັນສະຖາບັນ ຄົ້ນຄວ້າຫຼັກສູດການສຶກສາ. ກະຊວງສຶກສາຈຳເປັນຕ້ອງໄດ້ສ້າງທັງຜູ້ສອນ ແລະ ຜູ້ຄົ້ນ

ຄວ້າການສຶກສາໄປພ້ອມໆກັນ ຢູ່ຂັ້ນມະຫາວິທະຍາໄລແຫ່ງຊາດ, ຈາກນັ້ນກໍ ຕ້ອງມີວິທະຍານິພົນຄົ້ນຄວ້າສະເພາະໃນວິຊາທີ່ຕົນຮຽນມາ ໄດ້ລະດັບປະລິນຍາຕີແລ້ວນັ້ນ, ຕ້ອງອອກໄປສອນຕົວຈິງຢ່າງໜ້ອຍ 3 ຫາ 5 ປີ ຈຶ່ງຈະ ມີພື້ນຖານໄປຮຽນຕໍ່ເອົາປະລິນຍາໂທ ຫຼື ປ.ເອກ ໃນສາຂາທີ່ຕົນມີບົດຮຽນ ໃນວິຊາທີ່ຕົນສອນເທົ່ານັ້ນ, ຈຶ່ງຈະຖືວ່າ "ຄົ້ນຄວ້າວິທະຍາສາດເປັນ".

ຜ່ານມາ, ເຮົາບໍ່ໄດ້ເອົາໃຈໃສ່ຄວບຄຸມການຮຽນຕໍ່ເອົາປະລິນຍາໂທ ຫຼື ເອກ ຕາມວິຊາ ຫຼື ຕາມສາຂາຂອງນັກສຶກສາໄດ້ຮຽນແທ້ຈິງເຮັດໃຫ້ເຮົາໄດ້ "ດຣ". ບໍ່ທັນມີຄຸນນະພາບດີເທົ່າທີ່ຄວນ. ຫຼັງຈາກໄດ້ມາແລ້ວກໍບໍ່ສອນ ຈຶ່ງບໍ່ສາມາດສະແດງອອກວ່າຕົນເປັນ Specialiste (ນັກອາຊີບ) ໃນວິຊາ ຫຼື ສາຂາ ນັ້ນໆໄດ້ແທ້.

ຕົວຢ່າງ: ຄູສອນໂຮງຮຽນອະນຸບານໄດ້ດີ, ໃນຕໍ່ໜ້າ, ຄວນມີແຕ່ຜູ້ຈົບປະລິນຍາຕີດ້ານສາຂາ ຈິດຕະສາດເດັກອະນຸບານ ແລ້ວມາສອນຕົວຈິງຢູ່ໂຮງຮຽນ. 3 ຫາ 5 ປີ ຈຶ່ງໄປຕໍ່ໃນສາຂານີ້ໄດ້, ວິຊາອື່ນໆກໍເໝືອນກັນ ແລະເມື່ອໄດ້ ດຣ. ມາກໍຍິ່ງຕ້ອງໄດ້ສອນຕໍ່ໄປເລື້ອຍໃນວິຊານັ້ນໆ. ເຮົາຈຶ່ງຈະສ້າງໄດ້ພະນັກງານທີ່ມີຄຸນນະພາບແທ້ສຳລັບການສຶກສາຂອງຊາດ, ບໍ່ຄວນປະປ່ອຍໃຫ້ອາຈານດີໆອອກໄປຮັບໜ້າທີ່ອື່ນຂອງກະຊວງອື່ນຕາມຄວາມຕ້ອງການຂອງບຸກຄົນ, ຫຼື ຂອງການຈັດຕັ້ງອື່ນຂໍມາ.

2. **ດ້ານງົບປະມານ**

1. **ຂໍ້ຂັດແຍ່ງໃນການສ້າງງົບປະມານ**

ຕາມຂ້າພະເຈົ້າເກັບກຳຂໍ້ມູນໄດ້, ການງົບປະມານເພື່ອພັດທະນາການສຶກສາຂອງຊາດຍັງບໍ່ທັນຊັດເຈນໄດ້ດີເທົ່າທີ່ຄວນ.

ສາຍເຫດກໍຍ້ອນວ່າ ບໍ່ແມ່ນຂຶ້ນນຳງົບລັດແຕ່ຝ່າຍດຽວ, ແລະ ກົມ

ການເງິນກະຊວງສຶກສາກໍມີໜ້າທີ່ຮັບຜິດຊອບບໍ່ທັນຈະແຈ້ງໄດ້ຈັກເທື່ອ.

ເຊັ່ນ: ບາງເທື່ອເຮັດແຜນງົບປະມານໄປໃຫ້ ກະຊວງການເງິນກໍເຮັດແຕ່ເງິນເດືອນໄດ້, ກໍຍັງແບບລວມໆອີກ, ເພາະວ່າແຂວງກໍບໍ່ລາຍງານຈຳນວນພົນແບບຈະແຈ້ງໄດ້ເພາະວ່າ.

ບາງເທື່ອຄົນສຶກສາ (ກິນເງິນງົບສຶກສາແຕ່ໃນຕົວຈິງບໍ່ໄດ້ຮັບໃຊ້ການສຶກສາ ຫຼືບໍ່ໄດ້ສອນຕົວຈິງກໍມີຈຳນວນຫຼາຍສົມຄວນ, ເພາະສ່ວນໃຫຍ່ພວກເຮົາມັກຢາກນຳເອົາຄູສອນດີໄປໃຊ້ຕາມໃຈມັກຂອງແຂວງກໍມີ, ຄູຖືກແຕ່ງຕັ້ງໃຫ້ເປັນເຈົ້າເມືອງ ຫຼື ຮອງເຈົ້າແຂວງກໍມີຫຼາຍ, ໄປເຮັດວຽກຊາວໜຸ່ມ, ແມ່ຍິງ... ກໍຫຼາຍ.

ໃນໄລຍະຕົ້ນຂອງການສ້າງຕັ້ງ ສປປ ລາວ ນັ້ນພໍເຂົ້າໃຈໄດ້, ເພາະເຮົາຂາດຄົນມີລະດັບ ເພື່ອຮັບໃຊ້ເຮັດວຽກການປົກຄອງໄດ້ດີກໍມີແຕ່ກຸ່ມພະນັກງານ ສັງກັດຢູ່ໃນການສຶກສານັ້ນຫຼາຍກວ່າ ຈຶ່ງຈຳເປັນໄດ້ແຍກເອົາໄປທຸກຂະແໜງການໄດ້... **ການສ້າງຊັບພະຍາກອນມະນຸດ** ຂອງເຮົາເວລາປົດປ່ອຍໃໝ່ກໍຍອມຮັບນຳກັນວ່າ ບໍ່ທັນສາມາດຈັດໃຫ້ໄດ້ຕາມລະບົບທີ່ຄວນເທື່ອ.

ແຕ່ພາຍຫຼັງມາ, 30 ກ່ວາປີ ກໍຍັງບໍ່ມີວິທີແກ້ໄຂຢ່າງມີ ລະບົບຈະແຈ້ງໄດ້, ບໍ່ມີເງື່ອນໄຂອ້າງອີງຄັກແນ່, ຍັງສືບຕໍ່ນຳເອົາຄູອອກໄປຮັບໜ້າທີ່ປົກຄອງຫຼາຍຢູ່, ຕໍ່ບັນຫານີ້ກໍຍັງບໍ່ທັນເຫັນທ່າທີວ່າ ຈະຍຸດຕິໄດ້ຍາມໃດ, ການສ້າງພະນັກງານປົກຄອງແບບໃຫ້ກາຍເປັນພະນັກງານອາຊີບກໍຍັງ ບໍ່ທັນໄດ້ເປັນລະບົບເທື່ອປັດຈຸບັນນີ້, ພັກລັດກໍມີນະໂຍບາຍໃຫ້ທັນ ໂຮງຮຽນທິດສະດີທ່າງ່ອນ ມີຄວາມສາມາດສ້າງນັກປົກຄອງໄດ້ແດ່ແລ້ວ, ເຮົາກໍຄວນຍຸດຕິການຍາດເອົາຄູໄປເຮັດວຽກອື່ນຕາມໃຈຂອງທ້ອງຖິ່ນ ໂດຍໄວ ເທົ່າທີ່ຈະໄວໄດ້.

ເຮົາຕ້ອງເຂົ້າໃຈວ່າ **ວິຊາການປົກຄອງ** ກໍເປັນວິຊາສາຂາໜຶ່ງໃນສັງຄົມ. ທັງແມ່ນລະດັບສຳຄັນອີກ ເພາະມັນ **ບັນຊາ** ທຸກໆໜ່ວຍງານ ແລະ ຂະແໜງການຂອງທ້ອງຖິ່ນ. ຖ້າການປົກຄອງບໍ່ກຳແໜ້ນທຸກໜ່ວຍງານ, ຜົນການເຕີບໃຫຍ່ຂະຫຍາຍໂຕກໍບໍ່ໄດ້ຢ່າງ**ໜັກແໜ້ນ**. ຈະບໍ່ສາມາດລາຍງານແບບມີວິທະຍາສາດໃຫ້ຂັ້ນເທິງໄດ້. **ມີແຕ່ຖາມຂັ້ນເທິງ** ຫຼື ມີແຕ່ລໍຖ້າຂັ້ນເທິງສັ່ງຈຶ່ງເຮັດ, ແຕ່ຍັງບໍ່ແນ່ໃຈວ່າຈະເຮັດແນວໃດອີກ.

ຕົວຢ່າງ: ໃນມື້ໜຶ່ງຂອງປີ, ຂັ້ນສູນກາງພັກຢາກໄດ້ຈຳນວນພົນຂອງຄູສອນໃນທົ່ວປະເທດຢ່າງລະອຽດຈະແຈ້ງເພື່ອຈະຄິດໄລ່ວ່າ ຈະຂຶ້ນເງິນເດືອນໃຫ້ຄູສອນຕົວຈິງໄດ້ຢ່າງແທດເໝາະນັ້ນ ເປັນງົບເທົ່າໃດຕື່ມ? ໃນປີໜຶ່ງຕໍ່ໄປ.

ກະຊວງ ສຶກສາກໍແນະນຳໃຫ້ກົມຈັດຕັ້ງເອົາຕົວເລກມາສະເໜີ, ເພື່ອຈະສົ່ງໃຫ້ສູນກາງ(ຕົວເລກຂອງຄູທີ່ສອນແທ້ໆ). ຈຳນວນຕົວເລກທີ່ໄດ້, ໂດຍກົມຈັດຕັ້ງພັດລື່ນຕົວຈິງ (ຕົວຈິງໃນທີ່ນີ້ແມ່ນອີງໃສ່ຜູ້ກິນເງິນນຳງົບປະມານທີ່ກະຊວງສຶກສາຂໍໃຫ້) ແຕ່ກໍຍັງບໍ່ແມ່ນຕົວຈິງຂອງຄູສອນແທ້ໆ ເພາະມີພວກທີ່ຖືກລົງ "ພື້ນຖານ" . ບໍ່ໄດ້ສອນເປັນປີໆກໍມີ, ມີພວກໄປເປັນເຈົ້າໜ້າທີ່ສະຫະພັນແມ່ຍິງ, ກຳມະບານຊາວໜຸ່ມກໍມີ, ຢູ່ຂັ້ນແຂວງບາງແຫ່ງກໍລົງຂົນຂວຍ, ລົງພື້ນຖານຢູ່ຕະຫຼອດກໍມີ, ແຕ່ວ່າບາດຕົວເລກຂອງ ກົມສະຖິຕິເອົາໃຫ້ພັດຕ່ຳກວ່າຕົວຈິງ, ເພາະວ່າສະຖິຕິບໍ່ ((Update) ທັນກັບສະພາບ, ບາງເທື່ອກໍເກັບກຳເອົາຕົວເລກເກົ່າມາໃສ່ຍ້ອນຂັ້ນແຂວງສົ່ງມາແນວນັ້ນ... ຈຶ່ງເຮັດໃຫ້ຂັ້ນເທິງຕັດສິນໃຈຂຶ້ນເງິນເດືອນໃຫ້ຄູຜູ້ທີ່ສອນແທ້ໆນັ້ນໄດ້ຍາກ.

ຈຶ່ງເປັນເຫດໃຫ້ຄູບໍ່ໄດ້ຮັບນະໂຍບາຍຈາກຂັ້ນເທິງດີຂຶ້ນຕາມເໝາະສົມໄດ້ຈັກເທື່ອ. (ຈະໂທດໃຜ?) ຖ້າບໍ່ຮູ້ຈະຕອບວ່າໂທດໃຜ ຫຼື ແມ່ນ

ໃຜຮັບຜິດຊອບເລື່ອງນີ້, ມັນກໍກ້ຽວມາສິ່ງຜົນສະທ້ອນໃຫ້ກົມການເງິນຂອງກະຊວງ ສຶກສາເອງອີກ. ເມື່ອການເງິນຂອງກະຊວງເອງບໍ່ແຈ້ງ, ກະຊວງການເງິນຍິ່ງບໍ່ແຈ້ງ. ການສ້າງງົບປະມານປະຈຳປີກໍຈະເຮັດໃຫ້ແຈ້ງ ບໍ່ໄດ້ດີຈັກເທື່ອ.

ທັງໝົດນີ້ ກໍເປັນພວງພະນັງກັນໄປຫາກົມຈັດຕັ້ງ, ກົມການເງິນ ແລະ ກົມສະຖິຕິແຜນການ ຊຶ່ງທັງໝົດນີ້ບໍ່ແມ່ນວຽກວິຊາສະເພາະຂອງການສຶກສາ; ແຕ່ແມ່ນວຽກນະໂຍບາຍ ຂອງລັດຖະບານ ໝາຍຄວາມວ່າວຽກແນວທາງທີ່ຕ້ອງໄດ້ມີຂໍ້ມູນຈະແຈ້ງເພື່ອ ປະຕິບັດນະໂຍບາຍຕໍ່ການສຶກສາໃຫ້ມີຜົນດີໄດ້. ຜົນດີ, ກໍຄືກໍ່ສ້າງແນວຄິດໄດ້ລະຫວ່າງຜູ້ສອນ ແລະຜູ້ບໍ່ສອນ. ຕາບໃດເຮົາບໍ່ແຍກໃຫ້ເຫັນແຈ້ງລະຫວ່າງຜູ້ສອນແທ້ທີ່ຕ້ອງໄດ້ຮັບເງິນເດືອນສູງກວ່າຜູ້ບໍ່ສອນ, ຄິດວ່າບໍ່ມີທາງທີ່ຈະເຮັດໃຫ້ຄຸນນະພາບການສຶກສາດີຂຶ້ນໄດ້,

### 3. ດ້ານເນື້ອໃນລວມເພື່ອໃຫ້ຄົ້ນຄວ້າຫາຄຸນນະພາບ.

ເມື່ອກັບຄືນມາຫາການປະຕິຮູບການສຶກສາແຫ່ງຊາດແລ້ວ, ເຮົາຕ້ອງໄດ້ເບິ່ງໃນທຳນອງທີ່ວ່າ ຄຸນປະໂຫຍດຂອງການສຶກສາຕໍ່ການກໍ່ສ້າງຊັບພະຍາກອນມະນຸດນີ້ຫຼາຍກວ່າ.

(1) ປະຖົມ 5 ປີ ແລະ ມັດທະຍົມຕົ້ນ 4 ປີ

ຂອບເຂດ 9 ປີ ນີ້ຕ້ອງເປັນການສຶກສາຂັ້ນພື້ນຖານໃໝ່. ໃນຖານະເປັນເລົາດຽວກັນ (Tronc commun) ຫຼັກສູດຕ້ອງເຊື່ອມຕໍ່ກັນ ແລະ ເກາະກ່າຍກັນໃຫ້ມີພື້ນຖານໜັກແໜ້ນໃນການສ້າງຄົນໃຫ້ແຂງແຮງ "ມີພູມຕ້ານທານ " (ຖືກຕ້ອງທີ່ສຸດ ທີ່ເພິ່ນບໍ່ຢາກໃຫ້ມີເສັ້ງຈົບຊັ້ນປະຖົມ). ແຕ່ຕ້ອງມີການປະເມີນການຮຽນແຕ່ ປ1-ປ5 ຢ່າງເປັນປົກກະຕິ, ຫົວໜ້າໂຮງຮຽນປະຖົມ ແລະ ຄູ ຕ້ອງຊາບຊຶ້ມເລື່ອງນີ້ຢ່າງຄັກແນ່ ແລະ ບໍ່ຄວນລັດໃຫ້ຕົກ ຫຼື ໃຫ້ໄດ້ດ້ວຍຕົນເອງ ແລະ ຕາມໃຈຕົນເອງ, ແບບໃຫ້ຄະແນນຕາມໃຈມັກ, ຕາມ

ຢາກຊ່ວຍ, ຕາມຂາດຈັນຍາບັນຄູທີ່ດີ. ຕ້ອງມີການປະເມີນຄວາມຮັບຮູ້ຕົວຈິງຂອງເດັກໄປນຳທຸກໆຂັ້ນຮຽນ.

ຫຼັງຈາກຈົບ ມ. ຕົ້ນ ອາຍຸ 15 ປີ, ຖ້າສ້າງຖືກຫຼັກ, ເດັກຕ້ອງ:

- ເປັນຄົນມີອາລົມດີ, ມັກສໍ້ຖາມຄູດ້ວຍຄວາມຈິງໃຈຢາກຮູ້ຢາກເຫັນ ມັກຢາກຄິດເອງ, ຢາກເປັນຕົນເອງຫຼາຍຂຶ້ນ.
- ມີລະບຽບວິໄນ ແລະ ວັດທະນະທຳລາວໜັກແໜ້ນ.
- ໄດ້ພາສາລາວດີ, ປາກເວົ້າຈະແຈ້ງ, ອະທິບາຍບັນຫາຈະແຈ້ງ
- ຮູ້ພື້ນຖານພາສາອັງກິດ ແລະ ຮູ້ນຳໃຊ້ Computer
- ຮູ້ຊາດຂອງຕົນເອງດີ ແລະ ຕິດພັນກັບສາກົນແນວໃດ.
- ກາຍເປັນຄົນຢາກຮູ້ຫຼາຍຂຶ້ນເລື້ອຍໆ ດ້ານການດຳລົງຊີວິດຂອງຕົນເອງ, ເປັນເຈົ້າຕົນເອງ ແລະ ຮູ້ພູມມີສາດ, ປະຫວັດສາດ ປະເທດຕົນດີສົມຄວນ.

ສະເພາະ 3 ປີ ຂອງ ມ. ປາຍ ທີ່ເພິ່ນຢາກໃຫ້ຈັດເປັນ 2 ສາຍ ຄື: ສາຍສາມັນປົກກະຕິ (ສາຍຍາວ) ແລະ ສາຍສາມັນປະສົມ (ສາຍສັ້ນ) ນັ້ນ, ເຮົາຕ້ອງເຂົ້າໃຈວ່າ:

1.) ສາຍຍາວ: ແມ່ນຮຽນທິດສະດີເກັ່ງ, ນັກຮຽນຈະຮຽນຕໍ່ໄປໄກໄດ້.
2.) ສາຍສັ້ນ: ແມ່ນຮຽນປານກາງຫາຕ່ຳ, ໄປໄກບໍ່ໄດ້, ຕ້ອງຍູ້ໃຫ້ອອກເພື່ອໃຫ້ໄປຫາວຽກເຮັດງານທຳໄດ້ໂດຍເສີມວິຊາຊີບ ທີ່ຈະສາມາດຫາວຽກເຮັດງານທຳໄດ້ງ່າຍ.

ເພື່ອໃຫ້ເດັກທຸກຄົນມີໂອກາດຮຽນຕໍ່ງ່າຍຂຶ້ນ. ພວກໄປຕໍ່ສາຍຍາວໄດ້ແມ່ນເກັ່ງທິດສະດີ ແລະ ພາສາອັງກິດກັບຄອມແທ້ ຈຶ່ງຕໍ່ມະຫາວິທະຍາໄລ ໄດ້ສະດວກ. ພວກໄປສາຍສັ້ນຄວນແມ່ນພວກບໍ່ເກັ່ງປານໃດ

24/7 ຫ້າມຈຳໜ່າຍ

ດ້ານທິດສະດີ ແຕ່ມັກພາກປະຕິບັດຫຼາຍກວ່າ,ຄວນອອກຫາ ເຮັດວຽກໄດ້ເມື່ອມີອາຍຸ 18 ປີຂຶ້ນໄປ ແຕ່ວ່າສາຍສັ້ນນີ້ຫຼັກສູດກໍຕ້ອງເນັ້ນພາສາອັງກິດ ແລະ ຄອມພິວເຕີໃຫ້ແຂງຄືກັນ. ຖ້າຈະເອີ້ນສາຍນີ້ແນວໜຶ່ງ ກໍ່ຄວນຖືວ່າແມ່ນສາຍ ບໍລິຫານທຸລະກິດໄດ້, ຫຼື ກຽມອອກໄປເປັນເລຂາຫ້ອງການ, ກົມກອງ(Secretaire de Direction) ໄດ້ສະດວກ ຫຼື ໄປເຮັດວຽກນຳອົງການສາກົນກໍໄດ້ຖ້າສຳພາດໄດ້, ບໍ່ຈຳເປັນຕ້ອງໄປຮຽນຕໍ່ຢູ່ຕ່າງປະເທດເສຍເວລາ ແລະ ເສຍເງິນຫຼາຍ.ເມື່ອຮູ້ຫາເງິນເອງໄດ້ຈຶ່ງຄ່ອຍຫາວິທີໄປຮຽນຕໍ່, ຄິດວ່າບໍ່ຫຼ້າບໍ່ສວຍ.

ໃນດ້ານຂະຫຍາຍ ມ. ປາຍປະສົມ ຕ້ອງໃຫ້ມີຢ່າງໜ້ອຍແຂວງລະແຫ່ງ ຫຼື 2 ແຫ່ງ ແລ້ວແຕ່ແຂວງໃຫຍ່-ນ້ອຍ (ເພາະລາຄາແພງ) ເຖິງຈະລາຄາແພງກໍ່ຕາມຕ້ອງພະຍາຍາມສູ້ຊົນ, ເພາະວ່າອົງການຕ່າງປະເທດຢາກສະໜັບສະໜູນ ແລະ ກຸ້ມຄ່າດີ, ເດັກມັກໄປດ້ານນີ້ຫຼາຍ. ກົງກັນຂ້າມ, ບໍ່ຄວນຂະຫຍາຍ ມະຫາວິທະຍາໄລຫຼາຍກວ່າ 2 ຫາ 3 ແຫ່ງ ໃນທົ່ວປະເທດເພື່ອຈຳກັດສ້າງຄຸນນະພາບໃຫ້ດີເສຍກ່ອນ.

ດັ່ງນັ້ນ, ເຮົາຕ້ອງເນັ້ນໜັກໄປຫາຄຸນນະພາບຂອງການສຶກສາເພື່ອສ້າງຄົນໄປຮັບໃຊ້ທຸກຂະແໜງການຂອງການພັດທະນາປະເທດ ໃຫ້ມີຄຸນນະພາບຕາມຄວາມຕ້ອງການແຕ່ລະໄລຍະ.

ຂອບເຂດຄວາມຮັບຜິດຊອບຂອງ ກະຊວງສຶກສາຈຶ່ງຈະຄ່ອຍໆຈະແຈ້ງຂຶ້ນໄດ້. (ຜ່ານມາ ກະຊວງ ສຶກສາ ມີທ່າອ່ຽງເຮັດເອງທຸກຢ່າງ) ເພື່ອຢາກໃຫ້ການສຶກສາມີຄຸນນະພາບ, ແຕ່ບໍ່ສາມາດແກ້ບັນຫາໄດ້. ກ່ອນອື່ນໝົດ ເຮົາຕ້ອງນິຍາມຄຸນນະພາບທີ່ເຮົາຢາກໄດ້ນັ້ນໃຫ້ແຈ້ງອີກຄັກແນ່:

ຄົນທີ່ມີຄຸນນະພາບດີໃຫ້ແກ່ຊາດ ຈະຕ້ອງເປັນຄົນປະກອບດ້ວຍ

ຫຍັງ?

ເວົ້າງ່າຍໆຄວນຖາມກັນວ່າ: ຊັບພະຍາກອນທີ່ມີຄຸນນະພາບດີໃຫ້ແກ່ຊາດນັ້ນຈະຕ້ອງເປັນຄົນແນວໃດ? ນີ້ເສຍກ່ອນ.

ໃນໄລຍະຜ່ານມາ, ເຮົາເຮັດຕາມ "ສາກົນ" ແນະນຳ ແລະ ເຂົາສະເໜີຫຼາຍຢ່າງໂພດ ໃນດ້ານຫຼັກສູດທິດສະດີ, ມັນກໍບໍ່ຜິດແຕ່ເຮັດນຳບໍ່ໄດ້. ເພາະຍັງບໍ່ທັນເຖິງຂັ້ນຄວນເຮັດກໍມີ, ເຖິງເຮັດໄປໄດ້ກໍບໍ່ພຽງ ແຕ່ບໍ່ມີປະໂຫຍດ, ແຕ່ຍັງເປັນການບໍ່ ສິ່ງເສີມວັດທະນະທຳສັງຄົມຂອງເຮົາ, ມ້າງການຈັດຕັ້ງເຮົາກໍ ມີແທນທີ່ຈະດີຂື້ນໃຫ້ແກ່ຊາດໂດຍສ່ວນລວມ.

ສິ່ງທີ່ຄວນຟ້າວຈັດໃຫ້ລັດຖະບານ(ສຳນັກງານນາຍົກ)ຕົກລົງ ແລະເຊັນຮັບຮູ້ລະບົບທີ່ເຮົາຢາກໄດ້ນີ້ ໃຫ້ແຈ້ງເສຍກ່ອນນັ້ນຕ້ອງໄດ້ຄົ້ນຄວ້າເນື້ອໃນໃສ່ແຕ່ພາກສ່ວນໂຄງປະກອບລະບົບ, ໃຫ້ເໝາະສົມກັບເປົ້າໝາຍຂອງແຕ່ລະຂະ ແໜງການສຶກສາ ແລະ ຂຽນຮ່າງລັດຖະດຳລັດອອກເພື່ອສະເໜີຜ່ານສະພາແຫ່ງຊາດ, ຈຶ່ງຈະຖືວ່າແມ່ນເນື້ອໃນຂອງແນວຄວາມຄິດກ່ຽວກັບການປະຕິຮູບທີ່ເຮົາຢາກໄດ້.

ເມື່ອຜ່ານສະພາແຫ່ງຊາດເຫັນພ້ອມແລ້ວ **ຈຶ່ງຈະອອກໃຫ້ເປັນກົດໝາຍການປະຕິຮູບ ການສຶກສາແຫ່ງຊາດໄດ້.**

ເວລານັ້ນ ລັດຖະບານຈຶ່ງຈຳເປັນຕ້ອງໄດ້ຮັບຜິດຊອບຕໍ່ການສຶກສາຂອງຊາດ, ຕ້ອງໄດ້ຫາທຶນ ຫຼື ງົບປະມານຂອງແຜ່ນດິນເຂົ້າໃສ່ໃຫ້ໄດ້. ຖ້າບໍ່ໄດ້ໝົດກໍຕ້ອງຮັບປະກັນໃຫ້ໄດ້ຈັກເປີເຊັນ ແລະ ຈະຕ້ອງໄດ້ຈາກຕ່າງປະເທດຮັບຊ່ວຍອີກຈັກເປີເຊັນຂອງງົບປະມານແຫ່ງຊາດທີ່ກະຊວງສຶກສາ ຕ້ອງຈຳແນກໃຫ້ແຈ້ງອີກ, ໃຫ້ລັດຖະບານເຫັນ. ສົມມຸດວ່າ ຄວນສະເໜີໃຫ້ມີ ສອງພາກສ່ວນງົບປະມານກ່ຽວກັບການສຶກສາຄື:ອາດເປັນໄປໄດ້ບໍ?.

- ກະຊວງສຶກສາທິການ (ອາດເປັນໄປໄດ້ 60%) ຂອງງົບປະມານ ແຫ່ງຊາດ, ຕ່າງປະເທດຊ່ວຍ 40%)

- ມະຫາວິທະຍາໄລຕ່າງຫາກໄດ້ບໍ່ (ຖ້າຮັບໄດ້, ຈະຄວນຕັ້ງໃຫ້ມີ ກະຊວງ ຫຼື ທະບວງມະຫາວິທະຍາໄລໄດ້ບໍ? ຫຼື ເອົາໄປໄວ້ໃສ? ) ຫຼື ຈັດແບບກຳມະການມະຫາໄລໄດ້ບໍ່? ອາດຈະດີໃນດ້ານຊອກງົບປະມານເຂົ້າໃສ່ເອງໄດ້ບໍ່? ຫຼື ອາດຈະດີໃນດ້ານ "ເປັນຕົວເອງ" ຫຼາຍຂຶ້ນ, ທັງຈະຄ່ອຍໆຂະຫຍາຍຄວາມເປັນເຈົ້າຕົນເອງ (Autonomy) ໄວຂຶ້ນໄດ້ດີ ກໍອາດເປັນໄປໄດ້, ເປັນຕົ້ນແມ່ນຊອກຮັບສ້າງສັນຍາຄົ້ນຄວ້າ, ເພື່ອມີລາຍໄດ້. ເຂົ້າງົບຂອງມະຫາວິທະຍາໄລເອງຫຼາຍຂຶ້ນ.

ມີຫຼາຍປະເທດໃນປັດຈຸບັນນີ້ ໄດ້ແຍກການຄຸ້ມຄອງມະຫາວິທະຍາໄລອອກຈາກກະຊວງ. ແຕ່ກໍຍັງມີບາງປະເທດກໍຍັງຮັກສາໃຫ້ຂຶ້ນນຳກະຊວງສຶກສາຢູ່ສ່ວນໃດສ່ວນໜຶ່ງ. ແຕ່ຕ້ອງມີອົງກອນຄວບຄຸມຄຸນນະພາບຢ່າງຄັກແນ່, ເພາະມັນຈະມີທ່າອ່ຽງ ຍາຍໃບປະກາດລ້າໆ ໂດຍບໍ່ຮັບຜິດຊອບຕໍ່ຄຸນນະພາບຂອງນັກສຶກສາ.

ຈຸດອ່ອນຂອງປະເທດເຮົາດ້ານນີ້ກໍມີຫຼາຍ, ມັນຍາກມີທ່າອ່ຽງປ່ອຍໃຫ້ມີມະຫາວິທະຍາໄລ "ເອກະຊົນ" ດຳເນີນທຸກຢ່າງໄປ ໂດຍກະຊວງສຶກສາ ຍັງບໍ່ທັນກຳນົດວ່າ ຈະຈຳກັດໄດ້ແບບໃດ. ມີທ່າອ່ຽງປ່ອຍໃຫ້ກົມສຶກສາພາກເອກະຊົນເບິ່ງນຳ, ແຕ່ບໍ່ທັນສາມາດຕີລາຄາດ້ານດີ ຫຼື ຜົນເສຍຂອງ ການຂະຫຍາຍຕົວແຮງຂອງ "ມະຫາວິທະຍາໄລ" ຫຼື "ວິທະຍາໄລ" ເອກະຊົນໄດ້.

ທັງໝົດນີ້ຈຶ່ງສາມາດເອີ້ນໄດ້ວ່າ ການປະຕິຮູບທັງລະບົບຂອງວຽກງານການສຶກສາແຫ່ງຊາດ. ຖ້າບໍ່ປັບປຸງໝົດລະບົບກໍຈະຂ້ອງຄາຢູ່ຕໍ່ໄປ,

# ເອກະສານອ້າງອີງເພື່ອຄົ້ນຄວ້າ.


1.) ເອກະສານກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ ( 2006), ພາກສາມຂອງເອກະສານນີ້:

"ເພີ່ມຄວາມສາມາດໃນການພັດທະນາຊັບພະຍາກອນມະນຸດ ແລະ ການປະຕິບັດນະໂຍບາຍສັງຄົມ".

2. ການວາງແຜນການສຶກສາຢູ່ປະເທດກຳລັງພັດທະນາ (La planification de l' Education dans les pays en developpement ) 91 ໜ້າ, ພິມປີ 1999, ຄົ້ນຄວ້າໂດຍ ຄຳເພົາ ພອນແກ້ວ.

3. ການປະຕິຮູບການສຶກສາຫວຽດນາມ (1989)

4. ການປະຕິຮູບການສຶກສາຢູ່ໄທ (1999) ທັງ 2 ບົດ ເປັນພາສາຝຣັ່ງເສດພິມອອກເປັນບົດຄວາມໃນວາລະສານ RENOVATEUR ສະບັບ 331, 12/04/2005 ) ໂດຍ ຄຳເພົາ ພອນແກ້ວ.

5. ການປະຕິຮູບການສຶກສາເພື່ອສະຕະວັດໃໝ່, ລັດ ຊາສະກັດເຊວັນ (SASKATCHEWAN) , ປະເທດການາດາ 1996 . (ພິມເປັນພາສາໄທ). ຊຶ່ງເປັນລັດໜຶ່ງທີ່ຍັງບໍ່ທັນພັດທະນາໄວ.

6. ການທ້າທາຍຂອງລາວ: ລະບົບການສຶກສາທີ່ປອດມົນທິນ (Le défi Laotien : une éducation non "polluante", Perspectives, Vol.V, No.1975, Unesco: ບົດຄວາມຂອງ ທ່ານ ຄຳເພົາ ພອນແກ້ວ

7. ເລື່ອງຂົວສອງແຫ່ງ : ການປະຕິຮູບການສຶກສາຢູ່ ສປປ ລາວ (A Tale of two bridges: Educational Reform in the Lao PDR) Rosalie (Giacchino-Baker), International Journal of Educational Reform , Vol. 3, No. 4/oct. 1994)

## Lao PDR




## Malaysia




## Myanmar



## Indonesia




## Lao PDR




## Malaysia




## Myanmar




## The Philippines




## Singapore




## Thailand




## Viet Nam



Looking at 1991 and 1998 when data were available for nine of the 10 ASEAN member countries, and graphically shown in figure 4.3, changes in the ranking of the countries can be observed. In 1991, Brunei Darussalam (15,928 PPP$) registered the highest real GDP per capita and Singapore (13,773 PPP$), as second. The PPP-based real GDP per capita of Brunei Darussalam exceeded that of Singapore by almost 16%. At the opposite end of the ranking were Cambodia (1,047 PPP$) as seventh; Viet Nam (1,033 PPP$), eighth and Lao PDR (937 PPP$), ninth. In 1998, Singapore (19,551 PPP$) overtook the real GDP per capita of Brunei Darussalam (16,779 PPP$) by as much as 17%. The ranking of Viet Nam (1,771 PPP$), Lao PDR (1,400 PPP$) and Cambodia (1,318 PPP$) also changed to seventh, eighth and ninth, respectively.

**Figure 4.3**
**Real GDP per Capita (current international $), 1991 and 1998**




## DISTRIBUTION/INEQUALITY

An equitable distribution of income among the population is also desired. However, its attainment remains a major concern that affects all sectors of society. To determine gaps in the distribution, the indicator, *Gini coefficient of income distribution*, provides a measure of income or resource inequality. Besides being the most popular measure of income inequality, the "*indicator is good to measure both changes in income inequality over time and for international comparison.*"[1]

### Gini Coefficient

The Gini coefficient can be further defined as a measure of "*the extent to which the distribution of income (or in some cases consumption expenditure) among individuals or households within an economy deviates from a perfectly equal distribution.*"[2] Its value ranges from 0 to 1 where 0 is interpreted as perfect equality and 1 is a perfectly inequal distribution. The theoretical underpinning of the Gini coefficient is that "*the closer the coefficient to one, the greater the inequality in income distribution*". It should be noted however that different basic data (income as oppose to expenditure data) may lead to different level of Gini Coefficient. The Gini coefficients of the countries in the region based on survey data are shown in table 4.4.

---

1 Source: UNSD <http://millenniumindicators.un.org/unsd/indicatorfoc/indprintpage.asp?cid+87>, accessed on December 10, 2003.
2 ibid

## Gini Coefficient vis-à-vis Real GDP per Capita

The Gini coefficient and real GDP per capita of the countries are shown in figure 4.4.2 to observe the direction in the trends of these two indicators. The presentation could provide an indication of how changes in income, using real GDP per capita growth rate as approximation, may be associate with income distribution.

**Viet Nam**




As can be seen, both indicators follow an upward trend in Lao PDR, the Philippines, Singapore and Viet Nam. This suggests that as real GDP per capita increases, income inequality also widens. A rising real GDP per capita and narrowing of income inequality would be the desirable situation. This was experienced by Malaysia and Thailand during the second half of the period under review. As their real GDP per capita increases, the Gini coefficient decreases, even at a slow pace.

**Figure 4.4.2**
**Real GDP per Capita and Gini Coefficient**



The consumption-based poverty estimates, presented in table 4.5.3, have been widely and officially used in several planning documents, e.g., the Lao PDR Interim Poverty Reduction Strategy Paper (March 20, 2001), National Poverty Eradication Programme (September 2003) and progress reporting on the Millennium Development Goals. The data show that poverty in Lao PDR is widespread and marked by variations among the regions and provinces. Location is also a major determinant of poverty with a large proportion of the poor (80%) in rural areas and most of ethnic groups living in mountainous areas.

**Table 4.5.3**
**Lao PDR: Poverty Incidence by Urban and Rural Area**

| Region/Province | 1992-1993 | 1997-1998 | Annual Change (%) |
|---|---|---|---|
| Lao PDR | 45.0 | 38.6 | -3.1 |
| Urban | 33.1 | 26.9 | -4.2 |
| Rural | 48.7 | 41.0 | -3.4 |
| *Vientiane municipality* | *24.4* | *12.2* | *-13.9* |
| *Northern Region* | *58.4* | *52.5* | *-2.1* |
| Oudomxay | 51.1 | 73.2 | 7.2 |
| Luangnamtha | 60.3 | 57.5 | -1.0 |
| Huaphanh | 78.4 | 74.6 | -1.0 |
| Phongsaly | 68.7 | 64.2 | -1.3 |
| Luangphrabang | 62.7 | 49.4 | -4.8 |
| Xayaboury | 30.1 | 21.2 | -7.0 |
| Bokeo | 63.5 | 37.4 | -10.6 |
| *Central Region* | *39.5* | *34.9* | *-2.5* |
| Borkhamxay | 10.6 | 25.8 | 17.8 |
| Khammuane | 43.7 | 41.6 | -1.0 |
| Vientianne Province | 28.1 | 24.3 | -2.9 |
| Savannakhet | 45.7 | 37.1 | -4.2 |
| Xiengkhuang | 57.3 | 34.9 | -9.9 |
| Xaysomboom-SR | | 55.0 | |
| *Southern Region* | *45.9* | *38.4* | *-3.6* |
| Saravane | 36.7 | 39.6 | 1.5 |
| Champasack | 43.6 | 35.6 | -4.1 |
| Sekong | 65.9 | 45.7 | -7.3 |
| Attapeu | 72.2 | 45.3 | -9.3 |

Source: Poverty in Lao PDR. N. Kakwani, Bounthavy Sisouphanhthong, Phonesaly Souksavath and Brent Dark. Paper delivered at the Asia and Pacific Forum on Poverty: Reforming Policies and Institutions for Poverty Reduction, 5-9 February 2001, Manila, Philippines

In 1997-1998 (table 4.5.3), poverty incidence was estimated at 38.6% for Lao PDR, 26.9% in the urban area and 41% in the rural area. The regional estimates show that the Northern region has the highest incidence at 52.5% and even surpassed the national average (38.6%). The incidence in the Southern region was 38.4% which is almost the same as the national average. The Central region registered 34.9% which is below the national average. On the other hand, Vientiane Municipality has the least incidence of poverty at 12.2%, only one third of the national average. Among the 18 provinces, incidence was high especially in Huaphanh (74.6%) and Oudomxay (73.2%). With the exception of Vientiane municipality, only seven out of 18 provinces, that is, Xayaboury, Bokeo, Borkhamxay, Vientiane Province, Savannakhet, Xiengkhuang, and Champasack, have incidences below the national average.

Poverty incidence declined by 3% annually, on the average, between 1992-1993 and 1997-1998 from 45% to almost 39%. The decline in poverty incidence was faster in the urban areas (-4.2%) than in the rural areas (-3.4%). Among the regions, poverty incidence in Vientiane Municipality was halved from 24.4% in 1992-1993 to 12.2% in 1997-1998. On the contrary, poverty incidence widened in three provinces which include Borkhamxay (+17.8%) in the Central region, Oudomxay (+7.2%) in the Northern region and Saravane (+1.5%) in Southern region. The increase was

A comparison of the earliest and latest data sets of the countries provides an indicator of the structural shift occurring in their economies as shown in the following charts.

**Figure 5.5.4**
**Proportion of Employment by Sector**

**Brunei Darussalam:**
**Increasing Employment in Services from Agriculture and Industry**




**Cambodia:**
**Largerly Agricultural but Declining and Increasing Industry Share**




**Indonesia:**
**Increased Proportion of Employment in Services and Industry**




**Lao PDR:**
**Predominantly Agricultural**



## Net Enrolment Ratio in Primary Education by Sex

As reported, Brunei Darussalam had almost reached 100% net enrolment ratio by 2001. Indonesia achieved this target at the beginning of the decade, but had an appreciable downward trend thereafter, while the Philippines has been consistently approaching this target in the recent years.

**Figure 6.3**

**Net Enrollment Ratio in Primary Education, both Sexes, %**




The data indicate two groups of countries - one which has consistently attained a net enrolment ratio of more than 90% (Brunei Darussalam, Indonesia, the Philippines, and Singapore) and the other group with around 80% (Cambodia, Lao PDR and Myanmar). Viet Nam started in the lower group and moved over to the higher group in the second half of the reporting period. Thailand has not provided data for both sexes, but the separate net enrolment ratio for girls and boys indicates that the overall ratio would be between 86% and 87%, and as such would be closer to the higher group.

Figure 6.4 clearly indicates that the primary net enrolment ratios of boys were almost always higher than those of girls for all reporting countries except Malaysia. For Singapore throughout the reporting period, and Indonesia since 1998, the net enrolment ratios for girls and boys, however, were not significantly different. A marked widening of gender gap is noticeable in the Philippines in 1997 but in 1999 the net enrolment ratios for girls exceeded that for boys.

## Table 6.2
## Net Enrolment Ratio in Primary Education by Sex

Definition: Enrolment in primary education of the official primary school age-group expressed as a percentage of the corresponding population.
Unit of measurement: %

| Country | 1990 | 1991 | 1992 | 1993 | 1994 | 1995 | 1996 | 1997 | 1998 | 1999 | 2000 | 2001 |
|---|---|---|---|---|---|---|---|---|---|---|---|---|
| Both Sexes | | | | | | | | | | | | |
| Brunei Darussalam | – | 97.2 | – | – | – | – | – | – | – | – | – | 98.7 |
| Cambodia | – | – | – | – | – | – | 84.7 | 77.8 | 78.3 | 85.5 | 83.8 | – |
| Indonesia | 100 | 100 | 99.0 | 100 | 99.0 | 97.0 | 96.0 | – | 92.0 | 93.0 | 92.0 | 93.0 |
| Lao PDR | – | 58.0 | 62.7 | 66.5 | 65.2 | 68.6 | 71.9 | 76.2 | 76.4 | 77.3 | 79.8 | 80.3 |
| Malaysia | – | – | – | – | – | – | – | – | – | – | – | – |
| Myanmar | 66.3 | 71.8 | 78.8 | 76.2 | 76.4 | 73.6 | 75.8 | 74.8 | 75.2 | 77.0 | 77.5 | 78.0 |
| The Philippines | 99.1 | 85.1 | 85.2 | 85.4 | 87.1 | 92.7 | 94.3 | 95.1 | 95.7 | 97.0 | 96.8 | 97.0 |
| Singapore | 96.1 | 96.1 | 95.9 | 95.1 | 95.3 | 96.4 | 95.7 | 96.0 | 95.5 | 95.9 | 95.7 | 94.3 |
| Thailand | – | – | – | – | – | – | – | – | – | – | – | – |
| Viet Nam | – | – | – | 78.0 | – | – | – | – | 92.6 | – | – | – |
| Male | | | | | | | | | | | | |
| Brunei Darussalam | – | – | – | – | – | – | – | – | – | – | – | – |
| Cambodia | – | – | – | – | – | – | – | – | – | – | – | – |
| Indonesia | 98.0 | 97.0 | 97.0 | 97.0 | 97.0 | 95.0 | 95.0 | – | 92.0 | 93.0 | 92.0 | 93.0 |
| Lao PDR | – | 61.7 | 66.8 | 70.8 | 68.8 | 72.0 | 75.4 | 79.8 | 79.4 | 80.3 | 83.7 | 84.3 |
| Malaysia | – | 93.2 | 93.6 | 94.0 | 93.9 | 94.9 | 94.7 | 94.8 | 94.6 | 94.4 | 96.0 | 96.0 |
| Myanmar | – | – | – | – | – | – | – | – | – | – | – | – |
| The Philippines | – | – | – | – | – | – | 95.3 | 97.9 | 97.4 | 96.8 | – | – |
| Singapore | 96.4 | 96.6 | 96.3 | 95.5 | 95.8 | 96.9 | 96.3 | 96.3 | 95.8 | 96.2 | 96.2 | 94.5 |
| Thailand | – | – | – | – | – | – | 87.0 | – | – | – | – | – |
| Viet Nam | – | – | – | – | – | – | – | – | 93.5 | – | – | – |
| Female | | | | | | | | | | | | |
| Brunei Darussalam | – | – | – | – | – | – | – | – | – | – | – | – |
| Cambodia | – | – | – | – | – | – | – | – | – | – | – | – |
| Indonesia | 95.0 | 95.0 | 95.0 | 95.0 | 95.0 | 94.0 | 93.0 | – | 92.0 | 93.0 | 93.0 | ' 3.0 |
| Lao PDR | – | 54.1 | 58.4 | 62.0 | 61.5 | 65.0 | 68.3 | 72.4 | 73.3 | 74.2 | 75.7 | 76.3 |
| Malaysia | – | 93.1 | 93.6 | 94.2 | 94.3 | 95.6 | 95.3 | 95.4 | 95.1 | 95.0 | 97.1 | 97.4 |
| Myanmar | – | – | – | – | – | – | – | – | – | – | – | – |
| The Philippines | – | – | – | – | – | – | 93.4 | 92.1 | 94.0 | 97.2 | – | – |
| Singapore | 95.9 | 95.6 | 95.4 | 94.6 | 94.8 | 95.9 | 95.1 | 95.7 | 95.1 | 95.6 | 95.1 | 94.0 |
| Thailand | – | – | – | – | – | – | 86.0 | – | – | – | – | – |
| Vie Nam | – | – | – | – | – | – | – | – | 91.7 | – | – | – |

Notes: Myanmar – 2001 data provisional. The Philippines – referred to as net participation rate in public and private elementary schools of enrollees 7-12 years old. Singapore – resident students in national schools only.

Sources: Brunei Darussalam – Ministry of Education through Survey of 'Educational Institutions' public and private school started 1997. Cambodia – Ministry of Education, Youth and Sport. Indonesia – National Socio Economic Survey. Lao PDR – Ministry of Education (2000): EFA for 1991-1997 data and Ministry of Education (2002): AnnualReport for 1998-2001 data. Malaysia – Ministry of Education. Myanmar – Department of Education Planning and Training. The Philippines – Department of Education. Singapore – Students' Register. Thailand – school reports.


IV
ສະເໜີການອອກແບບ
ການປະຕິຮູບ
ການສຶກສາແຫ່ງຊາດ
III
ສະເໜີແນວຄວາມຄິດ
ເບື້ອງຕົ້ນກ່ຽວກັບ
ການສຶກສາຂອງຊາດ
II
ຂໍ້ມູນພື້ນຖານ ເພື່ອຄວາມ
ເຂົ້າໃຈຢ່າງເລິກເຊິ່ງຕໍ່
ການສຶກສາແຫ່ງຊາດ
I
ການທຳຄວາມເຂົ້າໃຈ
ຕໍ່ການສຶກສາຂອງຊາດ